ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ນະໂຍບາຍແຫ່ງຊາດ
# ດ້ານປະຊາກອນ ແລະ ການພັດທະນາ
## (2019-2030)

ກະຊວງແຜນການ ແລະ ການລົງທຶນ
ປີ 2019

ສາລະບານ


ຄຳນຳ ........................................................ III
ຄຳຫຍໍ້ ........................................................ V
ບົດສັງລວມຫຍໍ້ ........................................................ 3
ພາກທີ I: ຄວາມເປັນມາ ........................................................ 8
1.1 ນະໂຍບາຍປະຊາກອນແມ່ນຫຍັງ ແລະ ມີຈຸດປະສົງເພື່ອຫຍັງ ........................................................ 8
1.2 ນະໂຍບາຍປະຊາກອນໃນໄລຍະຜ່ານມາຢູ່ ສປປ ລາວ ........................................................ 9
1.3 ຂະບວນການໃນການສ້າງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາປີ 2019-2030 ........................................................ 13
2. ສະພາບເສດຖະກິດ ແລະ ສັງຄົມ ........................................................ 14
2.1 ທ່າອ່ຽງຂອງການເຕີບໂຕ ແລະ ການພັດທະນາເສດຖະກິດ ........................................................ 14
2.2 ການພັດທະນາສັງຄົມ ........................................................ 18
2.3 ຜົນກະທົບຂອງການພັດທະນາເສດຖະກິດ-ສັງຄົມຕໍ່ກັບປະຊາກອນ ........................................................ 20
3. ຂໍ້ມູນປະຊາກອນຂອງ ສປປ ລາວ ........................................................ 21
3.1 ອົງປະກອບຫຼັກຂອງປະຊາກອນ ........................................................ 21
3.2 ປະຊາກອນໃນປະຈຸບັນ ........................................................ 21
3.3 ການເຕີບໂຕຂອງປະຊາກອນ ແລະ ການຂ້າມຜ່ານດ້ານປະຊາກອນ ........................................................ 21
3.4 ການແຈກຢາຍດ້ານອາຍຸຂອງປະຊາກອນ ........................................................ 34
3.5 ການແຈກຢາຍຂອງປະຊາກອນ ........................................................ 38
3.6 ການເຄື່ອນຍ້າຍພາຍໃນ ແລະ ການກາຍເປັນຕົວເມືອງ ........................................................ 39
3.7 ທ່າອ່ຽງປະຊາກອນໃນອະນາຄົດ: ການຄາດຄະເນຮອດປີ 2045 ........................................................ 44
3.8 ສັງລວມ: ຜົນກະທົບຂອງສະພາບປະຊາກອນ ຕໍ່ກັບການພັດທະນາ ........................................................ 50
ພາກທີ II: ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາປັບປຸງປີ 2019-2030 ........................................................ 54
1. ວິໄສທັດ ແລະ ຫຼັກການພື້ນຖານຂອງນະໂຍບາຍ ........................................................ 54
1.1 ວິໄສທັດ ........................................................ 54
1.2 ຫຼັກການພື້ນຖານ ........................................................ 54
2. ເປົ້າໝາຍ ແລະ ຈຸດປະສົງຂອງນະໂຍບາຍ ........................................................ 55
2.1 ເປົ້າໝາຍ 1: ສົ່ງເສີມສຸຂະພາບຈະເລີນພັນໃນກຸ່ມຄົນທີ່ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ 56
2.2 ເປົ້າໝາຍ 2: ເລັ່ງການຫລຸດຜ່ອນອັດຕາການຕາຍຂອງເດັກອ່ອນ ແລະ ເດັກຕໍ່າກວ່າ 1 ປີລົງມາ, ເດັກຕໍ່າກວ່າ 5 ປີ ລົງມາໂດຍສະເພາະໃນກຸ່ມຄົນຜູ້ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ. ........................................................ 57
2.3 ເປົ້າໝາຍ 3: ໃຊ້ກາລະໂອກາດ “ທາງດ້ານປະຊາກອນ” ໃຫ້ໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມສູງສຸດ ສຳລັບທຸກກຸ່ມຄົນ ແລະ ຂົງເຂດຢ່າງສະເໝີພາບ ແລະ ເປັນທຳ. ........................................................ 59

**2.4** ເປົ້າໝາຍ **4**: ສົ່ງເສີມໂອກາດທາງດ້ານເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດທີ່ດີ ສໍາລັບຊາວໜຸ່ມ-ເຍົາວະຊົນ ດ້ອຍໂອກາດ ແລະ ມີຄວາມສ່ຽງລວມທັງເຍົາວະຊົນຍິງ ແລະ ຊາວໜຸ່ມທີ່ບໍ່ມີວຽກເຮັດງານທໍາ **60**

**2.5** ເປົ້າໝາຍ **5**: ເພີ່ມທະວີຜົນປະໂຫຍດຂອງການເຄື່ອນຍ້າຍຈາກຊົນນະບົດສູ່ຕົວເມືອງ ແລະ ການເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດພ້ອມທັງຫລຸດຜ່ອນຜົນກະທົບທາງລົບຈາກການເຄື່ອນຍ້າຍໃຫ້ໜ້ອຍລົງ ........................ **63**

**2.6** ເປົ້າໝາຍ **6**: ກະກຽມຄວາມພ້ອມເພື່ອຮັບມືກັບບັນຫາສິ່ງທ້າທາຍຂອງສັງຄົມອາຍຸສູງ ແລະ ສະໜັບສະໜູນປະຊາກອນອາຍຸສູງ ........................ **65**

**2.7** ເປົ້າໝາຍ **7:** ປັບປຸງລະບົບຖານຂໍ້ມູນດ້ານປະຊາກອນໃຫ້ຄົບຖ້ວນ ແລະ ມີຄຸນນະພາບຕາມມາດຕະຖານ ........................ **68**

**2.8** ເປົ້າໝາຍ **8**: ການເຊື່ອມສານຂໍ້ມູນດ້ານປະຊາກອນເຂົ້າໃນແຜນຍຸດທະສາດ, ແຜນການແຫ່ງຊາດ, **71**

2.**9** ເປົ້າໝາຍ **9**: ບັນລຸຄວາມສະເໝີພາບຍິງ-ຊາຍ ໃນຂົງເຂດສັງຄົມ, ເສດຖະກິດ ແລະ ການເມືອງ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ........................ **72**

ພາກທີ **III**: ການບໍລິຫານການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນຂອງສະຖາບັນ ............ **74**

ຍຸດທະສາດການຈັດຕັ້ງປະຕິບັດ ........................ **74**

ພາກທີ **IV**: ຕາຕະລາງ ການຈັດຕັ້ງປະຕິບັດ ........................ **77**

ກອບການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ດ້ານປະຊາກອນ ແລະ ການພັດທະນາ (**NPDP**)........................ **1**

# ຄຳນຳ

ກອງປະຊຸມສາກົນກ່ຽວກັບປະຊາກອນ ແລະ ການພັດທະນາຢູ່ນະຄອນ ໄຄໂຣ, ປະເທດອີຢິບໃນປີ 1994 ໄດ້ຮັບຮອງເອົາແຜນດຳເນີນງານທີ່ຮຽກຮ້ອງໃຫ້ທຸກປະເທດໃນທົ່ວໂລກສ້າງນະໂຍບາຍດ້ານປະຊາກອນ ແລະ ການພັດທະນາຂອງຕົນທີ່ສອດຄ່ອງກັບແຜນດຳເນີນງານລວມຂອງກອງປະຊຸມ ໂດຍມີຈຸດປະສົງເພື່ອແນໃສ່ປັບປຸງຄຸນນະພາບຊີວິດຂອງປະຊາຊົນບັນດາເຜົ່າ, ຮັບປະກັນຄວາມຍຸຕິທຳທາງສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກລົງເທື່ອລະກ້າວ. ລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກຕໍ່ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ໃນປີ 1996 ໄດ້ກຳນົດໄວ້ວ່າ: ປະຕິບັດນະໂຍບາຍປະຊາກອນ ຢ່າງຕັ້ງໜ້າ, ເຮັດໃຫ້ການເພີ່ມຂຶ້ນຂອງພົນລະເມືອງສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ, ຍົກລະດັບຄວາມຮູ້ ແລະ ພະລານາໄມ ຂອງປະຊາຊົນບັນດາເຜົ່າ, ກໍ່ສ້າງກຳລັງແຮງງານວິຊາຊີບ ແລະ ບຸກຄະລາກອນໃຫ້ສາມາດຕອບສະໜອງຄວາມຕ້ອງການອັນຮີບດ່ວນໃນສະເພາະໜ້າຂອງການພັດທະນາປະເທດ, ແກ້ໄຂບັນຫາຫຍໍ້ທໍ້ຕ່າງໆທາງສັງຄົມໄປຄຽງຄູ່ກັບການຂະຫຍາຍຕົວຂອງເສດຖະກິດ, ເຮັດໃຫ້ສັງຄົມມີຄວາມສີວິໄລ ແລະ ຍຸຕິທຳເທື່ອລະກ້າວ.

ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ສະບັບປັບປຸງແມ່ນໄດ້ເນັ້ນໃສ່ບັນຫາທີ່ຍັງຄົງຄ້າງ ຈາກນະໂຍບາຍປີ 1999 ແລະ 2006 ແລະ ສືບຕໍ່ແນໃສ່ປັບປຸງຄຸນນະພາບຊີວິດຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ, ຫຼຸດຜ່ອນຄວາມທຸກຍາກລົງເທື່ອລະກ້າວ, ເຮັດໃຫ້ການເພີ່ມຂຶ້ນ ແລະ ການແຈກຢາຍປະຊາກອນຢ່າງເໝາະສົມ, ຮັບປະກັນຄວາມຍຸຕິທຳທາງສັງຄົມ, ປົກປັກຮັກສາ ແລະ ເສີມຂະຫຍາຍຮີດຄອງປະເພນີອັນດີງາມຂອງຊາດ ໂດຍຫຼຸດຜ່ອນອັດຕາການຈະເລີນພັນລວມຍອດ ແລະ ການຕາຍລົງເທື່ອລະກ້າວ, ເຮັດໃຫ້ແມ່ຍິງ ແລະ ເດັກໄດ້ຮັບການສຶກສາ, ປະຊາຊົນບັນດາເຜົ່າໄດ້ຮັບການພັດທະນາທາງດ້ານເສດຖະກິດ-ສັງຄົມ ທີ່ເທົ່າທຽມກັນ, ເອົາໃຈໃສ່ເບິ່ງແຍງຜູ້ອາຍຸສູງ ແລະ ຜູ້ດ້ອຍໂອກາດໃນສັງຄົມ, ຫຼຸດຜ່ອນການເຄື່ອນຍ້າຍຈາກຊົນນະບົດເຂົ້າສູ່ຕົວເມືອງ, ການໄປອອກແຮງງານຢູ່ຕ່າງປະເທດແບບຜິດກົດໝາຍ, ສະກັດກັ້ນການແຜ່ລະບາດຂອງໂລກເອດສ໌, ເຮັດໃຫ້ການພັດທະນາໄປສົມຄູ່ກັບການປົກປັກຮັກສາສິ່ງແວດລ້ອມ.

ເພື່ອເຮັດໃຫ້ນະໂຍບາຍມີການເຄື່ອນໄຫວຢ່າງມີປະສິດທິຜົນສູງ ຈຶ່ງຮຽກຮ້ອງມາຍັງຂະແໜງການ ແລະ ທ້ອງຖິ່ນ, ທະຫານ, ຕຳຫຼວດ, ນັກຮຽນຮູ້ປັນຍາຊົນ, ປະຊາຊົນບັນດາເຜົ່າຈົ່ງພ້ອມກັນຕັ້ງໜ້າປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປະເມີນຜົນ, ຫັນນະໂຍບາຍດັ່ງກ່າວໃຫ້ກາຍເປັນຂອງຂະແໜງການ, ທ້ອງຖິ່ນ ແລະ ໝູນໃຊ້ເຂົ້າໃນຊີວິດຕົວຈິງ. ເຖິງແມ່ນວ່ານະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາໄດ້ມີການປັບປຸງຢ່າງຫຼວງຫຼາຍ ຖ້າທຽບກັບນະໂຍບາຍປີ 1999 ແລະ 2006, ແຕ່ທັງສາມນະໂຍບາຍ ກໍມີການຕໍ່ເນື່ອງກັນຕໍ່ກັບບັນຫາຫຼັກຂອງປະຊາກອນ. ເຊັ່ນດຽວກັນກັບນະໂຍບາຍທີ່ຜ່ານມາ, ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ແມ່ນການມີສ່ວນຮ່ວມຂອງຫຼາຍຂະແໜງການ; ເຖິງແມ່ນວ່າມີບາງເປົ້າໝາຍ ແລະ ຈຸດປະສົງແມ່ນເປັນອັນສະເພາະຂອງນະໂຍບາຍກໍຕາມ ທັງໝົດລ້ວນແລ້ວແຕ່ສະ ທ້ອນໃຫ້ເຫັນເຖິງແຜນງານຂອງບັນດາຂະແໜງການທີ່ກວມເອົາຄວາມຫຼາກຫຼາຍ ແລະ ທ່າອ່ຽງຂອງປະຊາກອນ.

ເນື່ອງຈາກວ່າການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດການະໂຍບາຍທີ່ຜ່ານມາຍັງມີຂໍ້ຄົງຄ້າງ, ດັ່ງນັ້ນຈຶ່ງຮຽກຮ້ອງໃຫ້ມີຍຸດທະສາດໃນການຈັດຕັ້ງປະຕິບັດທີ່ຄົບຊຸດ. ເນື່ອງຈາກວ່ານະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ເປັນນະໂຍບາຍທີ່ມີການປິ່ນອ້ອມຫຼາຍຂະແໜງການ ແລະ ໂດຍພື້ນຖານແລ້ວ ແມ່ນການຈັດຕັ້ງປະຕິບັດຂອງກະຊວງສະເພາະໃດໜຶ່ງ ໂດຍການນຳໃຊ້ກົນໄກທີ່ມີຢູ່ ແລະ ບໍ່ຈຳເປັນຕ້ອງມີການສ້າງຕັ້ງໜ່ວຍງານ ຫຼື ສະຖາບັນໃດໜຶ່ງຂຶ້ນມາຕື່ມອີກ ນອກຈາກ "ຄະນະກຳມະການປະສານງານນະໂຍບາຍປະຊາກອນ". ເພື່ອຈັດຕັ້ງປະຕິບັດກິດຈະກຳທີ່ບັນຈຸຢູ່ໃນແຜນຂອງຂະແໜງການ ບັນດາກະຊວງທີ່ກ່ຽວຂ້ອງຈະ

ຕ້ອງໄດ້ນຳເອົານະໂຍບາຍນີ້ເຊື່ອມເຂົ້າແຜນປະຈຳປີ ຫຼື ແຜນໄລຍະກາງຂອງຂະແໜງການຕົນ ແລະ ຂຶ້ນງົບປະມານ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ກະຊວງແຜນການ ແລະ ການລົງທຶນ ຂໍສະແດງຄວາມຂອບໃຈໂດຍສະເພາະມາຍັງຄະນະວິຊາການທີ່ມາຈາກ ບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ໃຫ້ຄວາມຮ່ວມມື, ປະກອບຂໍ້ມູນເຂົ້າໃນການຮ່າງນະໂຍບາຍ, ເຂົ້າຮ່ວມ ປະຊຸມປຶກສາຫາລືຫຼາຍຄັ້ງ ເພື່ອຄວາມເປັນເອກະພາບກ່ຽວກັບເນື້ອໃນຂອງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ 2019-2030. ພິເສດແມ່ນຂໍສະແດງຄວາມຂອບໃຈມາຍັງກົມແຜນການກໍຄືກອງເລຂາ ທີ່ໄດ້ ນຳພາຂະບວນການຮ່າງນະໂຍບາຍ ແລະ ສຸມໃສ່ທຸກເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການຮ່າງນະໂຍບາຍນີ້ໃຫ້ ປະສົບຜົນສຳເລັດ.

ຕາງໜ້າໃຫ້ ກະຊວງແຜນການ ແລະ ການລົງທຶນ ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນມາຍັງ ອົງການສະຫະ ປະຊາຊາດກອງທຶນສຳລັບປະຊາກອນ (UNFPA) ທີ່ໄດ້ໃຫ້ການສະໜັບສະໜູນຂະບວນການສ້າງຮ່າງນະໂຍບາຍ ແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ 2019-2030 ລວມທັງການສະໜັບສະໜູນທາງດ້ານທຶນຮອນ ແລະ ທາງດ້ານວິຊາການ.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີ**

## ຄຳຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| AEC | ປະຊາຄົມເສດຖະກິດອາຊຽນ |
| ASEAN | ປະຊາຄົມບັນດາປະເທດອາຊຽນ |
| ANC | ການກວດກ່ອນການເກີດ (ການຝາກທ້ອງ) |
| ASRH | ສຸຂະພາບທາງເພດ ແລະ ການຈະເລີນພັນໃນຊາວໜຸ່ມ |
| BCC | ການສື່ສານການປ່ຽນແປງພຶດຕິກຳ |
| CSE | ເພດສຶກສາ |
| DOP | ກົມແຜນການ |
| CBD | ການແຈກຢາຍພື້ນຖານຊຸມຊົນ |
| CPR | ອັດຕາການນຳໃຊ້ວິທີການຄຸມກຳເນີດ |
| EENC | ການດູແລທີ່ຈຳເປັນສຳລັບເດັກເກີດໃໝ່ໃນໄລຍະທຳອິດ |
| EmOC | ວຽກງານການດູແລສຸກເສີນໃນເວລາເກີດລູກ |
| FP | ການວາງແຜນຄອບຄົວ |
| GDI | ດັດຊະນີການພັດທະນາບົດບາດຍິງ-ຊາຍ |
| GDP | ລວມຍອດຜະລິດຕະພັນພາຍໃນ. |
| GII | ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ |
| GNI | ລາຍຮັບແຫ່ງຊາດຕໍ່ຫົວຄົນ |
| HC | ສຸກສາລາ |
| HDI | ດັດຊະນີການພັດທະນາມະນຸດ |
| IEC | ຂໍ້ມູນຂ່າວສານ, ການສຶກສາ ແລະ ການສື່ສານ |
| ICPD | ກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ |
| IER | ສະຖາບັນຄົ້ນຄ້ວາເສດຖະກິດ |
| IMR | ອັດຕາການຕາຍຂອງເດັກເກີດໃໝ່ |
| IOM | ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ |
| IPL | ເສັ້ນຄວາມທຸກຍາກສາກົນ |
| IUD | ຮ່ວງອະນາໄມ |
| ILO | ອົງການແຮງງານສາກົນ |
| LARC | ການນຳໃຊ້ວິທີຄຸມກຳເນີດໄລຍະຍາວແບບຊົ່ວຄາວ |
| LSIS | ການສຳຫຼວດດັດສະນີໝາຍສັງຄົມລາວ |
| LFTU | ສະຫະພັນກຳມະບານລາວ |
| LSB | ສູນສະຖິຕິແຫ່ງຊາດ |
| LDC | ປະເທດດ້ອຍພັດທະນາ |
| LWU | ສູນກາງສະຫະພັນແມ່ຍິງລາວ |
| LYU | ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |
| LNCCI | ສະພາການຄ້າ |
| LU | ມະຫາວິທະຍາໄລແຫ່ງຊາດ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| MCPR | ວິທີການຄຸມກຳເນີດແບບທັນສະໄໝ |
| MOPS | ກະຊວງປ້ອງກັນຄວາມສະຫງົບ |

| | |
|---|---|
| MDGs | ເປົ້າຫມາຍການພັດທະນາສະຫັດສະຫວັດ |
| MMR | ອັດຕາສ່ວນການຕາຍຂອງແມ່ |
| MOH | ກະຊວງສາທາລະນະສຸກ |
| MLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| MSM | ຊາຍຮ່ວມເພດກັບຊາຍ |
| MOES | ກະຊວງສຶກສາທິການ ແລະ ກິລາ |
| MOHA | ກະຊວງພາຍໃນ |
| NCD | ພະຍາດບໍ່ຕິດຕໍ່ |
| NCAWMC | ຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກ |
| NPL | ເສັ້ນຄວາມທຸກຍາກແຫ່ງຊາດ |
| NQF | ກອບວຸດທິການສຶກສາແຫ່ງຊາດ |
| NTC | ຄະນະກຳມະການຝຶກອົບຮົມແຫ່ງຊາດ |
| NEET | ຫວ່າງງານ, ບໍ່ໄດ້ເຂົ້າໂຮງຮຽນ ຫລື ຝຶກອົບຮົມ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NGO | ອົງການຈັດຕັ້ງບໍ່ສັງກັດລັດຖະບານ |
| PES | ການບໍລິການຈັດຫາງານຂອງລັດ |
| PNC | ການດູແລຫຼັງການເກີດ |
| POA | ແຜນປະຕິບັດງານ |
| PPP | ກຳລັງຊື້ທີ່ເທົ່າທຽມກັນ |
| RH | ສຸຂະພາບຈະເລີນພັນ |
| SCC | ລາຍການກວດການເກີດປອດໄພ |
| SDGs | ເປົ້າໝາຍການພັດທະນາແບບຍືນຍົງ |
| SRH | ສຸຂະພາບທາງເພດ ແລະ ຈະເລີນພັນ |
| STI | ພະຍາດຕິດຕໍ່ທາງເພດສຳພັນ |
| TFR | ອັດຕາການຈະເລີນພັນລວມ |
| TVET | ອາຊີວະສຶກສາ |
| UNFPA | ອົງການສະຫະປະຊາຊາດກອງທຶນສໍາລັບປະຊາກອນ |
| UNDESA | ອົງການສະຫະປະຊາຊາດດ້ານເສດຖະກິດ ແລະ ສະຫວັດດີການສັງຄົມ |
| UNODC | ອົງການສະຫະປະຊາຊາດເພື່ອການຕ້ານຢາເສດຕິດ ແລະ ອາຊະຍາກຳ |
| VHW | ອາສາສະໝັກຮັກສາສຸຂະພາບຂັ້ນບ້ານ |
| VMU | ໜ່ວຍໄກ່ເກ່ຍຂັ້ນບ້ານ |
| WB | ທະນາຄານໂລກ |
| WHO | ອົງການອະນາໄມໂລກ |

## ລາຍຊື່ຮູບສະແດງ


ຮູບສະແດງ 1: ລາຍຮັບແຫ່ງຊາດຕໍ່ຫົວຄົນຢູ່ອາຊີຕາເວັນອອກສ່ຽງໃຕ້, ປີ 2016

ຮູບສະແດງ 2: ການເພີ່ມຂຶ້ນຂອງສ່ວນຮ້ອຍຂອງ GDP ຕໍ່ຫົວຄົນ ຢູ່ປະເທດອາຊີຕາເວັນອອກສ່ຽງໃຕ້,ປີ 2000-2015

ຮູບສະແດງ 3: ສ່ວນຮ້ອຍຂອງປະຊາກອນທັງໝົດ ແລະ ປະຊາກອນເຮັດວຽກທີ່ຢູ່ກອງ IPL, ປີ 2016, ສຳລັບບາງປະເທດ ຢູ່ອາຊີຕາເວັນອອກສ່ຽງໃຕ້.

ຮູບສະແດງ 4: ອັດຕາສ່ວນຂອງ GDP ແລະ ກຳລັງແຮງງານແບ່ງຕາມຂະແໜງການທາງເສດຖະກິດ, ປີ 2015

ຮູບສະແດງ 5: ດັດຊະນີການພັດທະນາມະນຸດ, ປີ 1990-2015, ບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້

ຮູບສະແດງ 6: ການເຕີບໂຕຂອງປະຊາກອນໃນໄລຍະຍາວຢູ່ ສປປ ລາວ ປີ 1950-2015

ຮູບສະແດງ 7: ອາຍຸຍືນສະເລ່ຍຕັ້ງແຕ່ເກີດຂອງບັນດາປະເທດຢູ່ອາຊີອາເວັນອອກສ່ຽງໃຕ້, ປີ 1950-2015

ຮູບສະແດງ 8: ອັດຕາການຕາຍຂອງເດັກອ່ອນ ແລະ ອັດຕາການຕາຍຂອງເດັກລຸ່ມ 5 ປີຢູ່ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້ ປີ 1950-2015

ຮູບສະແດງ 9: ອາຍຸຍືນສະເລ່ຍຕັ້ງແຕ່ເກີດ ແບ່ງຕາມແຂວງສຳລັບແມ່ຍິງ ແລະ ຜູ້ຊາຍ ປີ 2015

ຮູບສະແດງ10: ການຕາຍຂອງເດັກອ່ອນ ແລະ ເດັກນ້ອຍແບ່ງຕາມແຂວງ, ການສຳຫຼວດດັດຊະນີໝາຍສັງຄົມລາວ ປີ 2011-2012

ຮູບສະແດງ 11: ທ່າອ່ຽງຂອງອັດຕາການຕາຍຂອງແມ່ ປີ 1990-2015 ຢູ່ ສປປ ລາວ

ຮູບສະແດງ 12: ອັດຕາສ່ວນການຕາຍຂອງແມ່ຢູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ປີ 2015

ຮູບສະແດງ 13: ທ່າອ່ຽງອັດຕາການຈະເລີນພັນຢູ່ອາຊີຕາເວັນອອກສ່ຽງໃຕ້ ປີ 1950-2015

ຮູບສະແດງ 14: ອັດຕາການຈະເລີນພັນຂອງໝວດອາຍຸສຳລັບ ສປປ ລາວ ປີ 2011-2012 ແລະ 2015

ຮູບສະແດງ 15: ອັດຕາການຈະເລີນພັນຂອງໝວດອາຍຸ ຢູ່ບັນດາປະເທດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ປີ 2010-2015

ຮູບສະແດງ 16: ອັດຕາສ່ວນການເກີດທັງໝົດຂອງແມ່ ທີ່ມີອາຍຸ 15-19 ປີ ຢູ່ບັນດາປະເທດອາຊີຕາເວັນອອກສ່ຽງໃຕ້

ຮູບສະແດງ 17: ອັດຕາການຈະເລີນພັນລວມ (TFR) ແບ່ງຕາມແຂວງ ປີ 2015-2020

ຮູບສະແດງ 18: ແຂວງທີ່ມີຄວາມຄືບໜ້າສູງສຸດ ແລະ ຕໍ່າສຸດຂອງການຂ້າມຜ່ານດ້ານປະຊາກອນ ປີ 2015

ຮູບສະແດງ 19: ແຂວງທີ່ມີຄວາມຄືບໜ້າສູງສຸດ ແລະ ຕໍ່າສຸດຂອງການຂ້າມຜ່ານດ້ານປະຊາກອນ ປີ 2015

ຮູບສະແດງ 20: ທ່າອ່ຽງຂອງອັດຕາສ່ວນການເອື່ອຍອີງ ປີ 1995-2015

ຮູບສະແດງ 21: ການແຈກຢາຍຂອງປະຊາກອນແບ່ງຕາມອາຍຸ ແລະ ເພດ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 1995*

ຮູບສະແດງ 22: ການແຈກຢາຍຂອງປະຊາກອນແບ່ງຕາມອາຍຸ ແລະ ເພດ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015*

ຮູບສະແດງ 23: ການປ່ຽນແປງຂອງອັດຕາສ່ວນຂອງປະຊາກອນແບ່ງຕາມແຂວງ ປີ 2005-2015

ຮູບສະແດງ 24: ການເຄື່ອນຍ້າຍສຸດທິລະຫວ່າງແຂວງ ປີ 2005-2015

ຮູບສະແດງ 25: ການແຈກຢາຍຂອງປະຊາກອນຢູ່ເຂດຊົນນະບົດ-ຕົວເມືອງ ປີ 1950-2015 ສປປ ລາວ

ຮູບສະແດງ 26: ການແຈກຢາຍຂອງປະຊາກອນຢູ່ເຂດຊົນນະບົດ-ຕົວເມືອງແບ່ງຕາມແຂວງ ປີ 2015

ຮູບສະແດງ 27: ການຄາດຄະເນປະຊາກອນ ປີ 2015-2045 ພາຍໃຕ້ 3 ສົມມຸດຖານກ່ຽວກັບການຈະເລີນພັນ

ຮູບສະແດງ 28: ການເພີ່ມຂຶ້ນຂອງປະຊາກອນຕໍ່ປີພາຍໃຕ້ 3 ກໍລະນີຂອງການຄາດຄະເນ ປີ 2015-2045

ຮູບສະແດງ 29: ປະຊາກອນອາຍຸ 0-14 ປີ, ສ່ວນຮ້ອຍຂອງປະຊາກອນທັງໝົດ ປີ 2015-2045
ຮູບສະແດງ 30: ປະຊາກອນອາຍຸ 15-64 ປີ, ສ່ວນຮ້ອຍຂອງປະຊາກອນທັງໝົດ ປີ 2015-2045
ຮູບສະແດງ 31: ປະຊາກອນອາຍຸ 65 ປີຂຶ້ນໄປ, ສ່ວນຮ້ອຍຂອງປະຊາກອນທັງໝົດ ປີ 2015-2045
ຮູບສະແດງ 32: ອັດຕາສ່ວນການເອື່ອຍອີງ ປີ 2015-2045 ສໍາລັບ 3 ກໍລະນີຂອງການຄາດຄະເນ
ຮູບສະແດງ 33: ການຄາດຄະເນລະດັບແຂວງ ປີ 2015-2045 (ກໍລະນີປານກາງ)

## ບົດສັງລວມຫຍໍ້

### ຄວາມເປັນມາ

ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ແມ່ນການທົບທວນນະໂຍບາຍປີ 1999 ແລະ 2006. ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ໄດ້ເນັ້ນໃສ່ບັນຫາທີ່ຍັງຄົງຄ້າງ ແລະ ບໍ່ສາມາດບັນລຸໄດ້ຂອງການຈັດຕັ້ງປະຕິບັດນະໂຍບາຍປີ 1999 ແລະ 2006 ຊຶ່ງລວມມີດັ່ງຕໍ່ໄປນີ້:

- ນະໂຍບາຍ ປີ 2019-2030 ໄດ້ມີການວິເຄາະສະຖານະການ ໂດຍອີງໃສ່ການວິເຄາະໃນການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ລວມທັງການຄາດຄະເນພົນລະເມືອງລະດັບຊາດ ແລະ ລະດັບແຂວງ 2015-2045.
- ເລັ່ງໃສ່ບັນຫາທີ່ກ່ຽວພັນໂດຍກົງກັບປະຊາກອນ ແລະ ການພັດທະນາຫຼາຍກວ່າເກົ່າ ຊຶ່ງຈະບໍ່ໄດ້ເນັ້ນໃສ່ບັນຫາຍ່ອຍໆ ຊຶ່ງບັນຫາເຫຼົ່ານີ້ແມ່ນໄດ້ມີການພິຈາລະນາແກ້ໄຂຢູ່ໃນບັນດານະໂຍບາຍຕ່າງໆ.
- ຜົນໄດ້ຮັບຕ່າງໆແມ່ນມາຈາກແຜນງານຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງ ທີ່ສະທ້ອນໃຫ້ເຫັນເຖິງການມີສ່ວນຮ່ວມຈາກຫຼາຍພາກສ່ວນ.
- ຕາຕະລາງການຈັດຕັ້ງປະຕິບັດນີ້ ບໍ່ແມ່ນພຽງແຕ່ສະແດງໃຫ້ເຫັນການເຊື່ອມໂຍງລະຫວ່າງເປົ້າໝາຍ, ຈຸດປະສົງ ແລະ ກິດຈະກໍາ ເທົ່ານັ້ນ ແຕ່ມັນຍັງໄດ້ລະບຸພາກສ່ວນຈັດຕັ້ງປະຕິບັດກິດຈະກໍາເພື່ອໃຫ້ບັນລຸເປົ້າໝາຍ, ນອກນັ້ນຍັງເປັນຂອບວຽກເພື່ອຊ່ວຍໃນການຕິດຕາມ ແລະ ການປະເມີນຜົນ.

ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ໄດ້ປັບປຸງຫຼາກຫຼາຍວິທີການ ຢູ່ໃນນະໂຍບາຍປີ 1999 ແລະ 2006 ເພື່ອໃຫ້ແທດເໝາະກັບສະພາບຂອງປະຊາກອນ ແລະ ການພັດທະນາ ໃນປະຈຸບັນ. ລວມທັງການດຸ່ນດ່ຽງປະຊາກອນ" ເຊິ່ງເປັນການຍາກທີ່ຈະບັນລຸ ແລະ ແນວຄວາມຄິດທີ່ວ່າ ການເຕີບໂຕຂອງປະຊາກອນຕ້ອງສອດຄ່ອງກັບການເຕີບໂຕທາງດ້ານເສດຖະກິດ. ໃນປະຈຸບັນການຂະຫຍາຍຕົວທາງດ້ານເສດຖະກິດແມ່ນໄວກວ່າການເຕີບໂຕຂອງປະຊາກອນ. ສະນັ້ນຈຶ່ງບໍ່ຈໍາເປັນຕ້ອງມີການຕັ້ງຄາດໝາຍຕໍ່ການເຕີບໂຕຂອງປະຊາກອນຢູ່ໃນລະດັບປະເທດ ເພື່ອໃຫ້ລາຍໄດ້ຕໍ່ຫົວຄົນເພີ່ມຂຶ້ນ.

ເຖິງແມ່ນວ່ານະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ໄດ້ມີການປັບປຸງຫຼາຍພໍສົມຄວນ ຖ້າທຽບກັບນະໂຍບາຍປີ 1999 ແລະ 2006, ແຕ່ທັງສາມນະໂຍບາຍ ກໍມີຄວາມຕໍ່ເນື່ອງກັນຕໍ່ກັບບັນຫາຫຼັກຂອງປະຊາກອນ ເຊັ່ນດຽວກັນກັບນະໂຍບາຍທີ່ຜ່ານມາ, ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ແມ່ນຖືກພັດທະນາຂຶ້ນດ້ວຍການມີສ່ວນຮ່ວມຂອງຫຼາຍຂະແໜງການ ເຊິ່ງແມ່ນການຜັນຂະຫຍາຍແຜນ ແລະ ຍຸດທະສາດຂອງຂະແໜງການທີ່ກ່ຽວຂ້ອງ, ເຖິງແມ່ນວ່າມີບາງເປົ້າໝາຍ ແລະ ຈຸດປະສົງເປັນອັນສະເພາະຂອງນະໂຍບາຍກໍຕາມ ທັງໝົດລ້ວນແລ້ວແຕ່ສະທ້ອນໃຫ້ເຫັນແຜນຂອງຂະແໜງການຕ່າງໆທີ່ກວມເອົາຄວາມຫຼາກຫຼາຍ ແລະ ທ່າອ່ຽງຂອງປະຊາກອນ.

### ປະຊາກອນໃນປະຈຸບັນ

ອັດຕາການເຕີບໂຕຂອງປະຊາກອນຢູ່ໃນລະດັບຊາດ ຫຼຸດລົງປະມານ 1.5% ຕໍ່ປີໃນຊ່ວງປີ 2005-2015 ສົມທຽບໃສ່ໄລຍະກ່ອນໜ້ານີ້ແມ່ນ 2.1%, ການຫຼຸດລົງຂອງການເຕີບໂຕແມ່ນຜົນເນື່ອງມາຈາກການຫຼຸດລົງຂອງການຈະເລີນພັນ ແລະ ການເສຍຊີວິດ - ຂະບວນການນີ້ເອີ້ນວ່າ "ການຂ້າມຜ່ານຂອງປະຊາກອນ" ທ່າອ່ຽງເຫຼົ່ານີ້ອາດ ຈະສືບຕໍ່ຫຼຸດລົງ ອີງຕາມການຄາດຄະເນຂອງອັດຕາການເຕີບໂຕຂອງປະຊາກອນແມ່ນຈະຫຼຸດລົງຢູ່ປະມານ 1.1% ຕໍ່ປີຈົນຮອດໄລຍະປີ 2035-2040. ອັດຕາການເຕີບໂຕຂອງປະຊາກອນແມ່ນມາຈາກອັດຕາຂອງປະຊາກອນແມ່ຍິງໃນເກນອາຍຸຖືພາເພີ່ມຂຶ້ນ, ອີງຕາມການຄາດຄະເນຂອງປະຊາກອນ, ປະຊາກອນຈະເພີ່ມຂຶ້ນຈົນຮອດປີ 2045, ທ່າອ່ຽງ

ຂອງການເພີ່ມຂຶ້ນຂອງປະຊາກອນ ຈະມີການຫຼຸດລົງຈາກປະຈຸບັນ 112 ພັນຄົນຕໍ່ປີ ມາເປັນ 70 ພັນຄົນຕໍ່ປີ ໃນໄລຍະປີ 2040-2045, ຄາດວ່າຈະມີປະຊາກອນເພີ່ມປະມານ 2.7 – 3.0 ລ້ານຄົນ ໃນລະຫວ່າງປີ 2015 ແລະ 2045 ແລະ ຄາດວ່າປະຊາກອນຂອງປະເທດຈະມີໃນລະຫວ່າງ 9 ຫາ 10 ລ້ານໃນປີ 2045. ເຖິງຢ່າງໃດກໍ່ຕາມ ທັງນີ້ກໍຂຶ້ນກັບອັດຕາການເຄື່ອນຍ້າຍ. ການຄາດຄະເນໃນປະຈຸບັນ ບໍ່ໄດ້ລວມເອົາການສົມມຸດຕິຖານກ່ຽວກັບການເຄື່ອນຍ້າຍ, ເຊິ່ງເປັນອົງປະກອບອັນໜຶ່ງທີ່ເຮັດໃຫ້ການຄາດຄະເນການເຕີບໂຕຂອງປະຊາກອນໃນອະນາຄົດບໍ່ມີຄວາມແນ່ນອນ.

ຄວາມຫຼາກຫຼາຍ ແລະ ທ່າອ່ຽງຂອງປະຊາກອນ ຢູ່ ສປປ ລາວ ແມ່ນແຕກຕ່າງກັນຫຼາຍລະຫວ່າງແຂວງຕໍ່ ແຂວງ. ການຂ້າມຜ່ານຂອງປະຊາກອນ (ການຈະເລີນພັນ ແລະ ການຕາຍຫຼຸດລົງ) ແມ່ນມີຈັງຫວະທີ່ແຕກຕ່າງກັນ ໃນທົ່ວແຂວງ ແລະ ບາງແຂວງໄດ້ຮັບຜົນກະທົບຈາກການເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດຫຼາຍກວ່າແຂວງ ອື່ນ, ສຳລັບອັດຕາການຕາຍຂອງເດັກລຸ່ມ 5 ປີລົງມາ ຕົວຢ່າງ: ອັດຕາການຕາຍຢູ່ແຂວງຜົ້ງສາລີ (150 ຕໍ່ການເກີດ 1,000 ຄົນ) ເຊິ່ງສູງກວ່າ ນະຄອນຫຼວງວຽງຈັນ 5 ເທົ່າ (30 ຕໍ່ການເກີດ 1,000 ຄົນ). ການຈະເລີນພັນກໍ່ມີຄວາມແຕກຕ່າງກັນຢ່າງກວ້າງຂວາງໃນນະຄອນຫຼວງວຽງຈັນ, ແມ່ຍິງໂດຍສະເລ່ຍແລ້ວມີອັດຕາຈະເລີນພັນມີລູກ 2.2 ຄົນ, ໃນຂະນະທີ່ແຂວງເຊກອງ ແມ່ຍິງມີລູກສະເລ່ຍ 4.5 ຄົນ, ນະຄອນຫຼວງວຽງຈັນ ເປັນແຂວງທີ່ມີການຂ້າມຜ່ານຂອງປະຊາກອນຫຼາຍທີ່ສຸດ ຮອງລົງມາແມ່ນ ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ ແລະ ໜ້ອຍທີ່ສຸດແມ່ນຢູ່ແຂວງຜົ້ງສາລີ, ແຂວງເຊກອງ ແລະ ແຂວງຫົວພັນ. ຄວາມແຕກຕ່າງເຫຼົ່ານີ້ຊີ້ໃຫ້ເຫັນວ່າບາງແຂວງມີອັດຕາການເພີ່ມຂຶ້ນຕາມທຳມະຊາດຫຼາຍກວ່າແຂວງອື່ນ, ເຖິງຢ່າງໃດກໍຕາມການເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດ ກໍມີຜົນກະທົບຕໍ່ກັບອັດຕາເຫຼົ່ານີ້.

ໃນຂະນະທີ່ການຈະເລີນພັນ ມີການຫຼຸດລົງຢ່າງຫຼວງຫຼາຍໃນທົດສະວັດຜ່ານມານີ້, ອັດຕາການເກີດລູກໃນຊາວໜຸ່ມເຫັນວ່າຍັງສູງທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້ ຮອງລົງມາຈາກປະເທດໄທ. ນອກນັ້ນກໍຍັງມີຄວາມແຕກຕ່າງກັນລະຫວ່າງແຂວງຕໍ່ແຂວງ ແລະ ຂົງເຂດຕ່າງໆ. ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ອັດຕາການເກີດລູກໃນຊາວໜຸ່ມ ແມ່ນ 121 ຄົນ ຕໍ່ການເກີດ 1,000 ສົມທຽບກັບ 44 ຄົນຕໍ່ການເກີດ 1,000 ໃນຕົວເມືອງ - ມີຄວາມແຕກໂຕນກັນຫຼາຍ.

ໃນຂະນະທີ່ການຂ້າມຜ່ານຂອງປະຊາກອນກຳລັງເກີດຂຶ້ນ, ໂຄງສ້າງທາງອາຍຸໄດ້ກໍ່ມີການປ່ຽນແປງເຊັ່ນກັນ. ດັ່ງນັ້ນ, ການກະຈາຍອາຍຸຂອງປະຊາກອນ ສປປ ລາວ ຈຶ່ງມີການປ່ຽນແປງ ແລະ ຈະສືບຕໍ່ປ່ຽນແປງໃນອະນາຄົດ. ອັດຕາສ່ວນຂອງປະຊາກອນໃນກຸ່ມອາຍຸ "ເອື່ອຍອີງ" (0-14 ແລະ 65 ຂຶ້ນໄປ) ຫຼຸດລົງ 21% ໃນປີ 1995 ແລະ 2015, ໃນຂະນະດຽວກັນ ປະຊາກອນອາຍຸ 15-64 ປີ (ເກນອາຍຸເຮັດວຽກ) ເພີ່ມຂຶ້ນໃນອັດຕາສ່ວນທີ່ຄ້າຍຄືກັນ. ນີ້ໝາຍຄວາມວ່າ "ອັດຕາເກນອາຍຸເອື່ອຍອີງ" ແມ່ນຫຼຸດລົງ, ນີ້ເປັນທ່າແຮງອັນສຳຄັນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດ. ກຳລັງແຮງງານເພີ່ມຂຶ້ນເປັນການສ້າງໂອກາດທາງດ້ານປະຊາກອນ ໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ ເນື່ອງຈາກວ່າມີແຮງງານຫຼາຍໃນການສະໜັບສະໜູນກຸ່ມຄົນເອື່ອຍອີງ ຊຶ່ງມີຈຳນວນໜ້ອຍ. ນີ້ເປັນໂອກາດໃນການສະສົມເພື່ອການລົງທຶນ ແລະ ຍັງເປັນທ່າແຮງໃຫ້ລັດຖະບານໃນການເກັບລາຍຮັບ ເພື່ອສະໜັບສະໜູນການບໍລິການຕ່າງໆ. ເຖິງຢ່າງໃດກໍຕາມ ໂອກາດທາງດ້ານປະຊາກອນນັ້ນບໍ່ສາມາດເກີດເອງໄດ້; ສຳຄັນແມ່ນຂຶ້ນກັບກຳລັງແຮງງານຢູ່ພາຍໃນປະເທດ, ໂດຍສະເພາະໃນກຸ່ມຊາວໜຸ່ມວ່າໄດ້ຮັບການສຶກສາ ແລະ ການຝຶກອົບຮົມພຽງພໍຫຼືບໍ່ ເພື່ອເຂົ້າສູ່ການມີວຽກເຮັດງານທຳ ແລະ ການມີວຽກທີ່ເໝາະສົມກັບແຮງງານທີ່ມີຢູ່.

ການແຈກຢາຍທາງດ້ານພູມສັນຖານຂອງປະຊາກອນ ແມ່ນມີການປ່ຽນແປງຢ່າງຊ້າໆ, ເຖິງແມ່ນວ່າບາງແຂວງໄດ້ເພີ່ມສ່ວນແບ່ງປະຊາກອນຂອງເຂົາເຈົ້າໃນໄລຍະສອງທົດສະວັດຜ່ານມາ, ແຕ່ໃນຂະນະດຽວກັນແຂວງອື່ນຜັດສູນເສຍສ່ວນແບ່ງທາງດ້ານປະຊາກອນ. ເຫດຜົນຕົ້ນຕໍກໍເນື່ອງມາຈາກການເຄື່ອນຍ້າຍທີ່ມີຄວາມແຕກຕ່າງກັນ. ນະຄອນຫຼວງວຽງຈັນ ໄດ້ຮັບສ່ວນແບ່ງຂອງປະຊາກອນແຫ່ງຊາດເພີ່ມຂຶ້ນ ກໍຍ້ອນວ່າມີການຫຼັ່ງໄຫຼຂອງປະຊາ ກອນ

ເຂົ້າມາຫຼາຍທີ່ສຸດ. ການສຳຫຼວດປະຊາກອນໄລຍະປີ 1995 ແລະ 2015, ປະຊາກອນໃນຕົວເມືອງຂອງ ສປປ ລາວ ເພີ່ມຂຶ້ນຈາກ 17% ຂອງຈຳນວນທັງໝົດ (780,000) ຫາ 33% (2.1 ລ້ານ). ອັດຕາສ່ວນຂອງພົນລະ ເມືອງໃນຕົວເມືອງເພີ່ມຂຶ້ນສະເລ່ຍ 1.9 % ລະຫວ່າງປີ 2005 ແລະ 2015 ຊຶ່ງສູງກວ່າອັດຕາການເຕີບໂຕຂອງປະເທດ ແຕ່ຕ່ຳກວ່າອັດຕາການເຕີບໂຕຂອງຕົວເມືອງຈາກປີ 1995 ເຖິງ 2005 ໃນອັດຕາສະເລ່ຍ 4.6% ຕໍ່ປີ. ອັດຕາການເຕີບໂຕຂອງຕົວເມືອງຊ້າລົງ, ແຕ່ວ່າສ່ວນແບ່ງຂອງປະຊາກອນໃນຕົວເມືອງຄາດວ່າຈະເພີ່ມຂຶ້ນ. ປະຊາ ກອນໃນນະຄອນຫຼວງວຽງຈັນຄາດວ່າຈະເພີ່ມຂຶ້ນຈາກ 844,000 ໃນປີ 2015 ມາເປັນ 1.4 ລ້ານຄົນ ໃນປີ 2045 (ເພີ່ມຂຶ້ນສອງສ່ວນສາມ). 50% ຂອງ ສປປລາວ ຄາດວ່າຈະກາຍເປັນຕົວເມືອງ ໃນປີ 2030 ອີງຕາມການຄາດຄະເນຂອງອົງການສະຫະປະຊາຊາດ.

**ສະຫຼຸບ, ນະໂຍບາຍນີ້ໄດ້ແກ້ໄຂບັນຫາ ແລະ ສິ່ງທ້າທາຍ ຂອງປະຊາກອນ ສປປ ລາວ ຄືດັ່ງຕໍ່ໄປນີ້:**

- ຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງແຂວງ ແລະ ເມືອງຕໍ່ກັບ ອັດຕາການເກີດ ແລະ ອັດຕາການຕາຍ (ລວມທັງການຕາຍຂອງແມ່) ເພື່ອເລັ່ງການຂ້າມຜ່ານທາງດ້ານປະຊາກອນໃຫ້ໄວຂຶ້ນ. ດັ່ງນັ້ນຈຶ່ງຮຽກຮ້ອງໃຫ້ມີການຈັດຕັ້ງປະຕິບັດກິດຈະກຳໃນຫຼາຍຂົງເຂດ, ໂດຍສະເພາະແມ່ນວຽກງານແມ່ ແລະ ເດັກ ແລະສຸຂະພາບຈະເລີນພັນ ແລະ ສິດທິ ໂດຍການເອົາໃຈໃສ່ຕໍ່ກັບບັນດາເມືອງ ແລະ ແຂວງທີ່ມີການພັດທະນາຊັກຊ້າເປັນພິເສດ
- ປັບໂຕເຂົ້າກັບການເຕີບໂຕຂອງປະຊາກອນ ໂດຍການລວມເອົາຂໍ້ມູນທາງດ້ານປະຊາກອນເຂົ້າໃນແຜນພັດທະນາ, ລວມທັງແຜນຂອງຂະແໜງການຕ່າງໆເຊັ່ນ: ສາທາລະນະສຸກ ແລະ ສຶກສາທິການ, ແຜນຂອງແຂວງ ແລະ ລວມທັງພັດທະນາແຜນການກາຍເປັນຕົວເມືອງ ແລະ ແຜນຍຸດທະສາດຕ່າງໆ ທີ່ບັນຈຸເອົາຂໍ້ມູນທາງດ້ານປະຊາກອນເຂົ້ານຳ. ນອກຈາກນັ້ນ, ກໍຍັງຈຳເປັນຕ້ອງໄດ້ມີການປັບປຸງການສະໜອງຄຸນນະພາບຂອງຂໍ້ມູນປະຊາກອນສຳລັບການວາງແຜນຕ່າງໆ.
- ແກ້ໄຂບັນຫາຄວາມຕ້ອງການສະເພາະຂອງກຸ່ມຄົນໃນສັງຄົມເຊັ່ນ: ຊາວໜຸ່ມ, ເຍົາວະຊົນ ແລະ ສ້າງຄວາມສະເໝີພາບຍິງ-ຊາຍ. ການຫຼຸດຜ່ອນການຈະເລີນພັນທີ່ສູງໃນຊາວໜຸ່ມ ຮຽກຮ້ອງໃຫ້ມີຍຸດທະສາດທີ່ສຸມໃສ່ຊາວໜຸ່ມ, ລວມທັງຍຸດທະສາດເພື່ອຫຼຸດຜ່ອນການແຕ່ງງານກ່ອນໄວອັນຄວນ ແລະ ການຖືພາໃນຕອນອາຍຸຍັງນ້ອຍ ແລະ ເສີມຂະຫຍາຍຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນໃນຊາວໜຸ່ມ, ລວມທັງການວາງແຜນຄອບຄົວ. ຄວາມສະເໝີພາບຍິງ-ຊາຍ ແມ່ນປັດໄຈລວມທີ່ສົ່ງຜົນກະທົບຕໍ່ເປົ້າໝາຍອື່ນໆ ແລະ ທັງເປັນປັດໄຈສຳຄັນທາງສັງຄົມທີ່ພົວພັນເຖິງສິດທິຂອງຕົນເອງ.
- ໂຄງປະກອບຂອງອາຍຸມີການປ່ຽນແປງ ເຊັ່ນ: ອັດຕາສ່ວນຂອງປະຊາກອນໃນເກນອາຍຸເຮັດວຽກເພີ່ມຂຶ້ນນີ້ ເປັນທັງກາລະໂອກາດ ແລະ ມີຄວາມທ້າທາຍໄປພ້ອມໆກັນ. ການບັນລຸ "ກາລະໂອກາດທາງດ້ານປະຊາກອນ" ທີ່ມາຈາກອັດຕາສ່ວນຂອງກຸ່ມອາຍຸເອື່ອຍອີງຫຼຸດລົງ ໝາຍຄວາມວ່າຕ້ອງມີການຊຸກຍູ້ໃຫ້ມີການສຶກສາສາຍສາມັນ ແລະ ສາຍອາຊີວະສຶກສາຢ່າງກວ້າງຂວາງ ເພື່ອຮັບປະກັນວ່າຊາວໜຸ່ມເຂົ້າມາມີສ່ວນຮ່ວມໃນກຳລັງແຮງງານ ແລະ ມີວຽກເຮັດງານທຳ ແລະ ມີປະສິດທິພາບ. ປະຊາກອນຜູ້ອາຍຸສູງຢູ່ ສປປ ລາວ ຈະເພີ່ມຂຶ້ນໃນອະນາຄົດອັນໃກ້ນີ້, ດັ່ງນັ້ນຈຳເປັນຕ້ອງມີຍຸດທະສາດ ເພື່ອປ້ອງກັນຄວາມທຸກຍາກໃນກຸ່ມຜູ້ອາຍຸສູງ.

**ວິໄສທັດ ແລະ ເປົ້າໝາຍ ຂອງນະໂຍບາຍ**

ຮອດປີ 2030, ປະຊາກອນໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມ ຢ່າງສະເໝີພາບ ແລະ ເປັນທຳຫຼາຍຂຶ້ນ

ວິໄສທັດນີ້ໄດ້ສະທ້ອນໃຫ້ເຫັນຢູ່ໃນເປົ້າໝາຍ 10 ຂອງເປົ້າໝາຍການພັດທະນາແບບຍືນຍົງ ເລັ່ງໃສ່ "ຫຼຸດຜ່ອນຄວາມບໍ່ສະເໝີພາບຢູ່ພາຍໃນປະເທດ ແລະ ລະຫວ່າງປະເທດ"" ເຊັ່ນດຽວກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ກ່ຽວກັບການແກ້ໄຂບັນຫາຄວາມແຕກໂຕນກັນລະຫວ່າງທ້ອງຖິ່ນ, ຢູ່ພາຍໃນທ້ອງຖິ່ນເອງ ແລະ ປະຊາຊົນບັນດາເຜົ່າທີ່ອາໄສຢູ່ ສປປ ລາວ.

ເພື່ອແກ້ໄຂບັນຫາປະຊາກອນຂ້າງເທິງ ແລະ ສິ່ງທ້າທາຍຕ່າງໆ ແລະ ເພື່ອໃຫ້ບັນລຸວິໄສທັດຂ້າງເທິງນັ້ນ ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ປະກອບມີ 9 ເປົ້າໝາຍ, ແຕ່ລະເປົ້າໝາຍເຊື່ອມໂຍງກັບສອງ ຫຼື ຫຼາຍ "ຈຸດປະສົງ" ເຊິ່ງກຳນົດວິທີການໃນການບັນລຸເປົ້າໝາຍ. ຄະນະວິຊາການ (TWG) ຈາກຫຼາຍຂະແໜງການໄດ້ຄັດເລືອກເອົາເປົ້າໝາຍ ແລະ ຈຸດປະສົງຂອງນະໂຍບາຍແຫ່ງຊາດດ້ານປະຊາ ກອນ ແລະ ການພັດທະນາ ປີ 2019-2030 ໂດຍອີງໃສ່ການວິເຄາະສະຖານະການຂອງປະຊາກອນ. ເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍນັ້ນ ໄດ້ມີການກຳນົດຜົນໄດ້ຮັບຂອງຂະແໜງການ ແລະ ປະກອບເຂົ້າໃນນະໂຍບາຍປະຊາກອນນີ້. ໃນກໍລະນີທີ່ບໍ່ສາມາດກຳນົດຜົນໄດ້ຮັບຂອງຂະແໜງການ ຄະນະວິຊາການ (TWG) ກໍ່ໄດ້ສ້າງຂຶ້ນມາສະເພາະ ແລະ ກຳນົດພາກສ່ວນຈັດຕັ້ງປະຕິບັດເພື່ອໃຫ້ສາມາດບັນລຸໄດ້. ແຕ່ລະອົງປະກອບໂຄງສ້າງຂອງນະໂຍບາຍໄດ້ຖືກຈັດລຽງໃນຕາຕະລາງການຈັດຕັ້ງປະຕິບັດຢ່າງເປັນລະບົບ (ຂອບການຈັດຕັ້ງປະຕິບັດ) ເພື່ອສະແດງໃຫ້ເຫັນເຖິງການເຊື່ອມໂຍງກັນຈາກເປົ້າໝາຍຈົນເຖິງກິດຈະກຳສະເພາະ (ເບິ່ງພາກທີ IV). ບັນດາຕົວຊີ້ວັດ ແລະ ຄາດໝາຍໄດ້ກຳນົດຢູ່ໃນເປົ້າໝາຍເທົ່ານັ້ນ. ສຳລັບຕົວຊີ້ວັດ ແລະ ຄາດໝາຍຂອງຈຸດປະສົງ ແລະ ຜົນໄດ້ຮັບ ແມ່ນມີຢູ່ໃນແຜນຂອງຂະແໜງການ ຫຼື ອາດຈະສ້າງຂຶ້ນເພື່ອນຳໃຊ້ເຂົ້າໃນແຜນການຈັດຕັ້ງປະຕິບັດປະຈຳປີ ຫຼື ຫຼາຍປີ.

**ເປົ້າໝາຍ**:

1. ສົ່ງເສີມສຸຂະພາບຈະເລີນພັນໃນກຸ່ມຄົນທີ່ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ
2. ເລັ່ງລັດໃສ່ການຫຼຸດຜ່ອນອັດຕາການຕາຍຂອງເດັກອ່ອນ ແລະ ເດັກຕ່ຳກວ່າ 1 ປີ, ເດັກຕ່ຳກວ່າ 5 ປີ ໃນກຸ່ມຄົນຜູ້ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ.
3. ໃຊ້ກາລະໂອກາດ "'ທາງດ້ານປະຊາກອນ'" ໃຫ້ໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມສູງສຸດ ສຳລັບທຸກກຸ່ມຄົນ ແລະ ຂົງເຂດຢ່າງສະເໝີພາບ ແລະ ເປັນທຳ.
4. ສົ່ງເສີມໂອກາດທາງດ້ານເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດທີ່ດີສຳລັບຊາວໜຸ່ມ-ເຍົາວະຊົນ ທີ່ດ້ອຍໂອກາດ, ມີຄວາມສ່ຽງ ແລະ ກຸ່ມຄົນທີ່ບໍ່ມີວຽກເຮັດງານທຳ.
5. ເພີ່ມຜົນປະໂຫຍດສູງສຸດຈາກການເຄື່ອນຍ້າຍຂອງປະຊາກອນຈາກຊົນນະບົດສູ່ຕົວເມືອງ ແລະ ການເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດ ພ້ອມທັງຫຼຸດຜ່ອນຜົນກະທົບດ້ານລົບຈາກການເຄື່ອນຍ້າຍໃຫ້ໜ້ອຍລົງ.
6. ກະກຽມຄວາມພ້ອມເພື່ອຮັບມືກັບບັນຫາສິ່ງທ້າທາຍຂອງສັງຄົມອາຍຸສູງ ແລະ ສະໜັບສະໜູນປະຊາກອນອາຍຸສູງ.
7. ປັບປຸງລະບົບຖານຂໍ້ມູນດ້ານປະຊາກອນໃຫ້ຄົບຖ້ວນ ແລະ ມີຄຸນນະພາບຕາມມາດຕະຖານສາກົນ.
8. ການເຊື່ອມສານຂໍ້ມູນດ້ານປະຊາກອນເຂົ້າໃນແຜນຍຸດທະສາດ, ແຜນການແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ.
9. ບັນລຸຄວາມສະເໝີພາບຍິງ-ຊາຍໃນຂົງເຂດສັງຄົມ, ເສດຖະກິດ ແລະ ການເມືອງ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ.

ຈຸດປະສົງ, ຜົນໄດ້ຮັບ ແລະ ກິດຈະກໍາ ທີ່ຄາດວ່າຈະບັນລຸເປົ້າໝາຍເຫຼົ່ານີ້ແມ່ນໄດ້ກໍານົດໄວ້ໃນຕາຕະລາງການຈັດຕັ້ງປະຕິບັດນະໂຍບາຍ ຊຶ່ງສະແດງໃຫ້ເຫັນເຖິງຕົວຊີ້ວັດ ແລະ ຄາດໝາຍຂອງເປົ້າໝາຍ.

**ຍຸດທະສາດໃນການຈັດຕັ້ງປະຕິບັດ**

ເນື່ອງຈາກວ່າ ນະໂຍບາຍທີ່ຜ່ານມາມີຈຸດຄ້າງຄາໃນການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ດັ່ງນັ້ນ ຮຽກຮ້ອງໃຫ້ມີຍຸດທະສາດໃນການຈັດຕັ້ງປະຕິບັດທີ່ຄົບຊຸດ. ເນື່ອງຈາກວ່າ ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາປີ 2019-2030 ເປັນນະໂຍບາຍທີ່ມີການປະກອບສ່ວນຈາກຫຼາກຫຼາຍຂະແໜງການ ແລະ ໂດຍພື້ນຖານແລ້ວ ແມ່ນການຈັດຕັ້ງປະຕິບັດຂອງກະຊວງສະເພາະໃດໜຶ່ງ ໂດຍການນໍາໃຊ້ກົນໄກທີ່ມີຢູ່ ແລະ ບໍ່ຈໍາເປັນຕ້ອງມີການສ້າງຕັ້ງໜ່ວຍງານ ຫຼື ສະຖາບັນໃດໜຶ່ງຂຶ້ນມາຕື່ມອີກ ນອກຈາກ "ຄະນະກໍາມະການປະສານ ງານນະໂຍບາຍປະຊາກອນ" (PPCC) ເພື່ອຈັດຕັ້ງປະຕິບັດກິດຈະກໍາທີ່ບໍ່ນອນຢູ່ໃນແຜນຂອງຂະແໜງການ, ບັນດາກະຊວງທີ່ກ່ຽວຂ້ອງຈະຕ້ອງໄດ້ນໍາເອົານະໂຍບາຍນີ້ເຂົ້າໃນແຜນປະຈໍາປີ ຫຼື ຫຼາຍປີຂອງຕົນເອງ ແລະ ຂໍ້ນງົບປະມານເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ໃນກໍລະນີທີ່ງົບປະມານບໍ່ພຽງພໍໃນການຈັດຕັ້ງປະຕິບັດ ກະຊວງທີ່ກ່ຽວຂ້ອງຕ້ອງໄດ້ສົມທົບກັບກົມແຜນການ ກະຊວງແຜນການ ແລະ ການລົງທຶນ ເພື່ອປຶກສາຫາລືຊອກຫາວິທີທາງແກ້ໄຂ ແລະ ຈັດຫາງົບປະມານທີ່ຈໍາເປັນ ໃນການຈັດຕັ້ງປະຕິບັດກິດຈະກໍາຕາມໜ້າທີ່ຮັບຜິດຊອບຂອງຕົນ ຕໍ່ກັບນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030.

**ຄວາມຮັບຜິດຊອບຂອງຂະແໜງການ, ອົງການຂັ້ນສູນກາງ, ທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ ມີດັ່ງນີ້:**

- **ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ** ມີຄວາມຮັບຜິດຊອບໃນການປະສານງານການຈັດຕັ້ງປະຕິບັດນະໂຍບາຍ, ລວມທັງເປັນກອງເລຂາໃຫ້ກັບຄະນະກໍາມະການປະສານງານນະໂຍບາຍປະຊາກອນ. **ບັນດາກະຊວງ ແລະ ບັນດາອົງການຈັດຕັ້ງຂອງລັດ** ເປັນຜູ້ຈັດຕັ້ງປະຕິບັດນະໂຍບາຍຕົ້ນຕໍ ແລະ ມີໜ້າທີ່ຮັບຜິດຊອບໃນການດໍາເນີນກິດຈະກໍາ ແລະ ບັນລຸຜົນໄດ້ຮັບທີ່ກໍານົດໄວ້ໃນແຜນວຽກຫຼາຍປີ (ຕາມປົກກະຕິແລ້ວ 2 ປີ).
- **ອົງການປົກຄອງຂັ້ນແຂວງ ແລະ ເມືອງ** ເປັນຄູ່ຮ່ວມງານໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຄາດວ່າຈະໃຫ້ການສະໜັບສະໜູນສາຍການຈັດຕັ້ງຂອງກະຊວງໃນການຈັດຕັ້ງປະຕິບັດກິດຈະກໍາຕາມປົກກະຕິ. ແຂວງ/ນະຄອນຫຼວງອາດຈະໄດ້ສ້າງແຜນດໍາເນີນງານສະເພາະຂອງຕົນເອງຂຶ້ນ ເພື່ອຈັດຕັ້ງປະຕິບັດນະໂຍບາຍປະຊາກອນ ໂດຍໄດ້ຮັບການສະໜັບສະໜູນຈາກກົມແຜນການ;
- **ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ** ຈັດຕັ້ງປະຕິບັດກິດຈະກໍາ ຕາມແຜນຫຼາຍປີ ແລະ ລາຍງານຫາ ຄະນະກໍາມະການປະສານງານນະໂຍບາຍປະຊາກອນ (PPCC) ຫຼື ເປັນຜູ້ຕາງໜ້າຢູ່ໃນຄະນະກໍາມະການປະສານງານນະໂຍບາຍປະຊາກອນ (PPCC);
- **ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງສາກົນ** ໂດຍລວມແມ່ນເຮັດໜ້າທີ່ຮ່ວມມືກັບບັນດາກະຊວງທີ່ກ່ຽວຂ້ອງ ທີ່ຈະລາຍງານຕໍ່ຄະນະກໍາມະການປະສານງານນະໂຍບາຍປະຊາກອນ (PPCC) ຊຶ່ງເປັນຕົວແທນໃນການລາຍງານໃນນາມກະຊວງ;

**ການລາຍງານ, ການຕິດຕາມ ແລະ ການປະເມີນຜົນ**

ຄະນະກໍາມະການປະສານງານນະໂຍບາຍປະຊາກອນ (PPCC) ຮັບຜິດຊອບໃນການປະສານງານ, ການລາຍງານ, ການຕິດຕາມ ແລະ ການປະເມີນຜົນ ໂດຍການສະໜັບສະໜູນຈາກກອງເລຂາຈາກກົມແຜນການ. ຄະນະກໍາມະການປະສານງານນະໂຍບາຍປະຊາກອນ (PPCC) ຈະມີການປະຊຸມກັນປະຈໍາປີ ເພື່ອທົບທວນການຈັດຕັ້ງປະຕິບັດກິດຈະກໍາໃນປີຜ່ານມາ ແລະ ຕົກລົງເຫັນດີຕໍ່ກິດຈະກໍາທີ່ຈະປະຕິບັດໃນປີຕໍ່ໄປ. ຄະນະກໍາມະການປະສານງານນະໂຍບາຍປະຊາກອນ (PPCC) ຈະຂຽນບົດລາຍງານຜົນການຈັດຕັ້ງປະຕິບັດກິດຈະກໍາປະຈໍາປີ. ນອກນັ້ນ,

ຄະນະກຳມະການປະສານງານນະໂຍບາຍປະຊາກອນ (PPCC) ຍັງຈະກະກຽມບົດແນະນຳໃຫ້ແກ່ບັນດາກະຊວງຕໍ່ກັບແຜນ ແລະ ຍຸດທະສາດໃໝ່ຂອງຂະແໜງການທີ່ຕ້ອງໄດ້ມີການແກ້ໄຂຢູ່ໃນເປົ້າໝາຍຂອງຍຸດທະສາດປີ 2019-2030 ເນື່ອງຈາກແຜນຂອງຂະແໜງການສ່ວນຫຼາຍແມ່ນສິ້ນສຸດລົງໃນປີ 2020 ຫຼື 2025.

ການທົບທວນນະໂຍບາຍໄລຍະກາງຈະຈັດຂຶ້ນໃນປີ 2023 ແລະ ການທົບທວນຄັ້ງສຸດທ້າຍຈະໄດ້ຈັດຂຶ້ນໃນປີ 2029.

## ພາກທີ I: ຄວາມເປັນມາ

**1.** ພາກສະເໜີກ່ຽວກັບນະໂຍບາຍປະຊາກອນ

**1.1 ນະໂຍບາຍປະຊາກອນແມ່ນຫຍັງ ແລະ ມີຈຸດປະສົງເພື່ອຫຍັງ**

ນະໂຍບາຍປະຊາກອນ ແມ່ນການປະເມີນຕີລາຄາບັນຫາປະຊາກອນທີ່ປະເທດກຳລັງປະເຊີນ ແລະ ວາງທິດທາງທີ່ລັດຖະບານຈະດຳເນີນເພື່ອແກ້ໄຂບັນຫາດັ່ງກ່າວ ໂດຍຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ. ອົງປະກອບດ້ານປະຊາກອນກາຍເປັນບັນຫາທີ່ຕ້ອງໄດ້ແກ້ໄຂດ້ວຍນະໂຍບາຍ ຖ້າຫາກວ່າອົງປະກອບດັ່ງກ່າວມີຜົນກະທົບຕໍ່ກັບຄຸນນະພາບຂອງຊີວິດ ຫຼື ລະດັບການເປັນຢູ່ຂອງປະເທດ. ຢູ່ປະເທດທີ່ກຳລັງພັດທະນາ ອົງປະກອບຂອງປະຊາກອນອາດມີຜົນກະທົບຕໍ່ກັບຈັງຫວະການເຕີບໂຕຂອງເສດຖະກິດ ແລະ ການພັດທະນາ ຫຼື ຄຸນນະພາບຂອງຊີວິດ, ດັ່ງນັ້ນຈຶ່ງຈຳເປັນຕ້ອງມີນະໂຍບາຍເພື່ອຮັບມືກັບບັນຫາດັ່ງກ່າວ.

ວິທີການສ້າງນະໂຍບາຍປະຊາກອນທີ່ໄດ້ຮັບການພັດທະນາໃນໄລຍະທົດສະວັດຜ່ານມາ ແມ່ນແບບວິທີການເຊື່ອມສານເຂົ້າຫຼາຍຂະແໜງການ. ວິທີການດັ່ງກ່າວໄດ້ກາຍເປັນຕົວແບບທີ່ເປັນທີ່ນິຍົມຂອງຫຼາຍປະເທດ, ສ່ວນໜຶ່ງແລ້ວແມ່ນເພື່ອຕອບສະໜອງກັບຄຳໝັ້ນສັນຍາຕໍ່ກັບກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ (ICPD) ປີ 1994, ຊຶ່ງໄດ້ເນັ້ນໃສ່ຄວາມຈຳເປັນທີ່ຕ້ອງເຊື່ອມສານປັດໄຈປະຊາກອນເຂົ້າໃນທຸກຮູບແບບຂອງການວາງແຜນພັດທະນາ ເພື່ອສົ່ງເສີມການຫຼຸດຜ່ອນຄວາມທຸກຍາກ. ສປປ ລາວ ໄດ້ສ້າງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ສະບັບທຳອິດໃນປີ 1999, ແລະ ສະບັບທີສອງໃນປີ 2006 ຊຶ່ງໄດ້ການເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຈະສືບຕໍ່ດຳເນີນວິທີການດັ່ງກ່າວເຂົ້າໃນນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030.

ຄຸນລັກສະນະຫຼັກຂອງນະໂຍບາຍປະຊາກອນທີ່ກວມເອົາຫຼາຍຂະແໜງການນີ້ ແມ່ນການດຶງເອົາບັນດາຍຸດທະສາດຫຼັກໃນການບັນລຸເປົ້າໝາຍ ແລະ ຈຸດປະສົງ ຂອງນະໂຍບາຍປະຊາກອນ ມາຈາກແຜນການທີ່ມີຢູ່ຂອງຂະແໜງການເຊັ່ນ: ສຶກສາທິການ ແລະ ກິລາ, ສາທາລະນະສຸກ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ແຮງງານ ແລະ ສະຫວັດດີການສັງຄົມ. ໃນການລວມເອົາແຜນຂອງຫຼາຍຂະແໜງການມັນອາດຈະກວມ ຫຼື ຊໍ້າຊ້ອນເອົາຍຸດທະສາດ ແລະ ແຜນການຂອງຂະແໜງການທີ່ສ້າງຂຶ້ນມາແລ້ວ ນີ້ແມ່ນສິ່ງທ້າທາຍອັນໜຶ່ງ. ແຕ່ຍັງມີຂໍ້ສະດວກບາງດ້ານຄື: ເຮົາສາມາດນຳໃຊ້ຂໍ້ມູນ ແລະ ການວິໄຈທີ່ມີຢູ່ແລ້ວໃນແຕ່ລະຂະແໜງການແທນທີ່ຈະດຳເນີນການວິໄຈໃໝ່; ເຖິງຢ່າງໃດກໍຕາມ, ບາງແຜນການ ແລະ ຍຸດທະສາດຂອງຂະແໜງການອາດຕ້ອງໄດ້ຮັບການດັດປັບ ຫຼື ປັບປຸງໃຫ້ແທດເໝາະກັບການເຊື່ອມສານເຂົ້າກັບນະໂຍບາຍປະຊາກອນ. ສາເຫດໃນການດັດປັບ ຫຼື ປັບປຸງອາດຈະເກີດຂຶ້ນຍ້ອນມີຂໍ້ມູນ ຫຼື ການຄົ້ນຄວ້າໃໝ່ ຫຼັງຈາກແຜນການຂອງຂະແໜງການໄດ້ຖືກສ້າງຂຶ້ນແລ້ວ ຫຼື ມີການພັດທະນາວິທີການໃໝ່ໆ ເພື່ອແກ້ໄຂບັນຫາທີ່ກ່ຽວພັນກັບປະຊາກອນທີ່ຢູ່ໃນແຜນການຂອງຂະແໜງການ. ສະນັ້ນ, ການເຊື່ອມອົງປະກອບຂອງແຜນການຂອງຂະ ແໜງການເຂົ້າໃນນະໂຍບາຍປະຊາກອນຖືວ່າເປັນຂະບວນການທີ່ດີ ແລະ ສ້າງສັນ.

ນະໂຍບາຍປະຊາກອນປະກອບມີຫຼາຍຈຸດປະສົງ: ເປັນຕົ້ນແມ່ນບົດສະຫຼຸບຫຍໍ້ທາງການກ່ຽວກັບປັດໄຈ ແລະ ທ່າອ່ຽງດ້ານປະຊາກອນຂອງປະເທດ; ພ້ອມດຽວກັນນັ້ນ ນະໂຍບາຍຍັງສະໜອງຮູບພາບອັນໂປ່ງໄສກ່ຽວກັບບາດກ້າວທີ່ລັດຖະບານຈະດຳເນີນ ເພື່ອແກ້ໄຂຂົງເຂດຕ່າງໆດ້ານປະຊາກອນທີ່ຕ້ອງການການເອົາໃຈໃສ່ດ້ານນະໂຍບາຍ, ສະໜອງຂໍ້ມູນພື້ນຖານໃຫ້ແກ່ລັດຖະບານໃນການປຸກລະດົມການຮ່ວມມືພາຍໃນ ແລະ ຄູ່ຮ່ວມພັດທະນາ ເພື່ອຈະຮັບປະກັນວ່າແຜນງານຂອງພາກສ່ວນກ່ຽວຂ້ອງແມ່ນສອດຄ່ອງກັບການຈັດຕັ້ງປະຕິບັດນະໂຍບາຍປະຊາກອນ. ນອກຈາກນັ້ນ ນະໂຍບາຍປະຊາກອນຍັງສາມາດຊ່ວຍລະດົມທຶນຈາກພາຍໃນ ແລະ ຄູ່ຮ່ວມພັດທະນາ, ການຈັດສັນງົບປະມານຕ້ອງເນັ້ນໃສ່ຂົງເຂດທີ່ເປັນບູລິມະສິດຫຼັກທີ່ມີຄວາມຕ້ອງການສະໜັບສະໜູນ ເພື່ອໃຫ້ບັນລຸເປົ້າໝາຍ.

## 1.2 ນະໂຍບາຍປະຊາກອນໃນໄລຍະຜ່ານມາຢູ່ ສປປ ລາວ

### 1.2.1 ນະໂຍບາຍປະຊາກອນປີ 1999.

ຫຼັງຈາກກອງປະຊຸມສາກົນ ກ່ຽວກັບປະຊາກອນ ແລະ ການພັດທະນາໃນປີ 1994 ຢູ່ກຸງໄຄໂລ (Cairo), ລັດຖະບານ ສປປ ລາວ ໄດ້ຮັບຮອງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາໃນປີ 1999. ອີງໃສ່ຜົນໄດ້ຮັບຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 1995, ລັດຖະບານສາມາດກຳນົດໄດ້ບັນຫາປະຊາກອນຈຳນວນໜຶ່ງທີ່ຕ້ອງໄດ້ແກ້ໄຂຜ່ານນະໂຍບາຍລວມມີ:

- ອັດຕາການຕາຍຂອງເດັກອ່ອນ ແລະ ເດັກນ້ອຍຍັງສູງຊຶ່ງສົ່ງຜົນໃຫ້ມີອາຍຸຍືນສະເລ່ຍທີ່ຕໍ່າພຽງແຕ່ 51 ປີ.
- ອັດຕາສ່ວນການຕາຍຂອງແມ່ (MMR) ຍັງສູງ ຄາດວ່າຢູ່ໃນລະດັບ 656 ຄົນ ຕໍ່ 100,000 ການເກີດມີຊີວິດ.
- ອັດຕາການຈະເລີນພັນລວມ (TFR) ແມ່ນ 5.6 ເດັກເກີດຕໍ່ແມ່ຍິງໜຶ່ງຄົນ.
- ອັດຕາການເຕີບໂຕຂອງປະຊາກອນໂດຍລວມແມ່ນ 2.5% ຕໍ່ປີ.
- ອັດຕາການເຂົ້າຮຽນສຸດທິແມ່ນ 76% ແລະ ອັດຕາການຮູ້ໜັງສືແມ່ນ 72.5%.
- ການແອອັດຂອງຕົວເມືອງ ແລະ ການຫຼຸດລົງຂອງປະຊາກອນຢູ່ເຂດຊົນນະບົດກໍ່ຖືວ່າເປັນບັນຫາປະຊາກອນເຊັ່ນດຽວກັນ.

ການວາງຍຸດທະສາດຂອງນະໂຍບາຍປີ 1999 ຂ້ອນຂ້າງມີຄວາມຄົບຖ້ວນ. ເຖິງແມ່ນວ່າຈະບໍ່ມີຄາດໝາຍຫຼັກສະເພາະສຳລັບການຈະເລີນພັນ, ແຕ່ຈຳນວນເດັກເກີດຕໍ່ແມ່ຍິງທີ່ຕ້ອງການແມ່ນຢູ່ໃນລະຫວ່າງ 2 ຫາ 4, ເຫັນໄດ້ວ່າ ລະດັບການຈະເລີນພັນຈຳນວນດັ່ງກ່າວແມ່ນຫຼຸດລົງຫຼາຍສົມຄວນ. ບັນຫາຫຼັກທີ່ຕ້ອງເອົາໃຈໃສ່ແມ່ນການເກີດທີ່ສູງມີຜົນກະທົບໂດຍກົງຕໍ່ກັບສຸຂະພາບຂອງແມ່ ແລະ ເດັກ. ດັ່ງນັ້ນ, ນະໂຍບາຍຈຶ່ງເນັ້ນໃສ່ຄວາມຈຳເປັນທີ່ຕ້ອງຈັດຕັ້ງປະຕິບັດນະໂຍບາຍລູກຫ່າງແຫ່ງຊາດປີ 1995 ເພື່ອຮັບປະກັນໃຫ້ມີການເວັ້ນໄລຍະຫ່າງແຕ່ລະການເກີດຢ່າງໜ້ອຍ 2-3 ປີ. ໃນການບັນລຸການເວັ້ນໄລຍະຫ່າງຂອງການເກີດຕ້ອງໄດ້ເພີ່ມຈຳນວນສູນໃຫ້ການບໍລິການລູກຫ່າງ, ການບໍລິການເຄື່ອນທີ່ ແລະ ອາສາສະໝັກສຸຂະພາບຂັ້ນບ້ານ" ເພື່ອສະ ໜອງວິທີຄຸມກຳເນີດ ແລະ ເຮັດໃຫ້ອັດຕາການນຳໃຊ້ວິທີຄຸມກຳເນີດ (CPR) ເພີ່ມຂຶ້ນຈາກອັດຕາ 3% ໃນປີ 1994 ມາເປັນ 60-65% ໃນປີ 2020. ໃນຂະນະດຽວກັນ, ນະໂຍບາຍຍັງເນັ້ນໃສ່ການຂະຫຍາຍທາງເລືອກຂອງວິທີການຄຸມກຳເນີດທີ່ມີຢູ່ ແລະ ເພີ່ມຈຳນວນພະນັກງານແພດ ໂດຍຊຸກຍູ້ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະ ພາກເອກະຊົນ.

ການແຈກຢາຍຂອງປະຊາກອນໃນນະໂຍບາຍປີ 1999 ໄດ້ສະທ້ອນໃຫ້ເຫັນບັນຫາຜົນກະທົບຂອງການເຄື່ອນຍ້າຍລະຫວ່າງຊົນນະບົດ-ຕົວເມືອງ "ຄວາມແອອັດຂອງຕົວເມືອງ ແລະ ການຫຼຸດລົງຂອງປະຊາກອນຢູ່ເຂດຊົນນະບົດ". ນະໂຍບາຍມີຈຸດປະສົງເພື່ອສົ່ງເສີມຄວາມດຸ່ນດ່ຽງຂອງການແຈກຢາຍປະຊາກອນລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ" ໃຫ້ດີຂຶ້ນ. ຍຸດທະສາດຫຼັກເພື່ອບັນລຸຈຸດປະສົງນີ້ ແມ່ນຄວາມພະຍາຍາມ ປັບປຸງການສຶກສາ ແລະ ການມີວຽກເຮັດງານທຳຢູ່ເຂດຊົນນະບົດໂດຍຈັດຕັ້ງປະຕິບັດແຜນງານພັດທະນາຊົນນະບົດ, ລວມທັງການສ້າງເຂດຊົນນະບົດເຊື່ອມສານບູລິມະສິດ" (PRDA) ດັ່ງທີ່ໄດ້ລະບຸໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 1996-2000.

ນະໂຍບາຍປີ 1999 ໄດ້ນຳເອົາແຜນດຳເນີນງານທີ່ສຳຄັນຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ (ICPD) ທີ່ຈັດຂຶ້ນໃນປີ 1994. ໃນຂະນະທີ່ອັດຕາການຈະເລີນພັນແມ່ນສູງ ແລະ ຕ້ອງໄດ້ຫຼຸດອັດຕາດັ່ງກ່າວໃຫ້ໜ້ອຍລົງ, ແຕ່ວ່ານະໂຍບາຍແມ່ນເນັ້ນໃຫ້ບຸກຄົນຕັດສິນໃຈເອງກ່ຽວກັບຂະໜາດຂອງຄອບຄົວ ໂດຍອີງຕາມເງື່ອນໄຂທາງດ້ານເສດຖະກິດ-ສັງຄົມຂອງພວກເຂົາເອງ. ໃນນັ້ນມາດຕະການທີ່ໄດ້ນຳສະເໜີໃນນະໂຍບາຍເພື່ອຫຼຸດອັດຕາການຈະເລີນພັນ ແມ່ນມາດຕະການທາງອ້ອມທີ່ຊ່ວຍປັບປຸງສະພາບເສດຖະກິດ-ສັງຄົມ ແລະ ການບໍລິການສຸຂະພາບ. ເຖິງແມ່ນວ່າຈະມີບັນຫາກ່ຽວກັບການເຄື່ອນຍ້າຍລະຫວ່າງຊົນນະບົດ-ຕົວເມືອງກໍຕາມ, ແຕ່ປະຊາກອນກໍ່ສາມາດເຄື່ອນຍ້າຍຢ່າງມີອິດສະລະພາບພາຍໃນປະເທດໄດ້.

ນະໂຍບາຍປີ 1999 ໄດ້ວາງຄາດໝາຍທາງດ້ານປະລິມານຈຳນວນໜຶ່ງສຳລັບຂະແໜງການສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ ເພື່ອໃຫ້ບັນລຸພາຍໃນປີ 2000, 2010 ແລະ 2020. ຄາດໝາຍເຫຼົ່ານີ້ແມ່ນນຳສະເໜີຢູ່ໃນເອກະສານຊ້ອນທ້າຍ I.

### 1.2.2 ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2006

ນະໂຍບາຍປີ 2006 ປະກອບມີການທົບທວນການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບຂອງນະໂຍບາຍ ແລະ ແຜນດຳເນີນງານປີ 1999. ເຫັນໄດ້ວ່າອັດຕາການຈະເລີນພັນລວມ (TFR) ຫຼຸດລົງຈາກ 4.9 ໃນປີ 2000 ມາເປັນ 4.5 ໃນປີ 2005. ເຖິງແມ່ນວ່າການຫຼຸດລົງນີ້ແມ່ນຜົນສຳເລັດດ້ານບວກ, ແຕ່ຄວາມໄວຂອງການຫຼຸດລົງແມ່ນຊ້າກວ່າທີ່ຄາດໄວ້ໃນນະໂຍບາຍປີ 1999. ພ້ອມກັນນັ້ນ ອັດຕາສ່ວນການຕາຍຂອງແມ່ (MMR) ໄດ້ຫຼຸດລົງຊ້າກວ່າທີ່ຄາດໄວ້. ອັດຕາການຕາຍຂອງເດັກກຸ່ມ 5 ປີ ແລະ ເດັກອ່ອນຫຼຸດລົງຕາມທີ່ຄາດໄວ້ ແຕ່ສັງເກດໄດ້ວ່າຄາດໝາຍສຳລັບປີ 2010 ແມ່ນສູງເກີນໄປ ດັ່ງນັ້ນຈຶ່ງຍາກທີ່ຈະບັນລຸໄດ້. ການຮູ້ໜັງສືສຳລັບແມ່ຍິງໄດ້ຮັບການປັບປຸງແຕ່ບໍ່ສາມາດບັນລຸຄາດໝາຍໄດ້. ອັດຕາການເຂົ້າຮຽນສຸດທິສຳລັບເດັກຍິງສາມາດບັນລຸຄາດໝາຍໃນລະດັບປະເທດ ແຕ່ຢູ່ໃນຫຼາຍແຂວງອັດຕາດັ່ງກ່າວແມ່ນຕ່ຳກວ່າຄາດໝາຍລະດັບປະເທດ. ການທົບທວນຄືນຍັງຊີ້ໃຫ້ເຫັນຂໍ້ມູນ ແລະ ການຄົ້ນຄວ້າກ່ຽວກັບເງື່ອນໄຂເສດຖະກິດ-ສັງຄົມຂອງກຸ່ມຊົນເຜົ່າ ແລະ ການເຊື່ອມສານຂອງປະຊາກອນແມ່ນປະຕິບັດໄດ້ໜ້ອຍກວ່າທີ່ຄາດໄວ້. ສຸຂະພາບຈະເລີນພັນ ແລະ ບົດບາດຍິງ-ຊາຍໃນລະດັບທ້ອງຖິ່ນແມ່ນຍັງບໍ່ເປັນໜ້າເພິ່ງພໍໃຈ.

ບາງປັດໄຈທີ່ສົ່ງຜົນໃຫ້ມີຄວາມຄືບໜ້າຊ້າກວ່າທີ່ຄາດໄວ້ໃນນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ລວມມີ: ຄວາມເຊື່ອຖື ແລະ ຮີດຄອງປະເພນີແບບດັ້ງເດີມຢູ່ເຂດຫ່າງໄກສອກຫຼີກ ຊຶ່ງເຮັດໃຫ້

ການປະຕິບັດທີ່ເປັນອັນຕະລາຍສືບຕໍ່; ການປົກຄຸມຂອງການບໍລິການສຸຂະພາບທີ່ບໍ່ທົ່ວເຖິງ; ຄວາມເຂົ້າໃຈຂອງພໍ່ແມ່ຕໍ່ກັບການສຶກສາ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍຍັງຢູ່ໃນລະດັບຕໍ່າ; ການຈັດຕັ້ງກິດຈະກໍາຂະບວນການເພື່ອລຶບລ້າງການບໍ່ຮູ້ໜັງສືແມ່ນບໍ່ເປັນປົກກະຕິ ແລະ ຂາດຈຸດສຸມ ຕໍ່ກັບຄວາມຕ້ອງການຂອງພະນັກງານ; ຂາດພະນັກງານວິຊາການເພື່ອດໍາເນີນການວິໄຈດ້ານປະຊາກອນ ແລະ ການພັດທະນາ; ການເຜີຍແຜ່ນະໂຍບາຍຍັງບໍ່ທົ່ວເຖິງ; ຂາດງົບປະມານໃນການຈັດຕັ້ງປະຕິບັດນະໂຍບາຍ.

ບັນຫາປະຊາກອນທີ່ໄດ້ກໍານົດໃນນະໂຍບາຍປີ 2006 ແມ່ນລວມເອົາທຸກບັນຫາທີ່ໄດ້ມີຢູ່ໃນນະໂຍບາຍປີ 1999 ແຕ່ມີການປັບປຸງກ່ຽວກັບຈຸດສຸມ ແລະ ມີການຕື່ມບາງບັນຫາທີ່ມີຄວາມສໍາຄັນເຊິ່ງລວມມີ: (1) ການເຄື່ອນຍ້າຍສາກົນ ແລະ ການຄ້າມະນຸດ; (2) ການເບິ່ງແຍງຜູ້ອາຍຸສູງ ແລະ ຜູ້ດ້ອຍໂອກາດ; (3) HIV/AIDS; (4) ຜົນກະທົບຂອງປະຊາກອນຕໍ່ກັບສິ່ງແວດລ້ອມ. ຈຸດປະສົງ ແມ່ນໄດ້ຖືກສ້າງຂຶ້ນມາເພື່ອແກ້ໄຂຂົງເຂດທີ່ເພີ່ມຕື່ມ ລວມທັງບັນຫາທີ່ສືບຕໍ່ມາຈາກນະໂຍບາຍປີ 1999, ດັ່ງນັ້ນນະໂຍບາຍຈຶ່ງປະກອບມີທັງໝົດ 9 ຈຸດປະສົງ.

ຍຸດທະສາດທີ່ສ້າງຂຶ້ນມາເພື່ອບັນລຸຈຸດປະສົງເຫຼົ່ານີ້ ແມ່ນອີງໃສ່ຍຸດທະສາດໃນນະໂຍບາຍປີ 1999 ເປັນຫຼັກ ແຕ່ກໍ່ໄດ້ມີການເພີ່ມຕື່ມບາງຍຸດທະສາດທີ່ສໍາຄັນ. ຕົວຢ່າງ, ຄວາມປອດໄພຂອງແມ່ ແລະ ໂພຊະນາການຂອງເດັກ ແມ່ນຖືກເພີ່ມເຂົ້າໃສ່ເປັນປັດໄຈທີ່ຈະຊ່ວຍປັບປຸງສຸຂະພາບຂອງແມ່ ແລະ ຫຼຸດຜ່ອນການຕາຍຂອງເດັກອ່ອນ ແລະ ເດັກ. ນະໂຍບາຍຍັງໄດ້ເນັ້ນໃສ່ການເບິ່ງແຍງກ່ອນເກີດ, ໃນລະຫວ່າງການເກີດ ແລະ ຫຼັງການເກີດ. ໄດ້ມີການສົ່ງເສີມການສັກຢາປ້ອງກັນພະຍາດ ແລະ ການລ້ຽງລູກດ້ວຍນົມແມ່. ນະໂຍບາຍປີ 2006 ໄດ້ເນັ້ນໃສ່ຂະໜາດຂອງຄອບຄົວ ແລະ ສຸຂະພາບຈະເລີນພັນ, ໂດຍສະເພາະຄວາມຕ້ອງການໃນການເຊື່ອມວິຊາເພດສຶກສາ ເຂົ້າໃນການສຶກສາລະບົບສາມັນ ແລະ ການສຶກສານອກລະບົບໂຮງຮຽນ ພ້ອມດ້ວຍສົ່ງເສີມແນວຄວາມຄິດກ່ຽວກັບສິດທິດ້ານສຸຂະພາບຈະເລີນພັນ. ການສະໜອງຂໍ້ມູນສຸຂະພາບຈະເລີນພັນ (RH) ໃຫ້ແກ່ຊາວໜຸ່ມກໍ່ໄດ້ຮັບການເອົາໃຈໃສ່ ພ້ອມສົ່ງເສີມການແຕ່ງງານຊ້າ ແລະ ການລຶບລ້າງ "ການແຕ່ງງານແບບຖືກບັງຄັບ. ໃນຂົງເຂດບົດບາດຍິງ-ຊາຍ, ຈຸດສຸມໃໝ່ແມ່ນເລັ່ງໃສ່ການໂຄສະນາເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສົ່ງເສີມຄວາມຮັບຜິດຊອບຂອງຜູ້ຊາຍ. ນອກນັ້ນ, ຍັງເນັ້ນໃສ່ຄວາມຕ້ອງການເພື່ອຮັບປະກັນວ່າ ເດັກຍິງຈາກກຸ່ມຊົນເຜົ່າໄດ້ຮັບໂອກາດທີ່ຄືກັນກັບເດັກຊາຍໃນການບັນລຸການສຶກສາຂັ້ນພື້ນຖານ.

ສໍາລັບຈຸດປະສົງໃໝ່ທີ່ໄດ້ສະເໜີໃນປີ 2006, ໄດ້ມີການກໍານົດຫຼາກຫຼາຍມາດຕະການ. ໃນຂົງເຂດປະຊາກອນຜູ້ອາຍຸສູງ, ມາດຕະການແມ່ນມີຈຸດປະສົງຫຼັກເພື່ອສົ່ງເສີມໃຫ້ຄອບຄົວ, NGOs ແລະ ອົງການຈັດຕັ້ງສາກົນປັບປຸງຄຸນນະພາບຊີວິດຂອງຜູ້ອາຍຸສູງ ໂດຍການຮັບເອົາຄວາມຮັບຜິດຊອບຕໍ່ພວກເຂົາເຈົ້າໃຫ້ຫຼາຍຂຶ້ນ. ປັບປຸງໂອກາດໃຫ້ຜູ້ອາຍຸສູງສາມາດສືບຕໍ່ເຮັດວຽກ ໂດຍການຫຼຸດຜ່ອນການຈໍາແນກໃນຕະຫຼາດແຮງງານ ແລະ ສຶກສາອົບຮົມຊາວໜຸ່ມໃຫ້ເຫັນຄຸນຄ່າຂອງຜູ້ອາຍຸສູງ. ຕໍ່ກັບບັນຫາປະຊາກອນທີ່ພິການ, ນະໂຍບາຍແມ່ນແນໃສ່ປັບປຸງໂອກາດທາງດ້ານການສຶກສາ ແລະ ການຝຶກອົບຮົມໃຫ້ພວກເຂົາເຈົ້າ, ພ້ອມທັງການມີວຽກເຮັດງານທໍາ ຫຼືໂຄງການສ້າງລາຍໄດ້ໃຫ້ພວກເຂົາເຈົ້າ. ນອກນັ້ນ, ນະໂຍບາຍຍັງເນັ້ນໃສ່ຄວາມຕ້ອງການໃນການປັບປຸງການເກັບກໍາຂໍ້ມູນ ແລະ ການຄົ້ນຄວ້າກ່ຽວກັບຜູ້ດ້ອຍໂອກາດ.

ວິທີການເພື່ອຮັບມືກັບ HIV/AIDS ແມ່ນເນັ້ນໃສ່ຄວາມຈຳເປັນໃນການສະໜອງຂໍ້ມູນ ແລະ ການບໍລິການເພື່ອປ້ອງກັນ HIV/AIDS ແລະ ພະຍາດຕິດຕໍ່ທາງເພດສຳພັນ (ພຕພ), ສົ່ງເສີມການມີເພດສຳພັນທີ່ປອດໄພ ແລະ ສົ່ງເສີມການເບິ່ງແຍງ ແລະ ສະໜັບສະໜູນຜູ້ທີ່ຕິດເຊື້ອ HIV ແລະ ຜູ້ທີ່ເປັນໂລກ AIDS. ໃນດ້ານສິ່ງແວດລ້ອມ, ເປົ້າໝາຍຫຼັກແມ່ນການເຊື່ອມປັດໄຈປະຊາກອນເຂົ້າໃນແຜນງານທີ່ກ່ຽວກັບການພັດທະນາຊັບພະຍາກອນທຳມະຊາດ ແລະ ການພັດທະນາແບບຍືນຍົງ.

ເຊັ່ນດຽວກັນກັບນະໂຍບາຍປີ 1999, ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາປີ 2006 ໄດ້ກຳນົດຄາດໝາຍທາງດ້ານປະລິມານຈຳນວນໜຶ່ງເພື່ອໃຫ້ບັນລຸໄດ້ພາຍໃນປີ 2010, 2015 ແລະ 2020. ຕາຕະລາງ 1 ສົມທຽບຄາດໝາຍປີ 2015 ກັບລະດັບຕົວຈິງທີ່ບັນລຸໄດ້ໃນປີ 2015. ຈະສາມາດເຫັນໄດ້ວ່າ 5 ໃນ 8 ຄາດໝາຍແມ່ນບໍ່ສາມາດບັນລຸໄດ້ (ອັດຕາການຕາຍຂອງເດັກ ລຸ່ມ 1 ປີ ແລະ 5 ປີ, ອັດຕາສ່ວນການຕາຍຂອງແມ່, ການຮູ້ໜັງສືຂອງຜູ້ໃຫຍ່ ແລະ ອັດຕາການເຂົ້າຮຽນສຸດທິໃນຊັ້ນມັດທະຍົມຂອງເດັກຍິງ), ໃນຂະນະທີ່ 3 ຄາດໝາຍແມ່ນສາມາດບັນລຸໄດ້ (ອັດຕາການຈະເລີນພັນລວມ, ອັດຕາການເຂົ້າຮຽນສຸດທິໃນຊັ້ນປະຖົມຂອງເດັກຍິງ ແລະ ອັດຕາການຕິດເຊື້ອຂອງ HIV ຕ່ຳກວ່າ 1%). ເຖິງແມ່ນວ່າມີຫຼາຍອັນບໍ່ສາມາດບັນລຸຄາດໝາຍໄດ້, ແຕ່ເປົ້າໝາຍດັ່ງກ່າວແມ່ນມີຄວາມຄືບໜ້າໃນລະດັບໜຶ່ງ. ຄວາມແຕກໂຕນກັນລະຫວ່າງລະດັບຄາດໝາຍ ແລະ ອັດຕາຕົວຈິງທີ່ບັນລຸໄດ້ (ປີ 2015) ແມ່ນເຫັນໄດ້ຢ່າງຈະແຈ້ງຢູ່ໃນການຕາຍຂອງເດັກຕ່ຳກວ່າ 1 ປີ ແລະ ເດັກຕ່ຳກວ່າ 5 ປີ (-27 ແລະ -56 ສ່ວນຮ້ອຍ, ຕາມລຳດັບ). ອັດຕາສ່ວນການຕາຍຂອງແມ່ແມ່ນຫຼຸດລົງພຽງແຕ່ 11% ຂອງຄາດໝາຍປີ 2015 ແລະ ອັດຕາການຮູ້ໜັງສືຂອງແມ່ຍິງກໍ່ຫຼຸດລົງ 8%. ຄາດໝາຍສຳລັບ HIV/AIDS ແມ່ນເພື່ອສືບຕໍ່ຮັກສາໃຫ້ອັດຕາຂອງກຸ່ມຜູ້ໃຫຍ່ຢູ່ໃນລະດັບຕ່ຳກວ່າ 1% ຊຶ່ງສາມາດບັນລຸໄດ້.

ການປະເມີນຈຸດປະສົງຂອງນະໂຍບາຍ ໂດຍສະເພາະຈຸດປະສົງທີ່ບໍ່ໄດ້ວາງຄາດໝາຍທາງດ້ານປະລິມານແມ່ນມີຄວາມຫຍຸ້ງຍາກ ແລະ ບໍ່ສາມາດຮູ້ໄດ້ແນ່ນອນວ່າຜົນສຳເລັດທີ່ໄດ້ຮັບແມ່ນມີຜົນມາຈາກນະໂຍບາຍຫຼາຍ ຫຼື ໜ້ອຍຂະໜາດໃດ. ແຕ່ວ່າໃນກໍລະນີຂອງຜູ້ອາຍຸສູງ ໄດ້ມີການສ້າງນະໂຍບາຍແຫ່ງຊາດສຳລັບຜູ້ອາຍຸສູງຂຶ້ນໃນປີ 2005. ການປະເມີນຜົນຄວາມຄືບໜ້າຂົງເຂດເຫຼົ່ານີ້ແມ່ນຖືກຈຳກັດເນື່ອງຈາກຂໍ້ມູນ ຫຼື ການ ຄົ້ນຄວ້າທາງດ້ານຄຸນນະພາບແມ່ນມີຈຳກັດ.

ເນື່ອງຈາກບໍ່ມີການປະເມີນການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາປີ 2006 ຢ່າງເຕັມຮູບແບບ. ດັ່ງນັ້ນ, ຈຶ່ງມີຄວາມຫຍຸ້ງຍາກໃນການກຳນົດເຫດຜົນວ່າ ເປັນຫຍັງຈຶ່ງສາມາດ ຫຼື ບໍ່ສາມາດບັນລຸຄາດໝາຍສະເພາະໃດໜຶ່ງໄດ້. ແຕ່ມີຄຳແນະນຳວ່າ ປັດໄຈທາງດ້ານການຈັດຕັ້ງອາດມີບົດບາດສຳຄັນ. ຕົວຢ່າງ, ມີການປ່ຽນແປງພາກສ່ວນປະສານງານໃນລະຫວ່າງຊ່ວງໄລຍະຂອງນະໂຍບາຍນີ້ ຊຶ່ງສິ່ງຜົນໃຫ້ແຜນດຳເນີນງານລະອຽດສຳລັບໄລຍະປີ 2006-2010 ບໍ່ໄດ້ຖືກສ້າງຂຶ້ນ, ດັ່ງນັ້ນຈຶ່ງບໍ່ສາມາດຈັດຕັ້ງປະຕິບັດໄດ້. ບໍ່ໄດ້ມີການຄາດຄະເນງົບປະມານສຳລັບບາງມາດຕະການທີ່ຕ້ອງໄດ້ດຳເນີນໃນຊ່ວງໄລຍະຂອງນະໂຍບາຍ, ສະນັ້ນ, ຈຶ່ງມີຄວາມຫຍຸ້ງຍາກໃນການຕິດຕາມການຈັດສັນງົບປະມານ ແລະ ລາຍຈ່າຍ. ນອກນັ້ນ, ນະໂຍບາຍຍັງມີທິດທາງໃນການສ້າງ “ຄະນະກຳມະການດ້ານປະຊາກອນ ແລະ ການພັດທະນາ” ຊຶ່ງໄດ້ຖືກສ້າງຕັ້ງຂຶ້ນ ແລະ ໄດ້ຈັດຕັ້ງປະຕິບັດຈົນຮອດປີ 2009. ການທີ່ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2006 ບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນນັ້ນ ອາດມາຈາກປັດໄຈທາງດ້ານການບໍລິຫານ

ຄຸ້ມຄອງເປັນສາເຫດຫຼັກ. ດັ່ງນັ້ນ, ນະໂຍບາຍ ປີ 2019-2030 ຈະລວມເອົາຍຸດທະສາດການຈັດຕັ້ງປະຕິບັດທີ່ເຂັ້ມແຂງ, ລວມທັງລະບົບການຕິດຕາມ ແລະ ກວດກາຢ່າງເປັນປົກກະຕິ ແລະ ຊັດເຈນ.

## 1.3 ຂະບວນການໃນການສ້າງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030

ການປັບປຸງນະໂຍບາຍ ປີ 2006 ມາເປັນ ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ແມ່ນລິເລີ່ມໃນຕົ້ນປີ 2017 ໂດຍກົມແຜນການ, ກະຊວງແຜນການ ແລະ ການລົງທຶນ. ເນື່ອງຈາກວ່າສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ລວມທັງໂຄງສ້າງຂອງປະຊາກອນເຫັນວ່າມີການປ່ຽນແປງຢ່າງເຫັນໄດ້ຊັດເຈນ; ມີຫຼາຍບັນຫາພົ້ນເດັ່ນທີ່ນະໂຍບາຍ ປີ 2006 ບໍ່ໄດ້ກວມເອົາ. ນອກຈາກນັ້ນສະພາບການພັດທະນາຂອງສາກົນກໍໄດ້ມີເປົ້າໝາຍໃໝ່ຂອງການພັດທະນາ ໂດຍສະເພາະແມ່ນເປົ້າໝາຍການພັດທະນາແບບຍືນຍົງ 2030 ແລະ ການຈັດຕັ້ງປະຕິບັດກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ ຫຼັງປີ 2014.

ດັ່ງນັ້ນ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຈຶ່ງໄດ້ເຫັນດີໃຫ້ມີການປັບປຸງນະໂຍບາຍປີ 2006 ໂດຍໄດ້ມີການແຕ່ງຕັ້ງ 11 ພາກສ່ວນ ເພື່ອສະໜັບສະໜູນຂະບວນການປັບປຸງນະໂຍບາຍ. ທ່ານລັດຖະມົນຕີ ຈຶ່ງໄດ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບອອກເປັນ 3 ລະດັບຄື: ຄະນະຊີ້ນໍາ, ຄະນະວິຊາການ ແລະ ກອງເລຂາ. ພາຍຫຼັງໄດ້ຮັບການແຕ່ງຕັ້ງແລ້ວ ແຕ່ລະຄະນະທີ່ຖືກມອບໝາຍກໍໄດ້ພ້ອມກັນຄົ້ນ ຄ້ວາຮ່າງນະໂຍບາຍດັ່ງກ່າວຮ່ວມກັບ ອົງການສະຫະປະຊາຊາດກອງທຶນສໍາລັບປະຊາກອນ (UNFPA) ໂດຍຖືເອົາກົມແຜນການເປັນຈຸດໃຈກາງໃນການປະສານງານກັບພາກສ່ວນຕ່າງໆ.

ໃນການປັບປຸງນະໂຍບາຍດັ່ງກ່າວ ອົງການສະຫະປະຊາຊາດກອງທຶນສໍາລັບປະຊາກອນ (UNFPA) ນອກຈາກການຊ່ວຍເຫຼືອທາງດ້ານງົບປະມານແລ້ວ ຍັງໄດ້ສະໜັບສະໜູນທາງດ້ານວິຊາການໂດຍຜ່ານທີ່ປຶກສາພາຍໃນ ແລະ ຕ່າງປະເທດ.

ຄະນະວິຊາການໄດ້ມີການປະຊຸມປຶກສາຫາລືຫຼາຍລະດັບກັບຂະແໜງການ, ທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາຫຼາຍຄັ້ງ ເພື່ອຄວາມເປັນເອກະພາບກ່ຽວກັບເນື້ອໃນ ແລະ ການປະກອບຂໍ້ມູນເຂົ້າໃນນະໂຍບາຍສະບັບນີ້ ພ້ອມທັງມີການທົບທວນຄວາມຄືບໜ້າເປັນແຕ່ລະໄລຍະ. ໃນການປັບປຸງນະໂຍບາຍສະບັບນີ້ ຄະນະວິຊາການໄດ້ເຫັນດີນໍາໃຊ້ວິທີການທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ເຊັ່ນດຽວກັນກັບສອງນະໂຍ ບາຍກ່ອນໜ້ານີ້ ແຕ່ຈະລົງເລິກເນັ້ນໜັກໃສ່ການນໍາເອົາບັນດາອົງປະກອບສໍາຄັນຂອງແຜນຂອງຂະແໜງການ ເຂົ້າໃສ່ໃນນະໂຍບາຍ ເພື່ອສະແດງໃຫ້ເຫັນຄວາມສໍາຄັນ ແລະ ຈໍາເປັນ ໂດຍອີງໃສ່ແຜນການພັດທະນາ, ກອບວຽກ ແລະ ຫຼັກການໃນການສ້າງນະໂຍບາຍທີ່ແຕກຕ່າງກັນ. ນີ້ແມ່ນເຫດຜົນທີ່ໄດ້ສັງລວມເອົາບັນດາຂໍ້ມູນປະກອບເຂົ້າໃນຕາຕະລາງການຈັດຕັ້ງປະຕິບັດໂດຍລະອຽດຂອງ ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030. ເພື່ອເຮັດໃຫ້ຕາຕະລາງນີ້ສໍາເລັດສົມບູນ, ກອງເລຂາ ແລະ ທີ່ປຶກສາດ້ານວິຊາການພາຍໃນ ແລະ ຕ່າງປະເທດ ໄດ້ປຶກສາຫາລືກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ຍັງໄດ້ປຶກສາຫາລືກັບບັນດາຄູ່ຮ່ວມພັດທະນາອື່ນໆ.

ຄະນະວິຊາການຍັງໄດ້ສະໜອງຂໍ້ມູນໃຫ້ແກ່ທີ່ປຶກສາດ້ານວິຊາການພາຍໃນ ແລະ ຕ່າງປະເທດ ທີ່ເປັນຂໍ້ມູນຍັ້ງຢືນ ແລະ ໜັກແໜ້ນໃນການຄັດເລືອກບັນຫາຂອງປະຊາກອນທີ່ນໍາມາແກ້ໄຂໃນການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ເພື່ອໃຫ້ມີເນື້ອໃນທີ່ສົມບູນ.

2. ສະພາບເສດຖະກິດ ແລະ ສັງຄົມ

ການປ່ຽນແປງຂອງປະຊາກອນແມ່ນບໍ່ໄດ້ເກີດຂຶ້ນມາເອງ ແຕ່ໄດ້ຮັບຜົນກະທົບຢ່າງໜັກຈາກສະພາບຂອງການພັດທະນາ ແລະ ທ່າອ່ຽງດ້ານເສດຖະກິດ-ສັງຄົມ, ພ້ອມທັງນະໂຍບາຍຂອງລັດຖະບານ. ຂັ້ນຕອນຫຼັກຂອງການຂ້າມຜ່ານດ້ານປະຊາກອນ ໂດຍທົ່ວໄປແມ່ນຕິດພັນກັບລະດັບຂອງລາຍຮັບຕໍ່ຫົວຄົນ ແລະ ມາດຕະຖານຂອງການພັດທະນາສັງຄົມ ໂດຍສະເພາະດ້ານສຸຂະພາບ ແລະ ການສຶກສາ. ການເຕີບໂຕຂອງເສດຖະກິດສາມາດຊຸກຍູ້ການຂ້າມຜ່ານດ້ານການຕາຍ ແລະ ການຈະເລີນພັນຖ້າຜົນປະໂຫຍດຂອງການເຕີບໂຕດັ່ງກ່າວຖືກແຈກຢາຍຢ່າງເທົ່າທຽມກັນ.

**2.1 ທ່າອ່ຽງຂອງການເຕີບໂຕ ແລະ ການພັດທະນາເສດຖະກິດ**

ສປປ ລາວ ແມ່ນປະເທດທີ່ມີລາຍຮັບປານກາງຕໍ່າ ເຊິ່ງມີລາຍຮັບແຫ່ງຊາດຕໍ່ຫົວຄົນ (ວິທີການ Atlas) ແມ່ນ 2,150 ໂດລາສະຫະລັດ ໃນປີ 2016.[1]ລາຍຮັບດັ່ງກ່າວໄດ້ເຮັດໃຫ້ ສປປ ລາວ ຢູ່ໃນລະດັບກ່ອນໜ້າປະເທດກຳປູເຈຍ ແລະ ປະເທດມຽນມ້າ ແລະ ມີລະດັບໃກ້ຄຽງກັບ ປະເທດຫວຽດນາມ; ແຕ່ວ່າລາຍຮັບຕໍ່ຫົວຄົນຂອງ ສປປ ລາວ ແມ່ນຍັງຕໍ່າກວ່າປະເທດໄທຫຼາຍ (ຮູບສະແດງ 30).

**ຮູບສະແດງ 1: ລາຍຮັບແຫ່ງຊາດຕໍ່ຫົວຄົນຢູ່ອາຊີຕາເວັນອອກສ່ຽງໃຕ້, ປີ 2016**




ແຫຼ່ງຂໍ້ມູນ: ຕົວຊີ້ວັດຫຼັກຂອງທະນາຄານພັດທະນາອາຊີ ADB, ປີ 2017 (ຕາຕະລາງ 2.3)

ເສດຖະກິດຂອງ ສປປ ລາວ ໄດ້ມີການເຕີບໂຕຢ່າງໄວວາຕັ້ງແຕ່ໄລຍະຕົ້ນຂອງຊຸມປີ 1990, ເຊິ່ງການເຕີບໂຕຂອງ GDP ໂດຍສະເລ່ຍແມ່ນ 7.7% ຕໍ່ປີໃນ 5 ປີກ່ອນ ແລະ 8.0% ໃນໄລຍະຊ່ວງເວລາ 5 ປີຜ່ານມາ (ADB, 2017). ນີ້ແມ່ນຖືວ່າຢູ່ໃນລະດັບດີທຽບກັບປະເທດອື່ນໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ແຕ່ວ່າ GDP ຕໍ່ຫົວຄົນແມ່ນເພີ່ມຂຶ້ນໃນຈັງຫວະທີ່ຂ້ອນຂ້າງຊ້າ ເນື່ອງມາຈາກອັດຕາການເຕີບໂຕຂອງປະຊາກອນ

[1]ຕົວຊີ້ວັດການພັດທະນາຂອງອົງການທະນາຄານໂລກ. ເຂົ້າເບິ່ງໄດ້: wdi.worldbank.org/table/WV.1 on 13/11/2017.

ທີ່ສູງກວ່າປະເທດອື່ນໆໃນພາກພື້ນ (ຮູບສະແດງ 31). ການເຕີບໂຕຂອງ GDP ຕໍ່ຫົວຄົນຕັ້ງແຕ່ປີ 2000 ແມ່ນພຽງພໍໃນການຮັບປະກັນການຂ້າມຜ່ານດ້ານປະຊາກອນໃນຈັງຫວະທີ່ໜ້າເພິ່ງພໍໃຈ.

ຕົວຊີ້ວັດໜຶ່ງແມ່ນການຫຼຸດລົງຂອງອັດຕາສ່ວນຂອງປະຊາກອນທຸກຍາກ. ອັດຕາສ່ວນປະຊາກອນທີ່ຢູ່ກ້ອງເສັ້ນຄວາມທຸກຍາກແຫ່ງຊາດໄດ້ຫຼຸດລົງຈາກ 39% ໃນປີ 1997 ມາເປັນ 23.2% ໃນປີ 2012. ເຊັ່ນດຽວກັນ, ອັດຕາສ່ວນຂອງປະຊາກອນທີ່ຢູ່ກ້ອງເສັ້ນຄວາມທຸກຍາກສາກົນ ($1.90 ຕໍ່ຫົວຄົນຕໍ່ມື້) ໄດ້ຫຼຸດລົງຈາກ 41% ໃນປີ 1997 ມາເປັນ 22.7% ໃນປີ 2012. ເຖິງແມ່ນວ່າຈະມີຜົນສຳເລັດດັ່ງກ່າວ, ບາງແຂວງຍັງມີອັດຕາຄວາມທຸກຍາກສູງກວ່າລະດັບສະເລ່ຍຂອງປະເທດຊຶ່ງລວມມີແຂວງເຊກອງ (42.7 ສ່ວນຮ້ອຍ), ບໍ່ແກ້ວ (44.4 ສ່ວນຮ້ອຍ) ແລະ ແຂວງຫົວພັນ (39.2 ສ່ວນຮ້ອຍ).[2]ຍັງເຫັນໄດ້ວ່າຄວາມທຸກຍາກໃນເຂດຊົນນະບົດ (29 ສ່ວນຮ້ອຍ) ແມ່ນສູງກວ່າຢູ່ເຂດຕົວເມືອງຫຼາຍ (10 ສ່ວນຮ້ອຍ). ສປປ ລາວ ຍັງເປັນກໍລະນີທີ່ຜິດເສດຢູ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ກ່ຽວກັບອັດຕາສ່ວນຂອງປະຊາກອນທີ່ມີວຽກເຮັດແຕ່ຢູ່ກ້ອງເສັ້ນຄວາມທຸກຍາກສາກົນ. ດັ່ງທີ່ສະແດງຢູ່ຮູບສະແດງ 3, ອັດຕາສ່ວນດັ່ງກ່າວແມ່ນ 46% ຢູ່ ສປປ ລາວ ທຽບກັບ 20.3% ຢູ່ປະເທດກຳປູເຈຍ ແລະ 10.5 % ຢູ່ປະເທດອິນໂດນີເຊຍ.

**ຮູບສະແດງ 2: ການເພີ່ມຂຶ້ນຂອງອັດຕາສ່ວນຂອງ GDP ຕໍ່ຫົວຄົນຢູ່ປະເທດອາຊີຕາເວັນອອກສ່ຽງໃຕ້, ປີ 2000-2015**




[2]ກະຊວງ ແຜນການ ແລະ ການລົງທຶນ (2016)




ແຫຼ່ງຂໍ້ມູນ: ຕົວຊີ້ວັດຫຼັກຂອງ ADB ປີ 2017

**ຮູບສະແດງ 3: ອັດຕາສ່ວນຂອງປະຊາກອນທັງໝົດ ແລະ ປະຊາກອນເຮັດວຽກທີ່ຢູ່ກອງເສັ້ນຄວາມທຸກຍາກສາກົນ (IPL), ປີ 2016, ສຳລັບບາງປະເທດຢູ່ອາຊີຕາເວັນອອກສ່ຽງໃຕ້.**




ແຫຼ່ງຂໍ້ມູນ: ຕົວຊີ້ວັດຫຼັກຂອງ ADB ປີ 2017 ຕາຕະລາງ 2.1

ຄຳອະທິບາຍທີ່ເປັນໄປໄດ້ ສຳລັບອັດຕາທີ່ສູງຫຼາຍຂອງຜູ້ເຮັດວຽກທີ່ທຸກຍາກ ຢູ່ ສປປ ລາວ ອາດເນື່ອງມາຈາກອັດຕາສ່ວນຂອງກຳລັງແຮງງານແມ່ນຢູ່ໃນຂະແໜງກະສິກຳທີ່ມີປະສິດຕິພາບຕໍ່າ. ຈາກຮູບສະແດງ 3ສາມາດເຫັນໄດ້ວ່າໃນປີ 2015 ຂະແໜງກະສິກຳກວມ 19.5% GDP ໃນນີ້ 65.2% ຂອງກຳລັງແຮງງານແມ່ນຢູ່ຂະແໜງກະສິກຳ. ຂະແໜງອຸດສາຫະກຳກວມ 32.5% GDP ໃນນີ້ 11.4% ຂອງກຳລັງແຮງງານ. ການບໍລິການແມ່ນຂະແໜງການທີ່ໃຫຍ່ທີ່ສຸດ, ກວມ 48% ຂອງ GDP ແລະ 23.4% ຂອງກຳລັງແຮງງານ. ມູນຄ່າເພີ່ມຂອງແຮງງານຢູ່ຂະແໜງກະສິກຳແມ່ນຕໍ່າກວ່າຢູ່ຂະແໜງການອື່ນຫຼາຍ.

**ຮູບສະແດງ 4: ອັດຕາສ່ວນຂອງ GDP ແລະ ກຳລັງແຮງງານ ແບ່ງຕາມຂະແໜງການທາງເສດຖະກິດ, ປີ 2015**




ແຫຼ່ງຂໍ້ມູນ: ADB (2017)

ສິ່ງທ້າທາຍຫຼັກສຳລັບເສດຖະກິດຂອງ ສປປ ລາວ ແມ່ນການຫັນປ່ຽນທາງດ້ານໂຄງສ້າງຈາກເສດຖະກິດທີ່ຂະແໜງກະສິກຳທີ່ມີປະສິດທິພາບຕໍ່າເປັນຫລັກ ແລະ ການສົ່ງອອກຊັບພະຍາກອນ ໃຫ້ກາຍມາເປັນເສດຖະກິດທີ່

ຫຼາກຫຼາຍ ເນັ້ນໃສ່ການຜະລິດສິນຄ້າທີ່ມີມູນຄ່າເພີ່ມ ແລະ ສ້າງລາຍຮັບເພີ່ມຂຶ້ນໃຫ້ກັບກໍາລັງແຮງງານ. ການຫັນປ່ຽນນີ້ຮຽກຮ້ອງໃຫ້ມີການພັດທະນາໃຫ້ຂະແໜງກະສິກໍາມີຄວາມທັນສະໄໝ ແລະ ສືບຕໍ່ພັດທະນາຂະແໜງບໍລິການ ໂດຍສະເພາະການທ່ອງທ່ຽວ.

## 2.2 ການພັດທະນາສັງຄົມ

ດັດຊະນີການພັດທະນາມະນຸດ (HDI) ແມ່ນການສັງລວມທີ່ເປັນປະໂຫຍດກ່ຽວກັບລະດັບການພັດທະນາມະນຸດເຊິ່ງລວມມີດ້ານການສຶກສາ, ອາຍຸຍືນສະເລ່ຍ ແລະ ລາຍຮັບແທນທີ່ຈະເປັນລາຍຮັບທາງການເງິນພຽງຢ່າງດຽວ. ດັດສະນີການພັດທະນາມະນຸດ ຂອງ ສປປ ລາວ ໄດ້ຮັບການປັບປຸງຂຶ້ນຢ່າງຕໍ່ເນື່ອງຕັ້ງແຕ່ປີ 1990 (ຮູບສະແດງ 34) ແລະ ການຈັດລໍາດັບໃນລະດັບສາກົນກໍ່ໄດ້ຫຍັບຂຶ້ນມາຕື່ມ 5 ອັນດັບ ໃນລະຫວ່າງປີ 2010 ຫາ 2015 (UNDP, 2016). ລໍາດັບດັດສະນີການພັດທະນາມະນຸດ ຂອງ ສປປ ລາວ ໃນປະຈຸບັນແມ່ນຢູ່ໃນປະເພດການພັດທະນາມະນຸດລະດັບປານກາງ, ເຊິ່ງຍັງລວມມີ ປະເທດກໍາປູເຈຍ ແລະ ປະເທດ ມຽນມ້າ ຢູ່ໃນກຸ່ມດຽວກັນ. ອີງໃສ່ອັດຕາຄວາມຄືບໜ້າຂອງດັດສະນີການພັດທະນາມະນຸດໃນປະຈຸບັນ, ສະຖານະພາບຂອງ ສປປ ລາວ ປ່ຽນເປັນ “ການພັດທະນາມະນຸດລະດັບສູງ” ໃນປີ 2026.

ໃນປະຈຸບັນນີ້ຕົວຊີ້ວັດຂອງລະດັບການສຶກສາທີ່ຕໍ່າໂດຍສະເພາະສໍາລັບແມ່ຍິງ ແລະ ເດັກຍິງ ຍັງເປັນຕົວຖ່ວງດຶງການພັດທະນາມະນຸດຂອງ ສປປ ລາວ. ໃນທົ່ວປະເທດອັດຕາ 9.2% ຂອງຜູ້ຊາຍ ແລະ 17.6% ຂອງແມ່ຍິງທີ່ມີອາຍຸ 6 ປີຂຶ້ນໄປບໍ່ເຄີຍໄດ້ຮັບການສຶກສາ ຢູ່ບາງແຂວງ ເຊັ່ນ: ແຂວງຜົ້ງສາລີ, ແຂວງຫລວງນໍ້າທາ, ແຂວງອຸດົມໄຊ ແລະ ແຂວງບໍ່ແກ້ວ, ຫຼາຍກວ່າ 30% ຂອງແມ່ຍິງບໍ່ມີການສຶກສາ. ເພື່ອບັນລຸສະຖານະພາບການພັດທະນາມະນຸດລະດັບສູງ”, ປີຮຽນສະເລ່ຍຕ້ອງເພີ່ມຂຶ້ນມາເປັນຢ່າງໜ້ອຍ 8.1 ປີຈາກ 5.2 ປີໃນປີ 2016 ນີ້ແມ່ນອີງໃສ່ສົມມຸດຖານທີ່ວ່າອົງປະກອບອື່ນໆຂອງດັດສະນີການພັດທະນາມະນຸດກໍ່ໄດ້ຮັບການປັບປຸງ. ໃນລະດັບແຂວງ, ການບັນລຸການສຶກສາທີ່ຕໍ່າໃນກຸ່ມແມ່ຍິງແມ່ນພົວພັນຢ່າງໃກ້ຊິດກັບອັດຕາການຕາຍຂອງເດັກລຸ່ມ 5 ປີ ແລະ ອັດຕາການຈະເລີນພັນລວມ. ການບໍ່ຮູ້ໜັງສືກໍ່ມີຜົນກະທົບຄ້າຍຄືກັນ. ການຮູ້ໜັງສືຢູ່ແຂວງຫລວງພະບາງ ແລະ ແຂວງຜົ້ງສາລີ ມີພຽງແຕ່ 55% ແລະ 54% ຂອງແມ່ຍິງຕາມລໍາດັບ.

**ຮູບສະແດງ 5: ດັດຊະນີການພັດທະນາມະນຸດ, ປີ 1990-2015, ບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້**




ແຫຼ່ງຂໍ້ມູນ:ບົດລາຍງານການພັດທະນາມະນຸດ, UNDP (2016).

ສຳລັບຜູ້ທີ່ໄດ້ເຂົ້າໂຮງຮຽນ, ອັດຕາການສຳເລັດຊັ້ນປະຖົມ ແລະ ມັດທະຍົມສຶກສາແມ່ນຍັງຕ່ຳ. ມີພຽງແຕ່ 73% ສຳເລັດການສຶກສາຊັ້ນປະຖົມ ແລະ 35% ຂອງກຸ່ມອາຍຸທີ່ກ່ຽວຂ້ອງສຳເລັດການສຶກສາຊັ້ນມັດທະຍົມຕອນຕົ້ນ. ທຽບກັບປະເທດຫວຽດນາມ, ອັດຕາດັ່ງກ່າວແມ່ນ 96% ແລະ 81%, ຕາມລຳດັບ[3].ໃນລະດັບຊັ້ນມັດທະຍົມຕອນປາຍມີພຽງ 29% ຂອງຜູ້ຊາຍ ແລະ 25% ຂອງແມ່ຍິງສຳເລັດການສຶກສາໃນລະດັບດັ່ງກ່າວ, ທຽບກັບລະດັບສະເລ່ຍຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້ສຳລັບທັງ 2 ເພດແມ່ນ 40%.

ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍໃນທຸກຂົງເຂດແມ່ນກີດຂວາງການພັດທະນາ. ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) ແລະ ດັດຊະນີຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ (GII) ແມ່ນ 2 ຊີ້ວັດຫຼັກວັດແທກຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ. GDI ຂອງ ສປປ ລາວ ແມ່ນ 0.924 ໃນປີ 2015, ຊີ້ໃຫ້ເຫັນວ່າ ດັດສະນີການພັດທະນາມະນຸດ ສຳລັບແມ່ຍິງແມ່ນຕ່ຳກວ່າຜູ້ຊາຍ ແລະ ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍມີຜົນກະທົບທາງລົບຕໍ່ກັບການພັດທະນາໂດຍລວມ[4] ສຳລັບການປຽບທຽບລະຫວ່າງປະເທດ, ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍເຮັດໃຫ້ ສປປ ລາວ ຢູ່ໃນລຳດັບທີ່ສອງຕ່ຳສຸດຂອງທັງ 5 ກຸ່ມທີ່ມີຄວາມສະ ເໝີພາບໃນລະດັບປານກາງຫາຕ່ຳສຸດ. ອາດຈະບໍ່ແມ່ນຢູ່ໃນກຸ່ມທີ່ຮ້າຍແຮງທີ່ສຸດ ແຕ່ຍັງຢູ່ໄກຈາກປະເທດທີ່ມີການພັດທະນາມະນຸດລະດັບສູງ ແລະ ສູງຫຼາຍ. ຄວາມບໍ່ສົມດຸ່ນຂອງ ສປປ ລາວ ແມ່ນສະທ້ອນໃຫ້ເຫັນຊັດເຈນຢູ່ໃນດັດສະນີຄວາມບໍ່ສະເໝີພາບຍິງ-ຊາຍ (GII), ເຊິ່ງແມ່ນ 0.468 ໃນປີ 2015. ໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ສປປ ລາວ ແມ່ນປະເທດອັນດັບສອງທີ່ບໍ່ເທົ່າທຽມທີ່ສຸດ ຮອງຈາກປະເທດກຳປູ ເຈຍ.

---

[3] ສະຖາບັນສະຖິຕິ UNESCO (2018).

[4] ຄະແນນ 1 ແມ່ນບໍ່ມີຄວາມສະເໝີພາບຍິງຊາຍໃນການພັດທະນາມະນຸດ

ກົງກັນຂ້າມ, ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍແມ່ນຕໍ່າກວ່າຢູ່ປະເທດໄທ, ປະເທດຫວຽດນາມ ແລະ ປະເທດມາເລເຊຍ ແລະ ຕໍ່າທີ່ສຸດຢູ່ປະເທດສິງກະໂປ. ເຖິງແມ່ນວ່າສ່ວນແບ່ງຂອງສະມາຊິກສະພາແຫ່ງຊາດເພດຍິງສູງ ເຖິງ 27.5%, ຈໍານວນແມ່ຍິງໃນຕໍາແໜ່ງການນໍາ ແລະ ຕໍາແໜ່ງຜູ້ບໍລິຫານແມ່ນຍັງຕໍ່າປະມານ 5% ແລະ ໃນເຂດຊົນນະບົດ ມີພຽງແຕ່ 1.7% ທີ່ເປັນນາຍບ້ານເພດຍິງໃນປີ 2015.

## 2.3 ຜົນກະທົບຂອງການພັດທະນາເສດຖະກິດ-ສັງຄົມຕໍ່ກັບປະຊາກອນ

ອັດຕາການເຕີບໂຕຂອງເສດຖະກິດໃນໄລຍະ 2 ທົດສະວັດຜ່ານມາຢູ່ ສປປ ລາວ ແມ່ນໄວວາ ແລະ ມາພ້ອມກັບການປັບປຸງທີ່ເນັ້ນໜັກໃນດ້ານການພັດທະນາມະນຸດ ແລະ ສະຫວັດດີການສັງຄົມ ແຕ່ວ່າການແຈກ ຢາຍຂອງຜົນປະໂຫຍດຂອງການເຕີບໂຕລະຫວ່າງພາກ ແລະ ກຸ່ມທາງສັງຄົມແມ່ນບໍ່ເທົ່າທຽມ ແລະ ບໍ່ສະໝໍ່າສະເໝີ. ມີຫຼາຍຄຸນລັກສະນະຂອງທ່າອ່ຽງດ້ານເສດຖະກິດໃນປະຈຸບັນທີ່ມີຜົນກະທົບຕໍ່ກັບປັດໄຈປະຊາ ກອນ ແລະ ການປ່ຽນແປງຂອງປະຊາກອນ.

### 2.3.1 ໂຄງປະກອບຂອງເສດຖະກິດ

ສປປ ລາວ ໄດ້ຮັບການເຕີບໂຕຂອງເສດຖະກິດໂດຍຜ່ານຍຸດທະສາດທີ່ອີງໃສ່ຊັບພະຍາກອນ ແລະ ການສະໜັບສະໜູນຈາກການລົງທຶນໂດຍກົງຈາກຕ່າງປະເທດ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການເຕີບໂຕຂອງການມີວຽກເຮັດງານທໍາຢູ່ນອກຂະແໜງການກະສິກໍາມີຈໍາກັດ, ຊຶ່ງຂະແໜງການກະສິກໍາຍັງເປັນຂະແໜງການຫຼັກທີ່ຮອງຮັບກໍາລັງແຮງງານ (ADB, 2017). ປະສິດທິພາບຂອງຂະແໜງກະສິກໍາຍັງຢູ່ໃນລະດັບຕໍ່າ ແລະ ກວມເອົາອັດຕາຄວາມທຸກຍາກຂອງປະຊາກອນທີ່ມີວຽກເຮັດທີ່ສູງ. ເພື່ອແຈກຢາຍຜົນປະໂຫຍດຂອງການເຕີບໂຕຂອງເສດຖະກິດໃຫ້ທົ່ວເຖິງ, ຮຽກຮ້ອງໃຫ້ມີການປ່ຽນແປງໂຄງສ້າງເສດຖະກິດຂອງ ສປປ ລາວ ໂດຍໃຫ້ມີອັດຕາສ່ວນຂອງກໍາລັງແຮງງານຢູ່ໃນຂະແໜງໂຮງຈັກໂຮງງານ ແລະ ການບໍລິການຫຼາຍຂຶ້ນ, ເຊິ່ງເປັນຂະແໜງເສດຖະກິດທີ່ມີມູນຄ່າເພີ່ມຕໍ່ແຮງງານສູງກວ່າ. ການຫັນປ່ຽນຂອງໂຄງສ້າງດັ່ງກ່າວຈະປະກອບສ່ວນເຂົ້າໃນການບັນລຸການຂ້າມຜ່ານດ້ານປະຊາກອນ ແລະ ກາຍເປັນກາລະໂອກາດດ້ານປະຊາກອນໃນທີ່ສຸດ. ການປ່ຽນແປງໂຄງສ້າງເສດຖະກິດໃນທິດທາງນີ້ແມ່ນເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-20), ແຕ່ຕ້ອງໃຊ້ເວລາໃນການບັນລຸເປົ້າໝາຍດັ່ງກ່າວ. ພ້ອມດຽວກັນນີ້, ການຂ້າມຜ່ານທາງດ້ານປະຊາກອນຈະຖືກຈໍາກັດຢູ່ໃນບາງແຂວງ ແລະ ບາງທ້ອງຖິ່ນທີ່ມີອັດຕາສ່ວນປະຊາກອນໃນຂະແໜງກະສິກໍາທີ່ຍັງສູງຫຼາຍ, ໂດຍສະເພາະການຜະລິດແບບກຸ້ມຕົນເອງ. ນອກຈາກນັ້ນ, ການເຄື່ອນຍ້າຍອອກຈາກແຂວງທີ່ມີການພັດທະນາຕໍ່າຍັງຈະສືບຕໍ່ ຫຼື ເພີ່ມທະວີຂຶ້ນ ແລະ ຜູ້ເຄື່ອນຍ້າຍບາງຄົນຈະອອກໄປຕ່າງປະເທດ.

### 2.3.2 ຄວາມທຸກຍາກ ແລະ ການບໍລິການທາງສັງຄົມ

ມີຄວາມຈໍາເປັນທີ່ລັດຖະບານຕ້ອງໄດ້ສືບຕໍ່ປັບປຸງການສະໜອງການບໍລິການ ຜ່ານແຜນງານຂອງລັດຖະບານ ລວມທັງແຜນຍຸດທະສາດການຫຼຸດຜ່ອນຄວາມທຸກຍາກ ແລະ ສຸຂະພາບຈະເລີນພັນໃຫ້ແກ່ປະຊາຊົນ ຈົນກວ່າໂອກາດການມີວຽກເຮັດງານທໍາຈະຊ່ວຍໃຫ້ກໍາລັງແຮງງານສາມາດເຂົ້າເຖິງການບໍລິການທັງສັງຄົມໄດ້ໂດຍການໃຊ້ຈ່າຍຂອງຕົນເອງໂດຍກົງ. ເປັນທີ່ຈະແຈ້ງວ່າອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ທັງພາຍໃນ ແລະ ສາກົນ ສາມາດມີບົດບາດສໍາຄັນບໍ່ວ່າທາງກົງ ຫຼື ທາງອ້ອມ.

### 2.3.3 ການສຶກສາ

ລະດັບການບັນລຸການສຶກສາທີ່ຕໍ່າ ໂດຍສະເພາະສໍາລັບກຸ່ມແມ່ຍິງແມ່ນພົວພັນຢ່າງໃກ້ຊິດກັບທ່າອ່ຽງການເກີດ ແລະ ການຕາຍ ແລະ ການຂ້າມຜ່ານດ້ານປະຊາກອນ. ອັດຕາການບໍ່ຮູ້ໜັງສືທີ່ສູງຂອງກຸ່ມປະຊາກອນຜູ້

ໃຫຍ່, ໂດຍສະເພາະແມ່ຍິງມີຜົນກະທົບຕໍ່ກັບການສື່ສານທາງສັງຄົມ ເຊັ່ນ: ມາດຕະການທີ່ກ່ຽວກັບການປ່ຽນແປງພຶດຕິກຳ. ເພື່ອຜັກດັນການຂ້າມຜ່ານດ້ານປະຊາກອນ, ເດັກຍິງ ແລະ ແມ່ຍິງໜຸ່ມໃນຈຳນວນຫຼາຍຂຶ້ນ, ຕ້ອງສຳເລັດການສຶກສາລະດັບມັດທະຍົມສຶກສາຕອນຕົ້ນ. ນອກນັ້ນການເພີ່ມຂຶ້ນຂອງອາຍຸແຕ່ງງານກໍ່ສາມາດປະກອບສ່ວນເຂົ້າໃນການບັນລຸການຂ້າມຜ່ານດ້ານປະຊາກອນ.

#### 2.3.4 ບົດບາດຍິງຊາຍ

ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍເປັນສິ່ງກີດຂວາງໃນການພັດທະນາຂອງປະຊາກອນ, ຊຶ່ງສະທ້ອນໃຫ້ເຫັນເຖິງການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນບັນຫາແມ່ນມີໜ້ອຍ, ການຮູ້ໜັງສື ແລະ ການບັນລຸການສຶກສາໜ້ອຍ, ມີຂໍ້ຈຳກັດໃນການເຂົ້າເຖິງໂອກາດທາງດ້ານເສດຖະກິດ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວ ເຮັດໃຫ້ແມ່ຍິງບໍ່ສາມາດຕັດສິນບັນຫາດ້ວຍຕົນເອງ. ນອກນັ້ນ, ການແຕ່ງງານກ່ອນໄວອັນຄວນ ເຮັດໃຫ້ແມ່ຍິງຖືກຈຳກັດສິດທິ ແລະ ການສົ່ງເສີມສຸຂະພາບຈະເລີນພັນຂອງຕົນເອງ.

## 3. ຂໍ້ມູນປະຊາກອນຂອງ ສປປ ລາວ

### 3.1 ອົງປະກອບຫຼັກຂອງປະຊາກອນ

ສາມອົງປະກອບພື້ນຖານຂອງປະຊາກອນທີ່ກ່ຽວຂ້ອງກັບນະໂຍບາຍປະກອບມີ: (1) ອັດຕາການເຕີບໂຕຂອງປະຊາກອນ; (2) ໂຄງປະກອບອາຍຸຂອງປະຊາກອນ; (3) ການແຈກຢາຍທາງດ້ານພູມສັນຖານຂອງປະຊາກອນ. ປັດໄຈທີ່ກຳນົດອົງປະກອບເຫຼົ່ານີ້ຖືວ່າແມ່ນບັນຫາປະຊາກອນເຊັ່ນດຽວກັນ. ອົງປະກອບຂອງປະຊາກອນສາມາດປ່ຽນແປງໄດ້ຍ້ອນການປ່ຽນການຈະເລີນພັນ, ການຕາຍ ແລະ ການເຄື່ອນຍ້າຍ. ການປ່ຽນແປງຮູບແບບຂອງການຈະເລີນພັນ, ການຕາຍ ແລະ ການເຄື່ອນຍ້າຍແມ່ນເອີ້ນວ່າ "ປັດໄຈດ້ານປະຊາກອນ" ເພື່ອສ້າງຄວາມເຂົ້າໃຈວ່າເປັນຫຍັງປະຊາກອນໃນປະຈຸບັນຈຶ່ງມີອົງປະກອບສະເພາະດັ່ງກ່າວ, ມີຄວາມຈຳເປັນທີ່ຕ້ອງໄດ້ສຶກສາປັດໄຈປະຊາກອນໃນໄລຍະຜ່ານມາ. ເຊັ່ນດຽວກັນນັ້ນ, ຖ້າຕ້ອງການຮູ້ກ່ຽວກັບປະຊາກອນໃນອະນາຄົດ, ຈຳເປັນຕ້ອງໄດ້ວາງສົມມຸດຖານກ່ຽວກັບຮູບແບບຂອງປັດໄຈປະຊາກອນໃນອະນາຄົດ. ສຸດທ້າຍປັດໄຈປະຊາກອນແມ່ນບໍ່ປ່ຽນແປງດ້ວຍຕົວເອງ ແຕ່ຖືກກຳນົດໂດຍປັດໄຈທາງດ້ານສັງຄົມ, ເສດຖະກິດ, ຊີວະສາດ ແລະ ສິ່ງແວດລ້ອມ. ຄວາມທ້າທາຍສຳລັບນະໂຍບາຍແມ່ນການກຳນົດບົດບາດຂອງປັດໄຈເຫຼົ່ານີ້ ແລະ ອອກແບບມາດຕະການເພື່ອປ່ຽນແປງໃຫ້ໄປໃນທິດທາງທີ່ຕ້ອງການ.

### 3.2 ປະຊາກອນໃນປະຈຸບັນ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທີ່ໄດ້ດຳເນີນໃນເດືອນມີນາປີ 2015 ໄດ້ລາຍງານວ່າປະຊາ ກອນທັງໝົດຂອງ ສປປ ລາວ ແມ່ນ 6.5 ລ້ານຄົນ ເມື່ອດັດປັບໂດຍຄຳນຶງເຖິງຜູ້ທີ່ບໍ່ໄດ້ຖືກຈົດນັບໃນບາງກຸ່ມອາຍຸ, ແລະ ປ່ຽນມື້ກາງປີ, ປະຊາກອນຂອງປີ 2015 ແມ່ນ 6.7 ລ້ານຄົນ. ຖ້າອັດຕາການເຕີບໂຕສະເລ່ຍຂອງປະຊາກອນໃນລະຫວ່າງການສຳຫຼວດພົນລະເມືອງປີ 2005-2015 (ຄາດຄະເນປະມານ 1.5% ຕໍ່ປີ) ແມ່ນສືບຕໍ່ປະຊາກອນກາງປີ 2017 ຈະມີປະມານ 7 ລ້ານຄົນ.

### 3.3 ການເຕີບໂຕຂອງປະຊາກອນ ແລະ ການຂ້າມຜ່ານດ້ານປະຊາກອນ

ສປປ ລາວ ເຖິງແມ່ນວ່າອັດຕາການເຕີບໂຕຂອງປະຊາກອນຈະມີການເໜັງຕີງຂຶ້ນລົງໃນໄລຍະຜ່ານມາເນື່ອງຈາກປັດໄຈທາງປະຫວັດສາດ, ປະຊາກອນແມ່ນໄດ້ສືບຕໍ່ຂະຫຍາຍຕົວໃນໄລຍະ 6 ທົດສະວັດຜ່ານມາ ( ເບິ່ງຮູບສະແດງ 1) ອັດຕາການເຕີບໂຕແມ່ນຂຶ້ນຮອດຈຸດສູງສຸດໃນທ້າຍຊຸມປີ 1980 ຢູ່ໃນລະດັບ 2.9% ຕໍ່ປີ ແລະ ຫລັງຈາກນັ້ນກໍ່ໄດ້ຫຼຸດລົງປະມານ 55% ແລະ ໃນປີ 2015 ມາເປັນປະມານ 1.3-1.5% ຂອງການເຕີບໂຕ

ຕໍ່ປີ. ຖ້າເບິ່ງໃນຈຳນວນຕົວເລກທີ່ແທ້ຈິງ, ການເຕີບໂຕຂອງປະຊາກອນແມ່ນໄດ້ຫລຸດລົງຈາກ 122,290 ຄົນ ໃນໄລຍະສູງສຸດໃນປີ 1992 ຫາ 87,600 ຄົນໃນປີ 2015.

"ການຂ້າມຜ່ານດ້ານປະຊາກອນ" ຂອງ ສປປ ລາວ ແມ່ນໄດ້ດຳເນີນມາເປັນເວລາປະມານ 3 ທົດສະວັດ. ການຂ້າມຜ່ານດ້ານປະຊາກອນແມ່ນຂະບວນທີ່ອັດຕາການຕາຍ ແລະ ການເກີດຫຼຸດລົງ ຈາກລະດັບສູງຫາຕໍ່າ. ກ່ອນໜ້າການຂ້າມຜ່ານນີ້, ອັດຕາການເກີດ ແລະ ການຕາຍແມ່ນຢູ່ໃນລະດັບສູງເຊິ່ງສົ່ງຜົນໃຫ້ອັດຕາການເຕີບໂຕຂອງປະຊາກອນຕໍ່າເຊັ່ນກັນ.ໃນຕອນທ້າຍຂອງການຂ້າມຜ່ານ, ອັດຕາການຕາຍ ແລະ ການເກີດຈະຢູ່ໃນລະດັບຕໍ່າ, ເຊັ່ນດຽວກັນຈະສົ່ງຜົນໃຫ້ອັດຕາການເຕີບໂຕຂອງປະຊາກອນຢູ່ໃນລະດັບຕໍ່າ. ການເຕີບໂຕຂອງປະຊາກອນທີ່ສູງເກີດຂຶ້ນໃນໄລຍະກາງຂອງການຂ້າມຜ່ານ ເຊິ່ງແມ່ນຊ່ວງທີ່ອັດຕາການຕາຍກຳລັງຫຼຸດລົງ ແຕ່ອັດຕາການເກີດຍັງບໍ່ທັນຫຼຸດລົງ ຫຼື ຫຼຸດລົງຊ້າໆ.

**ຮູບສະແດງ 6: ການເຕີບໂຕຂອງປະຊາກອນໃນໄລຍະຍາວຢູ່ ສປປ ລາວ ປີ 1950-2015**




<u>ແຫຼ່ງຂໍ້ມູນ:</u> ພະແນກປະຊາກອນຂອງອົງການສະຫະປະຊາຊາດ (2017)

### 3.3.1 ການຂ້າມຜ່ານດ້ານການຕາຍຢູ່ ສປປ ລາວ

ການຂ້າມຜ່ານທາງດ້ານປະຊາກອນເລີ່ມຕົ້ນເມື່ອອັດຕາການຕາຍເລີ່ມຫຼຸດລົງຈາກລະດັບສູງ ເນື່ອງມາຈາກການປັບປຸງເງື່ອນໄຂທາງດ້ານສຸຂະພາບ. ໜຶ່ງໃນຕົວຊີ້ວັດລວມຂອງການຕາຍແມ່ນອາຍຸຍືນສະເລ່ຍຕັ້ງແຕ່ເກີດ ເຊິ່ງຈະເພີ່ມຂຶ້ນຖ້າອັດຕາການຕາຍໃນແຕ່ລະກຸ່ມອາຍຸຫຼຸດລົງ, ໂດຍທົ່ວໄປແລ້ວແມ່ນເລີ່ມຈາກອັດຕາການຕາຍຂອງເດັກອ່ອນ ແລະ ເດັກນ້ອຍ. ຈາກຮູບສະແດງ 7 ພວກເຮົາສາມາດເຫັນໄດ້ວ່າອາຍຸຍືນສະເລ່ຍຂອງ ສປປ ລາວ ແມ່ນຕໍ່າຫຼາຍໃນຊຸມປີ 1950 ສູງກວ່າ 40 ປີໜ້ອຍໜຶ່ງ ສຳລັບທັງສອງເພດ. ຖັດຈາກປະເທດກຳປູເຈຍ, ສປປ ລາວ ແມ່ນປະເທດທີ່ສອງທີ່ມີອາຍຸຍືນສະເລ່ຍຕໍ່າທີ່ສຸດໃນເຂດອາຊີອາເວັນອອກສ່ຽງໃຕ້ໃນຊຸມປີ 1950, ສູງກວ່າປະເທດມຽນມ້າໜ້ອຍໜຶ່ງ. ສປປ ລາວ ສາມາດບັນລຸໄດ້ຄວາມຄືບໜ້າດ້ານອາຍຸຍືນສະເລ່ຍຢ່າງຕໍ່ເນື່ອງໃນໄລຍະຫຼາຍທົດສະວັດຜ່ານມາ ແລະ ສາມາດຫຼຸດຊ່ອງຫວ່າງກັບບັນດາປະເທດອື່ນໆໃນອາຊີອາເວັນອອກສ່ຽງໃຕ້ໄດ້ຢ່າງເປັນໜ້າພຶງພໍໃຈ. ເຖິງແມ່ນວ່າຈະມີຄວາມຄືບໜ້າທີ່ຕໍ່ເນື່ອງ, ອາຍຸຍືນສະເລ່ຍຂອງ ສປປ ລາວ ຍັງຕໍ່າ

ທີ່ສຸດຢູ່ໃນພາກພື້ນ ແລະ ຕ່ຳກວ່າອາຍຸຍືນສະເລ່ຍຂອງປະເທດໄທເກືອບ 9 ປີ. ຈັ່ງຫວະການປັບປຸງການຕາຍຂອງ ສປປ ລາວ ເປັນທີ່ເພິ່ງພໍໃຈຫຼາຍ ແຕ່ສິ່ງທ້າທາຍທີ່ປະເທດພົບພໍ້ແມ່ນເລີ່ມມາຈາກລະດັບການຕາຍທີ່ສູງຫຼາຍໃນໄລຍະເລີ່ມຕົ້ນຂອງການຂ້າມຜ່ານດ້ານການຕາຍ, ໂດຍສະເພາະຖ້າທຽບກັບປະເທດໄທ ແລະ ປະເທດຫວຽດນາມ.

ອັດຕາການຕາຍຂອງເດັກລຸ່ມ 1 ປີ ແລະ ເດັກນ້ອຍລຸ່ມ 5 ປີ ແມ່ນຕົວຊີ້ວັດທີ່ມີຄວາມສຳຄັນຂອງການຕາຍພ້ອມທັງລະດັບການພັດທະນາຂອງປະເທດ ແລະ ມີຜົນກະທົບທີ່ສຳຄັນຕໍ່ກັບອາຍຸຍືນສະເລ່ຍ. ຮູບສະແດງ 8 ປຽບທຽບທ່າອ່ຽງຂອງອັດຕາການຕາຍຂອງເດັກລຸ່ມ 1 ປີ ແລະ ອັດຕາການຕາຍຂອງເດັກລຸ່ມ 5 ປີ ຢູ່ ສປປ ລາວ ກັບພາກພື້ນອາຊີຕາເວັນອອກສ່ຽງໃຕ້ໂດຍລວມ. ເຊັ່ນດຽວກັນກັບຕົວຊີ້ວັດການຕາຍອື່ນໆ, ຊ່ອງຫວ່າງ ລະຫວ່າງ ສປປ ລາວ ແລະ ປະເທດອື່ນໆໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ແມ່ນໄດ້ຫຼຸດລົງເຊັ່ນກັນໃນທົດສະວັດຜ່ານມາ, ແຕ່ວ່າຫົນທາງຍັງອີກຍາວໄກສຳລັບ ສປປ ລາວ ໃນການບັນລຸລະດັບສະເລ່ຍຂອງພາກພື້ນສຳລັບຕົວຊີ້ວັດເຫຼົ່ານີ້ໄດ້.

**ຮູບສະແດງ 7: ອາຍຸຍືນສະເລ່ຍຕັ້ງແຕ່ເກີດຂອງບັນດາປະເທດຢູ່ອາຊີອາເວັນອອກສ່ຽງໃຕ້, ປີ 1950-2015**




<u>ແຫຼ່ງຂໍ້ມູນ:</u> ພະແນກປະຊາກອນຂອງອົງການສະຫະປະຊາຊາດ (2017)

**ຮູບສະແດງ 8: ອັດຕາການຕາຍຂອງເດັກອ່ອນ ແລະ ອັດຕາການຕາຍຂອງເດັກລຸ່ມ 5 ປີຢູ່ ສປປ ລາວ ແລະ ອາຊີອາເວັນອອກສ່ຽງໃຕ້, ປີ 1950-2015**




<u>ແຫຼ່ງຂໍ້ມູນ:</u> ພະແນກປະຊາກອນຂອງອົງການສະຫະປະຊາຊາດ (2017)

### 3.3.2 ບັນຫາການຕາຍອື່ນໆ

ຕົວຊີ້ວັດການຕາຍລະດັບປະເທດສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງແຂວງ ແລະ ພາກ. ອາຍຸຍືນສະເລ່ຍຕັ້ງແຕ່ການເກີດຂອງແມ່ຍິງ ແມ່ນມີລະດັບທີ່ແຕກຕ່າງເລີ່ມແຕ່ສູງທີ່ສຸດຢູ່ນະຄອນຫຼວງວຽງຈັນ 74.2 ປີຫາຕໍ່າທີ່ສຸດຢູ່ແຂວງຫົວພັນ 62.0 ປີ ເຊິ່ງຄວາມແຕກໂຕນກັນແມ່ນ 12.2 ປີ (ຮູບສະແດງ 9). ສໍາລັບຜູ້ຊາຍ, ອາຍຸຍືນສະເລ່ຍຕັ້ງແຕ່ເກີດແມ່ນສູງທີ່ສຸດຢູ່ນະຄອນຫຼວງວຽງຈັນ 71.6 ປີ ແລະ ຕໍ່າທີ່ສຸດຢູ່ແຂວງຫົວພັນ 58.5 ປີ ເຊິ່ງຕ່າງກັນ 13.1 ປີ. ຄວາມແຕກໂຕນກັນທີ່ຫຼາຍນີ້ສະທ້ອນໃຫ້ເຫັນລະດັບການເປັນຢູ່ ແລະ ການເຂົ້າເຖິງການບໍລິການສຸຂະພາບ ທີ່ແຕກຕ່າງກັນຫຼາຍລະຫວ່າງແຂວງຕໍ່ແຂວງ.

ຮູບສະແດງ 9: ອາຍຸຍືນສະເລ່ຍຕັ້ງແຕ່ເກີດແບ່ງຕາມແຂວງສໍາລັບແມ່ຍິງ ແລະ ຜູ້ຊາຍ,ປີ 2015




<u>ແຫຼ່ງຂໍ້ມູນ: </u>ສູນສະຖິຕິແຫ່ງຊາດ (2017)

ເຊັ່ນດຽວກັນຄວາມແຕກໂຕນກັນຫຼາຍແມ່ນເຫັນໄດ້ຊັດເຈນ ເມື່ອສົມທຽບອັດຕາການຕາຍຂອງເດັກອ່ອນ ແລະ ເດັກລຸ່ມ 5 ປີລະຫວ່າງແຂວງຂອງການສຳຫຼວດດັດຊະນີໝາຍສັງຄົມລາວປີ 2017 ເຫັນວ່າອັດຕາການຕາຍຂອງອ່ອນ ເລີ່ມຕົ້ນໃນລະດັບຕໍ່າສຸດແມ່ນ 9 ຄົນຕໍ່ 1,000 ຄົນ ເດັກເກີດມີຊີວິດຢູ່ໄຊຍະບູລີຫາສູງສຸດ ແມ່ນ 68 ຄົນ ຢູ່ແຂວງອຸດົມໄຊ. ເຊັ່ນດຽວກັນກັບ, ອັດຕາການຕາຍຂອງເດັກລຸ່ມ 5 ປີ ຕໍ່າສຸດແມ່ນ 11 ຄົນຕໍ່ 1,000 ຄົນ ເດັກເກີດມີຊີວິດຢູ່ໄຊຍະບູລີ ແລະ ສູງສຸດ 71 ຄົນຢູ່ແຂວງອຸດົມໄຊ ເຊິ່ງສູງກວ່າປະມານ 6 ເທົ່າ. ຂໍ້ມູນເຫຼົ່ານີ້ໄດ້ຊີ້ໃຫ້ເຫັນຄວາມແຕກໂຕນດ້ານປັດໄຈທີ່ມີຜົນກະທົບຕໍ່ກັບສຸຂະພາບຂອງເດັກອ່ອນ ແລະ ເດັກນ້ອຍລະຫວ່າງແຂວງແມ່ນຂ້ອນຂ້າງຫຼາຍ.

**ຮູບສະແດງ 10: ການຕາຍຂອງເດັກອ່ອນ ແລະ ເດັກນ້ອຍແບ່ງຕາມແຂວງ, ການສຳຫຼວດດັດຊະນີໝາຍສັງຄົມ ລາວ ປີ 2017**




<u>ແຫຼ່ງຂໍ້ມູນ:</u> ກະຊວງສາທາລະນະສຸກ ແລະ ສູນສະຖິຕິແຫ່ງຊາດ (2017)

ການຕາຍຂອງແມ່ ກໍ່ແມ່ນບັນຫາສຳຄັນທີ່ສຸດໃນວຽກງານນະໂຍບາຍ ອັດຕາສ່ວນຂອງການຕາຍຂອງແມ່ຢູ່ ສປປ ລາວ ແມ່ນໄດ້ຫຼຸດລົງ 78% ໃນລະຫວ່າງປີ 1990 ແລະ ປີ 2015, ດັ່ງນັ້ນຈຶ່ງສາມາດບັນລຸເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ MDGs ໃນການຫຼຸດຜ່ອນອັດຕາການຕາຍຂອງແມ່ໃຫ້ໄດ້ 75% ໃນຊ່ວງໄລຍະດັ່ງກ່າວ.[5] ຮູບສະແດງ 11 ສະແດງໃຫ້ເຫັນການຄາດຄະເນຈາກສອງແຫຼ່ງຂໍ້ມູນ: ໂດຍອົງການ WHO ຮ່ວມມືກັບຫຼາຍອົງການພັດທະນາ[6] ແລະ ໄດ້ມາຈາກການສຳຫຼວດອື່ນໆ ແລະ ການຫຼວດພົນລະເມືອງຂອງ

[5]ເປົ້າໝາຍສະຫັດສະຫວັດເພື່ອການພັດທະນາກ່ຽວກັບການຕາຍຂອງແມ່ແມ່ນອີງໃສ່ແຜນດຳເນີນງານຂອງ ICPD ປີ 1994, ເຊິ່ງໄດ້ແນະນຳໃຫ້ບັນດາປະເທດບັນລຸ"ການຫລຸດລົງຂອງການຕາຍຂອງແມ່ໃຫ້ໄດ້ເຄິ່ງໜຶ່ງຂອງອັດຕາສ່ວນໃນລະດັບປີ 1990 ໃຫ້ໄດ້ພາຍໃນປີ 2000 ແລະ ຫລຸດລົງ ລົງຕື່ມອີກເຄິ່ງໜຶ່ງພາຍໃນປີ 2015" (UNFPA 2004, p.69).

[6](WHO, et al. 2017)

LSB[7]. ເຖິງແມ່ນວ່າຈະມີຄວາມແຕກຕ່າງເລັກນ້ອຍໃນບາງປີ, ທ່າອ່ຽງໂດຍລວມແມ່ນຖືວ່າສອດຄ່ອງກັນ ແລະ ຊີ້ໃຫ້ເຫັນຄວາມຄືບໜ້າທີ່ສຳຄັນໃນການຫຼຸດຜ່ອນການຕາຍຂອງແມ່ໃນປະເທດ.

**ຮູບສະແດງ 11: ທ່າອ່ຽງຂອງອັດຕາສ່ວນການຕາຍຂອງແມ່, ປີ 1990-2015 ຢູ່ ສປປ ລາວ**




<u>ແຫລ່ງຂໍ້ມູນ:</u> ອົງການອະນາໄມໂລກ (2015); ກະຊວງສາທາລະນະສຸກ ແລະ ສູນສະຖິຕິແຫ່ງຊາດ (2012).

ເຖິງແມ່ນວ່າຈະມີຄວາມຄືບໜ້າທີ່ໜ້າປະທັບໃຈນີ້, ຄວາມສຳຄັນທີ່ພວກເຮົາຕ້ອງໄດ້ຮັບຮູ້ວ່າອັດຕາສ່ວນການຕາຍຂອງແມ່ ຢູ່ ສປປ ລາວ ແມ່ນຍັງສູງທຽບກັບປະເທດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້. ດັ່ງທີ່ເຫັນໄດ້ຈະແຈ້ງໃນຮູບສະແດງ 12, ເຊິ່ງຊີ້ໃຫ້ເຫັນວ່າອັດຕາສ່ວນການຕາຍຂອງແມ່ຂອງປະເທດໄທໃນປະຈຸບັນແມ່ນ 1 ສ່ວນ 10 ຂອງອັດຕາສ່ວນການຕາຍຂອງແມ່ ຢູ່ ສປປ ລາວ ແລະ ອັດຕາສ່ວນການຕາຍຂອງແມ່ຂອງປະເທດມາເລເຊຍແມ່ນ 1 ສ່ວນ 5 ຂອງລະດັບຂອງ ສປປ ລາວ. ພວກເຮົາຈະສັງເກດເຫັນໄດ້ຈາກບັນດາປະເທດທີ່ຖືກນຳສະເໜີຢູ່ໃນຮູບສະແດງ 12, ມີພຽງແຕ່ປະເທດສິງກະໂປ, ໄທ, ມາເລເຊຍ ແລະ ຫວຽດນາມທີ່ສາມາດບັນລຸຄາດໝາຍຂອງ ICPD POA ໃນການຫຼຸດອັດຕາສ່ວນການຕາຍຂອງແມ່ໃຫ້ໄດ້ຕ່ຳກວ່າ 60 ພາຍໃນປີ 2015. ສຳລັ

[7] ເບິ່ງ LSB LSIS 2011-12 ແລະ ບົດລາຍງານການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015.

ບປະເທດທີ່ມີອັດຕາສ່ວນການຕາຍທີ່ສູງຄື: ສປປ ລາວ, ກຳປູເຈຍ ແລະ ມຽນມ້າ, ຄາດໝາຍຂອງອັດຕາສ່ວນການຕາຍຂອງແມ່ແມ່ນ 125 ພາຍໃນປີ 2015, ແຕ່ວ່າບໍ່ມີປະເທດໃດໃນນີ້ທີ່ສາມາດບັນລຸຄາດໝາຍດັ່ງກ່າວເຖິງແມ່ນວ່າຈະມີຄວາມຄືບໜ້າທີ່ໜ້າທີ່ດີກໍ່ຕາມ.

ໃນຂະນະທີ່ອັດຕາສ່ວນການຕາຍຂອງແມ່ແມ່ນຕົວຊີ້ວັດທີ່ສຳຄັນສຳລັບການຕິດຕາມສຸຂະພາບຈະເລີນ, ຈຳນວນຕົວເລກທີ່ແທ້ຈິງຂອງການຕາຍຂອງແມ່ກໍ່ແມ່ນຕົວຊີ້ວັດທີ່ສຳຄັນເຊັ່ນດຽວກັນ. ຈຳນວນແມ່ຕາຍທີ່ຄາດຄະເນຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015 ແມ່ນ 376 ຄົນ, ແລະ ໃນນັ້ນ 65 ຄົນ (17% ຂອງທັງໝົດ) ແມ່ນແມ່ຍິງໃນກຸ່ມອາຍຸ 15-19 ປີ.

**ຮູບສະແດງ 12: ອັດຕາສ່ວນການຕາຍຂອງແມ່ຢູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້. ປີ 2015**




<u>ແຫຼ່ງຂໍ້ມູນ</u>: ອົງການອະນາໄມໂລກ ແລະ ອື່ນໆ (2015)

### 3.3.3 ການຂ້າມຜ່ານດ້ານການຈະເລີນພັນ

ຕົວຊີ້ວັດໂດຍລວມທີ່ດີທີ່ສຸດຂອງການຂ້າມຜ່ານດ້ານການຈະເລີນພັນ ແມ່ນອັດຕາການຈະເລີນພັນລວມ (TFR), ເຊິ່ງແມ່ນຈຳນວນສະເລ່ຍຂອງເດັກເກີດສຳລັບແມ່ຍິງຜູ້ໜຶ່ງ ຖ້າຫາກວ່າອັດຕາການຈະເລີນພັນຂອງໝວດອາຍຸໃນປະຈຸບັນສືບຕໍ່ຄົງທີ່ໃນຊ່ວງຊີວິດຂອງລາວ. ທ່າອ່ຽງໄລຍະຍາວຂອງອັດຕາການຈະເລີນພັນລວມຢູ່ທຸກປະເທດໃນອາຊີຕາເວັນອອກສ່ຽງໃຕ້ແມ່ນສະແດງຢູ່ໃນຮູບສະແດງ 13, ເຊິ່ງສາມາດເຫັນໄດ້ວ່າ ສປປ ລາວ ມີຮູບແບບທີ່ແຕກຕ່າງກັບປະເທດອື່ນໆຢູ່ໃນພາກພື້ນ (ເຖິງແມ່ນວ່າທ່າອ່ຽງຂອງ ສປປ ລາວ ຕັ້ງແຕ່ຊຸມປີ 1980 ຈະຄ້າຍຄືກັນກັບທ່າອ່ຽງຂອງປະເທດກຳປູເຈຍ). ການຂ້າມຜ່ານທາງດ້ານການຈະເລີນພັນຢູ່ ສປປ ລາວ ແມ່ນເລີ່ມຕົ້ນຊ້າຢູ່ໃນຕອນທ້າຍຂອງຊຸມປີ 1980, ປະມານ 20 ປີ ຫຼັງຈາກອັດຕາການຈະເລີນພັນລວມຂອງປະເທດໄທ ແລະ ປະເທດຫວຽດນາມເລີ່ມຕົ້ນທີ່ຈະຫຼຸດລົງຢ່າງໄວວາ. ແຕ່ວ່າການຫຼຸດລົງຂອງການຈະເລີນພັນຢູ່ ສປປ ລາວ ແມ່ນເປັນໄປຢ່າງໄວວາເຊັ່ນດຽວກັນກັບໃນທົດສະວັດທີ່ຜ່ານມາ ແລະ ບໍ່ຄືກັນກັບຫຼາຍປະເທດຢູ່ອາຊີຕາເວັນອອກສ່ຽງໃຕ້, ອັດຕາການຈະເລີນພັນແມ່ນຍັງບໍ່ທັນຮອດຈຸດທົດແທນ. ການຄາດຄະເນຂອງອົງການ UN ທີ່ສະແດງໃນຮູບສະແດງ 13 ຊີ້ໃຫ້ເຫັນວ່າປະເທດສິງກະໂປ, ໄທ ແລະ ມາເລເຊຍ ແມ່ນມີອັດຕາການຈະເລີນພັນລວມ ຢູ່ຕ່ຳກວ່າຫຼືໃກ້ກັນກັບລະດັບທົດແທນ", ໃນຂະນະທີ່ ສປປ ລາວ ແລະ ປະເທດຟີລິບປິນຍັງຢູ່ສູງກວ່າລະດັບທົດແທນ.

**ຮູບສະແດງ 13: ທ່າອ່ຽງອັດຕາການຈະເລີນພັນລວມຢູ່ອາຊີຕາເວັນອອກສ່ຽງໃຕ້ປີ 1950-2015**




<u>ແຫຼ່ງຂໍ້ມູນ:</u> ພະແນກປະຊາກອນຂອງອົງການສະຫະປະຊາຊາດ (2017)

ການແຈກຢາຍຂອງອາຍຸຂອງການຈະເລີນພັນແມ່ນບັນຫາທີ່ທາງນະໂຍບາຍຈະຕ້ອງໄດ້ແກ້ໄຂ, ໂດຍສະເພາະຖ້າການຈະເລີນພັນແມ່ນພົບຫຼາຍຢູ່ໃນກຸ່ມອາຍຸທີ່ໜຸ່ມນ້ອຍ. ຮູບສະແດງ 14 ຊີ້ໃຫ້ເຫັນອັດຕາການເກີດໃນແຕ່ລະໝວດອາຍຸສຳລັບ ສປປ ລາວ ອີງໃສ່ແຫຼ່ງຂໍ້ມູນໃໝ່ທີ່ສຸດກ່ຽວກັບການຄາດຄະເນການຈະເລີນພັນ. ການຄາດຄະເນທີ່ອີງໃສ່ການສຳຫຼວດພົນລະເມືອງສະແດງໃຫ້ເຫັນການຈະເລີນພັນ ໃນກຸ່ມອາຍຸ 15-24 ປີແມ່ນຕ່ຳກວ່າການຄາດຄະເນຂອງ LSIS ແຕ່ວ່າທັງສອງແຫຼ່ງຂໍ້ມູນໄດ້ຊີ້ໃຫ້ວ່າອັດຕາການຈະເລີນຢູ່ໃນລະດັບສູງສຸດແມ່ນໃນກຸ່ມອາຍຸ 20-24 ປີ, ເຊິ່ງຖືວ່າອາຍຸຂ້ອນຂ້າງນ້ອຍ.

**ຮູບສະແດງ 14: ອັດຕາການຈະເລີນພັນຂອງໝວດອາຍຸສຳລັບ ສປປ ລາວ, ປີ 2015 ແລະ 2017**



ແຫຼ່ງຂໍ້ມູນ: ກະຊວງສາທາລະນະສຸກ ແລະ ສູນສະຖິຕິແຫ່ງຊາດ (2017)

ອັດຕາການຈະເລີນພັນໃນໄວໜຸ່ມ ຢູ່ ສປປ ລາວ ແມ່ນສູງທຽບກັບປະເທດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້. ເຊິ່ງສະແດງໃຫ້ເຫັນໃນຮູບສະແດງ 15, ຮູບແບບການຈະເລີນພັນແບ່ງຕາມອາຍຸຢູ່ ສປປ ລາວ ແມ່ນໃກ້ຄຽງທີ່ສຸດກັບປະເທດກຳປູເຈຍ. ເກືອບທຸກປະເທດທີ່ຢູ່ໃນຮູບສະແດງມີອັດຕາການຈະເລີນພັນສູງທີ່ສຸດໃນກຸ່ມອາຍຸ 25-29 ປີ, 5 ປີຫຼັງຈາກ ສປປ ລາວ. ໃນກໍລະນີຂອງປະເທດສິງກະໂປ, ຈຸດສູງສຸດແມ່ນຢູ່ໃນກຸ່ມອາຍຸ 30-34 ປີ. ສປປ ລາວ ມີອັດຕາການຈະເລີນພັນໃນໄວໜຸ່ມ (15-19 ປີ) ສູງທີ່ສຸດຢູ່ໃນພາກພື້ນ.[8]

**ຮູບສະແດງ 15: ອັດຕາການຈະເລີນພັນຂອງໝວດອາຍຸຢູ່ບັນດາປະເທດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້, ປີ 2010-2015**




ແຫຼ່ງຂໍ້ມູນ: ພະແນກປະຊາກອນຂອງອົງການສະຫະປະຊາຊາດ (2017)

ການວັດແທກອີກດ້ານໜຶ່ງກ່ຽວກັບການມີລູກແຕ່ອາຍຸຍັງນ້ອຍ ແມ່ນອັດຕາສ່ວນຂອງການເກີດໃນແມ່ທີ່ມີອາຍຸ 15-19 ປີ. ຂໍ້ມູນຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້ແມ່ນນຳສະເໜີໃນ ຮູບສະແດງ 16, ສປປ ລາວ ບໍ່ແມ່ນປະເທດທີ່ມີອັດຕາສ່ວນສູງທີ່ສຸດແຕ່ແມ່ນປະເທດໄທ, ເຊິ່ງ 16% ຂອງການເກີດແມ່ນຢູ່ໃນກຸ່ມແມ່ຍິງອາຍຸ 15-19 ປີ. ສປປ ລາວ ແມ່ນເປັນອັນດັບທີ່ສອງເຊິ່ງມີ 11%. ກົງກັນຂ້າມ, ປະເທດສິງກະໂປການເກີດໃນກຸ່ມແມ່ຍິງໜຸ່ມກວມພຽງແຕ່ 2%. ຄວາມແຕກຕ່າງລະຫວ່າງອັດຕາສ່ວນຂອງການເກີດໃນກຸ່ມແມ່ຍິງໜຸ່ມສາມາດອະທິບາຍໄດ້ຈາກອັດຕາການແຕ່ງງານ, ແຕ່ວ່າສາເຫດນີ້ບໍ່ສາມາດອະທິບາຍສະພາບການຂອງປະເທດໄທໄດ້. ອາຍຸສະເລ່ຍຂອງການແຕ່ງງານຢູ່ ສປປ ລາວ ສຳລັບກຸ່ມອາຍຸ 25-49 ປີແມ່ນ 19.2 ປີ (LSB, LSIS ປີ 2011-2012), ທຽບກັບ 22.8 ປີຢູ່ປະເທດຫວຽດນາມ ແລະ 27.6 ປີຢູ່ປະເທດສິງກະໂປ.

[8]ພະແນກປະຊາກອນຂອງອົງການ UN ຄາດຄະເນອັດຕາການຈະເລີນພັນຂອງໄວໜຸ່ມຢູ່ສປປລາວແມ່ນ 66 ຕໍ່ 1,000 ທຽບກັບ 76ໃນ PHC ປີ 2015 ແລະ 94 ໃນ LSIS. ບໍ່ວ່າຈະນຳໃຊ້ຕົວເລກໃດ,ສປປລາວຍັງມີອັດຕາທີ່ສູງທີ່ສຸດຢູ່ໃນພາກພື້ນ.

### 3.3.4 ຄວາມແຕກຕ່າງດ້ານການຈະເລີນພັນ

ອັດຕາການຈະເລີນພັນແມ່ນມີຄວາມແຕກຕ່າງຢ່າງຫຼວງຫຼາຍ ລະຫວ່າງສະຖານະທາງເສດຖະກິດ-ສັງຄົມ ແລະ ເຂດພູມສັນຖານ, ຊີ້ໃຫ້ເຫັນວ່າການຂ້າມຜ່ານດ້ານການຈະເລີນພັນແມ່ນບໍ່ເປັນໃນລັກສະດຽວກັນໃນທົ່ວປະເທດ ແລະ ສັງຄົມ. ຕົວຢ່າງ, ອັດຕາການຈະເລີນພັນລວມ (TFR) ໃນປີ 2015 ແມ່ນ 2.6 ຢູ່ເຂດຕົວເມືອງ 3.5 ຢູ່ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ ແລະ 4.2 ຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ (ຫ້ອງການສະຖິຕິແຫ່ງຊາດ). ອັດຕາການຈະເລີນພັນໃນຊາວໜຸ່ມກໍ່ແຕກຕ່າງກັນຢ່າງຫຼວງຫຼາຍເຊັ່ນດຽວກັນລະຫວ່າງເຂດພູມສັນຖານ. ຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ, ອັດຕາການຈະເລີນພັນຂອງຊາວໜຸ່ມແມ່ນ 121 ຕໍ່1,000 ທຽບກັບ 89 ຕໍ່ 1,000 ຢູ່ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ ແລະ 44 ຕໍ່ 1,000 ຢູ່ເຂດຕົວເມືອງ. ການຈະເລີນພັນຍັງມີຄວາມແຕກຕ່າງອີງໃສ່ສະຖານະພາບດ້ານການສຶກສາຂອງແມ່ຍິງ. ແມ່ຍິງທີ່ມີການສຶກສາ ລະດັບຊັ້ນສູງຈະມີອັດຕາການຈະເລີນພັນ 2.2 ທຽບກັບແມ່ຍິງທີ່ມີການສຶກສາລະດັບມັດທະຍົມ ຫຼື ວິຊາຊີບ 2.5, 3.2 ສຳລັບແມ່ຍິງທີ່ມີການສຶກສາລະດັບປະຖົມເທົ່ານັ້ນ ແລະ 4.2 ສຳລັບກຸ່ມແມ່ຍິງທີ່ບໍ່ມີການສຶກສາ. ອັດຕາການຈະເລີນພັນໃນໄວໜຸ່ມສຳລັບແມ່ທີ່ບໍ່ມີການສຶກສາ (155 ຕໍ່ 1,000) ແມ່ນ 6 ເທື່ອຂອງອັດຕາຂອງແມ່ທີ່ມີການສຶກສາຊັ້ນສູງ (26 ຕໍ່ 1,000).

**ຮູບສະແດງ 16: ອັດຕາສ່ວນຂອງການເກີດທັງໝົດຂອງແມ່ທີ່ມີອາຍຸ 15-19 ປີ, ຢູ່ບັນດາປະເທດອາຊີຕາເວັນອອກສຽງໃຕ້**




<u>ແຫຼ່ງຂໍ້ມູນ</u>: ພະແນກປະຊາກອນຂອງອົງການສະຫະປະຊາຊາດ ປີ 2017

ອັດຕາການຈະເລີນພັນລວມກໍ່ຂ້ອນຂ້າງແຕກຕ່າງກັນຫຼາຍລະຫວ່າງແຂວງ (ຮູບສະແດງ 17). ຢູ່ນະຄອນ ຫຼວງວຽງຈັນອັດຕາການຈະເລີນພັນລວມ ໃນປີ 2015 ແມ່ນໃກ້ກັບລະດັບທົດແທນ. ແຕ່ກົງກັນຂ້າມ, ຢູ່ແຂວງຫົວພັນ, ແຂວງຜົ້ງສາລີ, ແຂວງເຊກອງ, ແຂວງອັດຕະປື ແລະ ແຂວງໄຊສົມບູນ, ທັງໝົດມີອັດຕາການຈະເລີນພັນລວມ ສູງກວ່າ 4.0. ມີທັງໝົດ 7 ແຂວງທີ່ມີອັດຕາການຈະເລີນພັນລວມ TFR ຢູ່ໃນລະຫວ່າງ 3.4 ຫາ 3.9, ໃນຂະນະດຽວກັນອີກ 5 ແຂວງມີອັດຕາການຈະເລີນພັນລວມລະຫວ່າງ 2.6 ຫາ 2.9. ຄວາມແຕກຕ່າງກັນນີ້ຈຶ່ງ

ບໍ່ສາມາດອະທິບາຍຕາມລະດັບຄວາມເປັນຕົວເມືອງ, ຫຼືອັດຕາສ່ວນຂອງປະຊາກອນຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ, ແຕ່ປັດໄຈດັ່ງກ່າວແມ່ນມີຜົນກະທົບຕໍ່ກັບການຈະເລີນພັນ. ແຕ່ວ່າ, ໜຶ່ງໃນສາຍພົວພັນທີ່ສຳຄັນຢູ່ໃນລະດັບແຂວງ ແມ່ນອັດຕາການຈະເລີນພັນລວມ ແລະ ອັດຕາການຕາຍຂອງເດັກກຸ່ມ 5 ປີ ເຊິ່ງຊີ້ໃຫ້ເຫັນວ່າການຫຼຸດລົງຂອງອັດຕາຈະເລີນພັນພົວພັນກັບການຫຼຸດລົງຂອງການຕາຍ.[9]

ຢູ່ ສປປ ລາວ ອັດຕາການນຳໃຊ້ວິທີການຄຸມກຳເນີດ (CPR) ແລະ ອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິການ ແມ່ນບໍ່ພົວພັນຢ່າງໃກ້ຊິດກັບອັດຕາການຈະເລີນພັນໃນລະດັບແຂວງ. ອັດຕາການຈະເລີນພັນລວມແມ່ນມີສາຍພົວພັນໃກ້ຊິດກັບອັດຕາສ່ວນຂອງແມ່ຍິງຜູ້ທີ່ເຂົ້າຮຽນ ຫຼື ຈົບການສຶກສາລະດັບມັດທະຍົມຕອນປາຍ. ອັດຕາສ່ວນຂອງແມ່ຍິງທີ່ສຳເລັດການສຶກສາຂັ້ນມັດທະຍົມຕອນຕົ້ນ ຫຼື ການສຶກສາຊັ້ນສູງມີຜົນກະທົບພຽງເລັກນ້ອຍຕໍ່ກັບຄວາມແຕກຕ່າງດ້ານການຈະເລີນພັນ. ອັດຕາສ່ວນຂອງແມ່ຍິງທີ່ເຄີຍເຂົ້າຮຽນ ຫຼື ບໍ່ສຳເລັດການສຶກສາລະດັບມັດທະຍົມຕອນປາຍແມ່ນໜຶ່ງໃນຕົວແປສຳຄັນສຳລັບຄວາມແຕກຕ່າງຂອງອັດຕາການຈະເລີນພັນລະຫວ່າງແຂວງ. ນີ້ອາດແມ່ນປັດໄຈທີ່ຊ່ວຍໃນການສະລໍການແຕ່ງງານ ແລະ ເພີ່ມອາຍຸຂອງການເກີດລູກຜູ້ທຳອິດ.

**ຮູບສະແດງ 17: ອັດຕາການຈະເລີນພັນແບ່ງຕາມແຂວງ, ປີ 2015-2020**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2017)

ດັ່ງທີ່ໄດ້ເຫັນຈາກຂໍ້ມູນໃນຮູບສະແດງ 18, ບາງແຂວງແມ່ນມີຄວາມຄືບໜ້າຫຼາຍກວ່າແຂວງອື່ນໃນການຂ້າມຜ່ານທາງດ້ານປະຊາກອນ. ຄຸນລັກສະນະຫຼັກຂອງການຂ້າມຜ່ານແມ່ນທັງອັດຕາການຕາຍ ແລະ ການເກີດຈະມີທ່າອ່ຽງຫຼຸດລົງພ້ອມກັນ ຫຼື ມີຄວາມຫຼ້າຊ້າ. ສະຖານະພາບຂອງແຂວງໃນການຂ້າມຜ່ານແມ່ນສາມາດເຫັນໄດ້ຈາກການປະສົມປະສານລະຫວ່າງອັດຕາການເກີດ ແລະ ການຕາຍເຊິ່ງເຮັດໃຫ້ແຂວງດັ່ງກ່າວຢູ່ໃນສົ້ນເບື້ອງ

---

[9] ສາຍພົວພັນລະຫວ່າງອັດຕາການຈະເລີນພັນ ແລະ ອັດຕາການຕາຍຂອງເດັກກຸ່ມ 5 ປີໂດຍນຳໃຊ້ Pearson's r ແມ່ນ 0.6774, ເຊິ່ງແມ່ນສາຍພົວພັນທີ່ຂ້ອນຂ້າງເຂັ້ມແຂງແລະມີຄວາມໝາຍສຳຄັນທາງດ້ານສະຖິຕິໃນລະດັບ p=0.01.

ລຸ່ມຂ້າງຊ້າຍຂອງຮູບສະແດງຫຼືເບື້ອງເທິງຂ້າງຂວາ. ຄວາມຄືບໜ້າຂອງການຂ້າມຜ່ານແມ່ນຖືກນຳສະເໜີເປັນເສັ້ນຈຸດ. ແຂວງທີ່ຢູ່ທາງເທິງເບື້ອງຂວາແມ່ນແຂວງທີ່ຍັງຢູ່ໄກຈາກການບັນລຸການຂ້າມຜ່ານ, ໃນຂະນະແຂວງທີ່ຢູ່ເບື້ອງລຸ່ມຂ້າງຊ້າຍມືແມ່ນແຂວງທີ່ມີໄລຍະສັ້ນທີ່ຈະບັນລຸການຂ້າມຜ່ານ. ເປັນສິ່ງທີ່ເຫັນໄດ້ຢ່າງຊັດເຈນວ່າ ນະຄອນຫຼວງວຽງຈັນເປັນແຂວງທີ່ມີຄວາມຄືບໜ້າທີ່ສຸດ, ຮອງລົງມາແມ່ນແຂວງຈຳປາສັກ, ແຂວງ ສະຫວັນນະເຂດ ແລະ ແຂວງວຽງຈັນ. ແຂວງທີ່ມີຄວາມຄືບໜ້າຕ່ຳທີ່ສຸດໃນການຂ້າມຜ່ານລວມມີແຂວງອຸດົມໄຊ, ແຂວງຫລວງນ້ຳທາ, ແຂວງຜົ້ງສາລີ, ແຂວງຫົວພັນ ແລະ ແຂວງເຊກອງ (ແຂວງໄຊສົມບູນແມ່ນກໍລະນີພິເສດທີ່ມີອັດຕາການເກີດສູງຫຼາຍທຽບກັບອັດຕາການຕາຍ).

**ຮູບສະແດງ 18: ແຂວງທີ່ມີຄວາມຄືບໜ້າສູງສຸດ ແລະ ຕ່ຳສຸດຂອງການຂ້າມຜ່ານດ້ານປະຊາກອນ, ປີ 2015**




<u>ແຫຼ່ງຂໍ້ມູນ</u>:ຄິດໄລ່ຈາກສູນສະຖິຕິແຫ່ງຊາດ (2017)

### 3.4 ການແຈກຢາຍດ້ານອາຍຸຂອງປະຊາກອນ

ອີງປະກອບອາຍຸຂອງປະຊາກອນລາວແມ່ນໄດ້ມີການປ່ຽນແປງໃນຫຼາຍທົດສະວັດທີ່ຜ່ານມາ ໃນຂະນະທີ່ການຂ້າມຜ່ານດ້ານປະຊາກອນກໍາລັງດໍາເນີນຢູ່. ການຫຼຸດລົງຂອງການຈະເລີນພັນເລີ່ມຕັ້ງແຕ່ຊຸມປີ 1980 ໄດ້ຫຼຸດອັດຕາສ່ວນຂອງປະຊາກອນໃນກຸ່ມອາຍຸຕໍ່າກວ່າ 15 ປີເທື່ອລະໜ້ອຍ, ໃນຂະນະດຽວກັນການຫຼຸດລົງຂອງການຕາຍກໍ່ໄດ້ຮັບປະກັນວ່າປະຊາກອນຈໍານວນຫຼາຍ ສາມາດລອດເຫຼືອເຂົ້າໃນສູ່ກຸ່ມອາຍຸໄວອອກແຮງງານ. ທ່າອ່ຽງຕັ້ງແຕ່ປີ 1995 ແມ່ນເຫັນໄດ້ຈະແຈ້ງໃນຮູບສະແດງ 19, ເຊິ່ງເສັ້ນທ່າອ່ຽງສະແດງໃຫ້ເຫັນການເພີ່ມຂຶ້ນຂອງອັດຕາສ່ວນປະຊາກອນໃນໄວອາຍຸເຮັດວຽກ 15-64 ປີ ແລະ ການຫຼຸດລົງຂອງອັດຕາສ່ວນປະຊາກອນອາຍຸຕໍ່າກວ່າ 15 ປີ. ປະຊາກອນອາຍຸສູງ 65 ປີຂຶ້ນໄປຍັງສືບຕໍ່ຄົງທີ່ໃນໄລຍະ 20 ປີ ຜ່ານມາເນື່ອງຈາກການປັບປຸງ ຂອງການລອດເຫຼືອຍັງບໍ່ມີຜົນກະທົບຕໍ່ກັບກຸ່ມທີ່ມີອາຍຸສູງ. ເຊິ່ງຈຸດນີ້ແມ່ນສອດຄ່ອງກັບອາຍຸຍືນສະເລ່ຍຕັ້ງແຕ່ອາຍຸ 65 ປີ ທີ່ຍັງຢູ່ໃນລະດັບຕໍ່າ.

**ຮູບສະແດງ 19: ອັດຕາສ່ວນຂອງປະຊາກອນ ຢູ່ໃນໝວດອາຍຸ, ປີ 1995-2015**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2015) ແລະ ສູນສະຖິຕິແຫ່ງຊາດ (2017)

ການປ່ຽນແປງຂອງໂຄງປະກອບອາຍຸສິ່ງຜົນໃຫ້ "ອັດຕາສ່ວນການເອື່ອຍອີງ" (ຈຳນວນຜູ້ທີ່ຢູ່ໃນໄວອອກແຮງງານທຽບກັບປະຊາກອນຢູ່ໃນໄວອາຍຸບໍ່ເຮັດວຽກ) ຫຼຸດລົງຕັ້ງແຕ່ປີ 1995 (ຮູບສະແດງ 20) ແລະ ຄາດວ່າຈະສືບຕໍ່ຫຼຸດລົງໃນອະນາຄົດ.

**ຮູບສະແດງ 20: ທ່າອ່ຽງຂອງອັດຕາສ່ວນການເອື່ອຍອີງ, ປີ 1995-2015**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2015) ແລະ ສູນສະຖິຕິແຫ່ງຊາດ (2017)

ຮູບພາບທີ່ສົມບູນແບບກ່ຽວກັບການປ່ຽນແປງຂອງການແຈກຢາຍອາຍຸປະຊາກອນສາມາດເບິ່ງໄດ້ຈາກຮູບທາດປີລະມິດໂຄງປະກອບອາຍຸສໍາລັບປີ 1995 ແລະ 2015, ເຊິ່ງສະແດງໃຫ້ເຫັນຢູ່ຮູບສະແດງ 21 ແລະ 22, ຕາມລໍາດັບ. ຮູບທາດປີລະມິດໂຄງປະກອບອາຍຸປີ 1995 ສ່ອງແສງໃຫ້ເຫັນການຈະເລີນພັນທີ່ສູງໃນໄລຍະ 15 ປີຜ່ານມາ ເຊິ່ງອັດຕາການຈະເລີນພັນແມ່ນປະມານ 6 ຂອງເດັກເກີດຕໍ່ແມ່ຍິງໜຶ່ງຄົນ. ພາຍໃນປີ 2015 ຜົນກະທົບຂອງຫຼຸດລົງຂອງການຈະເລີນພັນ ແລະ ການຕາຍຕັ້ງແຕ່ຊຸມປີ 1990 ແມ່ນສະແດງອອກຢູ່ຖານຂອງຮູບທາດປີລະມິດທີ່ຈ້ອມເຂົ້າ ແລະ ການເພີ່ມຂຶ້ນຂອງກຸ່ມອາຍຸກາງ (ອາຍຸ 24 ປີຂຶ້ນໄປ). ຮູບທາດປີລະມິດປີ 2015 ຈະເລີ່ມມີລັກສະນະ ຮູບຖັງຫຼາຍຂຶ້ນ ເຊິ່ງເປັນປົກກະຕິສໍາລັບປະເທດທີ່ຂ້າມຜ່ານດ້ານປະຊາກອນ.

ທ່າອ່ຽງໂຄງປະກອບອາຍຸປະຊາກອນຢູ່ ສປປ ລາວ ແມ່ນເປັນປະໂຫຍດສໍາລັບການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະໃນການບັນລຸຜົນປະໂຫຍດຂອງການປ່ຽນແປງໂຄງປະກອບອາຍຸປະຊາກອນ” ເຊິ່ງມີຜົນມາຈາກການເພີ່ມຂຶ້ນຂອງອັດຕາສ່ວນຂອງປະຊາກອນໃນກຸ່ມໄວອາຍຸເຮັດວຽກ. ເສດຖະກິດໂດຍລວມຈະຖືກຜັກດັນໃຫ້ດີຂຶ້ນ ລວມທັງການຂະຫຍາຍຕົວຂອງ GDP, ລາຍຮັບຂອງລັດຖະບານສູງຂຶ້ນ ແລະ ການປັບ ປຸງມາດຖານການດໍາລົງຊີວິດການເປັນຢູ່. ທັ້ງນີ້ທັ້ງນັ້ນ, ສິ່ງທີ່ກ່າວມາຈະສາມາດເກີດຂຶ້ນໄດ້ ກໍ່ຕໍ່ເມື່ອປະຊາກອນໜຸ່ມໃນໄວເຮັດວຽກທີ່ເພີ່ມຂຶ້ນໄດ້ຮັບການສຶກສາ ແລະ ເຝິກອົບຮົມທີ່ເໝາະສົມ ແລະ ມີໂອກາດການມີວຽກເຮັດງານທໍາເພີ່ມຂຶ້ນ.

**ຮູບສະແດງ 21: ການແຈກຢາຍຂອງປະຊາກອນແບ່ງຕາມອາຍຸ ແລະ ເພດ,ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 1995***




ຮູບສະແດງ **22:** ການແຈກຢາຍຂອງປະຊາກອນແບ່ງຕາມອາຍຸ ແລະ ເພດ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ **2015***




*ດັດປັບໂດຍຄຳນຶງເຖິງການຈົດນັບປະຊາກອນທີ່ບໍ່ຄົບຖ້ວນ

## 3.5 ການແຈກຢາຍຂອງປະຊາກອນ

ການແຈກຢາຍທາງດ້ານພູມສັນຖານຂອງປະຊາກອນຢູ່ ສປປ ລາວ ແມ່ນຖືວ່າຂ້ອນຂ້າງຄົງທີ່ໃນໄລຍະຫຼາຍທົດສະວັດຜ່ານມາ, ແຕ່ບາງການປ່ຽນແປງຂອງປະຊາກອນແມ່ນເຫັນໄດ້ຈະແຈ້ງ. ໃນລະຫວ່າງປີ 2005 ຫາ 2015, ໄດ້ມີ 7 ແຂວງໄດ້ປະສົບກັບການຫຼຸດລົງຂອງອັດຕາສ່ວນຂອງປະຊາກອນທັງໝົດ, ໃນຂະນະດຽວກັນ 11 ແຂວງ (ລວມທັງນະຄອນຫຼວງວຽງຈັນ) ໄດ້ຮັບສັດສ່ວນຂອງປະຊາກອນເພີ່ມຂຶ້ນ (ເບິ່ງຮູບສະແດງ 23). ດັ່ງທີ່ຄາດໄວ້, ແຂວງທີ່ມີສັດສ່ວນຂອງປະຊາກອນເພີ່ມຂຶ້ນໂດຍລວມແລ້ວມີອັດຕາການເຕີບໂຕຂອງປະຊາກອນທີ່ສູງກວ່າແຂວງທີ່ສູນເສຍສັດສ່ວນປະຊາກອນ, ເຊິ່ງສະແດງໃຫ້ເຫັນບົດບາດຂອງການເຄື່ອນຍ້າຍພາຍໃນຕໍ່ກັບການປ່ຽນແປງຂອງການແຈກຢາຍປະຊາກອນລະຫວ່າງແຂວງ.

ຮູບສະແດງ 23: ການປ່ຽນແປງຂອງອັດຕາສ່ວນຂອງປະຊາກອນແບ່ງຕາມແຂວງ, ປີ 2005-2015




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ(2005) ແລະ ສູນສະຖິຕິແຫ່ງຊາດ (2017)

ອີງປະກອບໜຶ່ງຂອງການແຈກຢາຍຂອງປະຊາກອນແມ່ນ ອັດຕາສ່ວນຂອງປະຊາກອນທີ່ອາໄສຢູ່ໃນເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ໃນປີ 2005, 21.3% ຂອງປະຊາກອນແມ່ນອາໄສຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ແຕ່ມາຮອດປີ 2015 ອັດຕາສ່ວນດັ່ງກ່າວຫຼຸດລົງຫຼາຍກວ່າ 60% ເຊິ່ງຍັງເຫຼືອ 7.9%. ແຕ່ບໍ່ສາມາດຮູ້ໄດ້ວ່າການຫຼຸດລົງຂອງດັ່ງກ່າວ ແມ່ນເນື່ອງມາຈາກການສ້າງຖະໜົນຫຼາຍຂຶ້ນ ຫຼື ມາຈາກການເຄື່ອນຍ້າຍຂອງປະຊາກອນໄປບ່ອນທີ່ມີຫົນທາງເຂົ້າເຖິງ. ຄາດວ່າທັງສອງຂະບວນການແມ່ນເກີດຂຶ້ນຄຽງຄູ່ກັນ. ເຖິງຢ່າງໃດກໍ່ຕາມການປັບປຸງການເຂົ້າເຖິງເສັ້ນທາງ ຈະຊ່ວຍອຳນວຍຄວາມສະດວກໃຫ້ແກ່ການໃຫ້ບໍລິການທາງສັງຄົມພ້ອມທັງຜັກດັນການພັດທະນາຊົນນະບົດ.

## 3.6 ການເຄື່ອນຍ້າຍພາຍໃນ ແລະ ການກາຍເປັນຕົວເມືອງ

ການເຄື່ອນຍ້າຍພາຍໃນປະເທດ ແມ່ນວັດແທກໄດ້ພື້ນຖານຈາກການສຳຫຼວດພົນລະເມືອງທີ່ຈັດຕັ້ງປະຕິບັດທຸກໆ 10 ປີ ແລະ ສາມາດເກັບກຳໄດ້ໃນຫຼາຍວິທີການທີ່ແຕກຕ່າງກັນ. ຜູ້ທີ່ອາໄສຢູ່ສະຖານທີ່ທີ່ພວກເຂົາບໍ່ໄດ້ເກີດຢູ່ຫັ້ນແມ່ນເອີ້ນວ່າ "ຜູ້ເຄື່ອນຍ້າຍໃນຊ່ວງຊີວິດ" ສຳລັບສະຖານທີ່ທີ່ພວກເຂົາອາໄສຢູ່ເປັນປົກກະຕິ. ຜູ້ທີ່ອາໄສຢູ່ສະຖານທີ່ທີ່ພວກເຂົາອາໄສຢູ່ເປັນປົກກະຕິໃນເວລາຂອງການສຳຫຼວດພົນລະເມືອງ ແມ່ນແຕກຕ່າງກັນກັບສະຖານທີ່ທີ່ພວກເຂົາອາໄສຢູ່ 5 ປີກ່ອນ ຫຼື ໃນເວລາຂອງການສຳຫຼວດພົນລະເມືອງໃນເທື່ອກ່ອນເອີ້ນວ່າຜູ້ເຄື່ອນຍ້າຍໃນປະຈຸບັນ. ສຳລັບຜູ້ທີ່ເຄື່ອນຍ້າຍຈາກສະຖານທີ່ທີ່ອາໄສຢູ່ເປັນປະຈຳຫຼັງຈາກການສຳຫຼວດພົນລະເມືອງເທື່ອກ່ອນແຕ່ກັບມາຢູ່ບ່ອນເກົ່າ ໃນລະຫວ່າງການສຳຫຼວດພົນລະເມືອງປະຈຸບັນຈະບໍ່ຖືກນັບເປັນຜູ້ເຄື່ອນຍ້າຍອີງຕາມນິຍາມຂອງການສຳຫຼວດພົນລະເມືອງ. "ຜູ້ເຄື່ອນຍ້າຍທີ່ກັບຄືນມາ" ແມ່ນບຸກຄົນທີ່ສະຖານທີ່ຢູ່ອາໄສໃນເມື່ອກ່ອນ (5 ຫລື 10 ປີກ່ອນ) ບໍ່ແມ່ນສະຖານທີ່ເກີດຂອງພວກເຂົາແຕ່ສະຖານທີ່ອາໄສປົກກະຕິຢູ່ໃນປະຈຸບັນ ແມ່ນສະຖານທີ່ເກີດ ຫຼື ສະຖານທີ່ທີ່ເຄີຍອາໄສຢູ່ມາກ່ອນ.

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015 ລາຍງານວ່າ 82.2% ຂອງປະຊາກອນແມ່ນຖືກຈົດນັບຢູ່ເມືອງດຽວກັນກັບທີ່ພວກເຂົາເກີດ. ນີ້ໝາຍວ່າປະຊາກອນລາວບໍ່ແມ່ນປະຊາກອນທີ່ມີການເຄື່ອນຍ້າຍພາຍໃນປະເທດສູງ. ຢູ່ໃນບາງແຂວງສະເພາະອັດຕາສ່ວນຂອງປະຊາກອນທີ່ອາໄສຢູ່ໃນເມືອງດຽວກັນກັບທີ່ພວກ ເຂົາເກີດແມ່ນສູງກວ່າລະດັບສະເລ່ຍຂອງປະເທດລວມມີແຂວງສະຫວັນນະເຂດ (91.2%) ແລະ ແຂວງຫົວພັນ (90.6%) ຊີ້ໃຫ້ເຫັນລະດັບການເຄື່ອນຍ້າຍທີ່ຕ່ຳຢູ່ໃນແຂວງເຫຼົ່ານີ້. ນະຄອນຫຼວງວຽງຈັນມີອັດຕາສ່ວນຂອງປະຊາກອນທີ່ອາໄສຢູ່ເມືອງດຽວກັນກັບເມືອງເກີດໜ້ອຍທີ່ສຸດ (61%) ຊີ້ໃຫ້ເຫັນວ່າ 39% ຂອງປະຊາກອນຢູ່ນະຄອນຫຼວງວຽງຈັນແມ່ນເກີດຢູ່ບ່ອນອື່ນ. ນອກຈາກແຂວງໄຊສົມບູນ, ເຊິ່ງຫາກໍ່ຖືກສ້າງຂຶ້ນໃໝ່, ບໍ່ມີແຂວງໃດມີອັດຕາສ່ວນຂອງຜູ້ເຄື່ອນຍ້າຍ "ໃນຊ່ວງຊີວິດ" ທີ່ໃກ້ຄຽງກັບອັດຕາສ່ວນຂອງນະຄອນຫຼວງວຽງຈັນ. ອັດຕາສ່ວນຂອງປະຊາກອນຂອງນະຄອນຫຼວງວຽງຈັນທີ່ເກີດຢູ່ຕ່າງປະເທດ (1.3%) ແມ່ນສູງກວ່າລະດັບສະເລ່ຍຂອງປະເທດ (0.7%) ແຕ່ແຂວງບໍ່ແກ້ວມີອັດຕາສ່ວນທີ່ສູງກວ່າ (2.6%) ແລະ ເຊັ່ນດຽວກັນກັບແຂວງອັດຕະປື. ຢູ່ໃນລະດັບປະເທດ, ສປປ ລາວ ມີປະຊາກອນທີ່ລາຍງານວ່າເກີດຢູ່ປະເທດອື່ນພຽງແຕ່ 0.7% ຂອງປະຊາກອນທັງໝົດ (45,446 ຄົນ). ໜ້ອຍກວ່າ 1% ຂອງປະຊາກອນຂອງແຂວງຄຳມ່ວນ, ແຂວງວຽງຈັນ, ແຂວງຈຳປະສັກ, ແຂວງສາລະວັນ, ແຂວງອຸດົມໄຊ ແລະ ແຂວງຫຼວງພະບາງແມ່ນເກີດຢູ່ປະເທດອື່ນ. ຕົວເລກເຫຼົ່ານີ້ຊີ້ໃຫ້ເຫັນການເຄື່ອນຍ້າຍສາກົນໃນຊ່ວງຊີວິດທີ່ມີລະດັບຕ່ຳ.

ໃນກຸ່ມແມ່ຍິງ, ອັດຕາສ່ວນຮ້ອຍຂອງຜູ້ທີ່ອາໄສຢູ່ເມືອງດຽວກັນກັບເມືອງເກີດຂອງພວກເຂົາໂດຍລວມແລ້ວແມ່ນສູງກວ່າອັດຕາສ່ວນຂອງຜູ້ຊາຍ, ຊີ້ໃຫ້ເຫັນວ່າແມ່ຍິງມີການເຄື່ອນຍ້າຍທີ່ໜ້ອຍກວ່າຜູ້ຊາຍ. ຍົກເວັ້ນແຕ່ແຂວງຫົວພັນເຊິ່ງສຳລັບທັງສອງເພດແມ່ນເກືອບເທົ່າກັນ. ຜູ້ທີ່ເກີດຢູ່ຕ່າງປະເທດສ່ວນຫຼາຍແມ່ນຜູ້ຊາຍຫຼາຍກວ່າແມ່ຍິງ. ໃນຂະນະທີ່ຢູ່ຫຼາຍປະເທດໂດຍລວມແລ້ວຈະແມ່ນກຸ່ມຊາວໜຸ່ມໃນໄວອາຍຸອອກແຮງງານ (25-34 ປີ) ຈະມີການເຄື່ອນຍ້າຍຫຼາຍກວ່າ, ແຕ່ຢູ່ ສປປ ລາວ ກຸ່ມອາຍຸ 55-59 ປີ ແມ່ນມີການເຄື່ອນຍ້າຍອອກຈາກເມືອງເກີດຂອງຕົນຫຼາຍກວ່າ, ເຊິ່ງຈຸດນີ້ແມ່ນຄືກັນສຳລັບແມ່ຍິງ ແລະ ຜູ້ຊາຍ. ສຳລັບຜູ້ທີ່ເກີດຢູ່ຕ່າງປະເທດ, ແມ່ຍິງສ່ວນຫຼາຍແມ່ນຢູ່ໃນກຸ່ມອາຍຸ 30-34 ປີ ແລະ ຜູ້ຊາຍ 40-44 ປີ.

ເມື່ອວັດແທກການເຄື່ອນຍ້າຍໂດຍເບິ່ງຄວາມແຕກຕ່າງລະຫວ່າງສະຖານທີ່ຢູ່ອາໄສ ໃນເວລາການສຳຫຼວດ ແລະ ສະຖານທີ່ຢູ່ອາໄສ 10 ປີກ່ອນ, ຄວາມແຕກຕ່າງລະຫວ່າງແຂວງແມ່ນຄ້າຍຄືກັນກັບຕົວເລກຈາກສະຖານທີ່ເກີດ. ອັດຕາສ່ວນຂອງປະຊາກອນຢູ່ນະຄອນຫລວງວຽງຈັນທີ່ອາໄສຢູ່ເມືອງໃນປີ 2015 ທີ່ແຕກຕ່າງກັບເມືອງໃນປີ 2005 ແມ່ນສູງທີ່ສຸດ 14,4 ສ່ວນຮ້ອຍ (15,7 ສ່ວນຮ້ອຍສຳລັບຜູ້ຊາຍ) ແລະ ໂດຍລວມແມ່ນເຄິ່ງໜຶ່ງ ຫລື ໜ້ອຍກວ່າເຄິ່ງໜຶ່ງຂອງອັດຕາດັ່ງກ່າວຢູ່ແຂວງອື່ນໆ. ແຂວງວຽງຈັນເປັນແຂວງດຽວທີ່ມີອັດຕາສ່ວນໃກ້ຄຽງທີ່ສຸດກັບນະຄອນຫຼວງວຽງຈັນໂດຍມີ 10 ສ່ວນຮ້ອຍຂອງປະຊາກອນອາໄສຢູ່ເມືອງອື່ນໃນປີ 2005. ເຊັ່ນດຽວກັນ, ຜູ້ຊາຍແມ່ນມີການເຄື່ອນຍ້າຍຫລາຍກວ່າແມ່ຍິງຖ້າວັດແທກຈາກສະຖານທີ່ຢູ່ອາໄສຜ່ານມາ.

ຂໍ້ມູນກ່ຽວກັບການເຄື່ອນຍ້າຍລະຫວ່າງແຂວງໃນລະຫວ່າງປີ 2005 ແລະ 2015 (ຮູບສະແດງ 24) ຢັ້ງຢືນໃຫ້ພວກເຮົາວ່ານະຄອນຫຼວງວຽງຈັນແມ່ນປາຍທາງຫຼັກຂອງຜູ້ເຄື່ອນຍ້າຍພາຍໃນຢູ່ ສປປ ລາວ. ບໍ່ມີແຂວງໃດ

ທີ່ມີອັດຕາການເຄື່ອນຍ້າຍເຂົ້າທີ່ໃກ້ຄຽງກັບນະຄອນຫຼວງວຽງຈັນ. ກົງກັນຂ້າມ ການເຄື່ອນຍ້າຍອອກສຸດທິລະຫວ່າງແຂວງແມ່ນພົບຢູ່ໃນ 5 ແຂວງ: ແຂວງຫົວພັນ, ແຂວງຫຼວງພະບາງ, ແຂວງຊຽງຂວາງ, ແຂວງຜົ້ງສາລີແລະແຂວງຈຳປາສັກ.

**ຮູບສະແດງ 24: ການເຄື່ອນຍ້າຍສຸດທິລະຫວ່າງແຂວງ ປີ 2005-2015**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2017)

ໂດຍລວມແລ້ວ, ເປັນທີ່ຈະແຈ້ງວ່າການເຄື່ອນຍ້າຍພາຍໃນ ຢູ່ ສປປ ລາວ ໂດຍພື້ນຖານແມ່ນພົວພັນກັບການກາຍເປັນຕົວເມືອງ. ເຖິງແມ່ນວ່າບາງການເຄື່ອນຍ້າຍພາຍໃນຈະສະທ້ອນໃຫ້ເຫັນໂອກາດທາງດ້ານເສດຖະກິດທີ່ຫຼາຍຂຶ້ນຢູ່ບາງແຂວງຫຼາຍກວ່າຢູ່ແຂວງອື່ນ, ຂະໜາດຂອງການເຄື່ອນຍ້າຍແມ່ນຂ້ອນຂ້າງນ້ອຍທຽບກັບການເຄື່ອນຍ້າຍເຂົ້າສູ່ນະຄອນຫຼວງວຽງຈັນ. ການຄິດໄລ່ອີງໃສ່ສ່ວນຮ້ອຍຂອງປະຊາກອນປີ 2015 ທີ່ມີອາຍຸ 10 ປີຂຶ້ນໄປ, ນະຄອນຫຼວງວຽງຈັນ (+7,3%) ມີອັດຕາການເຄື່ອນຍ້າຍເຂົ້າສຸດທິທີ່ສູງທີ່ສຸດ (ຍົກເວັ້ນ ແຂວງໄຊ

ສົມບູນ). ແຕ່ວ່າຫຼາຍແຂວງ ກໍ່ມີອັດຕາການຍ້າຍອອກສຸດທິ, ລວມມີແຂວງຫົວພັນ (-9,6%), ແຂວງຊຽງຂວາງ (-8,0 %) ແລະ ແຂວງຜົ້ງສາລີ (-7,1 %).

ສປປ ລາວ ມີການຂະຫຍາຍຕົວຂອງຕົວເມືອງໃນຈັງຫວະທີ່ຂ້ອນຂ້າງຊ້າໃນຫຼາຍທົດສະວັດຜ່ານມາ ເຊິ່ງແຕ່ງຕ່າງກັບປະເທດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້. ໃຊ້ເວລາທັງໝົດ 4 ທົດສະວັດຈາກປີ 1950 ຫາປີ 1990 ສໍາລັບອັດຕາສ່ວນຂອງປະຊາກອນເຂດຕົວເມືອງຈຶ່ງເພີ່ມຂຶ້ນທົບເຄິ່ງ, ຈາກ 7.2% ມາເປັນ 15.4% (ຮູບສະແດງ 25) ແຕ່ການເພີ່ມທົບເຄິ່ງອີກຄັ້ງ ເພື່ອເພີ່ມຂຶ້ນມາເປັນ 33.1% ແມ່ນໃຊ້ເວລາພຽງແຕ່ 20 ປີ. ດັ່ງນັ້ນ ຈັງຫວະຂອງການກາຍເປັນຕົວເມືອງແມ່ນໄດ້ເພີ່ມຂຶ້ນຢ່າງໄວວາຫຼັງຈາກປີ 1990. ທົດສະວັດທີ່ການ ກາຍເປັນຕົວເມືອງຢູ່ຈຸດສູງສຸດ (ອັດຕາເຊິ່ງປະເທດໄດ້ກາຍມາເປັນຕົວເມືອງ ແລະ ກາຍເປັນຊົນນະບົດໜ້ອຍລົງ) ແມ່ນຈາກປີ 1995-2005. ແຕ່ປີ 2005 ເປັນຕົ້ນມາ, ຈັງຫວະຂອງການກາຍເປັນຕົວເມືອງແມ່ນຊ້າລົງ. ຊາວຊາວຊາວຊາວ ຊາວ

**ຮູບສະແດງ 25: ການແຈກຢາຍຂອງປະຊາກອນຢູ່ເຂດຊົນນະບົດ-ຕົວເມືອງ, ປີ 1950-2015, ສປປ ລາວ**




*ຂໍ້ມູນສໍາລັບປີນີ້ແມ່ນມາຈາກການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015 (ສູນສະຖິຕິແຫ່ງຊາດ (2017). ປີຜ່ານມາແມ່ນມາຈາກ UNDESA, ພະແນກປະຊາກອນ (ປີ 2015).

ການຄາດຄະເນຂອງອົງການສະຫະປະຊາຊາດ (UNDESA, 2014) ໄດ້ຄາດວ່າຕົວເມືອງຈະກວມ 50% ຢູ່ ສປປ ລາວ ພາຍໃນປີ 2030, ເຊິ່ງແມ່ນປະມານ 10 ປີຫລັງຈາກພາກພື້ນອາຊີຕາເວັນອອກສ່ຽງໃຕ້ໂດຍລວມ ແຕ່ວ່າຈັງຫວະທີ່ຊ້າລົງຂອງການກາຍເປັນຕົວເມືອງ ອາດເຮັດໃຫ້ຕົວເລກດັ່ງກ່າວສາມາດບັນລຸໃນປີ 2035 ແທນ. ໃນປີ 2015 ສປປ ລາວ ຍັງປະກອບມີປະຊາກອນຊົນນະບົດເປັນຫລັກ, 67.1% ອາໄສຢູ່ເຂດຊົນນະບົດ ແລະ 7.9% ຂອງປະຊາກອນແມ່ນຍັງອາໄສຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ.

ເຖິງແມ່ນວ່ານະຄອນຫຼວງວຽງຈັນຈະມີຄວາມເປັນຕົວເມືອງຫຼາຍກວ່າແຂວງອື່ນ (78%), ແຕ່ວ່າມີພຽງແຕ່ 30% ຂອງປະຊາກອນຢູ່ໃນເຂດຕົວເມືອງ. ແຂວງສະຫວັນນະເຂດມີ 10.1% ຂອງປະຊາກອນໃນເຂດຕົວເມືອງ. ດັ່ງທີ່ໄດ້ສະແດງໃນຮູບສະແດງ 26, ແຂວງສາລະວັນມີປະຊາກອນເຂດຕົວເມືອງໜ້ອຍທີ່ສຸດ (11.3%) ຮອງລົງມາແມ່ນແຂວງຫົວພັນ (14.3%).

ເຖິງແມ່ນວ່າໃນຄວາມເປັນຈິງເຂດຕົວເມືອງຈະກວມພຽງແຕ່ 78% ຢູ່ນະຄອນຫຼວງຈັນ, ແຕ່ເປັນທີ່ຮັບຮູ້ວ່ານະຄອນຫຼວງວຽງຈັນແມ່ນເມືອງຫຼັກ" ຂອງ ສປປ ລາວ. ປະຊາກອນໃນເຂດຕົວເມືອງຢູ່ນະຄອນຫຼວງວຽງຈັນ ແມ່ນສູງກວ່າປະຊາກອນຢູ່ເຂດຕົວເມືອງຂອງເມືອງໃຫຍ່ເປັນອັນດັບຖັດມາເຖິງ 7 ເທື່ອ (ເມືອງໄກສອນ/ພົມວິຫານ). ລະດັບຂອງຄວາມເປັນເມືອງຫຼັກທີ່ແຕກຕ່າງຫຼາຍມີຜົນກະທົບອັນສຳຄັນທີ່ຕ້ອງໄດ້ສຶກສາລົງເລິກ.

**ຮູບສະແດງ 26: ການແຈກຢາຍຂອງປະຊາກອນຢູ່ເຂດຊົນນະບົດ-ຕົວເມືອງແບ່ງຕາມແຂວງ, ປີ 2015**




ແຫຼ່ງຂໍ້ມູນ: ບົດລາຍງານການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015

## 3.7 ທ່າອ່ຽງປະຊາກອນໃນອະນາຄົດ: ການຄາດຄະເນຮອດປີ 2045

### 3.7.1 ການຄາດຄະເນໃນລະດັບປະເທດ

ສູນສະຖິຕິແຫ່ງຊາດໄດ້ດໍາເນີນການຄາດຄະເນປະຊາກອນ ໃນລະດັບປະເທດ ແລະ ສໍາລັບແຕ່ລະແຂວງອີງໃສ່ຂໍ້ມູນປະຊາກອນຈາກການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສປີ 2015 ທີ່ໄດ້ຮັບການດັດປັບເພື່ອແກ້ໄຂບັນຫາຂໍ້ຜິດພາດທາງອາຍຸ ແລະ ການຈົດນັບທີ່ບໍ່ຄົບຖ້ວນ. ສູນສະຖິຕິແຫ່ງຊາດໄດ້ສ້າງ 3 ກໍລະນີຂອງການຄາດຄະເນໂດຍນໍາໃຊ້ສົມມຸດຖານທີ່ແຕກຕ່າງກັນກ່ຽວກັບຄວາມໄວຂອງການຫຼຸດລົງຂອງການຈະເລີນພັນ. ໃນລະດັບຕໍ່າ", ອັດຕາການຈະເລີນພັນຈະຫຼຸດລົງຮອດລະດັບທົດແທນ" (2.1) ໃນປີ 2025 ແລະ ໃນລະດັບປານກາງ" ຈະຫຼຸດລົງຮອດລະດັບທົດແທນໃນປີ 2030. ໃນກໍລະນີລະດັບການຈະເລີນພັນສູງ", ການຈະເລີນພັນລະດັບທົດແທນຈະບັນລຸໄດ້ໃນປີ 2045. ສໍາລັບທັງ 3 ກໍລະນີຂອງການຄາດຄະເນວາງສົມມຸດຖານດຽວກັນກ່ຽວກັບການປັບປຸງດ້ານສະພາບການຕາຍເຊິ່ງອາຍຸຍືນສະເລ່ຍຈະເພີ່ມຂຶ້ນຮອດ 76 ປີສໍາລັບແມ່ຍິງ ແລະ 72 ປີສໍາລັບຜູ້ຊາຍພາຍໃນປີ 2045. ໃນທັງສາມກໍລະນີຂອງການຄາດຄະເນ, ການເຄື່ອນຍ້າຍສາກົນກໍ່ຍັງຖືກວາງໄວ້ໃຫ້ເປັນສູນ. ຜົນໄດ້ຮັບທາງດ້ານປະຊາກອນ ສະແດງຢູ່ຮູບສະແດງ 27.

**ຮູບສະແດງ 27: ການຄາດຄະເນປະຊາກອນ, ປີ 2015-2045, ພາຍໃຕ້ 3 ສົມມຸດຖານ ກ່ຽວກັບການຈະເລີນພັນ**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2017)

ຜົນຂອງການຄາດຄະເນແມ່ນຖືກນໍາສະເໜີໃນຮູບສະແດງ 23. ຕາມກໍລະນີເຫຼົ່ານີ້ປະຊາກອນຂອງ ສປປ ລາວ ຈະຕົກຢູ່ລະຫວ່າງ 9 ລ້ານຄົນ ແລະ ຕໍ່າກວ່າ 10 ລ້ານຄົນ ໃນປີ 2045. ລະຫວ່າງປີ 2015 ຫາ 2045, ປະຊາກອນຈະເພີ່ມຂຶ້ນຕື່ມ 2.3 ລ້ານຄົນ ໃນກໍລະນີຕໍ່າ", 2.7 ລ້ານຄົນໃນກໍລະນີປານກາງ" ແລະ 3.2 ລ້ານຄົນ ໃນກໍລະນີສູງ". ສໍາລັບການເຕີບໂຕຕໍ່ປີ, ການເພີ່ມຂຶ້ນແມ່ນຕ້ອງໄດ້ສະເລ່ຍສໍາລັບ 30 ປີເຊິ່ງ 77,000 ຄົນຕໍ່ປີໃນ ກໍລະນີຕໍ່າ", 92,000 ຄົນ ໃນກໍລະນີປານກາງ" ແລະ 108,000 ຄົນ ໃນກໍລະນີສູງ". ຮູບສະແດງ 28 ສະແດງ ໃຫ້ເຫັນການເພີ່ມຂຶ້ນຕໍ່ປີໂດຍສະເລ່ຍໃນຊ່ວງເວລາ 5 ປີສໍາລັບ 3 ກໍລະນີຂອງການຄາດຄະເນ. ໃນກໍລະນີສູງ", ການເພີ່ມຂຶ້ນຕໍ່ປີຂອງປະຊາກອນຈະຫຼຸດລົງຢ່າງຊ້າໆຈາກ 117,000 ໃນຊ່ວງປີ 2015-2020 ຫາ 94,000 ໃນ ຊ່ວງປີ 2040-2045. ໃນກໍລະນີຕໍ່າ", ການເພີ່ມຂຶ້ນຕໍ່ປີຂອງປະຊາກອນຈະຫຼຸດລົງຈາກ 109,000 ໃນຊ່ວງປີ 2015-2020 ຫາ 52,000 ໃນຊ່ວງປີ 2040-2045. ບໍ່ມີກໍລະນີຂອງການຄາດຄະເນໃດທີ່ຄາດການກ່ຽວກັບ ການຄົງຕົວຂອງການເຕີບໂຕຂອງປະຊາກອນຕໍ່າຈົນຮອດປີ 2045.

**ຮູບສະແດງ 28: ການເພີ່ມຂຶ້ນຂອງປະຊາກອນຕໍ່ປີພາຍໃຕ້ 3 ກໍລະນີຂອງການຄາດຄະເນ, ປີ 2015-2045**




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (2017)

ນອກຈາກການເພີ່ມຂຶ້ນຂອງປະຊາກອນແລ້ວ, ການປ່ຽນຂອງໂຄງປະກອບອາຍຸ ກໍ່ຄາດວ່າຈະເກີດຂຶ້ນເຊັ່ນກັນໃນອະນາຄົດ. ທ່າອ່ຽງຂອງການປ່ຽນແປງນີ້ແມ່ນຄືກັນໃນທັງ 3 ກໍລະນີຂອງການຄາດຄະເນ; ຄວາມແຕກຕ່າງແມ່ນຈັງຫວະຂອງການປ່ຽນແປງ. ປະຊາກອນອາຍຸ 0-14 ປີຈະຫຼຸດລົງຢ່າງຫຼວງຫຼາຍໃນແຕ່ລະກໍລະນີຂອງການຄາດຄະເນ, ແຕ່ຈະໄວກວ່າໃນກໍລະນີຕ່ຳ" (ຮູບສະແດງ 29). ອັດຕາສ່ວນຂອງປະຊາກອນອາຍຸ 15-64 ປີຈະເພີ່ມຂຶ້ນໃນທຸກກໍລະນີແຕ່ຈະໄວກວ່າ ແລະ ຫຼາກຫຼາຍກວ່າສຳລັບກໍລະນີຕ່ຳ". ອັດຕາສ່ວນຂອງປະຊາກອນອາຍຸ 65 ປີຂຶ້ນໄປຈະເພີ່ມຂຶ້ນໃນທັງ 3 ກໍລະນີເຊັ່ນກັນແຕ່ຈະຫຼາຍກວ່າສຳລັບກໍລະນີ "ຕ່ຳ" ທຽບກັບກໍລະນີອື່ນໆ. ມີຄວາມສຳຄັນທີ່ຕ້ອງເອົາໃຈໃສ່ວ່າປະຊາກອນອາຍຸ 65 ປີຂຶ້ນໄປຈະເລີ່ມເພີ່ມຂຶ້ນຢ່າງໄວວາທຽບກັບອັດຕາສ່ວນຂອງປະຊາກອນທັງໝົດຈາກປີ 2020 ເຊິ່ງຈະເກີດຂຶ້ນ ໃນທັງ 3 ກໍລະນີ.

**ຮູບສະແດງ 29: ປະຊາກອນອາຍຸ 0-14ປີ, ອັດຕາສ່ວນຂອງປະຊາກອນທັງໝົດ, ປີ 2015-2045**




แຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (2017)

**ຮູບສະແດງ 30: ປະຊາກອນອາຍຸ 15-64 ປີ, ອັດຕາສ່ວນຂອງປະຊາກອນທັງໝົດ, ປີ 2015-2045**




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (2017)

**ຮູບສະແດງ 31: ປະຊາກອນອາຍຸ 65 ປີຂຶ້ນໄປ, ສ່ວນຮ້ອຍຂອງປະຊາກອນທັງໝົດ, ປີ 2015-2045**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2017)

ການປ່ຽນແປງໂຄງປະກອບອາຍຸນີ້ສາມາດສັງລວມໂດຍນຳໃຊ້ "ອັດຕາສ່ວນການເອື່ອຍອີງ", ດັ່ງທີ່ໄດ້ນຳສະເໜີໃນຮູບສະແດງ 32. ຍ້ອນວ່າອັດຕາສ່ວນຂອງປະຊາກອນອາຍຸ 0-14 ປີຈະຫຼຸດລົງ ໃນທັງ 3 ກໍລະນີ, ອັດຕາສ່ວນການເອື່ອຍອີງກໍ່ຈະສືບຕໍ່ຫຼຸດລົງເທື່ອລະໜ້ອຍ ແລະ ເລີ່ມຈະຢຸດເນື່ອງຈາກການເພີ່ມຂຶ້ນຂອງປະຊາກອນອາຍຸ 65 ປີຂຶ້ນໄປ. ໃນກໍລະນີຕ່ຳ" ແລະ "ປານກາງ" ອັດຕາສ່ວນການເອື່ອຍອີງຈະຢຸດບໍ່ຫຼຸດລົງພາຍໃນປີ 2040, ແຕ່ສຳລັບກໍລະນີສູງ" ອັດຕາສ່ວນການເອື່ອຍອີງຈະສືບຕໍ່ຫລຸດລົງຈົນຮອດ ປີ 2045,

**ຮູບສະແດງ 32: ອັດຕາສ່ວນການເອື່ອຍອີງ, ປີ 2015-2045, ສຳລັບ 3 ກໍລະນີຂອງການຄາດຄະເນ**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2017)

ທັງ 3 ກໍລະນີຂອງການຄາດຄະເນສະໜອງໂອກາດໃຫ້ແກ່ ສປປ ລາວ ໃນການບັນລຸຜົນປະໂຫຍດດ້ານປະຊາກອນ" ຈາກການປ່ຽນແປງຂອງໂຄງປະກອບອາຍຸໃນ 3 ທົດສະວັດຂ້າງໜ້າ. ແຕ່ວ່າຜົນປະໂຫຍດທີ່ເກີດຂຶ້ນນີ້ (ບາງຄັ້ງກໍນໍາໃຊ້ຄໍາສັບ "ການປັນຜົນດ້ານປະຊາກອນ) ແມ່ນຖືວ່າຫຼາຍກວ່າໃນກໍລະນີຂອງການຄາດຄະເນຕໍ່າ" ແລະ ຜົນປະໂຫຍດເຫຼົ່ານີ້ຈະມາຮອດໄວກວ່າທຽບກັບກໍລະນີອື່ນໆ. "ປ່ອງຢ້ຽມໂອກາດ" ທີ່ສ້າງມາຈາກຜົນປະໂຫຍດດ້ານປະຊາກອນຈະສືບຕໍ່ເປີດອອກອີກສໍາລັບ 25 ປີຕໍ່ໜ້າ (ຈົນຮອດປີ 2040) ແລະ ຫຼັງຈາກນັ້ນກໍ່ຈະປິດລົງອີກຄັ້ງ. ດັ່ງນັ້ນ, ນະໂຍບາຍແມ່ນຕ້ອງເນັ້ນໃສ່ການລົງທຶນໃສ່ການສຶກສາ ແລະ ການເຝິກອົບຮົມທີ່ຈໍາເປັນໃນການຜັກດັນຢ່າງໃຫຍ່ຫຼວງ" ເພື່ອຮັບປະກັນວ່າກໍາລັງແຮງງານທີ່ເຕີບໂຕຈະມີຄວາມພ້ອມໃນການຮັບເອົາໂອກາດການມີວຽກເຮັດງານທໍາຈາກເສດຖະກິດທີ່ກໍາລັງຂະຫຍາຍຕົວ.

### 3.7.2 ການຄາດຄະເນລະດັບແຂວງ

ກໍລະນີປານກາງ" ຂອງການຄາດຄະເນລະດັບແຂວງຊີ້ໃຫ້ເຫັນຊ່ອງຫວ່າງທີ່ຫຼາຍຂຶ້ນລະຫວ່າງແຂວງທີ່ສາມາດຄາດໄດ້ວ່າຈະມີການເຕີບໂຕຢ່າງໄວວາ ແລະ ແຂວງທີ່ມີການເຕີບໂຕຊ້າ ແລະ ມີການປ່ຽນແປງພຽງເລັກນ້ອຍກ່ຽວກັບທີ່ຕັ້ງ ຫລື ການຫຼຸດລົງທີ່ເປັນໄປໄດ້. ຮູບສະແດງ 33 ສະແດງໃຫ້ເຫັນວ່າ ປະຊາກອນຢູ່ນະຄອນຫຼວງວຽງຈັນ ແລະ ແຂວງສະຫວັນນະເຂດຈະເພີ່ມຂຶ້ນໄວກວ່າແຂວງອື່ນ, ແຕ່ລະແຂວງເພີ່ມຂຶ້ນຮອດປະມານ 1.4 ລ້ານຄົນພາຍໃນປີ 2045. ປະຊາກອນຂອງແຂວງຈໍາປາສັກຈະເພີ່ມຮອດ 950,000 ຄົນໃນຂະນະທີ່ກຸ່ມ 6 ແຂວງຈະມີປະຊາກອນລະຫວ່າງ 400,000 ຫາ 650,000 ຄົນ ພາຍໃນປີ 2040. ສໍາຄັນທີ່ຕ້ອງໄດ້ສັງເກດວ່າອີງຕາມການຄາດຄະເນການແຈກຢາຍປະຊາກອນແບ່ງຕາມແຂວງຈະບໍ່ປ່ຽນແປງຫຼາຍ. ນີ້ແມ່ນຍ້ອນວ່າການຄາດຄະເນຄາດວ່າທ່າອ່ຽງລະຫວ່າງປີ 2005 ຫາປີ 2015 ຈະສືບຕໍ່ຈົນຮອດປີ 2045. ແຂວງທີ່ໄດ້ຮັບສັດສ່ວນຂອງປະຊາກອນຈະສືບຕໍ່ໄດ້ຮັບປະຊາກອນເຂົ້າມາໃນແຂວງ (ສະຫວັນນະເຂດ, ນະຄອນຫຼວງວຽງຈັນ ແລະ ຈໍາ ປາສັກ) ແລະ ແຂວງທີ່ສູນເສຍສັດສ່ວນປະຊາກອນ (ເຊັ່ນແຂວງຫົວພັນ, ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ ແລະ ອື່ນໆ) ຈະສືບຕໍ່ສູນເສຍສັດສ່ວນປະຊາກອນ. ໃນຂະນະທີ່ນະຄອນຫຼວງວຽງຈັນຈະມີການເພີ່ມຂຶ້ນຂອງປະຊາກອນຫຼາຍທີ່ສຸດໃນລະຫວ່າງປີ 2015 ຫາ 2045 (569,000ຄົນ), ສັດສ່ວນຂອງປະຊາກອນທັງໝົດແມ່ນ

ຄາດຄະເນວ່າຈະເພີ່ມຂຶ້ນຈາກ 13% ຫາ 15%. ດັ່ງນັ້ນ, ການຄາດຄະເນຄາດວ່າການກາຍເປັນຕົວເມືອງຈະດຳເນີນໃນຈັງຫວະທີ່ຂ້ອນຂ້າງຊ້າ ຫຼື ການເຕີບໂຕຂອງຕົວເມືອງຈະເກີດຂຶ້ນໃນທົ່ວທຸກແຂວງຕາມອັດຕາສ່ວນຂອງສັດສ່ວນຕົວເມືອງໃນປະຈຸບັນຂອງແຂວງດັ່ງກ່າວ. ສຳຄັນທີ່ຕ້ອງໄດ້ສັງເກດເຊັ່ນດຽວກັນກັບການຄາດຄະເນລະດັບປະເທດ, ການຄາດຄະເນລະດັບແຂວງອາງສົມມຸດຖານການເຄື່ອນຍ້າຍສຸດທິແມ່ນສູນ.

**ຮູບສະແດງ 33: ການຄາດຄະເນລະດັບແຂວງ, ປີ 2015-2045 (ກໍລະນີ "ປານກາງ")**




<u>ແຫຼ່ງຂໍ້ມູນ</u>: ສູນສະຖິຕິແຫ່ງຊາດ (2017)

## 3.8 ສັງລວມ: ຜົນກະທົບຂອງສະພາບປະຊາກອນ ຕໍ່ກັບການພັດທະນາ

### 3.8.1 ການຂ້າມຜ່ານດ້ານປະຊາກອນ

ການຂ້າມຜ່ານດ້ານປະຊາກອນຂອງ ສປປ ລາວ ຈະສືບຕໍ່ມີຄວາມຄືບໜ້າແຕ່ຍັງຕ້ອງໃຊ້ເວລາ. ມີຫຼາຍແຂວງທີ່ຍັງຫຼ້າຊ້າເນື່ອງຈາກອັດຕາການຕາຍທີ່ຂ້ອນຂ້າງສູງ, ເຊິ່ງສິ່ງຜົນເຮັດໃຫ້ການຈະເລີນພັນຫຼຸດລົງຢ່າງຊ້າໆ.[10] ໃນລະດັບປະເທດການຈະເລີນພັນລະດັບທົດແທນ" ຈະສາມາດບັນລຸໄດ້ໃນ 10-20 ປີຕໍ່ໜ້າ, ແຕ່ຈະໄວກວ່ານັ້ນສຳລັບເຂດຕົວເມືອງ. ແຕ່ວ່າອີງໃສ່ການຄາດຄະເນ, ບາງແຂວງທີ່ມີການພັດທະນາຕ່ຳຈະບໍ່ສາມາດບັນລຸການຈະເລີນພັນໃນລະດັບທົດແທນໄດ້ໃນໄລຍະ 3 ທົດສະວັດຕໍ່ໜ້າ. ຄວາມທ້າທາຍດ້ານນະໂຍບາຍກ່ຽວພັນກັບການຂ້າມຜ່ານດ້ານປະຊາກອນແມ່ນແນ່ໃສ່ແຂວງທີ່ມີຄວາມລ່າຊ້າທຽບກັບແຂວງອື່ນ. ແຂວງເຫຼົ່ານີ້ແມ່ນມີອັດຕາການຕາຍຂອງເດັກລຸ່ມ 5 ປີທີ່ສູງ, ສິ່ງຜົນໃຫ້ການຕາຍໂດຍລວມສູງ ແລະ ມີການຈະເລີນພັນສູງກວ່າອັດຕາສະເລ່ຍ. ດັ່ງນັ້ນ, ນະໂຍບາຍຈຶ່ງມີຄວາມຈຳເປັນເພື່ອແກ້ໄຂການຫຼຸດລົງຂອງການເກີດ ແລະ ການຕາຍ ພ້ອມ

[10] ການຈະເລີນພັນທີ່ສູງອາດຈະສົ່ງຜົນໃຫ້ການຕາຍສູງຂຶ້ນໃນບາງສະຖານະການ.

ກັນໂດຍຜ່ານມາດຕະການດ້ານສຸຂະພາບຈະເລີນພັນ ແລະ ສຸຂະພາບແມ່ ແລະ ເດັກທີ່ເນັ້ນໃສ່ແຂວງ ແລະ ເມືອງທີ່ມີຄວາມຄືບໜ້າໜ້ອຍທີ່ສຸດ.

### 3.8.2 ການເຕີບໂຕຂອງການປະຊາກອນ

ການເຕີບໂຕຂອງການປະຊາກອນໃນລະດັບປະເທດແມ່ນມີທ່າອ່ຽງຈະຫຼຸດລົງ ຈາກ 1.5% ຕໍ່ປີໃນປະຈຸບັນເປັນ 1.1% ໃນໄລຍະ 20 ປີ. ການເພີ່ມຂຶ້ນຂອງການເຄື່ອນຍ້າຍສຸດທິຈະເຮັດໃຫ້ອັດຕາການເຕີບໂຕດັ່ງກ່າວຫຼຸດລົງຕື່ມ. ດັ່ງນັ້ນອັດຕາການເຕີບໂຕຂອງປະຊາກອນໃນລະດັບປະເທດຈຶ່ງບໍ່ແມ່ນບັນຫາປະຊາກອນທີ່ສຳຄັນໃນປະຈຸບັນ. ເນື່ອງຈາກວ່າການເຕີບໂຕຂອງປະຊາກອນຈະເກີດຂຶ້ນໃນ 2 ທົດສະວັດຕໍ່ໜ້າ ເຊິ່ງການ ເພີ່ມຂຶ້ນຕໍ່ປີໂດຍສະເລ່ຍຈະແມ່ນ 120,000 ຄົນຈົນຮອດປີ 2030. ການເຕີບໂຕນີ້ຈະຕ້ອງໄດ້ຖືກຮອງຮັບໂດຍເສດຖະກິດ ແລະ ສັງຄົມ ໂດຍຜ່ານການສະໜອງໂຄງລ່າງລວມທັງທີ່ຢູ່ອາໄສ ແລະ ວຽກເຮັດງານທຳ. ອາດເປັນໄປໄດ້ວ່າການເຕີບໂຕນີ້ສ່ວນຫຼາຍແມ່ນຈະເກີດຂຶ້ນຢູ່ເຂດຕົວເມືອງ ແລະ ເຂດຊົນນະບົດຈຳນວນໜຶ່ງຈະປະສົບກັບການເຕີບໂຕຂອງປະຊາກອນທີ່ຊ້າລົງ ຫຼື ການເຕີບໂຕທາງດ້ານລົບ. ອີງໃສ່ການຄາດຄະເນລະດັບ "ປານກາງ", ທຸກແຂວງຍັງຈະສືບຕໍ່ມີການເຕີບໂຕຂອງປະຊາກອນໃນອະນາຄົດໃກ້ນີ້ ແຕ່ບາງແຂວງຈະຂະຫຍາຍຕົວຫຼາຍກວ່າແຂວງອື່ນ. ການເຕີບໂຕນີ້ສຳລັບບາງແຂວງແມ່ນມີຜົນມາຈາກການເພີ່ມຂຶ້ນຂອງປະຊາກອນໃນເມື່ອກ່ອນ"; ໝາຍວ່າຈຳນວນການເກີດສືບຕໍ່ຄົງທີ່ຫຼືອາດເພີ່ມຂຶ້ນ ເຖິງແມ່ນວ່າການເກີດໂດຍສະເລ່ຍຕໍ່ແມ່ຍິງຜູ້ໜຶ່ງຈະຫຼຸດລົງກໍ່ຕາມ. ນີ້ເກີດຂຶ້ນຍ້ອນວ່າມີແມ່ຍິງໃນກຸ່ມອາຍຸຈະເລີນພັນຫຼາຍໃນປະຊາກອນທັງໝົດ. ການຄາດຄະເນລະດັບປານກາງ" ຊີ້ໃຫ້ເຫັນການເພີ່ມຂຶ້ນຂອງຈຳນວນແມ່ຍິງອາຍຸ 15-49 ປີ ຕັ້ງແຕ່ນີ້ຮອດປີ 2050 ແລະ ຫຼັງຈາກນັ້ນຢູ່ໃນທຸກແຂວງ. ໃນລະດັບປະເທດຈຳນວນແມ່ຍິງໃນໄວຈະເລີນພັນຈະເພີ່ມຂຶ້ນຕື່ມ 760,000 ຄົນລະຫວ່າງປີ 2015 ຫາ 2050, ແມ້ແຕ່ຢູ່ໃນກໍລະນີຕໍ່າ" ກໍ່ເຊັ່ນດຽວກັນ. ການເພີ່ມຂຶ້ນທີ່ຄາດໄວ້ນີ້ຈະເພີ່ມຄວາມຕ້ອງການຕໍ່ກັບການສະໜອງການບໍລິການສຸຂະພາບຈະເລີນພັນ.

### 3.8.3 ສຸຂະພາບຈະເລີນພັນ

ຢູ່ໃນແຂວງ ແລະ ເມືອງທີ່ການຈະເລີນພັນໂດຍລວມສູງກວ່າລະດັບສະເລ່ຍ, ອັດຕາການເກີດໃນຊາວໜຸ່ມທີ່ສູງແມ່ນປັດໄຈທີ່ສຳຄັນ. ໃນລະດັບປະເທດ, ສປປ ລາວ ມີອັດຕາການເກີດໃນຊາວໜຸ່ມສູງທີ່ສຸດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ (ASEAN ) ພ້ອມທັງມີອັດຕາສ່ວນຂອງການເກີດໃນແມ່ອາຍຸ 15-19 ປີ ທີ່ສູງ. ແຕ່ວ່າອັດຕາດັ່ງກ່າວແມ່ນຂ້ອນຂ້າງສູງກວ່າຫຼາຍໃນແຂວງ ແລະ ເມືອງທີ່ມີການພັດທະນາໜ້ອຍ. ການຫຼຸດການເກີດໃນຊາວໜຸ່ມ ທຽບໃສ່ກັບອັດຕາສ່ວນຂອງການເກີດທັງໝົດຮຽກຮ້ອງໃຫ້ມີນະໂຍບາຍເພື່ອໃຫ້ເດັກຍິງສືບຕໍ່ໄດ້ເຂົ້າໂຮງຮຽນ, ຫຼຸດຜ່ອນການແຕ່ງງານແຕ່ອາຍຸຍັງນ້ອຍ ແລະ ສະໜອງການບໍລິການສຸຂະພາບຈະເລີນພັນທີ່ເໝາະສົມສຳລັບຊາວໜຸ່ມ.

ເຖິງແມ່ນວ່າສາຍຜົວພັນລະຫວ່າງ ອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິການ ແລະ ການຈະເລີນພັນຈະບໍ່ມີຄວາມສຳຄັນປານໃດໃນທາງສະຖິຕິ, ແຕ່ມີຄວາມສຳຄັນທີ່ຕ້ອງໄດ້ຫຼຸດຜ່ອນ ອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິການ ເພື່ອຊ່ວຍແມ່ຍິງ ແລະ ຄູ່ຜົວເມຍ ບັນລຸເປົ້າໝາຍຂະໜາດຂອງຄອບຄົວທີ່ຕ້ອງການ. ອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິ ການທີ່ສູງທີ່ສຸດ ແມ່ນຢູ່ໃນກຸ່ມແມ່ຍິງອາຍຸ 15-19 ປີ ແລະ 40-44 ປີ. ນີ້ໝາຍຄວາມວ່າຜູ້ທີ່ເລີ່ມການມີລູກ ແລະ ຜູ້ທີ່

ຊອກຫາວິທີທາງເພື່ອຢຸດການມີລູກ ມີອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິການສູງທີ່ສຸດ. ນະໂຍບາຍສຸຂະພາບຈະເລີນພັນຕ້ອງໄດ້ແກ້ໄຂຄວາມຕ້ອງການທີ່ແຕກຕ່າງຂອງສອງກຸ່ມນີ້.

### 3.8.4 ໂຄງປະກອບອາຍຸຂອງປະຊາກອນ

ໃນຂະນະທີ່ ສປປ ລາວ ສືບຕໍ່ການຂ້າມຜ່ານທາງປະຊາກອນ, ໂຄງປະກອບອາຍຸໄດ້ມີການປ່ຽນແປງໄປໃນທິດທາງທີ່ເປັນປະໂຫຍດສຳລັບປະເທດ. ສອງທົດສະວັດຕໍ່ໜ້າຈະສະໜອງ “ປ່ອງຢ້ຽມຂອງໂອກາດ” ສຳລັບ ການພັດທະນາເພື່ອບັນລຸຜົນປະໂຫຍດທາງດ້ານປະຊາກອນ” ທີ່ເກີດຈາກການຫຼຸດລົງຂອງອັດຕາສ່ວນການເອື່ອຍອີງເນື່ອງຈາກກຳລັງແຮງງານເຕີບໂຕຫຼາຍກວ່າປະຊາກອນເອື່ອຍອີງທີ່ເປັນເດັກນ້ອຍ ແລະ ຜູ້ອາຍຸສູງ. ແຕ່ວ່າເພື່ອບັນລຸຜົນປະໂຫຍດທາງດ້ານປະຊາກອນດັ່ງກ່າວຮຽກຮ້ອງໃຫ້ກຳລັງແຮງງານໃໝ່ ທີ່ມີການສຶກສາ ແລະ ໄດ້ຮັບການເຝິກອົບຮົມ ເພື່ອສາມາດປະກອບອາຊີບຢ່າງມີປະສິດຕິພາບເພີ່ມຂຶ້ນ. ຄວາມທ້າທາຍທີ່ກ່ຽວຂ້ອງແມ່ນເພື່ອຮັບປະກັນວ່າ ອັດຕາການສ້າງວຽກເຮັດງານທຳສອດຄ່ອງກັບການເພີ່ມຂອງຈຳນວນແຮງງານຊາວໜຸ່ມ. ໃນກໍລະນີທີ່ບໍ່ມີວຽກເຮັດງານທຳທີ່ພຽງພໍ, ອັດຕາເຄື່ອນຍ້າຍອອກປະເທດຈະເພີ່ມຂຶ້ນ ຫຼື ຈະມີການເພີ່ມຂຶ້ນຂອງຈຳນວນປະຊາກອນຫວ່າງງານທີ່ມີການສຶກສາ.

### 3.8.5 ການແຈກຢາຍປະຊາກອນ ແລະ ການກາຍເປັນຕົວເມືອງ

ທ່າອ່ຽງໃນໄລຍະຜ່ານມາໄດ້ສະແດງໃຫ້ເຫັນວ່າມີພຽງແຕ່ 3 ແຂວງເທົ່ານັ້ນທີ່ຈະເພີ່ມສັດສ່ວນຂອງປະຊາກອນທັງໝົດໃນ 2 ທົດສະວັດຕໍ່ໜ້າ, ລວມທັງ ນະຄອນຫຼວງວຽງຈັນ. ສ່ວນແຂວງອື່ນໆຈະສືບຕໍ່ຮັກສາສັດສ່ວນໃນປະຈຸບັນຫຼືສູນເສຍສັດສ່ວນປະຊາກອນ. ນະຄອນຫຼວງວຽງຈັນຈະມີການເພີ່ມຂຶ້ນຂອງປະຊາກອນຫຼາຍທີ່ສຸດ ແຕ່ວ່າສັດສ່ວນຕໍ່ກັບປະຊາກອນທັງໝົດຈະບໍ່ມີການປ່ຽນແປງຫຼາຍອີງໃສ່ການຄາດຄະເນ. ນະຄອນຫຼວງວຽງຈັນຍັງຈະສືບຕໍ່ເປັນສູນກາງຂອງເຂດຕົວເມືອງຫຼັກໃນອະນາຄົດຕໍ່ໜ້າ. ມີຄວາມສຳຄັນທີ່ຕ້ອງໄດ້ດຳເນີນການປະເມີນຜົນຕື່ມກ່ຽວກັບທ່າອ່ຽງຂອງການກາຍເປັນຕົວເມືອງໃນສອງສາມປີໃນຕໍ່ໜ້າ. ບັນຫາສຳລັບນັກວາງແຜນແມ່ນການກາຍເປັນຕົວເມືອງນີ້ຈະເກີດຂຶ້ນໃນຈັງຫວະຄືກັນບໍ່ສຳລັບທຸກແຂວງ, ດັ່ງນັ້ນການຮັກສາລະດັບການກາຍເປັນຕົວເມືອງຂອງແຕ່ລະແຂວງຄວນຕ້ອງໄດ້ສົ່ງເສີມ ແລະ/ຫຼືເອື້ອອຳນວຍການຂະຫຍາຍຕົວຂອງຕົວເມືອງຢູ່ບາງແຂວງ. ຈັງຫວະຂອງການກາຍເປັນຕົວເມືອງໃນປະຈຸບັນແມ່ນຂ້ອນຂ້າງຊ້າ ແລະ ນີ້ອາດຈະເຮັດໃຫ້ການຂ້າມຜ່ານຂອງ ສປປ ລາວ ຈາກສະຖານະພາບດ້ອຍພັດທະນາ (LDC) ໄປເປັນປະເທດທີ່ມີລາຍຮັບປານກາງມີຄວາມຫຼ້າຊ້າ.

ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາປັບປຸງປີ 2019-2030 ຈະແກ້ໄຂບັນຫາທາງດ້ານນະໂຍບາຍດັ່ງຕໍ່ໄປນີ້:

1. ຄວາມແຕກໂຕນກັນລະຫວ່າງ ຕົວຊີ້ວັດອັດຕາການຕາຍ ແລະ ການຈະເລີນພັນ ໃນບັນດາແຂວງ ແລະ ເມືອງ.
2. ການແຕ່ງງານໄວ ແລະ ການເກີດລູກກ່ອນໄວອັນຄວນ, ໂດຍສະເພາະໃນກຸ່ມທີ່ດ້ອຍໂອກາດ ແລະ ທຸກຍາກ.

3. ການບັນລຸການໄດ້ຮັບຜົນປະໂຫຍດຈາກປະຊາກອນ ຈາກການມີກຳລັງແຮງງານທີ່ເພີ່ມຂຶ້ນ ແລະ ປະຊາກອນໜຸ່ມເພີ່ມຂຶ້ນ.
4. ໃຫ້ການປົກປ້ອງທາງສັງຄົມຕໍ່ຈຳນວນ ແລະ ອັດຕາສ່ວນຂອງຜູ້ອາຍຸສູງເພີ່ມຂຶ້ນ.
5. ການແກ້ໄຂບັນຫາການເຄື່ອນຍ້າຍ ແລະ ການກາຍເປັນຕົວເມືອງ ໃນແຜນ ແລະ ຍຸດທະສາດການພັດທະນາ.
6. ປັບປຸງການສະໜອງ ແລະ ຄຸນນະພາບຂໍ້ມູນປະຊາກອນ.
7. ເຊື່ອມໂຍງແນວໂນ້ມ ແລະ ຄວາມຫຼາກຫຼາຍຂອງປະຊາກອນ ເຂົ້າໃນແຜນລະດັບຊາດ, ທ້ອງຖິ່ນ ແລະ ແຜນຂອງຂະແໜງການ.
8. ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນທຸກຂົງເຂດທີ່ຕິດພັນກັບສຸຂະພາບຈະເລີນພັນ ແລະ ສິດທິ.

## ພາກທີ II: ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປັບປຸງປີ 2019-2030

### 1. ວິໄສທັດ ແລະ ຫຼັກການພື້ນຖານຂອງນະໂຍບາຍ

#### 1.1 ວິໄສທັດ

ຮອດປີ 2030, ປະຊາກອນ ຢູ່ ສປປ ລາວ ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມ ຢ່າງສະເໝີພາບ ແລະ ເປັນທໍາຫຼາຍຂຶ້ນ.

#### 1.2 ຫຼັກການພື້ນຖານ

ນະໂຍບາຍນີ້ແມ່ນສອດຄ່ອງກັບຫລັກການພື້ນຖານແຫ່ງຊາດ ແລະ ສາກົນ. ຫຼັກການພື້ນຖານຫຼັກໃນລະດັບຊາດໄດ້ຄັດມາຈາກລັດຖະທໍາມະນູນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ (2003) ລວມມີດັ່ງນີ້:

- ພົນລະເມືອງລາວທຸກຄົນມີຄວາມສະເໝີພາບຕໍ່ກົດໝາຍບໍ່ວ່າຈະເປັນຍິງ ຫຼື ຊາຍ, ສະຖານະພາບທາງສັງຄົມ, ການສຶກສາ, ຄວາມເຊື່ອ ແລະ ຊົນເຜົ່າ;
- ພົນລະເມືອງລາວທັງຍິງ ຫຼື ຊາຍມີສິດເສລີພາບທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ ແລະ ສັງຄົມ ແລະ ໃນຄອບຄົວ;
- ພົນລະເມືອງລາວມີສິດໄດ້ຮັບການສຶກສາ ແລະ ຍົກລະດັບຕົນເອງ;
- ຜູ້ເຮັດວຽກມີສິດທີ່ຈະພັກຜ່ອນ, ຮັບການປິ່ນປົວໃນເວລາເຈັບປ່ວຍ ແລະ ໄດ້ຮັບການປິ່ນປົວ ແລະ ໄດ້ຮັບການຊ່ວຍເຫຼືອໃນກໍລະນີທີ່ບໍ່ສາມາດເຮັດວຽກຫຼືພິການ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນໆຕາມກົດໝາຍກໍານົດໄວ້;
- ພົນລະເມືອງລາວມີສິດເສລີພາບໃນການຕັ້ງຖິ່ນຖານ ແລະ ເຄື່ອນຍ້າຍຕາມກົດຫມາຍ;
- ລັດປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງລາວທີ່ຕັ້ງຖິ່ນຖານຢູ່ຕ່າງປະເທດ;
- ທຸກຊົນເຜົ່າມີສິດປົກປ້ອງ, ປົກປັກຮັກສາ ແລະ ສົ່ງເສີມອະນຸລັກວັດທະນະທໍາອັນດີງາມຂອງຊົນເຜົ່າຂອງຕົນເອງ ແລະ ປະເທດຊາດ;
- ລັດປະຕິບັດທຸກມາດຕະການເພື່ອພັດທະນາ ແລະ ປັບປຸງລະດັບເສດຖະກິດສັງຄົມຂອງທຸກໆຊົນເຜົ່າ;
- ອົງການຈັດຕັ້ງ ແລະ ພົນລະເມືອງທຸກຄົນຕ້ອງປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທໍາມະຊາດ: ໜ້າດິນ, ຊັບພະຍາກອນປ່າໄມ້, ສັດ, ແຫຼ່ງນໍ້າ ແລະ ສະພາບແວດລ້ອມ;
- ລັດສະໜັບສະໜູນການພັດທະນາເສດຖະກິດພ້ອມກັບການພັດທະນາວັດທະນະທໍາ ແລະ ສັງຄົມໂດຍໃຫ້ບູລິມະສິດແກ່ການພັດທະນາຊັບພະຍາກອນມະນຸດ;
- ສະໜັບສະໜູນການສົ່ງເສີມ ແລະ ໃຫ້ຄວາມສໍາຄັນໃນການພັດທະນາເສດຖະກິດໄປພ້ອມໆກັບການພັດທະນາວັດທະນະທໍາ ແລະ ສັງຄົມໂດຍໃຫ້ບູລິມະສິດແກ່ການພັດທະນາຊັບພະຍາກອນມະນຸດ
- ລັດສະໜັບສະໜູນການສົ່ງເສີມຄວາມຮູ້ ແລະ ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຍີ ແລະ ການນໍາໃຊ້;
- ລັດ ແລະ ສັງຄົມເຂົ້າຮ່ວມການກໍ່ສ້າງລະບົບປ້ອງກັນພະຍາດ ແລະ ໃຫ້ການດູແລສຸຂະພາບແກ່ທຸກຄົນເພື່ອຮັບປະກັນວ່າທຸກໆຄົນໄດ້ເຂົ້າເຖິງການດູ ແລະ ສຸຂະພາບໂດຍສະເພາະແມ່ນແມ່ຍິງ ແລະ

ເດັກນ້ອຍ, ຜູ້ທຸກຍາກ ແລະ ຜູ້ຢູ່ເຂດຫ່າງໄກສອກຫຼີກ, ເພື່ອຮັບປະກັນສຸຂະພາບທີ່ດີຂອງປະຊາຊົນໝົດທຸກຄົນ;

– ລັດ ແລະ ສັງຄົມໄດ້ເຂົ້າຮ່ວມການພັດທະນາແຮງງານທີ່ມີທັກສະ, ປັບປຸງລະບຽບການແຮງງານ, ສົ່ງເສີມທັກສະວິຊາຊີບ ແລະ ອາຊີບ .

ແຜນດຳເນີນງານຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ ICPD (POA) ລວມ ທັງສະບັບປັບປຸງ ແລະ ເພີ່ມຕື່ມ, ແມ່ນຫຼັກການພື້ນຖານໃນລະດັບສາກົນສຳລັບນະໂຍບາຍນີ້. ຫຼັກການພື້ນຖານຂອງແຜນດຳເນີນງານລວມມີ:

– ສິດໃນການພັດທະນາແມ່ນສິດຂອງໝົດທຸກຄົນ ແລະ ບໍ່ສາມາດເພີກຖອນໄດ້ ແລະ ເປັນສ່ວນໜຶ່ງຂອງສິດທິມະນຸດຂັ້ນພື້ນຖານ ແລະ ມະນຸດແມ່ນໃຈກາງຂອງການພັດທະນາ.
– ການສົ່ງເສີມຄວາມສະເໝີພາບ ແລະ ຄວາມເທົ່າທຽມ ລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງ, ແລະ ການລົບລ້າງທຸກຮູບແບບຂອງຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ການຮັບປະກັນຄວາມອາດສາມາດຂອງແມ່ຍິງ ໃນການຄວບຄຸມການຈະເລີນພັນຂອງຕົນແມ່ນຫຼັກສຳຄັນຂອງແຜນງານປະຊາກອນ ແລະ ການພັດທະນາທີ່ກ່ຽວຂ້ອງ.
– ເປົ້າໝາຍ ແລະ ນະໂຍບາຍປະຊາກອນທີ່ກ່ຽວຂ້ອງແມ່ນສ່ວນໜຶ່ງຂອງການພັດທະນາວັດທະນະທຳ, ເສດຖະກິດ ແລະ ສັງຄົມ, ເຊິ່ງຈຸດປະສົງຫຼັກແມ່ນເພື່ອປັບປຸງຄຸນນະພາບຊີວິດຂອງທຸກຄົນ.
– ຄູ່ຜົວເມຍ/ຄູ່ຮັກ ແລະ ບຸກຄົນມີສິດທິພື້ນຖານທີ່ຈະຕັດສິດໃຈຢ່າງມີອິດສະລະພາບ ແລະ ຢ່າງມີຄວາມຮັບຜິດຊອບກ່ຽວກັບຈຳນວນລູກ ແລະ ໄລຍະຫ່າງຂອງການເກີດ ແລະ ໄດ້ຮັບຂໍ້ມູນ, ການສຶກສາ ແລະ ວິທີການທີ່ຊ່ວຍພວກເຂົາໃນການຕັດສິນໃຈຕໍ່ບັນຫາດັ່ງກ່າວ.
– ຄອບຄົວແມ່ນຫົວໜ່ວຍພື້ນຖານຂອງສັງຄົມ ແລະ ດັ່ງນັ້ນຕ້ອງໄດ້ຮັບການສົ່ງເສີມ. ການແຕ່ງງານແມ່ນຕ້ອງມາຈາກຄວາມຍິນຍອມຂອງທັງຄູ່ຜົວເມຍ, ແລະ ຜົວເມຍຕ້ອງມີຄວາມເທົ່າທຽມກັນ.
– ທຸກຄົນມີສິດຕໍ່ກັບການສຶກສາ, ເຊິ່ງຕ້ອງນຳໄປສູ່ການພັດທະນາຊັບພະຍາກອນມະນຸດຢ່າງເຕັມສ່ວນ ແລະ ກຽດສັກສີຂອງມະນຸດ ແລະ ຄວາມອາດສາມາດ, ເອົາໃຈໃສ່ໂດຍສະເພາະຕໍ່ກັບແມ່ຍິງ ແລະເດັກຍິງ.
– ໃນການຄຳນຶງເຖິງຄວາມຕ້ອງການທາງດ້ານປະຊາກອນ ແລະ ການພັດທະນາຂອງປະຊາກອນຊົນເຜົ່າພື້ນເມືອງ, ລັດຖະບານຕ້ອງໄດ້ຮັບຮູ້ ແລະ ສະໜັບສະໜູນເອກະລັກ, ວັດທະນະທຳ ແລະ ຜົນປະໂຫຍດຂອງພວກເຂົາ, ແລະ ຊ່ວຍໃຫ້ພວກເຂົາສາມາດປະກອບສ່ວນຢ່າງເຕັມທີ່ເຂົ້າໃນຊີວິດເສດຖະກິດ, ການເມືອງ ແລະ ສັງຄົມຂອງປະເທດ.

## 2. ເປົ້າໝາຍ ແລະ ຈຸດປະສົງຂອງນະໂຍບາຍ

ເປົ້າໝາຍນະໂຍບາຍຂອງລຸ່ມນີ້ແມ່ນຖືກຄັດເລືອກມາແກ້ໄຂບັນຫາຫຼັກ ທີ່ໄດ້ກຳນົດໃນພາກທີ່ I ຂອງນະໂຍບາຍ. ໄດ້ມີຄຳອະທິບາຍໂດຍຫຍໍ້ກ່ຽວກັບຈຸດປະສົງທີ່ຈະຕ້ອງໄດ້ດຳເນີນເພື່ອໃຫ້ບັນລຸເປົ້າໝາຍເຫຼົ່ານີ້ ລວມຢູ່ໃນນະໂຍບາຍສະບັບນີ້. ໃນເກືອບທຸກກໍລະນີຈຸດປະສົງເຫຼົ່ານີ້ຈະບັນລຸໄດ້ໂດຍຜ່ານຜົນໄດ້ຮັບຂອງແຜນ

ການຂອງຂະແໜງການທີ່ກ່ຽວຂ້ອງ. ດັ່ງນັ້ນ, ຜົນໄດ້ຮັບຂອງແຜນການຂອງຂະແໜງການສາມາດເອີ້ນໄດ້ວ່າ ແມ່ນ "ຍຸດທະສາດທີ່ຈະນໍາໃຊ້ໃນການບັນລຸຈຸດປະສົງຂອງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ NDPD (2019-2030). ໃນກໍລະນີທີ່ບໍ່ມີຍຸດທະສາດທີ່ເໝາະສົມທີ່ໄດ້ກໍານົດໃນແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີຄັ້ງທີ່ VIII ຫຼື ຢູ່ໃນແຜນການ ຫຼື ຍຸດທະສາດໃດໜຶ່ງຂອງຂະແໜງການ, ມາດຕະການຍຸດທະສາດຈະໄດ້ຖືກສ້າງຂຶ້ນມາໃໝ່ສໍາລັບສະເພາະນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດ ທະນາ. ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວແມ່ນໄດ້ຖືກມອບໝາຍໃຫ້ກະຊວງທີ່ກ່ຽວຂ້ອງ. ລາຍລະອຽດຂອງຂອບວຽກທີ່ສະແດງໃຫ້ເຫັນສາຍພົວພັນລະຫວ່າງເປົ້າໝາຍ, ຈຸດປະສົງ ແລະ ຜົນໄດ້ຮັບ ຫຼື ມາດຕະການແມ່ນນໍາສະເໜີຢູ່ຕາຕະລາງການຈັດຕັ້ງປະຕິບັດຢູ່ພາກທີ່ IV.

### 2.1 ເປົ້າໝາຍ 1: ສົ່ງເສີມສຸຂະພາບຈະເລີນພັນໃນກຸ່ມຄົນທີ່ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ

ສຸຂະພາບຈະເລີນພັນແມ່ນແນວຄວາມຄິດທີ່ກວມຫຼາຍຂົງເຂດ, ເຊິ່ງສາມາດປະກອບມີສິດທິດ້ານການຈະເລີນພັນ. ອົງປະກອບຫຼັກຂອງສຸຂະພາບຈະເລີນພັນແມ່ນການວາງແຜນຄອບຄົວ. ພາຍໃຕ້ເປົ້າໝາຍ 1, ຂົງເຂດຫຼັກຂອງສຸຂະພາບຈະເລີນພັນແມ່ນການປັບປຸງ, ໂດຍເນັ້ນໃສ່ສະເພາະກຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ່ VIII (2016-2020) ກໍຄືແຜນພັດທະນາວຽກງານສາທາລະນະສຸກ.

**ເປົ້າໝາຍ 1 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|
| ອັດຕາສ່ວນການຕາຍຂອງແມ່ (MMR) | 197 (2015) | <70 (2030) |
| ອັດຕາການເກີດລູກໃນໄວໜຸ່ມ | 76 per 1,000(2015) | 31 per 1,000 (2030) |
| ອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິການ | 19.9% (2011-12) | 8% (2030) |
| ເປີເຊັນຂອງຄວາມຕ້ອງການວາງແຜນຄອບຄົວທີ່ໄດ້ຮັບການຕອບສະໜອງດ້ວຍວິທີຄຸມກໍາເນີດແບບທັນສະໄໝ: | 61.2% (2011-12) | 80% (2030) |
| CPRອັດຕາການນໍາໃຊ້ວິທີການຄຸມກໍາເນີດ (mCPR)ທີ່ທັນສະໄໝ | 42.1% (2011-12) | 73% (2030) |
| ອັດຕາການມີລູກແບບບໍ່ຕັ້ງໃຈໃນກຸ່ມອາຍຸ 15-24 ປີ. | 21.8% (2011-12) | 12% (2030) |

- **ຈຸດປະສົງ**

**2.1.1 ສຸມໃສ່ໃຫ້ອັດຕາການຕາຍໃຫ້ຫຼຸດລົງ ແລະ ການເຈັບເປັນຂອງແມ່ໂດຍສະເພາະໃນກຸ່ມຄົນດ້ອຍໂອກາດ ແລະ ມີຄວາມສ່ຽງໃນຂອບເຂດທົ່ວປະເທດ.**

ເຖິງແມ່ນວ່າ ອັດຕາສ່ວນການຕາຍຂອງແມ່ (MMR) ໄດ້ສືບຕໍ່ຫຼຸດລົງຢ່າງຕໍ່ເນື່ອງໃນໄລຍະທົດສະວັດຜ່ານມາ. ຜົນໄດ້ຮັບທີ່ຫຼາກຫຼາຍທີ່ໄດ້ຮັບການຄັດເລືອກຈະດຶງມາຈາກຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານສໍາລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍປີ 2016-2025

ແລະ ແຜນການຈັດຕັ້ງປະຕິບັດຄ່າໃຊ້ຈ່າຍໃນການວາງແຜນຄອບຄົວແຫ່ງຊາດ ປີ 2017-2020 ເພື່ອຊ່ວຍໃນການບັນລຸຈຸດປະສົງນີ້. ຜົນໄດ້ຮັບເຫຼົ່ານີ້ລວມມີການປັບປຸງການຊ່ວຍເກີດພື້ນຖານທີ່ມີຄຸນນະພາບ ແລະ ການຊ່ວຍເກີດສຸກເສີນ, ການເພີ່ມອັດຕາສ່ວນຂອງການເກີດທີ່ໄດ້ຮັບການຊ່ວຍເຫຼືອຈາກຜູ້ຊ່ວຍເກີດທີ່ມີທັກສະ ແລະ ການເກີດໃນສະຖານທີ່ສາທາລະນະສຸກ.

**2.1.2 ຫຼຸດຜ່ອນການມີລູກໃນຊາວໜຸ່ມ. ການແກ້ໄຂບັນຫາການເກີດລູກກ່ອນໄວອັນຄວນ ຫຼື ການຖືພາໃນຊາວໜຸ່ມຮຽກຮ້ອງໃຫ້ມີຍຸດທະສາດທີ່ແຕກຕ່າງຈາກການຄຸມກຳເນີດໃນຜູ້ອາຍຸສູງ.**

ສິ່ງທ້າທາຍທີ່ເກີດຂຶ້ນຈາກຄວາມບໍ່ເຂົ້າໃຈ ຫຼື ໄຮ້ດຽງສາຂອງຊາວໜຸ່ມ, ລວມທັງການຂາດຄວາມຮູ້ກ່ຽວກັບການຈະເລີນພັນ, ແຕ່ງງານໃນຕອນອາຍຸຍັງນ້ອຍ, ແລະ ບັນຫາທາງດ້ານຈັນຍາບັນ ແລະ ການປະຕິບັດທີ່ເກີດຂຶ້ນໃນການໃຫ້ຄວາມຮູ້ກ່ຽວກັບການຈະເລີນພັນໃຫ້ກັບເດັກຍິງ ແລະ ເດັກຊາຍ. ເພື່ອແກ້ໄຂບັນຫາເຫຼົ່ານີ້, ຕ້ອງມີການເຜີຍແຜ່ຂໍ້ມູນ ແລະ ການບໍລິການ (ລວມທັງການໃຫ້ຄຳປຶກສາ) ໂດຍສະເພາະເພື່ອໃຫ້ແທດເໝາະກັບຊາວໜຸ່ມ ແລະ ເຍົາວະຊົນ ສຳລັບຊາວຫນຸ່ມທີ່ຍັງຢູ່ໃນໂຮງຮຽນ, ບັນດາໂຄງການເພດສຶກສາແມ່ນວິທີທີ່ດີທີ່ສຸດໃນການປັບປຸງຄວາມຮູ້ ແລະ ຄວາມຕື່ນຕົວກ່ຽວກັບຄວາມສ່ຽງທີ່ກ່ຽວຂ້ອງກັບການຖືພາກ່ອນໄວອັນຄວນ ແລະ ບ່ອນທີ່ເຂົາເຈົ້າສາມາດໄປຮັບການຊ່ວຍເຫຼືອ. ສຳລັບຊາວໜຸ່ມທີ່ບໍ່ໄດ້ຢູ່ໃນໂຮງຮຽນ ແລະ ເຮັດວຽກ, ຂໍ້ມູນສາມາດສະໜອງໃຫ້ໃນສະຖານທີ່ເຮັດວຽກໂດຍການສົມທົບກັບສະຖານທີ່ຮັກສາສຸຂະພາບທີ່ໃຫ້ຄຳປຶກສາ ແລະ ການໃຫ້ຢາຄຸມກຳເນີດ. ແຜນງານເຫຼົ່ານີ້ຈະປະສົບຜົນສຳເລັດໄດ້ມັນຮຽກຮ້ອງໃຫ້ມີການສະໜັບສະໜູນຈາກຜູ້ນຳຊຸມຊົນ. ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍປີ 2016-2025 ໄດ້ລວມເອົາຜົນໄດ້ຮັບຕ່າງໆທີ່ໄດ້ຮັບການອອກແບບມາເພື່ອບັນລຸເປົ້າໝາຍນີ້.

## 2.2 ເປົ້າໝາຍ 2: ເລັ່ງລັດໃສ່ການຫຼຸດຜ່ອນອັດຕາການຕາຍຂອງເດັກອ່ອນ ແລະ ເດັກຕ່ຳກວ່າ 1 ປີລົງມາ, ເດັກຕ່ຳກວ່າ 5 ປີ ໃນກຸ່ມຄົນຜູ້ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ.

ການຫຼຸດອັດຕາການຕາຍຂອງເດັກອ່ອນ ແລະ ເດັກ ແມ່ນອົງປະກອບທີ່ສຳຄັນຂອງມາດຕະການທີ່ອອກແບບມາເພື່ອຜັກດັນການຂ້າມຜ່ານດ້ານປະຊາກອນ. ດັ່ງທີ່ໄດ້ກ່າວມາໃນພາກທີ I, ອັດຕາການຕາຍຂອງເດັກລຸ່ມ 5 ປີ ແລະ ອັດຕາການຈະເລີນພັນລວມແມ່ນພົວພັນກັນຢ່າງສະໜິດແໜ້ນ. ໃນຂະນະທີ່ຄວາມກ່ຽວພັນດັ່ງກ່າວອາດເກີດຂຶ້ນມາຈາກປັດໄຈອັນດຽວກັນ ເຊັ່ນວ່າ: ການບໍລິການສຸຂະພາບທີ່ບໍ່ພຽງພໍ ແລະ ລະດັບການສຶກສາຂອງແມ່ທີ່ຍັງຕໍ່າ, ເປັນທີ່ຍອມຮັບວ່າການຫຼຸດລົງຂອງການຈະເລີນພັນແມ່ນຂຶ້ນກັບການປັບປຸງການລອດເຫຼືອຂອງເດັກ. ດັ່ງນັ້ນ, ຕົວຊີ້ວັດໃນການປັບປຸງການລອດເຫຼືອຂອງເດັກແມ່ນມີຜົນກະທົບທາງອ້ອມ ໃນການຫຼຸດອັດຕາການຈະເລີນພັນລວມ ແລະ ພ້ອມດຽວກັນນີ້ ຜົນກະທົບດັ່ງກ່າວຈະຊ່ວຍເພີ່ມທະວີການຂ້າມຜ່ານດ້ານປະຊາກອນ, ໂດຍສະເພາະໃນຂົງເຂດທີ່ມີຄວາມຄືບໜ້າຊັກຊ້າ.

ເພື່ອເຮັດໃຫ້ການຕາຍຂອງເດັກນ້ອຍ ແລະ ເດັກອອ່ນຫຼຸດລົງຢ່າງໄວວານັ້ນມີຄວາມຈຳເປັນຕ້ອງໄດ້ກຳນົດເປົ້າໝາຍໃນການຫຼຸດອັດຕາການຕາຍຂອງເດັກລຸ່ມ 5 ປີ ແລະ ສ້າງວິທີການຫຼຸດຜ່ອນອັດຕາການຕາຍບໍ່ວ່າໂດຍທາງກົງຫຼືທາງອ້ອມ. ໃນກໍລະນີຂອງການຕາຍຂອງເດັກອອ່ນ ແລະ ເດັກລຸ່ມໜຶ່ງປີລົງມາແມ່ນມີສາມປັດໄຈຕົ້ນຕໍຄື: ເດັກເກີດກ່ອນກຳນົດ, ພາວະຫາຍໃຈບໍ່ສະດວກ ແລະ ການຕິດເຊື້ອພະຍາດ. ພ້ອມນັ້ນ, ຍັງມີຫຼາຍປັດໄຈທາງດ້ານສັງຄົມ-ປະຊາກອນ ທີ່ປະກອບເຂົ້າທາງອ້ອມທີ່ພາໃຫ້ເກີດການຕາຍຂອງເດັກອອ່ນ ແລະ ເດັກນ້ອຍ. ໃນນີ້ລວມມີອາຍຸຂອງແມ່ຜູ້ທີ່ຖືພາ ໂດຍສະເພາະແມ່ທີ່ຢູ່ໃນກຸ່ມຄວາມສ່ຽງສູງຄືໃນເກນອາຍຸຕໍ່າ

ກວ່າ 18 ປີ ແລະ ຫຼາຍກວ່າ 40 ປີ, ມີໄລຍະຫ່າງໃນການຖືພາບໍ່ພຽງພໍ, ເຮັດວຽກໜັກ ແລະ ເຄັ່ງຄຽດກ່ອນເກີດລູກ. ນອກນັ້ນ, ການຂາດການດູແລເດັກຫລັງເກີດກໍ່ເປັນປັດໄຈໜຶ່ງທີ່ພາໃຫ້ເກີດການຕາຍຂອງເດັກ. ສະນັ້ນ, ການເຂົ້າເຖິງການດູແລທີ່ຈຳເປັນສຳລັບເດັກເກີດໃໝ່ໃນໄລຍະທຳອິດ (EENC) ແມ່ນສຳຄັນຫຼາຍ. ປັດໄຈທາງກົງ ແລະ ທາງອ້ອມເຫຼົ່ານີ້ເປັນພື້ນຖານສຳລັບການບັນລຸສາມຈຸດປະສົງເພື່ອເລັ່ງໃສ່ການຫຼຸດຜ່ອນອັດຕາການຕາຍຂອງເດັກອ່ອນ, ເດັກອາຍຸລຸ່ມ 1 ປີ ແລະ ເດັກອາຍຸລຸ່ມ 5 ປີ.

**ເປົ້າໝາຍ 2 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|
| ອັດຕາການຕາຍຂອງເດັກອ່ອນ | 33 (2011-12) | 9 (2030) |
| ອັດຕາການຕາຍຂອງ ເດັກອາຍຸລຸ່ມ 1 ປີ | 40 (2017) | ≤12 (2030) |
| ອັດຕາການຕາຍຂອງເດັກລຸ່ມ 5 ປີ | 46 (2017) | ≤25 (2030) |

- ຈຸດປະສົງ

**2.2.1 ຫຼຸດຜ່ອນບັນດາປັດໄຈຄວາມສ່ຽງຫຼັກ (ການກຳນົດທີ່ໃກ້ຄຽງ) ທີ່ພົວພັນກັບການຕາຍຂອງເດັກອ່ອນ, ເດັກຕ່ຳກວ່າ 1 ປີລົງມາ ແລະ ເດັກນ້ອຍ**

ປັດໄຈສາເຫດສຳຄັນທີ່ສຸດຂອງການຕາຍຂອງເດັກອອ່ນແມ່ນເດັກເກີດກ່ອນກຳນົດ ຫຼື ເດັກຕາຍໃນເວລາເກີດລູກ. ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານສຳລັບການບໍລິການແບບເຊື່ອມສານສຸຂະພາບຈະ ເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ປີ 2016-2025 ໄດ້ລວມເອົາຜົນໄດ້ຮັບຕ່າງໆທີ່ໄດ້ຮັບການອອກແບບມາເພື່ອຫຼຸດໂອກາດໃນການເກີດກ່ອນກຳນົດ, ເຖິງແມ່ນວ່າຍັງມີຫຼາຍປັດໄຈທີ່ບໍ່ທັນຮັບຮູ້ເປັນທາງການກໍຕາມ.

**2.2.2 ຫຼຸດຜ່ອນປັດໄຈທາງດ້ານເສດຖະກິດ-ສັງຄົມ ທີ່ຕິດພັນກັບການຕາຍຂອງເດັກອ່ອນ ແລະ ເດັກນ້ອຍ.**

ປັດໄຈຄວາມສ່ຽງທາງດ້ານເສດຖະກິດ-ສັງຄົມ ສິ່ງຜົນໃຫ້ເກີດມີການຕາຍຂອງເດັກອອ່ນ, ເດັກລຸ່ມ 1 ປີ ແລະ 5 ປີລົງມາ. ລວມທັງອາຍຸຂອງແມ່ (ອາຍຸຕ່ຳກວ່າ 18 ປີຫຼືສູງກວ່າ 40 ປີ), ການແຕ່ງງານກ່ອນໄວອັນຄວນ ແລະ ການຖືພາຄັ້ງທຳອິດ, ໄລຍະຫ່າງໃນການຖືພາບໍ່ພຽງພໍ (ໜ້ອຍກວ່າ 24 ເດືອນ) ເຊິ່ງພົວພັນເຖິງການບໍ່ຢາກມີລູກແຕ່ບໍ່ໄດ້ມີການວາງແຜນຄອບຄົວ. ການເຮັດວຽກໜັກ ແລະ ເຄັ່ງຄຽດໃນໄລຍະສຸດທ້າຍຂອງການຖືພາ ກໍເປັນສາເຫດໜຶ່ງທີ່ເຮັດໃຫ້ເກີດລູກກ່ອນກຳນົດ ເຊິ່ງເຮັດໃຫ້ເກີດມີຄວາມສ່ຽງສູງຕໍ່ການຕາຍຂອງເດັກອອ່ນ. ດັ່ງນັ້ນມາດຕະການຕ່າງໆຈະຖືກຈັດຕັ້ງປະຕິບັດເພື່ອຫຼຸດຜ່ອນບັນດາປັດໄຈທາງສັງຄົມເຫຼົ່ານີ້, ລວມທັງການ

ປະຕິບັດ ເພື່ອຫຼຸດຜ່ອນການບໍ່ຢາກມີລູກແຕ່ບໍ່ມີການວາງແຜນຄອບຄົວໂດຍການປັບປຸງການເຂົ້າເຖິງການວິທີການຄຸມກຳເນີດໃນໄລຍະຍາວ ແລະ ສາມາດປັບປ່ຽນໄດ້

**2.2.3 ສົ່ງເສີມການລ້ຽງລູກດ້ວຍນົມແມ່ ແລະ ການເບິ່ງແຍງເດັກອ່ອນ ແລະ ເດັກນ້ອຍ.**

ການດູແລເດັກເກີດໃໝ່ ແລະ ເດັກອອ່ນຈະຊ່ວຍຫຼຸດຜ່ອນຄວາມສ່ຽງຕໍ່ການຕາຍ. ຍຸດທະສາດເພື່ອບັນລຸບັນຫານີ້ໄດ້ກວມເອົາການສົ່ງເສີມການລ້ຽງລູກດ້ວຍນົມແມ່ພຽງແຕ່ຢ່າງດຽວ, ປັບປຸງອັດຕາການສັກຢາປ້ອງກັນພະຍາດໃຫ້ຫຼາຍຂຶ້ນ ແລະ ເພີ່ມການດູແລທີ່ຈຳເປັນສຳລັບເດັກເກີດໃໝ່ໃນໄລຍະທຳອິດ (EENC) ໃຫ້ຫຼາຍຂຶ້ນ.

## 2.3 ເປົ້າໝາຍ 3: ໃຊ້ກາລະໂອກາດ "ທາງດ້ານປະຊາກອນ" ໃຫ້ໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມສູງສຸດ ສຳລັບທຸກກຸ່ມຄົນ ແລະ ຂົງເຂດຢ່າງສະເໝີພາບ ແລະ ເປັນທຳ.

ອັດຕາປະຊາກອນຢູ່ໃນກຳລັງແຮງງານໃນກຸ່ມອາຍຸ (ປະມານ 15-64 ປີ) ເພີ່ມຂຶ້ນ ແລະ ຍັງຈະສືບຕໍ່ເພີ່ມຂຶ້ນໃນໄລຍະຂອງນະໂຍບາຍນີ້. ໃນຂະນະດຽວກັນນັ້ນ, ອັດຕາຂອງຜູ້ຢູ່ພາຍໃຕ້ການດູແລ (ຜູ້ອາຍຸຕໍ່າກວ່າ 15 ແລະ 65 ປີຂຶ້ນໄປ) ຈະສືບຕໍ່ຫຼຸດລົງຈົນກ່ວາອັດຕາຂອງຜູ້ອາຍຸສູງຈະເລີ່ມເພີ່ມຂຶ້ນໃນອີກສອງສາມປີຂ້າງໜ້າ. ແນວໂນ້ມການປ່ຽນແປງໂຄງປະກອບອາຍຸຂອງປະຊາກອນດັ່ງກ່າວ ຈະນຳຜົນປະໂຫຍດທາງດ້ານເສດຖະກິດ ໂດຍການສະໜອງການສຶກສາ ແລະ ຝຶກອົບຮົມໃຫ້ແກ່ແຮງງານຊາວໜຸ່ມໃຫ້ມີການຂະຫຍາຍຕົວເພີ່ມຂຶ້ນ ເພື່ອໄປສະໜັບສະໜູນການຈ້າງງານ ແລະ ມີວຽກເຮັດງານທຳໃໝ່, ວຽກທີ່ມີປະສິດທິຜົນສູງຂຶ້ນ. ແຕ່ເຖິງຢ່າງໃດກໍຕາມ ການກະກຽມການເພີ່ມຂຶ້ນຂອງກຳລັງແຮງງານໃໝ່ໃຫ້ມີວຽກເຮັດງານທຳແມ່ນເປັນສິ່ງສຳຄັນ. ຍຸດທະສາດທີ່ສຳຄັນໃນການບັນລຸເປົ້າໝາຍນີ້ ແມ່ນເພື່ອຮັບປະກັນວ່າທຸກໆຄົນທີ່ບໍ່ໄດ້ເຂົ້າໂຮງຮຽນມີວຽກເຮັດງານທຳ ຫຼື ສືບຕໍ່ພັດທະນາລະດັບການສຶກສາໃນຂັ້ນສູງຕໍ່ໄປນັ້ນ ໃຫ້ມີທັກສະພື້ນຖານການຮູ້ໜັງສື ແລະ ຄິດໄລ່ເລກຂັ້ນພື້ນຖານ ພ້ອມທັງເພີ່ມອັດຕາເລື່ອນຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍໃຫ້ຫຼາຍຂຶ້ນ. ພ້ອມດຽວກັນນີ້, ການເພີ່ມອັດຕາການເລື່ອນຊັ້ນ ຈາກການສຶກສາລະດັບມັດທະຍົມຕົ້ນ ແລະ ມັດທະຍົມຕອນປາຍ ຈົນໄປເຖິງການສຶກສາຊັ້ນສູງແມ່ນເປັນສິ່ງທີ່ສຳຄັນ.

**ເປົ້າໝາຍ 3 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ /ປີ |
|---|---|---|
| ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ (15 ປີຂຶ້ນໄປ); | 84.7% (2015) | 95% (2030) |
| ອັດຕາການຮູ້ໜັງສືຂອງຊາວໜຸ່ມ (15 – 24 ປີ) | 92.5% (2015) | 98% (2030) |
| ອັດຕາການເຂົ້າຮຽນຂອງປະຊາກອນໃນກຸ່ມອາຍຸ 17 -25 ປີ | 22% (2015) | 45% (2030) |
| ອັດຕາການເຂົ້າຮຽນອາຊີວະ | 34,500 | 51,000 (2020), 81,000 (2030) |

- ຈຸດປະສົງ

**2.3.1 ກຳລັງແຮງງານໃໝ່ໄດ້ຮັບການສຶກສາ, ຝຶກອົບຮົມ ແລະ ມີທັກສະ ສາມາດຕອບສະໜອງກັບໂອກາດ ການຈ້າງງານ.**

ບັນດາຍຸດທະສາດທີ່ຄັດເລືອກມາຈາກແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2016-2020) ໄດ້ ຖືກລວມເຂົ້າໃນນະໂຍບາຍນີ້ເພື່ອບັນລຸເປົ້າໝາຍດັ່ງກ່າວ. ໃນນີ້ປະກອບມີການຈັດຕັ້ງປະຕິບັດເພື່ອຮັບປະກັນວ່ານັກຮຽນທຸກຄົນມີຄວາມຮູ້ ແລະ ທັກສະພື້ນຖານພຽງພໍ. ລວມມີການເພີ່ມອັດຕາການຮູ້ໜັງສື ແລະ ຄິດໄລ່ເລກຂັ້ນພື້ນຖານໃນບັນດາຊາວໜຸ່ມ. ການເພີ່ມອັດຕາຂ້າມຜ່ານຈາກການສຶກສາຊັ້ນມັດທະຍົມຕອນຕົ້ນຫາຕອນປາຍ ແລະ ຂັ້ນສູງຂຶ້ນໄປ ແມ່ນເປັນສິ່ງສຳຄັນໃນການປັບປຸງຄຸນນະພາບຂອງກຳລັງແຮງງານໃນໄລຍະຍາວ. ອັດຕາການຮຽນຈົບຊັ້ນມັດທະຍົມ ແລະ ການຂ້າມຜ່ານໄປຮຽນສາຂາວິຊາຊີບ ແລະ ຊັ້ນສູງ ແມ່ນຍັງຕ້ອງໄດ້ມີການປັບປຸງ ແລະ ປັບປຸງຄຸນນະພາບຂອງການຮຽນວິຊາຊີບໃຫ້ສູງຂຶ້ນ ໂດຍຜ່ານການຍົກລະດັບຄວາມສາມາດຂອງຄູ.

### 2.3.2 ຮັບປະກັນໃຫ້ແຜນງານການສຶກສາຂະແໜງວິຊາຊີບ ແລະ ຊັ້ນສູງ ໃຫ້ແທດເໝາະກັບຄວາມຕ້ອງການ ຂອງຕະຫຼາດແຮງງານ.

ບັນດາແຜນງານອາຊີວະສຶກສາທີ່ບໍ່ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ ນີ້ກໍຍ້ອນວ່າບາງວິຊາທີ່ສອນນັ້ນບໍ່ເໝາະສົມ. ຄວາມຕ້ອງການ ແລະ ການສະໜອງທັກສະຂອງແຮງງານນັ້ນສາມາດສອດຄ່ອງກັນໄດ້ ແລະ ສຳເລັດໄດ້ ໂດຍຜ່ານການວາງແຜນພັດທະນາຊັບພະຍາກອນມະນຸດ ແລະ ປັບປຸງຂອບວຸດທິການສຶກສາແຫ່ງຊາດ ໃຫ້ສອດຄ່ອງກັບຂອບວຸດທິການສຶກສາຂອງອາຊຽນ. ການປັບປຸງການບໍລິການຈັດຫາງານຂອງລັດ ແລະ ຂໍ້ມູນກ່ຽວກັບຕະຫຼາດແຮງງານ (LMI) ຈະປະກອບສ່ວນເຂົ້າໃນເປົ້າໝາຍນີ້.

### 2.3.3 ແຮງງານຜູ້ໃຫຍ່ມີໂອກາດໄດ້ຮັບການຍົກລະດັບວຸດທິການສຶກສາຜ່ານການສຶກສານອກໂຮງຮຽນ.

ການປັບປຸງຄຸນນະພາບຂອງກຳລັງແຮງງານທີ່ມີຢູ່ແລ້ວແມ່ນມີຄວາມສຳຄັນຫຼາຍ ໃນການທີ່ຈະຍາດແຍ່ງເອົາຜົນປະໂຫຍດຈາກການມີວຽກເຮັດງານທຳທີ່ມີປະສິດທິຜົນ ແລະ ມີລາຍໄດ້ເພີ່ມຂຶ້ນ. ກະຊວງສຶກສາທິການ ແລະ ກິລາ ຈະພັດທະນາ "ຂອບການຮຽນຮູ້ຕະຫຼອດຊີວິດ" ເຊິ່ງຈະຊ່ວຍໃຫ້ແຮງງານຜູ້ໃຫຍ່ມີໂອກາດໃນການປັບປຸງທັກສະການຮູ້ໜັງສືຂອງເຂົາເຈົ້າ ເຊິ່ງຈະກ້າວໄປສູ່ການຝຶກອົບຮົມວິຊາຊີບ.

## 2.4 ເປົ້າໝາຍ 4: ສົ່ງເສີມໂອກາດທາງດ້ານເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດທີ່ດີ ສຳລັບຊາວໜຸ່ມ-ເຍົາວະຊົນ ຜູ້ດ້ອຍໂອກາດ ແລະ ມີຄວາມສ່ຽງ ແລະ ຊາວໜຸ່ມທີ່ບໍ່ມີວຽກເຮັດງານທຳ

ປະຊາກອນຂອງ ສປປ ລາວ ເປັນຊາວໜຸ່ມມີເຖິງ 41% ຂອງປະຊາກອນທີ່ມີອາຍຸຕ່ຳກວ່າ 20 ປີໃນເວລາການສຳຫຼວດພົນລະເມືອງປີ 2015, 28% ແມ່ນອາຍຸ 10-24 ປີ (ຊາວໜຸ່ມ). ຈຳນວນຊາວໜຸ່ມແມ່ນຄາດຄະເນວ່າຈະເພີ່ມຂຶ້ນຢ່າງແນ່ນອນຈາກ 2.0 ລ້ານຄົນໃນປີ 2015 ຫາ 2.3 ລ້ານຄົນໃນປີ 2030. ຄວາມເປັນມາຂອງເປົ້າຫມາຍ 4 ແມ່ນເພື່ອໃຫ້ແນ່ໃຈວ່າຊາວໜຸ່ມມີໂອກາດທີ່ຈະພັດທະນາຄວາມສາມາດ ແລະ ທັກສະຂອງພວກເຂົາເພື່ອປະກອບສ່ວນເຂົ້າໃນການພັດທະນາຂອງປະເທດ. ໃນເວລາດຽວກັນນັ້ນ, ຍັງເຫັນວ່າມີຊາວໜຸ່ມບາງຄົນມີຄວາມດ້ອຍໂອກາດກວ່າຄົນອື່ນໆ ແລະ ໂດຍສະເພາະໃນບັນດາກຸ່ມຄົນ ເຊັ່ນວ່າ: ເດັກຍິງໜຸ່ມ, ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພື່ອຫຼຸດຜ່ອນຄວາມສ່ຽງຂອງພວກເຂົາຕໍ່ກັບຄວາມສ່ຽງຕ່າງໆ ລວມທັງການແຕ່ງງານກ່ອນໄວອັນຄວນ ແລະ ການຖືພາແບບບໍ່ຕັ້ງໃຈ. ເພື່ອແກ້ໄຂບັນຫາເຫຼົ່ານີ້ ແລະ ບັນຫາທີ່ກ່ຽວຂ້ອງນັ້ນ, ຈະຕ້ອງມີການສ້າງນະໂຍບາຍຊາວໜຸ່ມແຫ່ງຊາດທີ່ຮັດກຸມ ແລະ ພັດທະນາກົດໝາຍຊາວໜຸ່ມຂຶ້ນໄປພ້ອມໆກັບບັນດາກິດຈະກຳຕ່າງໆ ທີ່ມີສ່ວນຮ່ວມຂອງຊາວໜຸ່ມໃນສັງຄົມໃຫ້ຫຼາຍຂຶ້ນ.

**ເປົ້າໝາຍ 4 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|

| | | |
|---|---|---|
| ອັດຕາຊາວໜຸ່ມທີ່ບໍ່ໄດ້ເຮັດວຽກ, ບໍ່ໄດ້ຮັບການສຶກສາ ແລະ ຝຶກອົບຮົມ (NEET) | 5.1% (2015) | 2.6% (2030) |
| ອັດຕາການເກີດລູກທັງໝົດຂອງແມ່ຍິງອາຍຸຕໍ່າກວ່າ 20ປີລົງມາ | 15% (2011-12) | 7% (2030) |
| ສ່ວນຮ້ອຍຂອງແມ່ຍິງອາຍຸລະຫວ່າງ 15-24 ປີເຄີຍມີເພດສຳພັນໃນຕອນອາຍຸ 15 ປີ | 6% (2011-12) | 1% (2030) |
| ສ່ວນຮ້ອຍຂອງແມ່ຍິງອາຍຸ ລະຫວ່າງ 15-19 ປີ ເກີດລູກ | 17.8% | 5% (2030) |
| ຈຳນວນແມ່ຍິງອາຍຸລະຫວ່າງ 15-19 ປີ ແຕ່ງງານ ຫລື ມີຄູ່ຄອງ | 24.7% | 10% (2030) |
| ອັດຕາການຕິດພະຍາດພຕພ (ໜອງໃນທຽມ)ໃນກຸ່ມຊາວໜຸ່ມທີ່ມີຄວາມສ່ຽງ (ສາວບໍລິການ ແລະ ຊາຍຮ່ວມເພດກັບຊາຍ) | 23.8% (2017) (ສາວບໍລິການ) 10.9% (MSM) | 15% (2030) 8% (2030) |

- ຈຸດປະສົງ

**2.4.1 ສຳເລັດການສ້າງນະໂຍບາຍຊາວໜຸ່ມແຫ່ງຊາດ, ຮັບຮອງ ແລະ ເຜີຍແຜ່.**

ເປົ້າໝາຍຂອງນະໂຍບາຍຊາວໜຸ່ມແຫ່ງຊາດ ແມ່ນເພື່ອສະໜອງກອບນະໂຍບາຍທີ່ຈະແຈ້ງເຊິ່ງທາງລັດຖະບານ ແລະ ຄູ່ຮ່ວມງານມີຄວາມຕັ້ງໃຈທີ່ຈະແກ້ໄຂບັນຫາຕ່າງໆທີ່ຊາວໜຸ່ມ ແລະ ເຍົາວະຊົນປະເຊີນຢູ່ ໃນການພັດທະນາປະເທດຊາດ. ເນື່ອງຈາກວ່າຊາວໜຸ່ມເປັນກຸ່ມປະຊາກອນທີ່ສຳຄັນ, ນະໂຍບາຍແຫ່ງຊາດ ດ້ານປະຊາກອນ ແລະ ການພັດທະນາໄດ້ກວມເອົາກິດຈະກຳເພື່ອສະໜັບສະໜູນການສ້າງນະໂຍບາຍຊາວໜຸ່ມ-ເຍົາວະຊົນແຫ່ງຊາດ ໂດຍການເກັບກຳຕົວເລກ ແລະ ຂໍ້ມູນກ່ຽວກັບຊາວໜຸ່ມ ແລະ ສະພາບເສດຖະກິດ-ສັງຄົມຊຶ່ງເກີດຂຶ້ນຢູ່ໃນປະຈຸບັນເຊັ່ນດຽວກັນກັບໃນອະນາຄົດ.

**2.4.2 ສ້າງກົດໝາຍຊາວໜຸ່ມ, ຮັບຮອງ ແລະ ເຜີຍແຜ່.**

ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍຊາວໜຸ່ມ-ເຍົາວະຊົນແຫ່ງຊາດນັ້ນ, ຈະຕ້ອງໄດ້ສ້າງກົດໝາຍຊາວໜຸ່ມ. ໃນການດຳເນີນການສ້າງກົດໝາຍນັ້ນຈະຕ້ອງມີການເກັບກຳຂໍ້ມູນຄວາມເປັນມາທີ່ກ່ຽວຂ້ອງ ໂດຍການເປີດກອງປະຊຸມປຶກສາຫາລື ແລະ ກະກຽມຮ່າງກົດໝາຍ.

**2.4.3 ຊາວໜຸ່ມ ແລະ ເຍົາວະຊົນມີຄວາມຕື່ນຕົວຕໍ່ກັບກົດໝາຍ ແລະ ລະບຽບຫຼັກການທີ່ມີຜົນກະທົບຕໍ່ເຂົາ ເຈົ້າ ແລະ ຄູ່ຄອງຂອງເຂົາເຈົ້າຫຼາຍຂຶ້ນ.**

ຊາວໜຸ່ມມັກຈະຂາດຄວາມຕື່ນຕົວ ແລະ ຮັບຮູ້ກ່ຽວກັບກົດໝາຍ ແລະ ກົດລະບຽບທີ່ສຳຄັນຕ່າງໆ ແລະ ຍ້ອນເຫດຜົນດັ່ງກ່າວ ເຂົາເຈົ້າຈຶ່ງມີຂໍ້ຂັດແຍ່ງກັບອຳນາດການປົກຄອງ. ການນຳໃຊ້ສື່ສັງຄົມທີ່ທັນສະໄໝ ແລະ ຮູບແບບການສື່ສານອື່ນໆນັ້ນ ມີຈຸດປະສົງເພື່ອໃຫ້ຊາວໜຸ່ມຮັບຮູ້ກ່ຽວກັບການປ່ຽນແປງສະພາບທາງດ້ານກົດໝາຍ ແລະ ສັງຄົມ ລວມທັງຄວາມສ່ຽງທີ່ເພີ່ມຂຶ້ນຂອງການໃຊ້ຢາເສດຕິດ, ການຄ້າມະນຸດ ແລະ ການລ່ວງລະເມີດທາງເພດ.

**2.4.4 ເພີ່ມທະວີຄວາມອາດສາມາດໃຫ້ແກ່ຊາວໜຸ່ມທົ່ວປະເທດໃນການມີສ່ວນຮ່ວມຢ່າງຫ້າວຫັນຕໍ່ການພັດທະນາເສດຖະກິດ-ສັງຄົມ.**

ແຜນງານການຈັດຕັ້ງປະຕິບັດງານຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ ICPD ເນັ້ນໜັກຄວາມສຳຄັນຂອງການມີສ່ວນຮ່ວມຂອງຊາວໜຸ່ມໃນສັງຄົມ ແລະ ແນະນຳວ່າ "ຊາວໜຸ່ມຄວນມີສ່ວນຮ່ວມຢ່າງຫ້າວຫັນຕໍ່ກັບການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນຂອງກິດຈະກຳທີ່ມີ

ຜົນກະທົບໂດຍກົງຕໍ່ກັບຊີວິດປະຈຳວັນຂອງເຂົາເຈົ້າ". ໃນ ສປປ ລາວ, ການມີສ່ວນຮ່ວມຂອງຊາວໜຸ່ມໃນກິດຈະກຳດ້ານສັງຄົມ ແລະ ການເມືອງແມ່ນມີຈຳກັດ. ຈຸດປະສົງນີ້ແມ່ນເພື່ອຍົກສູງລະດັບການມີສ່ວນຮ່ວມຂອງຊາວໜຸ່ມເພື່ອສົ່ງເສີມຄວາມສາມັກຄີໃນສັງຄົມໃນບັນດາຊາວໜຸ່ມໃນເຜົ່າຕ່າງໆ ແລະ ລະຫວ່າງຊາວໜຸ່ມດ້ວຍກັນເອງ ແລະ ຜູ້ອື່ນໆຢູ່ໃນສັງຄົມ.

**2.4.5 ປັບປຸງຂີດຄວາມສາມາດໃຫ້ແກ່ພະນັງງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ອົງການຈັດຕັ້ງອື່ນໆ ເພື່ອໃຫ້ສາມາດອອກແບບ ແລະ ຈັດຕັ້ງປະຕິບັດແຜນງານຕ່າງໆຂອງຊາວໜຸ່ມ.**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນອົງການຈັດຕັ້ງຕົ້ນຕໍໃນການພັດທະນາໂຄງການສຳລັບຊາວໜຸ່ມ, ດັ່ງນັ້ນຈຶ່ງມີຄວາມຈຳເປັນທີ່ຈະຕ້ອງພັດທະນາຂີດຄວາມອາດສາມາດໃຫ້ແກ່ອົງການຈັດຕັ້ງເພື່ອໃຫ້ສາມາດເປັນອົງການຈັດຕັ້ງທີ່ມີປະສິດທິຜົນ ແລະ ປະສິດທິພາບສູງສຸດ. ຈຸດປະສົງນີ້ຈະເນັ້ນໜັກໃສ່ປັບປຸງຂອດປະສານງານລະຫວ່າງພະແນກການຕ່າງໆຂອງອົງການຈັດຕັ້ງຊາວໜຸ່ມໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ລະຫວ່າງຫ້ອງການຊາວໜຸ່ມເອງ ແລະ ຂະແໜງການຕ່າງໆຂອງບັນດາກະຊວງກົມກອງ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ( ລວມທັງພາຍໃນ ແລະ ຕ່າງປະເທດ).

**2.4.6 ຫຼຸດຜ່ອນພຶດຕິກຳສ່ຽງໃນກຸ່ມຊາວໜຸ່ມ ທີ່ພົວພັນກັບພະຍາດພະຍາດຕິດຕໍ່ທາງເພດສຳພັນ, ການນຳໃຊ້ຢາເສບຕິດ, ການຖືພາແບບບໍ່ຕັ້ງໃຈ.**

ຊາວໜຸ່ມ ແລະ ເຍົາວະຊົນໃນປະຈຸບັນກຳລັງປະເຊີນກັບຄວາມສ່ຽງໂດຍສະເພາະດ້ານສຸຂະພາບ ແລະ ແບບແຜນການດຳລົງຊີວິດຈາກການຂາດຄວາມຕື່ນຕົວ ແລະ ຄວາມຮູ້ກ່ຽວກັບສາຍພົວພັນລະຫວ່າງພຶດຕິກຳ ແລະ ການເອົາຕົນເອງໄປສູ່ຄວາມສ່ຽງຕໍ່ສຸຂະພາບ ແລະ ຄວາມຢູ່ດີກິນດີ. ຈຳເປັນຕ້ອງມີການປູກຈິດສຳນຶກໃຫ້ຊາວໜຸ່ມຕໍ່ກັບຄວາມສ່ຽງໃນການມີເພດສຳພັນໂດຍບໍ່ໄດ້ປ້ອງກັນ ແລະ ການໃຊ້ຢາເສບຕິດ, ລວມທັງເຫຼົ້າ ແລະ ຢາບ້າ. ສິ່ງເຫຼົ່ານີ້ຈະສາມາດບັນລຸໄດ້ໂດຍການຂະຫຍາຍ ແລະ ປັບປຸງການບໍລິການໃຫ້ຄຳປຶກສາ, ລວມທັງໂທລະສັບ "ສາຍດ່ວນ" ແລະ ສ້າງຕຳແໜ່ງງານໃຫ້ແກ່ພະນັກງານສົ່ງເສີມວຽກງານດັ່ງກ່າວໃຫ້ຫຼາຍຂຶ້ນ.

**2.4.7 ຫຼຸດຜ່ອນອັດຕາການບໍ່ຮູ້ໜັງສືໃນກຸ່ມຊາວໜຸ່ມ ໂດຍການໃຫ້ເຂົ້າຮຽນຄືນ ແລະ ເຂົ້າຮ່ວມໂຄງການຕ່າງໆ.**

ຊາວໜຸ່ມຢູ່ ສປປ ລາວ ຫຼາຍຄົນອອກໂຮງຮຽນໂດຍບໍ່ຮູ້ໜັງສື ຫຼື ຕົວເລກ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດມີວຽກເຮັດງານທຳທີ່ດີ. ຈະຕ້ອງໄດ້ສ້າງແຜນງານເພື່ອໃຫ້ນັກຮຽນສືບຕໍ່ເຂົ້າໂຮງຮຽນໃຫ້ໄດ້ດົນທີ່ສຸດ ແລະ ຊ່ວຍໃຫ້ເດັກທີ່ອອກໂຮງຮຽນແຕ່ຍັງນ້ອຍຮູ້ໜັງສື.

**2.4.8 ຊາວໜຸ່ມ ແລະ ເຍົາວະຊົນ ຢູ່ເຂດຫ່າງໄກສອກຫຼີກ ແລະ ຊຸມຊົນໃນເຂດຊົນນະບົດໄດ້ມີວຽກເຮັດງານທຳ ແລະ ປັບປຸງທັກສະໃນການເຮັດທຸລະກິດເພື່ອສ້າງລາຍຮັບມາສູ່ຄອບຄົວ.**

ພັດທະນາທັກສະໃນການເຮັດທຸລະກິດຂອງຊາວໜຸ່ມ ແມ່ນວິທີໜຶ່ງໃນການຊ່ວຍໃຫ້ເຂົາເຈົ້າເຮັດທຸລະກິດຂະໜາດນ້ອຍເພື່ອສ້າງລາຍຮັບໃຫ້ແກ່ຕົນເອງ ແລະ ມີລາຍຮັບມາສູ່ຄອບຄົວ. ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ອົງການຈັດຕັ້ງອື່ນໆຈະສະໜອງການຝຶກອົບຮົມ ເພື່ອປັບປຸງທຸລະກິດ, ການຄຸ້ມຄອງ ແລະ ທັກສະດ້ານວິຊາການທີ່ຈຳເປັນເພື່ອເລີ່ມຕົ້ນທຸລະກິດຂະໜາດນ້ອຍໃນເຂດຊົນນະບົດ.

**2.4.9 ການເຂົ້າເຖິງການຝຶກອົບຮົມວິຊາຊີບ ແລະ ໂອກາດໃນການຈ້າງງານໃນທົ່ວປະເທດຫຼາຍຂຶ້ນ.**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຈະສ້າງໂອກາດໃຫ້ຊາວໜຸ່ມໄດ້ເຂົ້າຮຽນການສຶກສານອກລະ ບົບເພື່ອໃຫ້ເຂົາເຈົ້າສາມາດເຂົ້າຝຶກອົບຮົມວິຊາຊີບ. ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຈະພະຍາຍາມເຮັດໃຫ້ຊາວໜຸ່ມໃນທົ່ວປະເທດໄດ້ເຂົ້າເຖິງການຝຶກອົບຮົມວິຊາຊີບຫຼາຍຂຶ້ນ.

**2.4.10 ຫຼຸດຜ່ອນອັດຕາການແຕ່ງງານກ່ອນໄວອັນຄວນ (<18 ປີ)ໃນກຸ່ມເດັກຍິງ ແລະ ຊາວໜຸ່ມ.**

ເຖິງແມ່ນວ່າກົດໝາຍຄອບຄົວທີ່ຫວງຫ້າມການແຕ່ງງານລຸ່ມອາຍຸ 18 ປີ, ແຕ່ອັດຕາການແຕ່ງງານກ່ອນໄວອັນຄວນໃນ ສປປ ລາວ ຍັງເຫັນວ່າມີຫຼາຍພໍສົມຄວນ, ເຊິ່ງມັນຈະມີຜົນກະທົບຕໍ່ແມ່ຍິງຊາວໜຸ່ມ. ການແຕ່ງງານກ່ອນໄວອັນຄວນສົ່ງຜົນຕໍ່ກັບການຢຸດເຊົາການຮຽນ ແລະ ການຖືພາກ່ອນໄວອັນຄວນ, ຜົນກະທົບຕາມມານຳຫຼັງກໍ່ຄືການເກີດລູກກ່ອນກຳນົດ ແລະ ການຕາຍຂອງເດັກອ່ອນ. ຕ້ອງມີການສ້າງຍຸດທະສາດ ເພື່ອຫຼຸດຜ່ອນການແຕ່ງງານກ່ອນໄວອັນຄວນ ແລະ ບັງຄັບໃຊ້ກົດໝາຍຄອບຄົວ.

## 2.5 ເປົ້າໝາຍ 5: ເພີ່ມທະວີຜົນປະໂຫຍດຂອງການເຄື່ອນຍ້າຍຈາກຊົນນະບົດສູ່ຕົວເມືອງ ແລະ ການເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດພ້ອມທັງຫຼຸດຜ່ອນຜົນກະທົບທາງລົບຈາກການເຄື່ອນຍ້າຍໃຫ້ໜ້ອຍລົງ

ສປປ ລາວ ກຳລັງຈະກາຍເປັນສັງຄົມທີ່ "ມີການເຄື່ອນຍ້າຍ" ຢ່າງໜ້ອຍມີແຮງງານລາວ 600,000 ຄົນເຄື່ອນຍ້າຍໄປເຮັດວຽກໃນປະເທດຕ່າງໆທົ່ວໂລກ ປະມານ 300,000 ຄົນເຮັດວຽກຢູ່ປະເທດໄທ. ການສົ່ງເງິນກັບບ້ານຂອງແຮງງານຢູ່ຕ່າງປະເທດປະກອບສ່ວນເຂົ້າປະມານ 2.0% ຂອງ GDP ທັງໝົດ ແລະ ຍັງເປັນແຫຼ່ງລາຍຮັບທີ່ສຳຄັນໃນຫຼາຍຊຸມຊົນ. ແຮງງານເຄື່ອນຍ້າຍລາວທີ່ເຮັດວຽກຢູ່ຕ່າງປະເທດໄດ້ພັດທະນາທັກສະໃນການເຮັດວຽກ ແລະ ຍັງເປັນທ່າແຮງໃນການນຳເອົາທັກສະນັ້ນມານຳໃຊ້ຢູ່ລາວໃນເວລາທີ່ເຂົາເຈົ້າກັບຄືນປະເທດ. ນອກຈາກການເຄື່ອນຍ້າຍໄປຕ່າງປະເທດແລ້ວ ການເຄື່ອນຍ້າຍພາຍໃນປະເທດກໍເຫັນວ່າມີອັດຕາທີ່ເພີ່ມຂຶ້ນ, ລວມທັງການເຄື່ອນຍ້າຍຈາກຊົນນະບົດເຂົ້າສູ່ຕົວເມືອງ, ເຊິ່ງເປັນປັດໄຈຂັບເຄື່ອນໃນການກາຍເປັນຕົວເມືອງໃຫຍ່; ການເຄື່ອນຍ້າຍໄປເຮັດວຽກຢູ່ຕ່າງປະເທດ ແລະ ການເຄື່ອນຍ້າຍພາຍໃນເຫັນວ່າມີແນວໂນ້ມທີ່ຈະເພີ່ມຂຶ້ນໃນອະນາຄົດ; ສິ່ງສຳຄັນແມ່ນການມີຄວາມເຂົ້າໃຈຕໍ່ກັບບົດບາດການເຄື່ອນຍ້າຍຂອງປະຊາກອນໃນການພັດທະນາຊຸມຊົນ ແລະ ປະເທດ ແລະ ລວມທັງການຄຸ້ມຄອງການເຄື່ອນຍ້າຍເພື່ອໃຫ້ເກີດຜົນປະໂຫຍດສູງສຸດ ແລະ ຫຼຸດຜ່ອນຜົນກະທົບທາງລົບໃຫ້ຫຼາຍທີ່ສຸດ.

ມີຄວາມຈຳເປັນອັນຮີບດ່ວນທີ່ຈະຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນຕ່າງໆ ເພື່ອແກ້ໄຂບັນຫາການເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດ ແລະ ການກາຍເປັນເມືອງຢູ່ ສປປ ລາວ. ເປົ້າໝາຍທີ 11 ຂອງເປົ້າໝາຍການພັດທະນາແບບຍືນຍົງ ແມ່ນເພື່ອບັນລຸໃຫ້ບັນດາຕົວເມືອງ ແລະ ຊຸມຊົນມີຄວາມຍືນຍົງ. ໃນບົດລາຍງານສະພາບການເຄື່ອນຍ້າຍຂອງປະຊາກອນໃນທົ່ວໂລກປີ 2015. ແລະ ກອງປະຊຸມທີ່ຢູ່ອາໄສ ຄັ້ງທີ III ປີ 2017 ໄດ້ເນັ້ນໃຫ້ເຫັນວ່າຈຳເປັນຕ້ອງມີການຄຸ້ມຄອງການເຄື່ອນຍ້າຍຂອງຊົນນະບົດເຂົ້າຫາຕົວເມືອງ ແລະ ການກາຍເປັນຕົວເມືອງ ເພື່ອຮັບປະກັນຜົນປະໂຫຍດອັນສູງສຸດຈາກການພັດທະນາ. ໃນບ່ອນທີ່ຍັງບໍ່ທັນມີສະຖາບັນທີ່ຮັບຜິດຊອບວຽກງານເຫຼົ່ານີ້ ແມ່ນໄດ້ຮຽກຮ້ອງໃຫ້ມີການສ້າງຕັ້ງສະຖາບັນຂຶ້ນ. ພາຍໃຕ້ນະໂຍບາຍໃນປະຈຸບັນ, ໄດ້ສະເໜີໃຫ້ມີການສ້າງຕັ້ງໜ່ວຍງານສະເພາະກິດທີ່ປະກອບເອົາຫຼາຍຂະແໜງການເຂົ້ານຳເພື່ອຮັບປະກັນບັນຫາການເຄື່ອນຍ້າຍ ແລະ ການກາຍເປັນຕົວເມືອງໄດ້ຮັບການພິຈາລະນາ, ເອົາໃຈໃສ່ ແລະ ໄດ້ຮັບການແກ້ໄຂຢູ່ໃນແຜນພັດທະນາ ແລະ ຍຸດທະສາດຕ່າງໆ.

**ເປົ້າໝາຍ 5 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|

| | | |
|---|---|---|
| ມີຍຸດທະສາດ ເພື່ອແກ້ໄຂບັນຫາເຊື່ອມໂຍງລະຫວ່າງການພັດທະນາ ແລະ ເຄື່ອນຍ້າຍ | ບໍ່ມີຍຸດທະສາດ (2018) | ມີຍຸດທະສາດ (2030) |
| ມີນະໂຍບາຍແຫ່ງຊາດການເຕີບໂຕຂອງຕົວເມືອງ | ບໍ່ມີນະໂຍບາຍ (2018) | ມີນະໂຍບາຍ (2025) |

- **ຈຸດປະສົງ**

**2.5.1 ເພີ່ມຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບຜົນກະທົບຂອງທຸກໆຮູບແບບຂອງການເຄື່ອນຍ້າຍໃນການຈັດສົ່ງ ແລະ ຮັບແຮງງານຂອງ ສປປ ລາວ.**

ຖ້າຫາກວ່າການເຄື່ອນຍ້າຍຖືກຄຸ້ມຄອງເພື່ອເສີມຂະຫຍາຍການພັດທະນາແລ້ວ, ຈຳເປັນຕ້ອງມີຄວາມຮູ້ຫຼາຍຂຶ້ນກ່ຽວກັບຜົນກະທົບຂອງການເຄື່ອນຍ້າຍ. ຈະຕ້ອງໄດ້ສ້າງຍຸດທະສາດເພື່ອເພີ່ມຄວາມເຂົ້າໃຈເຖິງສາເຫດ ແລະ ຜົນສະທ້ອນຂອງຮູບແບບການເຄື່ອນຍ້າຍຕ່າງໆ ລວມທັງການກາຍມາເປັນຕົວເມືອງໃຫຍ່.

**2.5.2 ສ້າງນະໂຍບາຍການເຕີບໂຕຂອງຕົວເມືອງແຫ່ງຊາດ.**

ການກາຍມາເປັນຕົວເມືອງໃຫຍ່ແມ່ນຜົນສະທ້ອນມາຈາກການພັດທະນາເສດຖະກິດ ແລະ ຍັງແມ່ນຕົວຂັບເຄື່ອນໜຶ່ງຂອງການພັດທະນາ, ມັນຈຳເປັນທີ່ຕ້ອງມີການສ້າງນະໂຍບາຍທີ່ກ່ຽວຂ້ອງກັບທິດທາງ ແລະ ຮູບແບບໃນການກາຍເປັນຕົວເມືອງໃຫຍ່. ການຂະຫຍາຍຕົວຂອງຕົວເມືອງສ່ວນໃຫຍ່ແມ່ນມີຢູ່ແຕ່ນະຄອນຫຼວງວຽງຈັນເຊິ່ງເປັນສາເຫດໃຫ້ການພັດທະນາແມ່ນເລັ່ງໃສ່ຕົວເມືອງ "ເປັນຈຸດເລີ່ມຕົ້ນ". ບາງທີຮູບແບບການຂະຫຍາຍຕົວເມືອງອາດຈະຕ້ອງມີການສ້າງຕົວເມືອງທີສອງຂຶ້ນ ແລະ ສິ່ງເສີມແນວຄວາມຄິດນີ້ໂດຍຜ່ານນະໂຍບາຍການກາຍເປັນຕົວເມືອງໃຫຍ່. ນະໂຍບາຍນີ້ຈະໃຊ້ເວລາໃນການສ້າງ ແລະ ວາງແຜນສ້າງຫຼັງຈາກການວິເຄາະແນວໂນ້ມການກາຍເປັນຕົວເມືອງໃຫຍ່ຈາກການສຳຫຼວດປະຊາກອນປີ 2020 ສຳເລັດ;

**2.5.3 ແຜນພັດທະນາຕົວເມືອງໄດ້ກວມເອົາຜົນກະທົບຂອງການເຄື່ອນຍ້າຍຈາກເຂດຊົນນະບົດເຂົ້າສູ່ຕົວເມືອງ ແລະ ການເຕີບໂຕຂອງຕົວເມືອງຕໍ່ກັບຄວາມຕ້ອງການພື້ນຖານໂຄງລ່າງຂອງຕົວເມືອງ.**

ໃນໄລຍະການລາຍງານໄລຍະກາງ ແລະ ຍັງບໍ່ໄດ້ສ້າງນະໂຍບາຍການເປັນຕົວເມືອງໃຫຍ່ນັ້ນ ສິ່ງສຳຄັນແມ່ນຕ້ອງແກ້ໄຂບັນຫາຄວາມຕ້ອງການພື້ນຖານໂຄງລ່າງຂອງຕົວເມືອງເພື່ອໃຫ້ອຳນາດການປົກຄອງນຳເອົາຄວາມຕ້ອງການນີ້ເຂົ້າໃນແຜນ ແລະ ແຜນຍຸດທະສາດຕ່າງໆລວມທັງການຈັດຫາງົບປະມານ.

**2.5.4 ການປັບປຸງຄວາມເຂົ້າໃຈກ່ຽວກັບປະສົບການຂອງຊຸມຊົນຕໍ່ກັບການເຄື່ອນຍ້າຍການໄປອອກແຮງງານ ເຊິ່ງຈະສາມາດເພີ່ມຜົນປະໂຫຍດ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກການເຄື່ອນຍ້າຍ.**

ແຮງງານເຄື່ອນຍ້າຍສ່ວນໃຫຍ່ ແລະ ຄອບຄົວຂອງເຂົາເຈົ້າເຊື່ອວ່າການເຄື່ອນຍ້າຍນຳເອົາຜົນປະໂຫຍດ ແລະ ຄວາມກ້າວໜ້າມາສູ່ເຂົາເຈົ້າ ແລະ ຊຸມຊົນຂອງເຂົາເຈົ້າ. ເຖິງຢ່າງໃດກໍຕາມຕ້ອງຮັບປະກັນວ່າຜົນປະໂຫຍດນັ້ນໄດ້ຮັບການເສີມຂະຫຍາຍ. ການຫຼຸດຜ່ອນຄ່າໃຊ້ຈ່າຍໃນການສົ່ງເງິນກັບ ສປປ ລາວ ແມ່ນການວັດແທກການເສີມຂະຫຍາຍຜົນປະໂຫຍດອັນໜຶ່ງຄືການສົ່ງເງິນໃຫ້ທາງຄອບຄົວເກັບຮັກສາໄວ້, ບັນຫາອື່ນໆທີ່ຕ້ອງເອົາໃຈໃສ່ຕື່ມຄືການນຳໃຊ້ເງິນທີ່ສົ່ງກັບມາບ້ານ.

**2.5.5 ຫຼຸດຜ່ອນການຄ້າມະນຸດທຸກໆ ປະເພດ, ໂດຍສະເພາະແມ່ຍິງ ແລະ ເດັກຍິງ.**

ຜົນສະທ້ອນທາງລົບຂອງການເຄື່ອນຍ້າຍອັນໜຶ່ງ ແມ່ນແຮງງານເຄື່ອນຍ້າຍອາດຈະຖືກກົດຂີ່ຂູດຮີດແຮງງານ ແລະ ຖືກຈ້າງໄປປະກອບອາຊີບ ແລະ ສະຖານທີ່ທີ່ບໍ່ຖືກກັບຈຸດປະສົງ, ຄວາມຄາດຫວັງຫຼືຄວາມຕັ້ງໃຈຂອງເຂົາເຈົ້າ. ນະໂຍບາຍປະຊາກອນຈະສະໜັບສະໜູນກິດຈະກໍາໃນຂະແໜງການຕ່າງໆເພື່ອຫຼຸດຜ່ອນການຄ້າມະນຸດໂດຍສະເພາະໃນບັນດາແມ່ຍິງ ແລະ ເດັກຍິງ.

**2.5.6 ໃຫ້ການສະໜັບສະໜູນທີ່ເໝາະສົມກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອແກ້ໄຂບັນຫາການບາດເຈັບ ແລະ ການກັບຄືນສູ່ສັງຄົມ.**

ການຄ້າມະນຸດອາດເຮັດໃຫ້ບຸກຄົນໄດ້ຮັບການທໍລະມານ ແລະ ບາດເຈັບ ແລະ ຮຽກຮ້ອງໃຫ້ມີການຟື້ນຟູສະພາບຈິດໃຈ ແລະ ກັບຄືນເຂົ້າສັງຄົມ. ມາດຕະຖານແມ່ນຕ້ອງມີການສ້າງບ່ອນພັກທີ່ປອດໄພ ແລະ ບໍລິການໃຫ້ຄໍາປຶກສາລວມທັງການສະໜັບສະໜູນອື່ນໆແກ່ຜູ້ເຄາະຮ້າຍຈາກການຄ້າມະນຸດ.

## 2.6 ເປົ້າໝາຍ 6: ສປປ ລາວ ກຽມຄວາມພ້ອມເພື່ອຮັບມືກັບບັນຫາສິ່ງທ້າທາຍຂອງສັງຄົມອາຍຸສູງ ແລະ ສະໜັບສະໜູນປະຊາກອນຜູ້ອາຍຸສູງ

ປະເທດໜຶ່ງຈະຖືວ່າເປັນສັງຄົມອາຍຸສູງ (Ageing Society) ກໍ່ຕໍ່ເມື່ອປະຊາກອນຜູ້ອາຍຸສູງໃນເກນອາຍຸ 60 ປີຂຶ້ນໄປ ກວມ 10% ຂຶ້ນໄປຂອງຈໍານວນປະຊາກອນທັງໝົດ. ສໍາລັບ ສປປ ລາວ ປະຊາກອນຜູ້ອາຍຸສູງໃນເກນອາຍຸ 60 ປີຂຶ້ນໄປປີ 2005 ກວມ 5.7% ຂອງຈໍານວນປະຊາກອນທັງໝົດ, ປີ 2015 ກວມ 6.5% ຂອງຈໍານວນປະຊາກອນທັງໝົດ, ຄາດຄະເນຮອດປີ 2030 ຜູ້ອາຍຸສູງຈະເພີ່ມຂຶ້ນກວມ 9.02% ຂອງຈໍານວນປະຊາກອນທັງໝົດ ແລະ ຮອດປີ 2033 ຄາດຄະເນວ່າຜູ້ອາຍຸສູງຈະເພີ່ມຂຶ້ນກວມ 10% ຂອງຈໍານວນປະຊາກອນທັງໝົດ, ຈາກຕົວເລກຄາດຄະເນດັ່ງກ່າວ ສະແດງໃຫ້ເຫັນວ່າ ເມື່ອຮອດປີ 2033 ສປປ ລາວ ຈະກາຍເປັນປະເທດສັງຄົມອາຍຸສູງ.

ການກຽມຄວາມພ້ອມເພື່ອຮັບມືກັບສັງຄົມຜູ້ອາຍຸສູງ ແລະ ສະໜັບສະໜູນປະຊາກອນອາຍຸສູງ ຄວນມີການເລີ່ມຕົ້ນແຕ່ຫົວທີ. ຈາກບົດຮຽນຂອງຫຼາຍປະເທດໃນທົ່ວໂລກ ຖ້າຫາກມີການວາງແຜນທີ່ດີໄວ້ກ່ອນເພື່ອຮັບມືກັບສັງຄົມຜູ້ອາຍຸສູງ ແມ່ນຈະເປັນການແກ້ບັນຫາສິ່ງທ້າທາຍຂອງສັງຄົມອາຍຸສູງ ຫຼືຜູ້ອາຍຸສູງໄດ້ດີທີ່ສຸດ, ກົງກັນຂ້າມ ຖ້າບໍ່ມີການວາງແຜນທີ່ດີໄວ້ລ່ວງໜ້າ ບັນຫາສັງຄົມອາຍຸສູງກໍ່ຄືຜູ້ອາຍຸສູງໃນອະນາຄົດ ຈະພົບພໍ້ກັບຄວາມທ້າທາຍ ແລະ ເປັນສິ່ງຊໍາເຮື້ອ ເປັນຕົ້ນ ການສ້າງລະບົບປະກັນສັງຄົມ (Social Security) ເພື່ອຜູ້ອາຍຸສູງທີ່ທຸກຍາກ, ອະນາຖາ, ໂດດດ່ຽວປ່ຽວພອຍ, ການສ້າງລະບົບສະຫວັດດີການ (Social Welfare System) ທີ່ສະໜອງໃຫ້ຜູ້ອາຍຸສູງ, ການວາງແຜນງົບປະມານເພື່ອຮັບມືກັບສັງຄົມອາຍຸສູງ ຫຼືປະຊາກອນຜູ້ອາຍຸສູງອື່ນໆ. ໃນແຜນດໍາເນີນງານມາດຣິດສາກົນວ່າດ້ວຍຜູ້ອາຍຸສູງ Madrid International Plan of Action on Ageing (MIPAA) ໄດ້ລະບຸໜ້າວຽກຈໍານວນໜຶ່ງທີ່ສາມາດຮັບມືກັບສັງຄົມອາຍຸສູງ ຫຼື ປະຊາກອນອາຍຸສູງໄວ້ແລ້ວ ຊຶ່ງ ສປປ ລາວ ສາມາດຜັນຂະຫຍາຍ MIPAA ນີ້ມາພັດທະນາເປັນນະໂຍບາຍ, ແຜນຍຸດທະສາດ, ແຜນປະຕິບັດງານທີ່ແທດເໝາະກັບສະພາບ ແລະ ຄວາມເປັນຈິງຂອງ ສປປ ລາວ ແນໃສ່ເພື່ອຮັບມື ແລະ ແກ້ໄຂບັນຫາຜູ້ອາຍຸສູງທີ່ຈະປະເຊີນໜ້າໃນອະນາຄົດອັນໃກ້ນີ້.

**ເປົ້າໝາຍ 6 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|
| ມີການທົບທວນການຈັດຕັ້ງປະຕິບັດແຜນດໍາເນີນງານມາດຣິດສາກົນກ່ຽວກັບ ປະຊາກອນອາຍຸສູງ | ບໍ່ມີ (2019) | ການທົບທວນ1 ຄັ້ງ (2020) |

| | | |
|---|---|---|
| ມີການປັບປຸງນະໂຍບາຍແຫ່ງຊາດ, ສ້າງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດເພື່ອຜູ້ອາຍຸສູງ, ພ້ອມທັງໄດ້ຮັບການຮັບຮອງ ແລະ ປະກາດໃຊ້ຈາກລັດຖະບານ | ບໍ່ມີ (2019) | ສຳເລັດການປັບປຸງນະໂຍບາຍແຫ່ງຊາດ, ສ້າງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດເພື່ອຜູ້ອາຍຸສູງ, ພ້ອມທັງໄດ້ຮັບການຮັບຮອງ ແລະ ປະກາດໃຊ້ຈາກລັດຖະບານ (2023) |
| ມີລະບົບການອຸດໜູນທາງສັງຄົມ | ບໍ່ມີ (2019) | ມີລະບົບການອຸດໜູນທາງສັງຄົມທີ່ນຳໃຊ້ໄດ້ (2025) |
| ກຳນົດບົດຮຽນທີ່ດີເດັ່ນໃນການແກ້ໄຂບັນຫາຂອງຜູ້ອາຍຸສູງ | ບໍ່ມີ (2019) | ມີບົດຮຽນທີ່ດີເດັ່ນ (2021) |

- **ຈຸດປະສົງ**

**2.6.1 ທົບທວນການຈັດຕັ້ງປະຕິບັດແຜນດຳເນີນງານມາດຣິດສາກົນກ່ຽວກັບປະຊາກອນອາຍຸສູງ**

ແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງ MIPAA ໄດ້ຮັບຮອງຈາກບັນດາປະເທດກຳລັງພັດທະນາໃນປີ 2002. ເຊິ່ງໄດ້ສະໜອງແຜນແມ່ບົດໃນການແກ້ໄຂບັນຫາຜູ້ອາຍຸສູງໃຫ້ບັນດາປະເທດຕ່າງໆທີ່ມີຈຳນວນປະຊາກອນຜູ້ອາຍຸສູງເພີ່ມຂຶ້ນ ຫຼື ມີທ່າອ່ຽງທີ່ຈະເພີ່ມຂຶ້ນໃນອະນາຄົດ. ສປປ ລາວ ກໍເປັນປະເທດໜຶ່ງທີ່ໃຫ້ການສະໜັບສະໜູນແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງ ແລະ ໄດ້ປະຕິບັດຕາມເນື້ອໃນຂອງແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງ ຕາມຄວາມສາມາດ ແລະ ສະພາບຄວາມເປັນຈິງຂອງ ສປປ ລາວ ຕະຫຼອດທົດສະວັດເຄິ່ງທີ່ຜ່ານມາ, ຊຶ່ງ ສປປ ລາວ ໄດ້ອອກດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍແຫ່ງຊາດ ເພື່ອຜູ້ອາຍຸສູງ ຢູ່ ສປປ ລາວ, ໄດ້ອອກນະໂຍບາຍແຫ່ງຊາດ ເພື່ອຜູ້ອາຍຸສູງ ຢູ່ ສປປ ລາວ ແລະ ໄດ້ອອກດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການແຫ່ງຊາດເພື່ອຄົນພິການ ແລະ ຜູ້ອາຍຸສູງ. ສ່ວນໜຶ່ງຂອງການກຽມຄວາມພ້ອມເພື່ອຮັບມືກັບສິ່ງທ້າທາຍຂອງສັງຄົມຜູ້ອາຍຸສູງ ແລະ ສະໜັບສະໜູນປະຊາກອນຜູ້ອາຍຸສູງ ແມ່ນທົບທວນການຈັດຕັ້ງປະຕິບັດແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງ ແລະ ສ້າງບົດແນະນຳ ພ້ອມດ້ວຍມາດຕະການເພີ່ມເຕີມ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງໃນ ສປປ ລາວ.

**2.6.2 ປັບປຸງນະໂຍບາຍແຫ່ງຊາດ, ສ້າງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ເພື່ອຜູ້ອາຍຸສູງ.**

ປັບປຸງນະໂຍບາຍແຫ່ງຊາດ, ສ້າງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ເພື່ອຜູ້ສູງອາຍຸສູງ ແມ່ນການຈັດຕັ້ງປະຕິບັດເພື່ອຮັບມືກັບສັງຄົມອາຍຸສູງ ແລະ ສະໜັບສະໜູນປະຊາກອນຜູ້ອາຍຸສູງໂດຍກົງ. ການປັບປຸງນະໂຍບາຍແຫ່ງຊາດ, ສ້າງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ເພື່ອຜູ້ອາຍຸສູງນີ້ ຈະໄດ້ພິຈາລະນາກຳນົດເອົາ ບັນດາເນື້ອໃນຕົ້ນຕໍທີ່ໄດ້ລະບຸໄວ້ໃນແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງ ປີ 2002 ມາຜັນຂະຫຍາຍເປັນເນື້ອໃນຂອງນະໂຍບາຍແຫ່ງຊາດ, ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ເພື່ອຜູ້ອາຍຸສູງຂອງ ສປປ ລາວ ດັ່ງກ່າວ, ຊຶ່ງບັນດາເນື້ອໃນຕົ້ນຕໍທີ່ໄດ້ລະບຸໄວ້ໃນແຜນດຳເນີນງານສາກົນມາດຣິດວ່າດ້ວຍຜູ້ອາຍຸສູງ ມີດັ່ງນີ້:

1. ຜູ້ອາຍຸສູງ ແລະ ການພັດທະນາ

   ຜູ້ອາຍຸສູງ ແລະ ການພັດທະນາ ຈະກວມເອົາບັນດາເນື້ອໃນດັ່ງນີ້:

- ການມີສ່ວນຮ່ວມຂອງຜູ້ອາຍຸສູງໃນສັງຄົມ ແລະ ການພັດທະນາ
- ການມີວຽກເຮັດງານທຳຂອງຜູ້ອາຍຸສູງ
- ການພັດທະນາຊົນນະບົດ, ການຍ້າຍຖິ່ນ ແລະ ການຂະຫຍາຍຂອງຕົວເມືອງ
- ການສຶກສາ ແລະ ການຝຶກອົບຮົມ
- ການເສີມສ້າງຄວາມສຳພັນລະຫວ່າງໄວ (ໄວເດັກ, ໄວໜຸ່ມ, ໄວຜູ້ອາຍຸສູງ)

- ການລຶບລ້າງຄວາມທຸກຍາກ
- ການຮັບປະກັນລາຍຮັບ, ການປົກປ້ອງສັງຄົມ ຫຼື ການປະກັນສັງຄົມ ແລະ ການປ້ອງກັນຄວາມທຸກຍາກ
- ຜູ້ອາຍຸສູງໃນສະຖານະສຸກເສີນ

2. ອາຍຸສູງຢ່າງມີສຸຂະພາບ ແລະ ມີຊີວິດທີ່ດີ
   ອາຍຸສູງຢ່າງມີສຸຂະພາບ ແລະ ມີຊີວິດທີ່ດີ ຈະກວມເອົາບັນດາເນື້ອໃນດັ່ງນີ້:
- ການສົ່ງເສີມສຸຂະພາບ ແລະ ມີຊີວິດການເປັນຢູ່ທີ່ດີຕະຫຼອດຊີວິດ
- ການເຂົ້າເຖິງການບໍລິການສຸຂະພາບຢ່າງເທົ່າທຽມ ແລະ ທົ່ວເຖິງ
- ຜູ້ອາຍຸສູງກັບໂລກເອດ
- ການຝຶກອົບຮົມຜູ້ດູແລ ແລະ ບຸກຄະລາກອນສາທາລະນະສຸກ
- ການດູແລສຸຂະພາບຈິດຜູ້ອາຍຸສູງ
- ຜູ້ອາຍຸສູງກັບຄວາມພິການ

3. ສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ແລະ ເໝາະສົມຕໍ່ຜູ້ອາຍຸສູງ
   ສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ແລະ ເໝາະສົມຕໍ່ຜູ້ອາຍຸສູງ ຈະກວມເອົາບັນດາເນື້ອໃນດັ່ງນີ້:
- ບ້ານພັກອາໄສ ແລະ ສະພາບແວດລ້ອມຂອງການດໍາລົງຊີວິດ
- ການສະໜັບສະໜູນຜູ້ທີ່ເຮັດໜ້າທີ່ດູແລຜູ້ອາຍຸສູງ
- ຜູ້ອາຍຸສູງທີ່ໂດດດ່ຽວປ່ຽວພອຍ, ຖືກລະເລີຍປະປ່ອຍ, ຖືກລະເມີດ ແລະ ຖືກໃຊ້ຄວາມຮຸນແຮງ
- ການສົ່ງເສີມພາບລັກຂອງຜູ້ອາຍຸສູງ

### 2.6.3 ສຶກສາຄວາມເປັນໄປໄດ້ຂອງການສ້າງກອງທຶນຄວາມຮັ່ງມີ (wealth fund) ເພື່ອສະໜັບສະໜູນເບັ້ຍລ້ຽງສໍາລັບທຸກຄົນ.

"ເງິນອຸດໜູນປະຊາກອນຄັ້ງທີສອງ" ໝາຍເຖິງໝາກຜົນຂອງການພັດທະນາທີ່ເກີດຂຶ້ນຈາກການສະສົມທຶນທີ່ມີຈຸດປະສົງເພື່ອສະໜັບສະໜູນຜູ້ອາຍຸສູງ. ຫຼາຍປະເທດທີ່ພັດທະນາແລ້ວ ແລະ ປະເທດກໍາລັງພັດທະນາຈໍານວນໜຶ່ງໄດ້ສ້າງກອງທຶນຄວາມຮັ່ງມີ ເພື່ອສະໜອງຫຼືເພີ່ມເຕີມລາຍການເກັບລາຍຮັບຈາກການເກັບອາກອນເພື່ອຈ່າຍເງິນໃຫ້ພະນັກງານບໍານານ, ຜູ້ຢູ່ນອກລະບົບບໍານານ. ອາກອນທີ່ເກັບໄດ້ຈາກກອງທຶນດັ່ງກ່າວ ຈະຊ່ວຍຫຼຸດຄວາມກົດດັນທາງງົບປະມານຂອງລັດຖະບານທີ່ຮັບຜິດຊອບໃນການສະໜອງບໍານານລັດ. ການພັດທະນາກອງທຶນຄວາມຮັ່ງມີເໝາະສົມ ໂດຍສະເພາະໃນບັນດາປະເທດທີ່ລັດຖະບານມີລາຍຮັບມາຈາກການເກັບພາສີຈາກຊັບພະຍາກອນທໍາມະຊາດເທົ່ານັ້ນ. ໃນເວລາດຽວກັນ, ກອງທຶນຄວາມຮັ່ງມີຍັງເປັນແຫຼ່ງທຶນເພື່ອລົງທຶນໃສ່ການພັດທະນາ. ໃນຈຸດປະສົງນີ້ຈະໄດ້ມີການແຕ່ງຕັ້ງໜ່ວຍງານສະເພາະກິດຂຶ້ນເພື່ອສຶກສາເຖິງຄວາມເປັນໄປໄດ້ສໍາລັບ ສປປ ລາວ.

### 2.6.4 ດໍາເນີນການຄົ້ນຄວ້າແບບສົມທຽບ ເພື່ອກໍານົດບົດຮຽນການປະຕິບັດທີ່ດີທີ່ສຸດ ໃນການກຽມຄວາມພ້ອມສໍາລັບປະຊາກອນອາຍຸສູງ.

ບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ໄດ້ມີບົດຮຽນ ແລະ ປະສົບການໃນການແກ້ໄຂບັນຫາຜູ້ອາຍຸສູງ, ລວມທັງປະເທດໄທ. ສປປ ລາວ ສາມາດຮຽນຮູ້ຈາກປະສົບການຂອງບັນດາປະເທດເຫຼົ່ານັ້ນ ເນື່ອງຈາກວ່າບັນຫາຜູ້ອາຍຸສູງຢູ່ ສປປ ລາວ ເກີດຂຶ້ນນໍາຫຼັງບັນດາປະເທດດັ່ງກ່າວ. ວຽກງານນີ້ຈະໄດ້ມີການຄົ້ນຄວ້າປຽບທຽບ ແລະ ທັດສະນະສຶກສາແລກປ່ຽນບົດຮຽນຈາກພາກພື້ນ ແລະ ສາກົນ ຂອງພະນັກງານພາກລັດຈາກກະຊວງກົມ

ກອງກ່ຽວຂ້ອງກັບວຽກງານຜູ້ອາຍຸສູງ, ລວມທັງອົງການຈັດຕັ້ງທາງສັງຄົມທີ່ເຄື່ອນໄຫວວຽກງານຜູ້ອາຍຸສູງດ້ວຍ.

## 2.7 ເປົ້າໝາຍ7: ປັບປຸງລະບົບຖານຂໍ້ມູນດ້ານປະຊາກອນໃຫ້ຄົບຖ້ວນ ແລະ ມີຄຸນນະພາບຕາມມາດຕະຖານສາກົນ

ຂໍ້ມູນປະຊາກອນທີ່ມີຄຸນນະພາບດີເປັນເງື່ອນໄຂທີ່ຈຳເປັນຕໍ່ການຄຸ້ມຄອງການປະຊາກອນ ແລະ ການສ້າງນະໂຍບາຍ. ຄຸນນະພາບຂອງຂໍ້ມູນປະຊາກອນສາມາດວັດແທກໄດ້ຈາກຄວາມຖືກຕ້ອງຊັດເຈນ ແລະ ເຊື່ອຖືໄດ້ເຊິ່ງຫມາຍເຖິງຄວາມຜິດພາດດ້ານຂໍ້ມູນແມ່ນມີໜ້ອຍຢູ່ໃນລະດັບທີ່ຍອມຮັບໄດ້. ໃນການສຳຫຼວດປະຊາ ກອນ , ຄວາມຜິດພາດປະເພດໜຶ່ງທີ່ເຫັນໄດ້ແມ່ນຕົວເລກຂອງກຸ່ມອາຍຸ ແລະ ຄວາມຫຍຸ້ງຍາກໃນການເຂົ້າເຖິງ (ການປົກຄຸມບໍ່ທົ່ວເຖິງ). ການຫຼຸດຜ່ອນຄວາມຜິດພາດໜ້ອຍລົງເຮັດໃຫ້ບໍ່ຈຳເປັນຕ້ອງໄດ້ໃຊ້ວິທີການປັບຂໍ້ມູນໃນລະບົບສະຖິຕິ, ດັ່ງນັ້ນ, ການຄາດຄະເນຕົວເລກສະຖິຕິໃຫ້ມີຄວາມຖືກຕ້ອງຊັດເຈນຫຼາຍຂຶ້ນ. ຂໍ້ມູນການສຳຫຼວດທີ່ມີຜົນມາຈາກການເກັບກຳຕົວຢ່າງທີ່ຜິດພາດເຮັດໃຫ້ມີຂໍ້ຈຳກັດ ໃນການວັດແທກຕົວຊີ້ວັດໃນລະດັບທ້ອງຖິ່ນ ການມີຂໍ້ມູນເປັນສິ່ງສຳຄັນຕໍ່ການນຳໃຊ້ໃນການວາງແຜນ ແລະ ການບໍລິຫານຄຸ້ມຄອງ.ໃນຍຸກສະໄໝອິນເຕີເນັດ, ສາມາດເຂົ້າປັບປຸງຂໍ້ມູນໄດ້ທາງອິນເຕີເນັດໄປພ້ອມກັບການນຳໃຊ້ເຈ້ຍເອກະສານແບບດັ້ງເດີມ. ເຄື່ອງມືທາງໃນອິນເຕີເນັດເຮັດໃຫ້ຜູ້ຊົມໃຊ້ສາມາດດັດປັບຂໍ້ມູນ ແລະ ເລືອກໄດ້ຕາມຈຸດປະສົງຄວາມຕ້ອງການສະເພາະຂອງເຂົາເຈົ້າ, ເຊັ່ນ: ເຂດພື້ນທີ່ທີ່ບໍ່ນອນຢູ່ໃນມາດຕະຖານຫຼືກຸ່ມຊົນເຜົ່າ. ຂໍ້ມູນຈາກການສຳຫຼວດປະຊາກອນ ແລະ ການສຳຫຼວດອື່ນໆມັກຈະບໍ່ຖືກວິເຄາະ, ດັ່ງນັ້ນຂໍ້ມູນທີ່ມີຄຸນຄ່ານັ້ນບໍ່ໄດ້ຖືກນຳມາໃຊ້ເພື່ອໃຫ້ເກີດຜົນປະໂຫຍດໃນການສ້າງນະໂຍບາຍ. ຈຳເປັນທີ່ຕ້ອງມີຄວາມພະຍາຍາມທີ່ຈະເຮັດໃຫ້ຂໍ້ມູນຈາກການຈົດທະບຽນ ແລະ ສະຖິຕິພົນລະເມືອງ, ການສຳຫຼວດປະຊາກອນ ແລະ ການສຳຫຼວດອື່ນໆນັ້ນໄດ້ຮັບການວິເຄາະດ້ວຍກົນໄກຕ່າງໆລວມທັງການເຜີຍແຜ່ບົດລາຍງານການວິເຄາະຄວາມຫຼາກຫຼາຍຂອງພົນລະເມືອງ-ການຕາຍ, ການຈະເລີນພັນ ແລະ ການເຄື່ອນຍ້າຍ.

**ເປົ້າໝາຍ 7 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|
| ຈຳນວນຫົວຂໍ້ການວິໄຈກ່ຽວກັບປະຊາກອນ | 7 (2019-20) | 10 (2028-29) |
| ດັດສະນີການລາຍງານອາຍຸທີ່ຖືກຕ້ອງ | ບໍ່ມີຂໍ້ມູນ | (ໃຫ້ຄິດໄລ່ໄດ້ໃນປີ 2025) |
| ຄາດຄະເນການຕົກຫຼົ່ນຈາກການນັບພົນລະເມືອງ | ບໍ່ມີຂໍ້ມູນ | (ໃຫ້ມີຂໍ້ມູນປີຖານ 2025) |
| ເຄື່ອງມືການເຜີຍແຜ່ຂໍ້ມູນທາງອອນລາຍທີ່ມີ | 2 (2018) | 4 (2020) |

- **ຈຸດປະສົງ**

**2.7.1 ປັບປຸງລະບົບຖານຂໍ້ມູນດ້ານປະຊາກອນໃຫ້ມີຄວາມຄົບຖ້ວນ, ຕໍ່ເນື່ອງ ແລະ ທັນເວລາ ຈາກຖານຂໍ້ມູນ 2 ແຫຼ່ງຄື:**

- ຖານຂໍ້ມູນທີ່ໄດ້ຈາກການສຳຫຼວດ
  - ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ທຸກໆ 10 ປີ;

– ການຈົດນັບພົນລະເມືອງກາງສະໄໝ ທຸກໆ 5 ປີ;

– ການສຳຫຼວດດັດສະນີໝາຍສັງຄົມລາວ ທຸກໆ 5 ປີ;

– ການສຳຫຼວດກຳລັງແຮງງານ ທຸກໆ 5 ປີ;

– ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ ທຸກໆ 5 ປີ.

- ຖານຂໍ້ມູນທີ່ໄດ້ຈາກລະບົບລາຍງານບໍລິຫານ
  – ລະບົບການຈົດທະບຽນພົນລະເມືອງ ປະຈຳປີ;
  – ລະບົບສະຖິຕິຂັ້ນທ້ອງຖິ່ນ ປະຈຳປີ.

### 2.7.2 ເພີ່ມການວິໄຈລົງເລິກຂໍ້ມູນ ກ່ຽວກັບປະຊາກອນ

ຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015 ແລະ 2025, ການຈົດນັບພົນລະເມືອງກາງສະ ໄໝ ປີ 2020, ການສຳຫຼວດດັດສະນີໝາຍສັງຄົມລາວ ປີ 2017, ປີ 2022 ແລະ ປີ 2027, ການສຳຫຼວດກຳລັງແຮງງານ ປີ 2017, ປີ 2022 ແລະ ປີ 2027, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ ປີ 2018, ປີ 2023 ແລະ ປີ 2028 ແລະ ຈາກການສຳຫຼວດອື່ນໆ ຈະເປັນຖານຂໍ້ມູນທີ່ສຳຄັນໃນການວິໄຈລົງເລິກຫົວຂໍ້ຕ່າງໆກ່ຽວກັບປະຊາກອນ ເພື່ອໃຫ້ເຫັນເຖິງບັນຫາທີ່ແທ້ຈິງ ແລະ ຫາວິທີແກ້ໄຂ ໂດຍສະເພາະການວາງແຜນວາງນະໂຍບາຍໃຫ້ຖືກຕ້ອງກັບປະຊາກອນແຕ່ລະຂົງເຂດໃນຂອບເຂດທົ່ວປະເທດ. ນອກນັ້ນຍັງສະໜັບສະໜູນໃຫ້ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ 2019-2030 ແລະ ນະໂຍບາຍ ອື່ນໆກ່ຽວຂ້ອງກັບປະຊາກອນ.

### 2.7.3 ປັບປຸງຄຸນນະພາບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແລະ ຂໍ້ມູນການສຳຫຼວດແບບຕົວແທນຜ່ານການຫຼຸດຜ່ອນຄວາມຜິດພາດທາງດ້ານອາຍຸ ແລະ ປັບປຸງອັດຕາການປົກຄຸມຂອງການສຳຫຼວດພົນລະເມືອງ.

ຈາກການພັດທະນາວິທີການໃນການຈົດນັບ ເພື່ອຫຼຸດຜ່ອນຄວາມຜິດພາດທາງດ້ານຂໍ້ມູນອາຍຸໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແລະ ການສຳຫຼວດຕົວແທນ ແລະ ປັບປຸງການປົກຄຸມຂອງປະຊາກອນໃນເວລາສຳຫຼວດ, ເລີ່ມຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2025 ເປັນຕົ້ນໄປ.

### 2.7.4 ການປັບປຸງການເຂົ້າເຖິງຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແລະ ຂໍ້ມູນການສຳຫຼວດແບບຕົວແທນ ຜ່ານເຄື່ອງມືດີຈີຕອນ, ອອນລາຍ, ການຂຶ້ນບັນຊີຄົວເຮືອນ ແລະ ການນຳໃຊ້ໂປແກມ

ການເຜີຍແຜ່ຂໍ້ມູນການສຳຫຼວດພົນລະເມືອງ ແລະ ການສຳຫຼວດຕົວແທນຢູ່ ສປປ ລາວ ແມ່ນໄດ້ມີບົດລາຍງານລົງທາງເວບໄຊທີ່ສາມາດເຂົ້າໄປເບິ່ງໄດ້ ແລະ ດາວໂຫຼດ. ມີຖານຂໍ້ມູນອອນລາຍທີ່ຜູ້ໃຊ້ສາມາດດາວໂຫຼດໄດ້ໃນເວັບໄຊທ໌ຂອງລາວອິນໂຟ ແລະ ລາວດີຊາຍ, ຂັ້ນຕອນໃນຕໍ່ໜ້າຈະນຳໃຊ້ຊອບແວ ເພື່ອໃຫ້ຜູ້ນຳໃຊ້ສາມາດນຳໃຊ້ຂໍ້ມູນມາສ້າງຕາຕະລາງ, ເສັ້ນສະແດງ ແລະ ແຜນທີ່ໄດ້ຕາມຈຸດປະສົງໃນການວິເຄາະຂໍ້ມູນ. ຕົວຢ່າງຂອງຊອບແວດັ່ງກ່າວແມ່ນເຣດາທາມ REDATAM, ໂປແກມສ້າງຂຶ້ນໂດຍສູນປະຊາກອນປະເທດອາເມລິກາລາຕິນ ແລະ ຄາລິບຽນ (CELADE) ໂດຍການສະໜັບສະໜູນຈາກອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ UNFPA. ໂປແກມ REDATAM ໄດ້ຕິດຕັ້ງຢູ່ທຸກໆປະເທດໃນບັນດາປະເທດອາເມລິກາລາຕິນ ລວມທັງບັນດາປະເທດອາຊີຈຳນວນໜຶ່ງເຊັ່ນ: (ກຳປູເຈຍ, ບັງກະລາເທດ). ຈະໄດ້ມີຂັ້ນຕອນໃນການທົດລອງຊອບແວນີ້ ແລະ ຖ້າພົບວ່າເໝາະສົມແມ່ນຈະໄດ້ຕິດຕັ້ງຢູ່ຫ້ອງການສະຖິຕິແຫ່ງຊາດ.

**2.7.5 ປັບປຸງການສະໜອງຂໍ້ມູນດ້ານກຳລັງແຮງງານ ແລະ ຕະຫຼາດແຮງງານໃຫ້ມີຄຸນນະພາບດີ ທຽບເທົ່າສາກົນ.**

ມີຄວາມຈຳເປັນຕ້ອງໄດ້ປັບປຸງຂໍ້ມູນກ່ຽວກັບກຳລັງແຮງງານ ແລະ ຕະຫຼາດແຮງງານ. ຕ້ອງໄດ້ພັດທະນາຕົວຊີ້ວັດເຊັ່ນວ່າ: ການຫວ່າງງານ, ການເຮັດວຽກບໍ່ເຕັມເວລາ ແລະ ວຽກບໍ່ເໝາະສົມກັບວຸດທິການສຶກສາ ແລະ ບໍ່ໄດ້ຮັບການສຶກສາ ແລະ ຝຶກອົບຮົມ (NEET) ເພື່ອໃຫ້ໄດ້ຕາມມາດຕະຖານສາກົນ.

**2.7.6 ເພີ່ມຜົນການສຳຫຼວດພົນລະເມືອງ ແລະ ສາຍພົວພັນໃນການພັດທະນາໃຫ້ຫຼາຍຂຶ້ນ.**

ການຄົ້ນຄ້ວາສຳຫຼວດກ່ຽວກັບສາຍພົວພັນລະຫວ່າງຄວາມຫຼາກຫຼາຍຂອງປະຊາກອນ ແລະ ການພັດ ທະນາເສດຖະກິດ-ສັງຄົມ ຢູ່ ສປປ ລາວ ແມ່ນມີຈຳກັດ. ພາຍໃຕ້ຫົວຂໍ້ນີ້ຍຸດທະສາດການຄົ້ນຄວ້າວິໄຈຈະຖືກສ້າງຂຶ້ນເພື່ອຊຸກຍູ້ການຄົ້ນຄວ້າ ແລະ ສ້າງຄວາມສາມາດໃຫ້ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນ ຄ້ວາຕ່າງໆ.

**2.7.7 ປັບປຸງການສະໜອງຂໍ້ມູນການຂ້າມຊາຍແດນ ແລະ ຄາດຄະເນການເຄື່ອນຍ້າຍໄປຕ່າງປະເທດ.**

ຂໍ້ມູນກ່ຽວກັບການເຄື່ອນຍ້າຍໄປຕ່າງປະເທດໃນ ສປປ ລາວ ແມ່ນມີຈຳກັດຫຼາຍ. ການຄາດຄະເນຕົວເລກຄົນລາວຢູ່ຕ່າງປະເທດໃນປະຈຸບັນສ່ວນໃຫຍ່ແມ່ນອີງໃສ່ຂໍ້ມູນການສຳຫຼວດຂອງປະເທດປາຍທາງ. ຂໍ້ມູນຈາກການສຳຫຼວດພົນລະເມືອງ ຫຼື ຄົວເຮືອນກ່ຽວກັບສະມາຊິກຄອບຄົວທີ່ອາໄສຢູ່ຕ່າງປະເທດໃນປະຈຸບັນນັ້ນມີຂໍ້ມູນກ່ຽວກັບແຮງງານເຄື່ອນຍ້າຍໜ້ອຍຫຼາຍ. ການໄຫຼວຽນຂອງການເຄື່ອນຍ້າຍຂ້າມຊາຍແດນລາວໃນປະຈຸບັນຍັງບໍ່ໄດ້ວັດແທກການຄາດຄະເນກ່ຽວກັບຂະໜາດຂອງການເຄື່ອນຍ້າຍ. ຕ້ອງໄດ້ມີການວັດແທກການໄຫຼວຽນຂອງການເຄື່ອນຍ້າຍຂ້າມແດນອາດຈະໄດ້ລວມເອົາການບັນທຶກເອົາການເຄື່ອນຍ້າຍຂ້າມແດນທັງໝົດ. ຕ້ອງໄດ້ມີການການຄົ້ນຄວ້າເຖິງຄວາມເປັນໄປໄດ້ໃນການນຳໃຊ້ວິທີການນັບຕົວເລກປະຊາກອນເພື່ອຄາດຄະເນຕົວເລກຂອງການເຄື່ອນຍ້າຍໄປຕ່າງປະເທດ.

**2.7.8 ເພີ່ມອັດຕາການຈົດທະບຽນການເກີດ ແລະ ການເສຍຊີວິດ ຜ່ານລະບົບການຈົດທະບຽນ ແລະ ສະຖິຕິພົນລະເມືອງ.**

ການຈົດທະບຽນ ແລະ ສະຖິຕິພົນລະເມືອງ ແມ່ນເປັນສິ່ງທີ່ຈຳເປັນ ເພາະມັນເປັນການໃຫ້ເອກະລັກທາງດ້ານກົດໝາຍ ຊຶ່ງເປັນພື້ນຖານໃຫ້ແກ່ການຜະລິດສະຖິຕິພົນລະເມືອງ, ທີ່ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາກ່ຽວກັບອັດຕາການເກີດ, ການຕາຍ, ອາຍຸຍືນສະເລ່ຍ, ການຍ້າຍຖິ່ນຖານຂໍ້ມູນເຫຼົ່ານີ້ຈະຊ່ວຍກຳນົດນະ ໂຍບາຍ ເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມໄດ້ດີຍິ່ງຂຶ້ນ. ລັດຖະບານໄດ້ວາງວິໄສທັດຮອດປີ 2030 ພົນລະເມືອງລາວທຸກຄົນຈະໄດ້ຊົມໃຊ້ການບໍລິການຂອງລະບົບການຈົດທະບຽນ ແລະ ສະຖິຕິພົນລະເມືອງຢ່າງທົ່ວເຖິງ ແລະ ມີປະສິດທິພາບ, ຊຶ່ງຈະຈັດຕັ້ງປະຕິບັດໂຄງການສ້າງຖານຂໍ້ມູນດ້ວຍລະບົບທີ່ທັນສະໄໝ ຕາມຍຸດທະສາດວຽກງານການຈົດທະບຽນ ແລະ ສະຖິຕິພົນລະເມືອງໄລຍະ 10 ປີ (2016-2025)

**2.7.9 ຄວາມຄືບໜ້າໃນການສ້າງ ລະບົບຂໍ້ມູນສຸຂະພາບ.**

ສປປ ລາວ ກຳລັງສ້າງລະບົບຂໍ້ມູນສຸຂະພາບ (HIS) ເຊິ່ງຈະຊ່ວຍຫຼຸດການຄາດຄະເນການເກີດ ແລະ ການຕາຍ ໂດຍທາງອ້ອມຈາກຂໍ້ມູນສຳຫຼວດປະຊາກອນ ແລະ ການສຳຫຼວດອື່ນໆ. ນອກຈາກນັ້ນ, ຫຼັງຈາກການສ້າງລະບົບແລ້ວ, ລະບົບຂໍ້ມູນສຸຂະພາບຈະສະໜອງຂໍ້ມູນກ່ຽວກັບປະຊາກອນໃນຫົວຂໍ້ຕ່າງໆ ເຊັ່ນ: ການວາງແຜນຄອບຄົວ, ການກວດກ່ອນການເກີດ ແລະ ການດູແລທີ່ຈຳເປັນສຳລັບເດັກເກີດໃໝ່ໃນໄລຍະທຳອິດ (EENC). ການສ້າງລະບົບນີ້ເຫັນວ່າໃນປະຈຸບັນມີຄວາມຄືບໜ້າດີ ແຕ່ສິ່ງສຳຄັນແມ່ນຕ້ອງສ້າງໃຫ້ສຳເລັດໄວໄດ້ດີທີ່ສຸດ ແລະ ນຳມາໃຊ້ໃຫ້ເກີດຜົນ. ຈະຕ້ອງໄດ້ເອົາໃຈໃສ່ໃນການຂະຫຍາຍລະບົບການເກັບກຳຂໍ້ມູນຂອງລະບົບຂໍ້ມູນ

ສຸຂະພາບ ໂດຍສະເພາະແມ່ນບັນດາຕົວຊີ້ວັດທີ່ສ້າງຂື້ນກໍຄືຈໍານວນສະຖານທີ່ທີ່ມີການລາຍງານ (ລວມທັງພາກເອກະຊົນ). ພະນັກງານຫຼາກຫຼາຍພາກສ່ວນຈະໄດ້ຮັບການຝຶກອົບຮົມແບບເລັ່ງລັດລວມທັງນັກສະຖິຕິຂັ້ນແຂວງ ແລະ ເມືອງ.

## 2.8 ເປົ້າໝາຍ 8: ການເຊື່ອມສານຂໍ້ມູນດ້ານປະຊາກອນເຂົ້າໃນແຜນຍຸດທະສາດ, ແຜນການແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ.

ຄວາມຫຼາກຫຼາຍຂອງປະຊາກອນມີຜົນກະທົບຕໍ່ກັບການພັດທະນາໃນຫຼາຍດ້ານ ເພາະສະນັ້ນມັນຈຶ່ງພົວພັນກັບແຜນຂອງຂະແໜງການຕ່າງໆ ລວມທັງແຜນພັດທະນາແຫ່ງຊາດ ແລະ ແຜນຍຸດທະສາດ. ດັ່ງນັ້ນ, ວຽກງານປະຊາກອນແມ່ນບັນຫາລວມທີ່ນັກວາງແຜນໃນແຕ່ລະຂົງເຂດຕ້ອງໄດ້ຄໍານຶງເຖິງໃນການວາງແຜນ. ຈາກມຸມມອງໃນການປະຕິບັດຕົວຈິງມັນເປັນການຍາກທີ່ນະໂຍບາຍປະຊາກອນແຫ່ງຊາດ ຈະແກ້ໄຂບັນຫາປະຊາກອນຂອງແຕ່ລະຂະແໜງການສະເພາະ ຫຼື ແຕ່ລະຂົງເຂດສະເພາະ ທີ່ເກີດຂື້ນຢູ່ກັບສະພາບຂອງການວາງແຜນພັດທະນາ. ໃນບັນດາປະເທດກໍາລັງພັດທະນາແຕ່ລະແຂວງ ຫຼື ຂົງເຂດແມ່ນມີຄວາມແຕກຕ່າງກັນ ເພາະສະນັ້ນນະໂຍບາຍຕ້ອງມີຄວາມແທດເໝາະກັບສະພາບຂອງແຕ່ລະຂົງເຂດເຊັ່ນດຽວກັນ, ດັ່ງນັ້ນ ແຕ່ລະຂະ ແໜງການຕ້ອງເລັ່ງໃສ່ແກ້ໄຂບັນຫາສະເພາະທີ່ບໍ່ສາມາດແກ້ໄຂໄດ້ໃນລະດັບນະໂຍບາຍລະດັບຊາດ. ຍ້ອນເຫດຜົນນີ້, ມັນຈຶ່ງຈໍາເປັນຕ້ອງໄດ້ມີການເຊື່ອມຄວາມຫຼາກຫຼາຍຂອງປະຊາກອນເຂົ້າໃນທັງແຜນຂອງຂະແໜງການ ແລະ ແຜນການຂອງແຂວງ ຫຼື ທ້ອງຖິ່ນ.

ຂັ້ນຕອນທໍາອິດແມ່ນຕ້ອງໄດ້ຮອບຮວມຂໍ້ມູນເພີ່ມເຕີມ ກ່ຽວກັບການນໍາໃຊ້ຂໍ້ມູນປະຊາກອນໃນແຜນຂອງຂະແໜງການ, ແຜນຍ່ອຍແຫ່ງຊາດ ແລະ ຍຸດທະສາດ. ຈະໄດ້ທົບທວນແຜນຂອງຂະແໜງການ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2016-2020 ເພື່ອປະເມີນການນໍາໃຊ້ຂໍ້ມູນປະຊາກອນ ແລະ ແນະນໍາວິທີການແກ້ໄຂ. ຂັ້ນຕອນທີສອງແມ່ນການຝຶກອົບຮົມເພີ່ມເຕີມກ່ຽວກັບການນໍາໃຊ້ຂໍ້ມູນປະຊາກອນໃຫ້ແກ່ນັກວາງແຜນຂັ້ນແຂວງ. ໃນການຝຶກອົບຮົມນັ້ນຈະໄດ້ມີການກະກຽມ, ປຶ້ມແນະນໍາ ແລະ/ຫຼືຄູ່ມືກ່ຽວກັບການເຊື່ອມສານວຽກງານປະຊາກອນເຂົ້າໃນການວາງແຜນພັດທະນາ ທັງພາສາອັງກິດ ແລະ ພາສາລາວ. ປຶ້ມແນະນໍາເຫຼົ່ານີ້ຈະຖືກກະກຽມສະເພາະໃຫ້ນັກວາງແຜນຂັ້ນແຂວງ ແລະ ຂັ້ນເມືອງ ລວມທັງແຜນຂອງຂະ ແໜງການ, ພິເສດແມ່ນເລັ່ງໃສ່ການນໍາໃຊ້ຂໍ້ມູນຈາກການສໍາຫຼວດພົນລະເມືອງ ແລະ ການສໍາຫຼວດຕ່າງໆ.

**ເປົ້າໝາຍ 8 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|
| ຈໍານວນແຜນຂອງຂະແໜງການທີລວມເອົາຂໍ້ມູນດ້ານປະຊາກອນເຂົ້າ | 0 (2018) | 5 (2030) |
| ຈໍານວນບຸກຄະລະກອນທີ່ໄດ້ຮັບການຝຶກອົບຮົມໃນການເຊື່ອມການພັດທະນາດ້ານປະຊາກອນເຂົ້າໃນແຜນ | 0 (2018) | 100 (2030) |
| ເຄື່ອງມືໃນການເຊື່ອມສານ | 0 (2018) | 25 (2030) |

- **ຈຸດປະສົງ**

**2.8.1 ທົບທວນ ແລະ ປະເມີນການນໍາໃຊ້ຂໍ້ມູນດ້ານປະຊາກອນໃນແຜນຂອງຂະແໜງການ ແລະ ແຜນພັດທະນາແຫ່ງຊາດ.**

ການທົບທວນແຜນການແຫ່ງຊາດ, ແຜນຂອງຂະແໜງການ ແລະ ແຜນຂອງແຂວງທີ່ໄດ້ຄັດເລືອກນັ້ນຕ້ອງໄດ້ດໍາເນີນໂດຍມີທີ່ປຶກສາພາຍໃນ ຫຼື ຕ່າງປະເທດ ຫຼື ຄະນະທີມງານຂະໜາດນ້ອຍເຂົ້າຮ່ວມນໍາ. ການທົບທວນຈະເບິ່ງຕົວຢ່າງຂອງແຜນການຕ່າງໆ ແລະ ເອົາຄໍາເຫັນຈາກນັກວາງແຜນໃນແຕ່ລະຂັ້ນເພື່ອນໍາໃຊ້ຂໍ້ມູນຂອງປະຊາກອນໃຫ້ມີຜົນປະໂຫຍດສູງສຸດ.

**2.8.2 ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານວາງແຜນ ໃນການນໍາໃຊ້ຂໍ້ມູນດ້ານປະຊາກອນເພື່ອການວາງແຜນເຊິ່ງປະກອບມີການນໍາໃຊ້ການຄາດຄະເນປະຊາກອນ.**

ຈະໄດ້ມີໂຄງການຝຶກແອບ ແລະ ຈັດຕັ້ງປະຕິບັດໃນບັນດາແຂວງ, ເມືອງທີ່ຖືກຄັດເລືອກ, ກະຊວງຫຼັກ ແລະ ອົງການຈັດຕັ້ງຕ່າງໆ. ການສ້າງຂໍ້ແນະນໍາ ແລະ/ຫຼືຄູ່ມືກໍແມ່ນສ່ວນໜຶ່ງຂອງການຝຶກອົບຮົມ ແລະ ນໍາມາທົດລອງນໍາໃຊ້ກັບຂັ້ນແຂວງ. ຫຼັກສູດກ່ຽວກັບປະຊາກອນ ແລະ ການພັດທະນາຈະໄດ້ຮັບການພັດທະນາຢູ່ໃນມະຫາວິທະຍາໄລແຫ່ງຊາດ ແລະ ສ້າງໂອກາດການຮ່ວມມືລະຫວ່າງລັດຖະບານ.

**2.8.3 ພະນັກງານມີຄວາມຕື່ນຕົວຫຼາຍຂຶ້ນໃນການເອົາຂໍ້ມູນດ້ານປະຊາກອນທີ່ກ່ຽວຂ້ອງເຂົ້າໃນການວາງແຜນທຸກຮູບແບບ.**

ໂດຍຜ່ານບົດສະຫຼຸບນະໂຍບາຍ ແລະ ເອກະສານອື່ນໆ, ພະນັກງານພາກລັດ ເຊັ່ນ ສະມາຊິກສະພາແຫ່ງຊາດ, ເຈົ້າແຂວງ ແລະ ບັນດາລັດຖະມົນຕີຈະໄດ້ມີຄວາມຮູ້ກ່ຽວກັບສາຍສໍາພັນລະຫວ່າງປະຊາກອນ ແລະ ການພັດທະນາ. ໃນກິດຈະກໍານີ້ກໍຈະເຮັດໃຫ້ມີຄວາມຮັບຮູ້ກ່ຽວກັບນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາຫຼາຍຂຶ້ນ ໂດຍຜ່ານການສ້າງ ແລະ ແຈກຢາຍແຜ່ນພັບ ແລະ ສື່ຕ່າງໆ.

**2.9 ເປົ້າໝາຍ 9: ບັນລຸຄວາມສະເໝີພາບຍິງ-ຊາຍ ໃນຂົງເຂດສັງຄົມ, ເສດຖະກິດ ແລະ ການເມືອງ ແລະລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ**

ບົດບາດຍິງ-ຊາຍ ແມ່ນບັນຫາລວມທີ່ຕິດພັນກັບແຜນ ແລະ ຍຸດທະສາດການພັດທະນາ. ເຖິງຢ່າງໃດກໍ່ຕາມ, ບົດບາດຍິງ-ຊາຍມີຄວາມສໍາຄັນພິເສດຕໍ່ກັບຄວາມຫຼາກຫຼາຍຂອງພົນລະເມືອງ ບໍ່ພຽງແຕ່ສໍາຄັນໃນຂົງເຂດການຈະເລີນພັນ ແລະ ການວາງແຜນຄອບຄົວເທົ່ານັ້ນ ແຕ່ຍັງສໍາຄັນຕໍ່ກັບເດັກ ແລະ ເບິ່ງແຍງຜູ້ອາຍຸສູງ. ໃນຂົງເຂດຂອງພົນລະເມືອງ, ການມີສ່ວນຮ່ວມໃນກໍາລັງແຮງງານ, ການສຶກສາ ແລະ ການສະໜອງການດູແລສຸຂະພາບທົ່ວໄປ. ການບັນລຸຄວາມສະເໝີພາບຍິງ-ຊາຍແມ່ນເປົ້າໝາຍສໍາຄັນຂອງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ພ້ອມດ້ວຍການຈັດຕັ້ງປະຕິບັດໂຄງການຕ່າງໆຂອງລັດຖະບານ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ. ວິທີການຕົ້ນຕໍໃນການແກ້ໄຂຄວາມບໍ່ສະເໝີພາບຍິງ-ຊາຍແມ່ນການສະໜັບສະໜູນສະຫະພັນແມ່ຍິງລາວ, ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນການສ້າງກົດໝາຍຄວາມສະເຫມີພາບຍິງ-ຊາຍ. ຈະເລັ່ງໃສ່ການປັບປຸງການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ, ຍຸດທະສາດແຫ່ງຊາດເພື່ອແມ່ ແລະ ເດັກ ລວມທັງແຜນດໍາເນີນງານດັ່ງກ່າວ ແລະ ແຜນດໍາເນີນງານແຫ່ງຊາດເພື່ອການສະກັດກັ້ນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. ຄວາມບໍ່ສະເໝີພາບແມ່ນຍ້ອນແມ່ຍິງມີຄວາມຈໍາກັດໃນຕໍາແໜ່ງຕັດສິນບັນຫາ. ຈະຕ້ອງມີການຈັດຕັ້ງປະຕິບັດເພື່ອເພີ່ມທະວີການມີສ່ວນຮ່ວມຂອງແມ່ຍິງໃນຕໍາແໜ່ງນໍາພາຄຸ້ມຄອງຢູ່ທຸກຂັ້ນ. ການສ້າງສະພາບແວດລ້ອມໃນການເຮັດວຽກ ແລະ ການຮຽນທີ່ປອດໄພໃຫ້ແມ່ຍິງ ແລະ ເດັກຍິງ ປາສະຈາກການລ່ວງລະເມີດທາງເພດແມ່ນຈຸດປະສົງທີ່ສໍາຄັນ.

**ເປົ້າໝາຍ 9 ຕົວຊີ້ວັດ, ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**

| ຕົວຊີ້ວັດ | ຂໍ້ມູນເບື້ອງຕົ້ນ /ປີ | ຄາດໝາຍ/ປີ |
|---|---|---|
| ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ (GII) | 0.468 (2015) | 0.350 (2030) |
| ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) | 0.924 (2015) | 0.995 (2030) |
| ແມ່ຍິງທີ່ມີອາຍຸຕັ້ງແຕ່ 15-49 ປີ ຖືກທຳຮ້າຍຮ່າງກາຍຈາກຄູ່ຮ່ວມຊີວິດ ໃນ 12 ເດືອນຜ່ານມາ | 4% (2015) | 2% (2030) |
| ແມ່ຍິງທີ່ມີອາຍຸຕັ້ງແຕ່ 15-49 ປີ ຖືກທຳຮ້າຍຮ່າງກາຍ ຫຼື ຄວາມຮຸນແຮງທາງເພດຈາກຄູ່ຮ່ວມຊີວິດ ໃນ 12 ເດືອນຜ່ານມາ | 6.4% (2014) | 4% (2030) |
| ແມ່ຍິງທີ່ມີອາຍຸຕັ້ງແຕ່ 15-49 ປີ ໄດ້ຮັບຄວາມຮຸນແຮງທາງເພດໂດຍບໍ່ແມ່ນຄູ່ຮ່ວມຊີວິດຂອງຕົນ ໃນ 12 ເດືອນຜ່ານມາ | 1% (2014) | 0.5% (2030) |
| ແມ່ຍິງທີ່ມີອາຍຸຕັ້ງແຕ່ 15-49 ປີ ໄດ້ຮັບຄວາມຮຸນແຮງທາງເພດ ຫຼື ທຳຮ້າຍຮ່າງກາຍໂດຍບໍ່ແມ່ນຄູ່ຮ່ວມຊີວິດຂອງຕົນ ໃນຊ່ວງຊີວິດ | 9.7% (2014) | 6% (2030) |

- **ຈຸດປະສົງ**

**2.9.1 ສຳເລັດຮ່າງກົດໝາຍຄວາມສະເໝີພາບຍິງ-ຊາຍ ແລະ ອະນຸມັດໂດຍສະພາແຫ່ງຊາດ.**

ສະໜັບສະໜູນກິດຈະກຳຕ່າງໆໃນຂະບວນການສ້າງກົດຫມາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ເພື່ອຮັບປະກັນໃຫ້ໄດ້ຖືກຮັບຮອງຈາກສະພາແຫ່ງຊາດໃນທ້າຍປີ 2019 ແລະ ການຮ່າງດຳລັດໃນການຈັດຕັ້ງຜັນຂະຫຍາຍກົດໝາຍດັ່ງກ່າວ ດ້ວຍການຊ່ວຍເຫຼືອທາງດ້ານວິຊາການເພື່ອທົບທວນກົດໝາຍທີ່ກ່ຽວຂ້ອງຂອງບັນດາປະເທດໃນຂົງເຂດ ແລະ ພາກພື້ນ, ຈັດກອງປະຊຸມກັບຄູ່ຮ່ວມງານ ລວມທັງການເຜີຍແຜ່ກົດໝາຍສະບັບນີ້ພາຍຫຼັງທີ່ໄດ້ປະກາດໃຊ້ຢ່າງເປັນທາງການ.

**2.9.2 ຊຸກຍູ້ການຈັດຕັ້ງປະຕິບັດແຜນປະຕິບັດແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບ ລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (2014-2020) ແລະ ແຜນຍຸດທະສາດຄວາມສະເໝີພາບຍິງ-ຊາຍ ແລະ ແຜນດຳເນີນງານ.**

ທົບທວນການຈັດຕັ້ງປະຕິບັດແຜນດຳເນີນງານເພື່ອປະເມີນຄວາມເປັນໄປໄດ້ໃນການປັບປຸງ ແລະ ກະຕຸກຊຸກຍູ້ການຈັດຕັ້ງປະຕິບັດໃຫ້ຫຼາຍຂຶ້ນ.

**2.9.3 ອັດຕາສ່ວນແມ່ຍິງໃນຕຳແໜ່ງນຳພາ ແລະ ຕັດສິນບັນຫາໃນທຸກຂັ້ນເພີ່ມຂຶ້ນ.**

ຈຳນວນແມ່ຍິງໃນຕຳແໜ່ງນຳພາ ແລະ ຕັດສິນບັນຫາແມ່ນຍັງມີໜ້ອຍ, ບໍ່ວ່າຈະຢູ່ໃນຂັ້ນບ້ານ, ຂັ້ນເມືອງ, ຂັ້ນແຂວງ, ລັດຖະບານ (ກະຊວງ/ອົງການ) ລວມທັງໃນຂົງເຂດທຸລະກິດ. ການຝຶກອົບຮົມພາວະການເປັນຜູ້ນຳ ແລະ ບົດບາດຍິງ-ຊາຍ ລວມທັງການຄົ້ນຄວ້າສ້າງນິຕິກຳ ສະເພາະໃນວຽກດັ່ງກ່າວຈະສົ່ງເສີມໃຫ້ແມ່ຍິງມີຄວາມສາມາດເຂົ້າເຖິງຕຳແໜ່ງການຕັດສິນບັນຫາ ແລະ ສົ່ງເສີມຫຼັກການຂອງການມີສ່ວນຮ່ວມຂອງແມ່ຍິງໃນຂະບວນການທາງດ້ານການເມືອງ-ສັງຄົມ.

**2.9.4 ແມ່ຍິງ ແລະ ເດັກຍິງມີສະພາບແວດລ້ອມໃນການເຮັດວຽກ ແລະ ໂຮງຮຽນທີ່ປອດໄພປາດສະຈາກການລ່ວງລະເມີດທາງເພດ ແລະ ໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ.**

ແມ່ຍິງມີສິດທີ່ຈະເຂົ້າຮຽນ ແລະ ເຮັດວຽກໃນສະພາບແວດລ້ອມທີ່ປາດສະຈາກການລ່ວງລະເມີດທາງເພດ ແລະ ໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແຕ່ສິດທິນີ້ບໍ່ໄດ້ຖືກເຄົາລົບສະເໝີໄປ. ຈຳເປັນຕ້ອງມີຂໍ້ມູນ

ກ່ຽວກັບການລ່ວງລະເມີດທາງເພດ ແລະ ໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນສະພາບແວດລ້ອມການເຮັດວຽກ ແລະ ການສຶກສາ, ດັ່ງນັ້ນຈະໄດ້ມີການສຶກສາສຳຫຼວດເພື່ອກຳນົດຂະໜາດຂອງບັນຫາ. ຈະໄດ້ສ້າງຂໍ້ແນະນຳຂະບວນການທີ່ຖືກຕ້ອງໃຫ້ບັນດາສະຖາບັນເພື່ອແກ້ໄຂບັນຫານີ້ ແລະ ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ຜູ້ເຄາະຮ້າຍຮູ້ສິດທິຂອງເຂົາເຈົ້າ.

### 2.9.5 ແມ່ຍິງດຳເນີນທຸລະກິດ ແລະ ເປັນເຈົ້າຂອງທຸລະກິດຫຼາຍຂຶ້ນ

ໃນຂະນະທີ່ແມ່ຍິງປະສົບຜົນສຳເລັດຫຼາຍໃນການເຮັດທຸລະກິດ ແຕ່ແມ່ຍິງມີໂອກາດໃນການເຮັດທຸລະກິດມີຈຳກັດກວ່າຜູ້ຊາຍ. ເພື່ອເຮັດໃຫ້ແມ່ຍິງມີໂອກາດໃນການດຳເນີນທຸລະກິດຫຼາຍຂຶ້ນນັ້ນຕ້ອງໄດ້ສ້າງໂຄງການຝຶກອົບຮົມໃຫ້ແມ່ຍິງ ແລະ ໃຫ້ເຂົາເຈົ້າໄດ້ຮັບການຝຶກອົບຮົມ.

# ພາກທີ III: ການບໍລິຫານການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນຂອງສະຖາບັນ

## 1. ຍຸດທະສາດການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ແມ່ນການຮ່ວມມືທີ່ຮຽກ ຮ້ອງໃຫ້ມີສ່ວນຮ່ວມ ແລະ ຄວາມມຸ້ງໝັ້ນຂອງລັດຖະບານໃນທຸກຂັ້ນ ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະ ບານ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະ ປະຊາຊົນເອງ. ນອກຈາກກົນໄກການປະສານງານແລ້ວ, ຈະບໍ່ໄດ້ສ້າງຕັ້ງສະຖາບັນໃໝ່ຂຶ້ນອີກມາຈັດຕັ້ງປະຕິບັດນະໂຍບາຍນີ້. ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ມີຢູ່ໃນປະຈຸບັນຈະເປັນຜູ້ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາບັນດາກິດຈະກຳທີ່ເຂົາເຈົ້າຖືກມອບໝາຍໃຫ້ຢູ່ໃນຕາຕະລາງຈັດຕັ້ງປະຕິບັດ (ເບິ່ງລຸ່ມນີ້). ຄວາມຮັບຜິດຊອບທົ່ວໄປຂອງແຕ່ລະຂັ້ນ ແລະ ອົງການຈັດຕັ້ງຂອງລັດຖະບານມີດັ່ງນີ້:

**1.1 ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ**

ມີຄວາມຮັບຜິດຊອບໃນການປະສານງານການຈັດຕັ້ງປະຕິບັດຂອງນະໂຍບາຍ, ລວມເປັນກອງເລຂາໃຫ້ກັບທັງຄະນະກຳມະການປະສານງານນະໂຍບາຍປະຊາກອນ. ກົມແຜນການຈະຈັດກອງປະຊຸມຄະນະກຳມະການປະ ສານງານນະໂຍບາຍປະຈຳປີ ແລະ ຈະຮວບຮວມສະຫຼຸບບົດລາຍງານກອງປະຊຸມ.

**1.2 ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ**

ຮັບຜິດຊອບໃນການເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນດ້ານປະຊາກອນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອສະໜອງຂໍ້ມູນໃຫ້ແກ່ການຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດດ້ານປະຊາກອນ.

**1.3 ບັນດາກະຊວງ, ລວມທັງສູນກາງສະຫະພັນແມ່ຍິງລາວ, ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ**

ບັນດາກະຊວງຕ່າງໆເປັນຜູ້ຈັດຕັ້ງປະຕິບັດນະໂຍບາຍຕົ້ນຕໍ ແລະ ມີໜ້າທີ່ຮັບຜິດຊອບໃນການດຳເນີນກິດຈະກຳ ແລະ ບັນລຸຜົນໄດ້ຮັບທີ່ກຳນົດໄວ້ໃນແຜນວຽກຕາມຕາຕະລາງການຈັດຕັ້ງປະຕິບັດ. ແຕ່ລະກະຊວງຫຼືອົງການຈັດຕັ້ງປະຕິບັດຈະມີຕາງໜ້າຢູ່ໃນຄະນະກຳມະການປະສານງານນະໂຍບາຍ ແລະ ຈະລາຍງານການຕໍ່ຄະນະກຳມະການໃນກອງປະຊຸມຕິດຕາມກວດກາປະຈຳປີກ່ຽວກັບກິດຈະກຳທີ່ເຂົາເຈົ້າໄດ້ຈັດຕັ້ງປະຕິບັດໃນປີທີ່ຜ່ານມາ. ເຖິງແມ່ນວ່າຫ້ອງການສະຖິຕິແຫ່ງຊາດບໍ່ແມ່ນກະຊວງແຕ່ກໍແມ່ນອົງການຈັດຕັ້ງປະຕິບັດ ດັ່ງນັ້ນຈຶ່ງມີຕົວແທນຢູ່ໃນຄະນະກຳມະການປະສານງານນະໂຍບາຍ ແລະ ລາຍງານຕໍ່ຄະນະກຳມະການກ່ຽວກັບວຽກງານສະຖິຕິ.

ບັນດາກະຊວງທີ່ບໍ່ມີຄວາມຮັບຜິດຊອບໂດຍກົງຕໍ່ການຈັດຕັ້ງປະຕິບັດກິດຈະກຳໃນແຜນວຽກຕາມຕາຕະລາງການຈັດຕັ້ງປະຕິບັດ ແຕ່ມີຄວາມສົນໃຈກັບກິດຈະກຳຕ່າງໆຫຼືມີບົດບາດຮ່ວມມືກັບກະຊວງທີ່ຈັດປະຕິບັດຕົ້ນຕໍອາດຈະເປັນສະມາຊິກຂອງຄະນະກຳມະການປະສານງານນະໂຍບາຍກໍໄດ້ ແລະ ລາຍງານຕໍ່ຄະນະກຳມະການເຖິງສິດຂອງເຂົາເຈົ້າເອງຫຼືຮ່ວມມືກັບກະຊວງທີ່ເປັນຜູ້ຈັດຕັ້ງປະຕິບັດຫຼັກ.

**1.4 ອົງການປົກຄອງຂັ້ນແຂວງ ແລະ ເມືອງ**

ແຂວງ ແລະ ເມືອງ ເປັນຄູ່ຮ່ວມງານໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຄາດວ່າຈະໃຫ້ການສະໜັບສະ ໜູນສາຍການຈັດຕັ້ງຂອງກະຊວງໃນການຈັດຕັ້ງປະຕິບັດກິດຈະກຳຕາມປົກກະຕິ. ບັນດາແຂວງທີ່ຄັດເລືອກ (ໜຶ່ງແຂວງຕໍ່ພາກ) ຈະເປັນຕົວແທນໃນຄະນະກຳມະການປະສານງານນະໂຍບາຍ ເພື່ອສະແດງທັດສະນະຂອງແຂວງຕໍ່ກັບບັນຫາການໃນການຈັດຕັ້ງປະຕິບັດ, ໂດຍສະເພາະບັນດາອຸປະສັກໃນການຈັດຕັ້ງປະຕິບັດໃນຂັ້ນໃນທ້ອງຖິ່ນ.

**1.5 ອົງການຈັດຕັ້ງພາກລັດອື່ນໆ**

ອົງການຈັດຕັ້ງຕ່າງໆເຊັ່ນ ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດໄດ້ຖືກມອບໝາຍໃຫ້ມີກິດຈະກຳໃດໜຶ່ງ ຫຼື ຫຼາຍເປົ້າໝາຍຕາມການກຳນົດໄວ້ໃນຕາຕະລາງການຈັດຕັ້ງປະຕິບັດ. ອົງການເຫຼົ່ານີ້ສາມາດລາຍງານໃຫ້ຄະນະກຳມະການປະສານງານຕໍ່ສິດທິຂອງຕົນເອງໃນນາມເປັນສະມາຊິກທີ່ມີການຄັດເລືອກຫຼືອາດຈະໃຫ້ກົມແຜນການເປັນຕົວແທນໃຫ້ກໍໄດ້.

**1.6 ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງສາກົນ**

ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທັງພາຍໃນ ແລະ ຕ່າງປະເທດແມ່ນອົງການຈັດຕັ້ງທີ່ຮ່ວມມືກັບບັນດາກະຊວງທີ່ກ່ຽວຂ້ອງຫຼືແຜນຍຸດທະສາດຫຼືແຜນຂອງຂະແໜງການ ເຊັ່ນວ່າ ກະຊວງທີ່ກ່ຽວຂ້ອງອາດຈະລາຍງານກິດຈະກຳທີ່ໄດ້ມອບໝາຍໃຫ້ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານເປັນຜູ້ຈັດຕັ້ງປະຕິບັດ. ເຊັ່ນດຽວກັນ, ບັນດາໂຄງການ ຫຼື ຂອງອົງການຈັດຕັ້ງສາກົນໃຫ້ການສະໜັບສະໜູນແຜນການຂອງຂະແໜງການ ຫຼື ກະຊວງທີ່ກ່ຽວຂ້ອງ. ອົງການຈັດຕັ້ງສາກົນອາດຈະສະໜອງທຶນຫຼືການຊ່ວຍເຫຼືອດ້ານວິຊາການເພື່ອສະໜັບສະໜູນກິດຈະກຳຫຼືຜົນໄດ້ຮັບໃນລະດັບຂະແໜງການ. ອົງການຈັດຕັ້ງສາກົນສາມາດປະກອບສ່ວນທາງດ້ານການເງິນເພື່ອສະໜັບສະ ໜູນການຈັດຕັ້ງປະຕິບັດກິດຈະກຳຕ່າງໆທີ່ເຂົາເຈົ້າບໍ່ໄດ້ປະຕິບັດເອງ. ໂດຍທົ່ວໄປແລ້ວ, ອົງການສາກົນ ແລະ ອົງ

ການຈັດຕັ້ງທີ່ບໍ່ສັງກັດລັດຖະບານແມ່ນບໍ່ໄດ້ມີຕົວແທນຢູ່ໃນຄະນະກຳມະການປະສານງານ, ແຕ່ວ່າກະຊວງທີ່ກ່ຽວຂ້ອງຈະໄດ້ລາຍງານກ່ຽວກັບບັນຫາຂອງບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ NGO ຫຼື ອົງການສາກົນ ທີ່ເກີດຂຶ້ນ.

## 2. ການປະສານງານ

ຄະນະກຳມະການປະສານງານນະໂຍບາຍປະຊາກອນ (PPCC) ຈະຖືກສ້າງຕັ້ງຂຶ້ນເພື່ອເບິ່ງລວມບັນຫາ ແລະ ຊີ້ນຳການປະຕິບັດນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030. ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຈະເປັນປະທານຄະນະກຳມະການປະສານງານນະໂຍບາຍປະຊາກອນ. ສະມາຊິກຂອງຄະນະກຳມະການຈະປະກອບດ້ວຍຫົວໜ້າກົມຂອງບັນດາກະຊວງ ແລະ ອົງການຈັດຕັ້ງຕ່າງໆ (ລວມທັງສະຫະພັນແມ່ຍິງ ແລະ ຊາວໜຸ່ມ), ພ້ອມດ້ວຍຜູ້ຕາງຫນ້າຈາກສີ່ແຂວງທີ່ຄັດເລືອກຕາມທີ່ໄດ້ກ່າວມາຂ້າງເທິງ. ຫົວໜ້າກົມກົມແຜນການຈະເປັນສະມາຊິກເກົ່າຂອງຄະນະກຳມະການປະສານງານນະໂຍບາຍປະຊາກອນ. ຄະນະກຳມະການປະສານງານນະໂຍບາຍປະຊາກອນຈະໄດ້ຮັບການສະໜັບສະໜູນຈາກກອງເລຂາທີ່ຖືກສ້າງຂຶ້ນພາຍໃນກົມແຜນການຂອງກະຊວງແຜນການ ແລະ ການລົງທຶນ.

ຕາມປົກກະຕິແລ້ວ ຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC ຈະມີການປະຊຸມປະຈຳປີໃນສອງຈຸດປະສົງຕົ້ນຕໍຄື: (1) ຮັບການລາຍງານຈາກບັນດາກະຊວງທີ່ຈັດຕັ້ງປະຕິບັດກິດຈະກຳ ແລະ ອົງການຈັດຕັ້ງຕ່າງໆຕໍ່ກັບກິດຈະກຳ ແລະ ຜົນໄດ້ຮັບໃນປີຜ່ານມາ; (2) ອະນຸມັດຫຼືຮັບຮອງແຜນວຽກໃນປີຕໍ່ໄປ. ແຜນວຽກຄັ້ງທຳອິດສຳລັບປີ 2019 ແມ່ນບັນຈຸຢູ່ໃນຕາຕະລາງການຈັດຕັ້ງປະຕິບັດ (ເບິ່ງລຸ່ມນີ້). ແຜນວຽກໃນຄັ້ງຕໍ່ໄປຈະຖືກຮວບຮວມ ແລະ ນຳສະເໜີຕໍ່ກອງປະຊຸມຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC ເພື່ອຮັບຮອງ. ແຜນວຽກຫລັງຈາກປີ 2019 ອາດຈະເປັນປະຈຳປີຫຼືສອງປີຕາມຄວາມຕ້ອງການຂອງຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC. ອາດມີຄວາມຈຳເປັນຕ້ອງມີການປ່ຽນແປງແຜນວຽກໃນເວລາມີການປັບປຸງແຜນຂອງຂະແໜງການ ແລະ ຍຸດທະສາດ, ນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ ປີ 2019-2030 ອາດມີການເລື່ອນອອກໄປຕື່ມກາຍແຜນຂອງຂະແໜງການໃນປະຈຸບັນ.

ຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC ອາດຈະຮ້ອງຂໍບົດລາຍງານເພີ່ມເຕີມຕາມຄວາມຈຳເປັນ ເຊັ່ນ: ຈາກຊ່ຽວຊານດ້ານປະຊາກອນ, ສະຖານະການປະຊາກອນຂອງປະເທດຫຼືບັນດາບັນຫາອື່ນໆທີ່ກ່ຽວຂ້ອງກັບນະໂຍບາຍປະຊາກອນ. ຄະນະກຳມະການປະສານງານນະໂຍບາຍປະຊາກອນ ຍັງອາດຈະປັບປຸງຍຸດທະສາດການຈັດຕັ້ງປະຕິບັດໂດຍການເພີ່ມ, ລຶບລ້າງຫຼືດັດແປງກິດຈະກຳຕ່າງໆຫຼືທົບທວນຈຸດປະສົງຂອງນະໂຍບາຍ, ລວມທັງຕົວຊີ້ວັດ ແລະ ຄາດໝາຍ. ຄະນະກຳມະການປະສານງານນະໂຍບາຍປະຊາກອນ ຈະບໍ່ສາມາດເພີ່ມເຕີມຫຼືລຶບລ້າງເປົ້າໝາຍນະໂຍບາຍໃດໆ, ເວັ້ນເສຍແຕ່ມີການສະເໜີໃນການທົບທວນຄືນໃນໄລຍະກາງ. ໃນບ່ອນທີ່ມີຂໍ້ມູນໃໝ່ທີ່ຕ້ອງມີການດັດປັບຕາມຂໍ້ມູນໃນເບື້ອງຕົ້ນຫຼືຄາດໝາຍ, ຄະນະກຳມະການປະສານງານນະໂຍບາຍປະ ຊາກອນ ຕາມປົກກະຕິຈະອະນຸມັດການປ່ຽນແປງທີ່ຈຳເປັນ ແລະ ຍັງຈະສາມາດເອົາຄຳແນະນຳກ່ຽວກັບແຫຼ່ງຂໍ້ມູນທາງສະຖິຕິອື່ນໆເພື່ອມາຕັດສິນໃຈກ່ຽວກັບແຫຼ່ງຂໍ້ມູນທີ່ຄວນນຳມາເພື່ອຕິດຕາມນະໂຍບາຍ. ໂດຍທົ່ວໄປແລ້ວ, ກະຊວງຈະເປັນຜູ້ນຳໃນຂົງເຂດທີ່ຕົນເອງມີຄວາມຊ່ຽວຊານ, ພາຍໃຕ້ຄຳແນະນຳຈາກຫ້ອງການສະຖິຕິແຫ່ງຊາດ.

## 3. ການລາຍງານ, ການຕິດຕາມ ແລະ ການປະເມີນຜົນ

ການລາຍງານຕໍ່ ຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳ ແລະ ຄວາມຄືບໜ້າຕໍ່ຜົນໄດ້ຮັບ ແລະ ຈຸດປະສົງຂອງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ NPDP 2019-2030 ເປັນຫນ້າທີ່ຮັບຜິດຊອບຂອງອົງການຈັດຕັ້ງທີ່ຈັດຕັ້ງປະຕິບັດກິດຈະກຳ, ເຊິ່ງແມ່ນ

ບັນດາສາຍການຈັດຕັ້ງຂອງບັນດາກະຊວງ. ສູນກາງສະຫະພັນແມ່ຍິງລາວ, ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວລາວ, ມະຫາວິທະຍາ ໄລແຫ່ງຊາດ ແລະ ຫ້ອງການສະຖິຕິແຫ່ງຊາດ ຈະລາຍງານຜົນການຈັດຕັ້ງປະຕິບັດຂອງຕົນເອງຄືກັບບັນດາກະ ຊວງຕ່າງໆ. ກອງເລຂາຈະເປັນຜູ້ອອກແບບ ແລະ ກະກຽມຮູບແບບການລາຍງານ ເຊິ່ງກອງເລຂາຈະໄດ້ຮັບບົດລາຍງານຈາກບັນດາສະມາຊິກກ່ອນເປີດກອງປະຊຸມ. ການລາຍງານຈະມີຂຶ້ນໃນກອງປະຊຸມປະຈຳປີຂອງຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC ເວັ້ນເສຍແຕ່ວ່າປະທານເປັນຜູ້ຕັດສິນເຊິ່ງອາດຈະມີຫຼາຍກວ່າໜຶ່ງກອງປະຊຸມຕໍ່ປີ, ແຕ່ໂດຍທົ່ວໄປບໍ່ເກີນສອງຄັ້ງ.

ບົດລາຍງານການຕິດຕາມກວດກາ ໂດຍລວມແມ່ນທາງກອງເລຂາຂອງຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC ເຊິ່ງແມ່ນການຮວບຮວມບົດລາຍງານຂອງສະມາຊິກທັງໝົດ. ບົດລາຍງານການຕິດຕາມກວດກາທັງໝົດຈະປະກອບມີການປະເມີນຄວາມຄືບໜ້າ ແລະ ອຸປະສັກທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດ.

ການທົບທວນໄລຍະກາງຂອງນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ NPDP 2019-2030 ຈະໄດ້ຮັບການປະຕິບັດໃນປີ 2023 ແລະ ການທົບທວນສຸດທ້າຍໃນປີ 2029. ກອງເລຂາຂອງ PPCC ຈະສ້າງຍຸດທະສາດໃນການທົບທວນ ແລະ ຮັບການອະນຸມັດໃນກອງປະຊຸມປະຈຳປີຂອງຄະນະກຳມະການປະສານງານນະໂຍບາຍປະຊາກອນ PPCC.

# ພາກທີ IV: ຕາຕະລາງ ການຈັດຕັ້ງປະຕິບັດ

# ກອບການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດດ້ານປະຊາກອນ ແລະ ການພັດທະນາ (NPDP)

## ວິໄສທັດ: ຮອດປີ 2030, ປະຊາກອນຢູ່ ສປປ ລາວໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມ ຢ່າງສະເໝີພາບ ແລະ ເປັນທຳຫຼາຍຂຶ້ນ

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| **ເປົ້າໝາຍ 1:** ສົ່ງເສີມສຸຂະພາບຈະເລີນພັນໃນກຸ່ມຄົນທີ່ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ<br><br>**ຕົວຊີ້ວັດໃນລະດັບເປົ້າໝາຍ:**<br>ອັດຕາການຕາຍຂອງແມ່;<br><br>ອັດຕາການເກີດລູກໃນຊາວໜຸ່ມ.<br>ອັດຕາການຢາກວາງແຜນຄອບຄົວແຕ່ບໍ່ສາມາດເຂົ້າເຖິງການບໍລິການ;<br><br>ເປີເຊັນຂອງຄວາມຕ້ອງການວາງແຜນຄອບຄົວທີ່ໄດ້ຮັບ | 1.1 ເລັ່ງການຫຼຸດລົງຂອງການຕາຍ ແລະ ການເຈັບເປັນຂອງແມ່ ໂດຍສະເພາະໃນກຸ່ມຄົນດ້ອຍໂອກາດ ແລະ ມີຄວາມສ່ຽງໃນຂອບເຂດທົ່ວປະເທດ | ເພີ່ມ CPR ສຳລັບວິທີທັນສະໄໝ (mCPR) (1.1)[12]. | ສ້າງຍຸດທະສາດ ***IEC / BCC*** ກ່ຽວກັບການວາງແຜນຄອບຄົວ<br>ສະໜອງການຝຶກອົບຮົມ ***IUD*** ຂັ້ນແຂວງ ແລະ ເມືອງ ແລະ ສຸກສາລາ ***HC*** ປະເພດ ***A*** (ໂຮງຫມໍຊຸມຊົນ)<br>ຝຶກອົບຮົມການສັກຢາ ***CBD***<br>ສືບຕໍ່ຝຶກອົບຮົມ ***LARC*** ໃຫ້ ແພດຜະດຸງຄັນ ແລະ ພາກເອກະຊົນ<br>ເຊື່ອມສານວຽກງານການວາງແຜນຄອບຄົວເຂົ້າໃນທຸກໆກິດຈະກຳລົງ ໂຄສະນາເຜີຍແຜ່ | √ | √ | | ກະຊວງສາທາລະນະສຸກ |
| | | ອັດຕາການບໍ່ຢາກມີລູກແຕ່ບໍ່ໃຊ້ວິທີການວາງແຜນຄອບຄົວຫຼຸດລົງ(1.1) | | √ | √ | | |

[11] ຈຸດປະສົງທັງໝົດແມ່ນກວມເອົາຄວາມແຕກໂຕນກັນ ແລະ ຄວາມບໍ່ເທົ່າທຽມກັນເຖິງວ່າຈະບໍ່ໄດ້ລະບຸແຈ້ງກໍຕາມ

[12] ຜົນໄດ້ຮັບຂອງ RMNCH ໝາຍເຖິງການການເພີ້ມຂຶ້ນຂອງ " ວິທີການທັງໝົດ" ( ໃຫ້ໄດ້ 65% ກ່ອນ2020 70% ກ່ອນ2025) ແຜນການສູ້ຊົນການວາງແຜນຄອບຄົວໝາຍເຖິງວິທີການທີ່ທັນສະໄໝເທົ່ານັ້ນ, ຄືກັບແຜນ.ແຜນການຈັດຕັ້ງປະຕິບັດຄ່າໃຊ້ຈ່າຍໃນການວາງແຜນຄອບຄົວແຫ່ງຊາດ ປີ.2017 -2020

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| ການຕອບສະໜອງດ້ວຍວິທີຄຸມກຳເນີດແບບທັນສະໄໝ,<br><br>**ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍ:**<br><u>ອັດຕາສ່ວນການຕາຍຂອງແມ່:</u><br><br>ຂໍ້ມູນເບື້ອງຕົ້ນ:197 (2015)<br>ຄາດໝາຍ:ຕ່ຳກວ່າ 70 (2030)<br><br><u>ອັດຕາການເກີດລູກໃນ</u>ຊາວໜຸ່ມ.:<br>ຂໍ້ມູນເບື້ອງຕົ້ນ:76 (2015)<br>ຄາດໝາຍ:31 (2030)<br><br><u>ອັດຕາການຢາກວາງແຜນຄອບຄົວ ແຕ່ບໍ່ສາມາດເຂົ້າເຖິງການບໍລິການ:</u><br>ຂໍ້ມູນເບື້ອງຕົ້ນ:19.9% (2011-2012)<br>ຄາດໝາຍ:8% (2030)<br><br><u>ເປີເຊັນ ຂອງຄວາມຕ້ອງການວາງແຜນຄອບຄົວທີ່ໄດ້ຮັບການຕອບສະໜອງ</u> | | ເພີ່ມການສະໜອງການບໍລິການສຸຂະພາບຈະເລີນພັນອື່ນໆ (1.3) | ດຳເນີນການສົ່ງເສີມການກວດຫາ ໂລກມະເຮັງປາກມົດລູກ ແລະ ມະເຮັງເຕົ້ານົມ | √ | √ | | |
| | | ເພີ່ມອັດຕາຂອງແມ່ຍິງຖືພາທີ່ໄດ້ຮັບການດູແລກ່ອນເກີດ ANC ທີ່ມີຄຸນນະພາບຢ່າງໜ້ອຍ 4 ຄັ້ງ (2.1) | ຊຸກຍູ້ສົ່ງເສີມໃຫ້ແມ່ຍິງໄປຝາກທ້ອງ<br>ຝຶກອົບຮົມ***VHV*** ແລະ ***VHC*** ໃນຫົວຂໍ້ການສ້າງແຮງສູງໃຈໃຫ້ແມ່ຍິງໄປຮັບການດູແລກ່ອນເກີດ ANC ສ້າງອຸປະກອນ ແລະ ເຄື່ອງມືໃຫ້ຄວາມຮູ້ ***IEC*** ເປັນພາສາຊົນເຜົ່າ<br>ຊີ້ນຳວຽກງານດ້ານວິຊາການຢ່າງເປັນປົກກະຕິ, ລວມທັງ ***VHWs***<br>ຝຶກອົບຮົມຄືນກ່ຽວກັບການວາງ ແຜນການກຽມຄວາມພ້ອມໃນການ ເກີດລູກ<br>ຝຶກອົບຮົມການໃຫ້ຄຳປຶກສາ ສຸຂະພາບຈະເລີນພັນ, ແມ່ ແລະເດັກເກີດໃໝ່ ແລະ ເດັກນ້ອຍ***RMNCH***<br>ທົບທວນແຜນການຈັດຕັ້ງປະຕິບັດ ຂອງແຜດຜະດຸງຄັນ ***2016-2020***<br>ແລກປ່ຽນບົດຮຽນຜ່ານເມືອງ ຕົວແບບໂດຍຜ່ານການຮ່ວມມືລະ ຫວ່າງ ລາວ ແລະໄທ | √ | √ | | |
| | | ເພີ່ມການເກີດໂດຍຮັບການຊ່ວຍເຫຼືອຈາກພະນັກງານແພດທີ່ມີຄວາມຊຳນິຊຳນານ (2.1). | | √ | √ | | |
| | | ເພີ່ມການເກີດຢູ່ໃນສະຖານທີ່ບໍລິການສຸຂະພາບ (2.1). | | √ | √ | | |
| | | ໄດ້ເພີ່ມອັດຕາສ່ວນທີ່ແມ່ໄດ້ຮັບການເບິ່ງແຍງຫຼັງການເກີດ PNC ພາຍໃນ 2 ມື້ຫຼັງຈາກເກີດລູກ (2.1). | | √ | √ | | |
| | | ການຊ່ວຍເກີດສຸກເສີນຂັ້ນພື້ນຖານ ແລະຄົບຖ້ວນທີ່ມີຄຸນນະພາບ (EOC), ລວມທັງການເອົາລູກອອກ, ສາມາດເຂົ້າເຖິງໄດ້ງ່າຍຂຶ້ນ ແລະ ສະໜອງການບໍລິການ (3.1). | ຕິດຕາມກວດກາ ແລະ ຊີ້ນຳວຽກງານການດູແລສຸກເສີນໃນເວລາເກີດລູກ ***(EmOC)***<br>ປະເມີນ / ປະເມີນຜົນແຜນການປັບ ປຸງວຽກງານ ***EmOC***<br>ຝຶກອົບຮົມການເປັນຄູຝຶກຂັ້ນສູນ ກາງ ແລະ ຂັ້ນແຂວງ<br>ການຝຶກອົບຮົມ ***EmOC*** ກ່ອນການບໍລິການ ແລະ ໃນເວລາໃຫ້ບໍລິການ<br>ສືບຕໍ່ການຍົກລະດັບສະຖານທີ່ບໍລິການ ***EmOC*** | √ | √ | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| <u>ດ້ວຍວິທີຄຸມກຳເນີດແບບທັນສະໄໝ:</u> | | | | | | | |
| ຂໍ້ມູນເບື້ອງຕົ້ນ:61.2% (2011-2012)<br>ຄາດໝາຍ:80% (2030)<br><br><u>CPR (mCPR)ທີ່ທັນສະໄໝ</u><br>ຂໍ້ມູນເບື້ອງຕົ້ນ:42.1% (2011-2012)<br>ຄາດໝາຍ:73% (2030) | | ແມ່ຍິງໄວຈະເລີນພັນຈຳນວນຫຼາຍໄດ້ກິນອາຫານທີ່ມີໂພສະນາການ ແລະ ປອດໄພ (7.3). | ຝຶກອົບຮົມ ໂພສະນາການ (**micronutrient** )ໃຫ້ແກ່ພະນັກງານຮັກສາສຸຂະພາບ, ອາສາສະໝັກ ແລະ ຄະນະກຳມະການ ລາຍງານກ່ຽວກັບການຈັດຕັ້ງປະຕິບັດຂໍ້ແນະນຳ ກ່ຽວກັບໂພຊະນາການຂອງແມ່ ພັດທະນາຫຼັກສູດປະສົມປະສານວຽກງານໂພຊະນາການໃຫ້ແກ່ຜູ້ສະໜອງການບໍລິການດ້ານສຸຂະພາບ ແລະ ດຳເນີນການຝຶກອົບຮົມໂດຍອີງໃສ່ຫຼັກສູດການຮຽນ | √ | √ | | ກະຊວງສາທາລະນະສຸກ |
| <u>ອັດຕາການມີລູກແບບບໍ່ຕັ້ງໃຈໃນກຸ່ມອາຍຸ 15-24 ປີ.</u><br><br>ຂໍ້ມູນເບື້ອງຕົ້ນ:21.8% (2011-2012)<br>ຄາດໝາຍ:12% (2030) | | ປັບປຸງຄວາມອາດສາມາດຂອງສຸກສາລາໃນການຄາດຄະເນ, ຈັດຊື້ ແລະ ແຈກຢາຍຜະລິດຕະພັນຄຸມກຳເນີດ ເພື່ອຫຼຸດຜ່ອນຢາຂາດສາງ (ບູລິມະສິດ 2) | ການຝຶກອົບຮົມກ່ຽວກັບການຄຸ້ມຄອງລະບົບຕ່ອງໂສ້ການສະໜອງພາຍໃນໃນຂົງເຂດຂະຫຍາຍບົດຮຽນທີ່ດີໃນການຈັດຕັ້ງປະຕິບັດຮູບແບບວຽກງານການຈັດຊື້ຈັດຈ້າງກວດກາສະຖານທີ່ໃຫ້ການບໍລິການສຸຂະພາບໃນການນຳໃຊ້ອຸປະກອນທີ່ຈຳເປັນ ແລະ ລາຍການຢາ | √ | √ | | |
| | | ຮັບປະກັນວ່າມີງົບປະມານພຽງພໍສຳລັບຜະລິດຕະພັນຄຸມກຳເນີດ ເພື່ອສະໜັບສະໜູນການເພີ່ມຂຶ້ນຂອງການນຳໃຊ້ວິທີຄຸມກຳເນີດໄລຍະຍາວແບບຊົ່ວຄາວ (LARC). | ເຜີຍແຜ່ນະໂຍບາຍຫຍໍ້ຂອງ **NIER** / **UNFPA** ກ່ຽວກັບການວິເຄາະຄ່າໃຊ້ຈ່າຍ / ຜົນປະໂຫຍດຂອງການວາງແຜນຄອບຄົວ | √ | √ | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | ການລິເລີ່ມ/ຂະຫຍາຍນະໂຍບາຍການພັກເກີດລູກຂອງແມ່ ໃນຂະແໜງທາງການ, ບໍ່ເປັນທາງການ ແລະ ຊຸມຊົນຊົນນະບົດ ເພື່ອຫຼຸດຜ່ອນການເຮັດວຽກໜັກຂອງແມ່ຍິງໃນເວລາຖືພາ | ສຳຫຼວດປະເມີນຄວາມເປັນໄປໄດ້ ໃນການລວມເອົາການຄຸ້ມຄອງການປົກປ້ອງລາຍໄດ້ຂອງແມ່ຍິງໃນເຂດຊົນນະບົດ ແລະ ຂະແໜງການນອກລະບົບ ເຊິ່ງແມ່ນສ່ວນໜຶ່ງຂອງຍຸດທະສາດການປົກປ້ອງສັງຄົມ ແລະ ການປະກັນສຸຂະພາບ | √ | √ | | ກະຊວງແຮງງານແລະສະຫວັດດີການສັງຄົມ |
| | | ການປົກປ້ອງລາຍຮັບຫຼືການອຸດໜູນເພື່ອທົດແທນລາຍຮັບທີ່ສູນເສຍໃນໄລຍະພັກເກີດລູກ | | √ | √ | | |
| | 1.2 ຫຼຸດຜ່ອນການມີລູກໃນຊາວໜຸ່ມ ຫຼຸດຜ່ອນການມີລູກແຕ່ອາຍຸຍັງນ້ອຍ | ເພີ່ມຂໍ້ມູນ ແລະ ການບໍລິການສຸຂະພາບຈະເລີນພັນທີ່ຕອບສະໜອງຄວາມຕ້ອງການຂອງຊາວໜຸ່ມ (1.2) | ສ້າງກິດຈະກຳປູກຈິດສຳນຶກດ້ານສຸຂະພາບຈະເລີນພັນໃຫ້ແກ່ຊາວໜຸ່ມ ເຜີຍແຜ່ຫຼັກສູດກ່ຽວສຸຂະພາບຈະເລີນພັນ ແລະ ເພດສຶກສາຢູ່ໂຮງຮຽນຊັ້ນປະຖົມ ແລະ ມັດທະຍົມ ແຈກຢາຍອຸປະກອນ ແລະ ເຄື່ອງມືໃຫ້ຄວາມຮູ້ **ECC / BCC** ແກ່ຊາວໜຸ່ມ ເພື່ອສົ່ງຄວາມຮູ້ ແລະ ຂໍ້ມູນຂ່າວສານກ່ຽວກັບການເຂົ້າເຖິງການບໍລິການດ້ານສຸຂະພາບ **(1.2.12).** | √ | √ | | ກະຊວງສາທາລະນະສຸກ, ສູນກາງສະຫະພັນແມ່ຍິງລາວ<br><br>ກະຊວງສາທາລະນະສຸກ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |
| | | ນະໂຍບາຍສຸຂະພາບຈະເລີນພັນ (SRH) ແລະ ການວາງແຜນຄອບຄົວ (FP) ທີ່ແກ້ໄຂຄວາມຕ້ອງການຂອງຊາວໜຸ່ມ. ໂດຍສະເພາະຜູ້ທີ່ທຸກຍາກ ແລະ ດ້ອຍໂອກາດ (1.2.1) | ຂະຫຍາຍການບໍລິການທີ່ເປັນມິດກັບຊາວໜຸ່ມ. ໄປທຸກໆແຂວງ (1.2.8).<br>ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການ (ລວມທັງການສົ່ງຕໍ່ໄປສະຖານທີ່ບໍລິການສຸຂະພາບ) ໃຫ້ແກ່ຊາວໜຸ່ມເຮັດວຽກໃນໂຮງງານ (1.2.9).<br>ໃຫ້ຄຳປຶກສາກ່ຽວກັບ ພຕພ ໃຫ້ໂຮງຮຽນມັດທະຍົມ<br>ຈັດວັນການວາງແຜນຄອບຄົວໃນເຂດທີ່ມີອັດຕາການປົກຄຸມການຄຸມກຳເນີດ CPR ຕໍ່າ | √ | √ | | ກະຊວງສາທາລະນະສຸກ/ກະຊວງສຶກສາທິການ ແລະ ກິລາ<br><br>ກະຊວງສາທາລະນະສຸກ/ກະຊວງສຶກສາທິການ ແລະ ກິລາ |
| | | ປະສານກັບຂະແໜງການສຶກສາກ່ຽວກັບການໃຫ້ຄວາມຮູ້ກ່ຽວກັບເພດສຶກສາ | ຈັດກອງປະຊຸມການປະສານງານ ລະຫວ່າງກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາ | √ | √ | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຍະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | ແລະ ສຸຂະພາບຈະເລີນພັນ (CSE) (1.2.2) | ສ້າງທີມງານຝຶກອົບຮົມຂອງແຂວງ ໃນການເຮັດກິດຈະກຳການລົງໂຄສະນາເຜີຍແຜ່ຂໍ້ມູນສຸຂະພາບຈະເລີນພັນໃນຊາວໜຸ່ມ | | | | |
| | | ສ້າງຄວາມສາມາດຂອງຜູ້ສະໜອງການບໍລິການ ASRH ແລະ ການວາງແຜນຄອບຄົວ ເພື່ອສະໜອງການບໍລິການທີ່ເປັນມິດຕໍ່ກັບຊາວໜຸ່ມ. ແລະ ການບໍລິການສົ່ງຕໍ່ (1.2.6). | ໃຫ້ການສະໜັບສະໜູນຊີ້ນຳການບໍລິການທີ່ເປັນມິດກັບໄວໜຸ່ມ ASRH | √ | √ | | |
| | | ເພີ່ມຄວາມຮູ້ ແລະ ຕື່ນຕົວຂອງຜູ້ນຳຊຸມຊົນກ່ຽວກັບການບໍລິການສຸຂະພາບຈະເລີນພັນ, ການວາງແຜນຄອບຄົວ ແລະ ASRH (1.2.11). | ສ້າງອຸປະກອນ ແລະ ເຄື່ອງມືໃຫ້ຄວາມຮູ້ (IEC) ໃຫ້ຜູ້ນຳຊຸມຊົນ<br>ຈັດວັນວາງແຜນຄອບຄົວໃນເຂດທີ່ມີອັດຕາການປົກຄຸມການວາງແຜນຄອບຄົວຕໍ່າ | √ | √ | | |
| **ເປົ້າໝາຍ 2:** ເລັ່ງລັດໃສ່ການຫຼຸດຜ່ອນອັດຕາການຕາຍຂອງເດັກອ່ອນ (neonatal) ແລະ ເດັກຕໍ່າກວ່າ 1 ປີລົງມາ (infant) ,ເດັກຕໍ່າກວ່າ 5 ປີລົງມາ ໂດຍສະເພາະໃນກຸ່ມຄົນຜູ້ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ. | 2.1 ຫຼຸດຜ່ອນບັນດາປັດໃຈຄວາມສ່ຽງຫຼັກ (ການກຳນົດທີ່ໃກ້ຄຽງ)ທີ່ພົວພັນກັບການຕາຍຂອງເດັກອ່ອນ, ເດັກອາຍຸລຸ່ມ 1 ປີ ແລະ ເດັກລວມມີດັ່ງນີ້:<br>– ເກີດກ່ອນກຳນົດ ຫາຍໃຈບໍ່ສະດວກ ຕິດເຊື້ອພະຍາດ | ເພີ່ມຈຳນວນພະນັກງານທີ່ມີຄວາມສາມາດໃນການໃຫ້ບໍລິການສຸຂະພາບທີ່ກ່ຽວພັນກັບການເບິ່ງແຍງກ່ອນຖືພາ, ການເບິ່ງແຍງກ່ອນເກີດ, ໃນລະຫວ່າງເວລາເກີດ, ຫລັງຈາກການເກີດລູກທັນທີ, ແລະ ການເບິ່ງແຍງຫຼັງການເກີດ.<br>(ສຸກສາລາທຸກໆບ່ອນຕ້ອງມີແພດປະຈຸຄັນໜຶ່ງຄົນ)<br>(ຈຸດປະສົງທີ 3,8 ແລະ 11)[13] | ທົບທວນແຜນການຈັດຕັ້ງປະຕິບັດຂອງແພດຜະດຸງຄັນ 2016-2020 ແລະ ສ້າງຄວາມເຂັ້ມແຂງໃນບ່ອນທີ່ເຫັນວ່າມີຄວາມຈຳເປັນ | √ | √ | | ກະຊວງແຜນການ ແລະ ການລົງທຶນ/ກະຊວງສາທາລະນະສຸກ, |
| **ຕົວຊີ້ວັດ (ລະດັບຊາດ):**<br>ອັດຕາການຕາຍຂອງເດັກອ່ອນ; | ຕິດເຊື້ອ ພະຍາດອື່ນໆ (ຖອກທ້ອງ, ປອດ | ເພີ່ມອັດຕາແມ່ຍິງຖືພາທີ່ໄດ້ຮັບການກວດກ່ອນເກີດຢ່າງໜ້ອຍ 4 ຄັ້ງ ໃນສະຖານທີ່ກວດສຸຂະພາບໂດຍພະນັກງານທີ່ມີ | ຝຶກອົບຮົມຄືນກ່ຽວກັບການເກີດລູກ ແລະ ແຜນການກຽມພ້ອມສຸກເສີນ<br>ແຈກຢາຍປື້ມຄູ່ມືແມ່ ແລະ ເດັກເພື່ອລົງເລິກການຮັກສາສຸຂະພາບໃນຫຼາຍຮູບການ | √ | √ | | ກະຊວງສາທາລະນະສຸກ/ກະຊວງສຶກສາທິການ ແລະ ກິລາ |

13 ອີງໃສ່ຈຸດປະສົງຂອງຍຸດທະສາດRMCH. ບ່ອນທີ່ບໍ່ໄດ້ລະບຸຈຸດປະສົງນັ້ນໄດ້ສ້າງ ຜົນໄດ້ຮັບຂື້ນໃໝ່ ຫລື ປັບປຸງຄືນ

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| ອັດຕາການຕາຍຂອງເດັກອາຍຸລຸ່ມ 1 ປີ<br>ອັດຕາການຕາຍຂອງເດັກເດັກຕ່ຳກວ່າ 5 ປີລົງມາ,<br><br>**ຂໍ້ມູນເບື້ອງຕົ້ນແລະຄາດໝາຍ:**<br><br>ອັດຕາການຕາຍຂອງເດັກອອ່ນ<br>ຂໍ້ມູນເບື້ອງຕົ້ນ:33 (2011-2012)<br>ຄາດໝາຍ:9(2030)<br><br>ອັດຕາການຕາຍຂອງເດັກຕ່ຳກວ່າ 1 ປີລົງມາ<br>ຂໍ້ມູນເບື້ອງຕົ້ນ:57 (2015)<br>ຄາດໝາຍ:12(2030)<br><br>ອັດຕາການຕາຍຂອງເດັກເດັກຕ່ຳກວ່າ 5ປີລົງມາ,<br>ຂໍ້ມູນເບື້ອງຕົ້ນ:86 (2011-2012)<br>ຄາດໝາຍ:30(2030) | ບວມ,ໝາກແດງ ແລະ ອື່ນໆ) | ຄວາຊຳນິຊຳນານ ແລະ ມີເຄື່ອງມືແພດ (ຈຸດປະສົງທີ 2) | | | | | |
| | | ເພີ້ມອັດຕາການເກີດໃນສະຖານທີ່ຮັກສາສຸຂະພາບທີ່ສາມາດນຳໃຊ້ລາຍການກວດຂອງການເກີດທີ່ປອດໄພຂອງອົງການອານາໄມໂລກ (ລວມທັງການນຳໃຊ້ຢາທີ່ຈຳເປັນ ແລະ ການສິ່ງຕໍ່ໄປຜ່າຕັດໃນເວລາເກີດລູກ ແລະ EmOC) ພ້ອມດ້ວຍພະນັກງານທີ່ຜ່ານການຝຶກອົບຮົມໃນການນຳໃຊ້ SCC ໃນລະບົບ | ນຳເອົາລາຍການກວດຂອງການເກີດລູກທີ່ປອດໄພຂອງອົງການອະນາໄມໂລກເຂົ້າໃນການຝຶກອົບຮົມພະນັກງານທຸກຂັ້ນ<br>ແຈກຢາຍລາຍການກວດໃຫ້ສະຖານທີ່ບໍລິການສຸຂະພາບທຸກໆແຫ່ງ | √ | √ | | ກະຊວງສາທາລະນະສຸກ |
| | | ປັບປຸງໂພສະນາການໃນແມ່ຍິງຖືພາ ແລະ ຫຼຸດຜ່ອນພຶດຕິກຳທີ່ເປັນອັນຕະລາຍ (ສູບ ຢາ. ໃຊ້ຢາເສດຕິດ) (ຈຸດປະສົງທີ7) | ຝຶກອົບຮົມກ່ຽວກັບໂພສະນາການ (**micronutrient**) ໃຫ້ແກ່ພະນັກງານຮັກສາສຸຂະພາບ, ອາສາສະໝັກ ແລະ ຄະນະກຳມະການຮັກສາສຸຂະ ພາບ<br>ລາຍງານກ່ຽວກັບການຈັດຕັ້ງປະຕິບັດຂໍ້ແນະນຳກ່ຽວກັບໂພຊະນາການຂອງແມ່<br>ພັດທະນາຫຼັກສູດປະສົມປະສານວຽກງານໂພຊະນາການໃຫ້ແກ່ຜູ້ສະ ໜອງການບໍລິການດ້ານສຸຂະພາບ ແລະ ດຳເນີນການຝຶກອົບຮົມໂດຍອີງໃສ່ຫຼັກສູດການຮຽນ | √ | √ | | |
| | | ປັບປຸງການຮັກສາສຸຂະພາບຂອງແມ່ຖືພາ ແລະ ເດັກເກີດໃໝ່ຜົນຕໍ່ເນື່ອງມາຈາກການມີຄວາມຮູ້ ແລະ ມີຄວາມຕື່ນຕົວຈາການໄດ້ຮັບຂໍ້ມູນຂ່າວສານຈາກການໂຄສະນາສຸຂະພາບຊຸມຊົນ (ຈາກຜູ້ເປັນແມ່, ຄູ່ຮ່ວມງານ, ພີ່ນ້ອງ,ຜູ້ນຳຊຸມຊົນ) | ກະກຽມການຈັດຕັ້ງປະຕິບັດ ແລະ ຍຸດທະສາດໃນການປັບປຸງການສົ່ງເສີມສຸຂະພາບຂອງຊຸມຊົນ | √ | √ | | ກະຊວງສາທາລະນະສຸກ |
| | | ປັບປຸງອັດຕາແມ່ຍິງ ແລະ ຄອບຄົວທີ່ມີລະບົບປະກັນສຸຂະພາບ ແລະ ການປົກປ້ອງທາງສັງຄົມ ໂດຍສະເພາະໃນຂົງເຂດຊົນນະບົດລວມເຖິງການເກີດລູກ ແລະ ປິ່ນປົວເດັກນ້ອຍ | ຈັດຕັ້ງປະຕິບັດພາກສ່ວນທີ່ກ່ຽວຂ້ອງໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ | √ | √ | | ກະຊວງສາທາລະນະສຸກ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | ອາຍຸຕ່ຳກວ່າ 5 ປີລົງມາທີ່ບໍ່ໄດ້ເສຍຄ່າ (ຈຸດປະສົງທີ 9) | | | | | |
| | 2.2 ຫຼຸດຜ່ອນ ປັດໃຈທາງດ້ານສັງຄົມ ປະຊາກອນ ທີ່ຕິດພັນກັບ ການຕາຍຂອງເດັກອ່ອນ ແລະ ເດັກນ້ອຍ | ລຶບລ້າງການການຖືພາໃນເກນອາຍຸ 18 ປີລົງມາ ແລະ 40 ປີຂຶ້ນໄປ | ຕິດຕາມການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ຈຸດປະສົງ 1.2 | √ | √ | | ກະຊວງສາທາລະນະສຸກ/ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ/ ມະຫາວິທະຍາໄລແຫ່ງຊາດ |
| | | ຫຼຸດຜ່ອນອັດຕາການແຕ່ງງານກ່ອນໄວອັນຄວນ (ໃໝ່) | ລົງສຳຫຼວດຄົ້ນຄ້ວາກ່ຽວກັບບັນດາປັດໄຈທີ່ພາໃຫ້ມີການແຕ່ງງານກ່ອນໄວອັນຄວນ<br>ການທົບທວນຄືນການຈັດຕັ້ງປະຕິບັດຕາມເກນອາຍຸໃນປະຈຸບັນໃນກົດໝາຍຄອບຄົວ<br>ສ້າງຍຸດທະສາດເພື່ອສ້າງຄວາມເຂັ້ມແຂງໃນການປະຕິບັດກົດໝາຍຄອບຄົວ | √ | √ | | |
| | | ໄລຍະຫ່າງໃນການເກີດລູກຢ່າງໜ້ອຍ ແມ່ນ 24 ເດືອນ (ໄລຍະຫ່າງການເກີດລູກ ແລະ ຖືພາຄັ້ງຕໍ່ໄປ) | ຮວບຮວມຂໍ້ມູນກ່ຽວກັບໄລຍະຫ່າງໃນການເກີດລູກ ເຂົ້າໃນອຸປະກອນ ແລະ ເຄື່ອງມືໃນການໃຫ້ຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນທັງໝົດ | √ | √ | | |
| | | ຫຼຸດຜ່ອນການບໍ່ຢາກມີລູກແຕ່ບໍ່ໃຊ້ວິທີການວາງແຜນຄອບຄົວໂດຍສະເພາະໃນກຸ່ມແມ່ຍິງໃນເກນ ອາຍຸ<20>35 (ຈຸດປະສົງທີ 1) | ຕິດຕາມ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດແຜນຄ່າໃຊ້ຈ່າຍໃນການວາງແຜນຄອບຄົວ (2017-2020) ໂດຍສະເພາະການສະໜອງ ແລະ ການບໍລິການຂອງ **LARC** | √ | √ | | |
| | | ເພີ່ມສ່ວນຮ້ອຍຂອງການວາງແຜນຄອບຄົວທີ່ມີຄວາມພໍໃຈໃນການນຳໃຊ້ວິທີການຄຸມກຳເນີດແບບທັນສະ ໄໝ (ຈຸດປະສົງທີ1) | | √ | √ | | |
| | | ລຶບລ້າງວຽກທີ່ເຄັ່ງຄຽດ ແລະ /ຫຼື ໜັກໃນໄລຍະສຸດທ້າຍຂອງການຖືພາ(ໃໝ່) | ປະເມີນຄວາມເປັນໄປໄດ້ໃນການກວມເອົາການຄຸ້ມຄອງການປົກປ້ອງລາຍໄດ້ຂອງແມ່ຍິງໃນເຂດຊົນນະບົດ ແລະ ຂະແໜງການນອກລະບົບ ເຊິ່ງແມ່ນສ່ວນໜຶ່ງຂອງຍຸດທະສາດການປົກປ້ອງສັງຄົມ ແລະ ການປະກັນສຸຂະພາບ<br>(ເບິ່ງກິດຈະກຳພາຍໃຕ້ຈຸດປະສົງ 1.1) | √ | √ | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | 2.3 ສົ່ງເສີມການລ້ຽງລູກດ້ວຍນົມແມ່ ແລະ ການເບິ່ງແຍງເດັກອ່ອນ ແລະ ເດັກນ້ອຍ | ເພີ່ມອັດຕາເດັກນ້ອຍທີ່ກິນນົມແມ່ແຕ່ຢ່າງດຽວເປັນເວລາ 6 ເດືອນ (ຈຸດປະສົງທີ 7) | ຈັດຕັ້ງປະຕິບັດແຜນການສື່ສານການລ້ຽງລູກດ້ວຍນົມແມ່ແຕ່ຫົວທີ ແລະ ລ້ຽງລູກດ້ວຍນົມແມ່ພຽງແຕ່ຢ່າງດຽວ ນໍາເອົາການລ້ຽງລູກດ້ວຍນົມແມ່ ແລະ ການຕິດຕາມການຈະເລີນເຕີບໃຫຍ່ເຂົ້າໃນກິດຈະກໍາຂອງ MNCH | √ | √ | | ກະຊວງສາທາລະນະສຸກ |
| | | ເພີ່ມອັດຕາການສັກຢາປ້ອງກັນພະຍາດ ໃນເດັກລຸ່ມ 1 ປີລົງມາ (ຈຸດປະສົງທີ 6) | ລົງສໍາຫຼວດອັດຕາການປົກຄຸມຂອງການສັກຢາປ້ອງກັນພະຍາດ ລົງໂຄສະນາຂົນຂວາຍພິເສດ ສໍາລັບການສັກຢາປ້ອງກັນພະຍາດໃນເຂດທີ່ມີອັດຕາການປົກຄຸມຕໍ່າ/ມີຄວາມສ່ຽງສູງ<br>ລົງຈັດຕັ້ງປະຕິບັດເພື່ອຮັບປະກັນໃຫ້ມີຢາວັກຊີນ ແລະ ມີການສະໜອງຢາວັກຊີນ | √ | √ | | |
| | | ເດັກນ້ອຍເກີດໃໝ່ທຸກຄົນໄດ້ຮັບການດູແລທີ່ຈໍາເປັນສໍາລັບເດັກເກີດໃໝ່ໃນໄລຍະທໍາອິດ (EENC) ທີ່ມີຄຸນນະພາບ (ຈຸດປະສົງທີ4) | ກວດເບິ່ງ **EENC** ວ່າໄດ້ຖືກລວມເຂົ້າໃນແຜນການຮັກສາສຸຂະພາບທັງໝົດ, ຍຸດທະສາດ ແລະ ງົບປະມານ ທົບທວນຄືນກົດໝາຍປະດຸງຄັນເພື່ອໃຫ້ແພດປະດຸງຄັນສາມາດສັກຢາ, ໃຊ້ຢາຕ້ານເຊື້ອ ແລະ ການຊຸຊີບ<br>ທົບທວນຄືນລະບຽບ **EENC** ເພື່ອໃຫ້ໄດ້ມາດຕະຖານສາກົນ<br>ຂະຫຍາຍກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດ **EENC** ໃນໂຮງໝໍເມືອງ<br>ສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ **BCC** ກ່ຽວກັບການປະຕິບັດ **EENC** ໃນຊຸມຊົນ | √ | √ | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| **ເປົ້າໝາຍ 3:** ໃຊ້ກາລະໂອກາດ "ທາງດ້ານປະຊາກອນ"ໃຫ້ໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມສູງສຸດສຳລັບທຸກກຸ່ມຄົນ ແລະ ຂົງເຂດ ຢ່າງສະເໝີພາບ ແລະ ເປັນທຳ.<br><br>**ຕົວຊີ້ວັດ:** ອັດຕາການຮູ້ໜັງສືຂອງຊາວໜຸ່ມ (15 – 24) ແລະ ຜູ້ໃຫຍ່ (15ປີ ແລະ 15 ປີຂຶ້ນໄປ); | 3.1 ກຳລັງແຮງງານໃໝ່ ໄດ້ຮັບການສຶກສາ, ຝຶກອົບຮົມ ແລະ ມີທັກສະສາມາດຕອບສະໜອງກັບໂອກາດການຈ້າງງານ | ນັກຮຽນທຸກຄົນມີຄວາມຮູ້ພື້ນຖານ (ສາມາດອ່ານອອກຂຽນໄດ້ ແລະ ຄິດໄລ່ເລກຂັ້ນພື້ນຖານ) ແລະ ມີທັກສະຕ່າງໆ...ໃນການເຮັດວຽກ ຫລື ເຂົ້າຮຽນຕໍ່ການສຶກສາຂັ້ນພື້ນຖານ (ຈຸດປະສົງທີ 1, ຜົນໄດ້ຮັບ 2, ຜົນໄດ້ຮັບ 5) (ໜ້າ 9, 12,16) | ທົບທວນໂຄງສ້າງຫຼັກສູດ ແລະ ເນື້ອໃນຂອງຊັ້ນປະຖົມດຳເນີນການຄົ້ນຄ້ວາວິໄຈກ່ຽວກັບການປະຕິບັດທີ່ດີຢູ່ພາຍໃນປະເທດ ແລະ ຕ່າງປະເທດກ່ຽວກັບການປັບປຸງຄຸນນະພາບການຮຽນການສອນຢູ່ໃນໂຮງຮຽນພັດທະນາຍຸດທະສາດເພື່ອປັບປຸງທັກສະໃນການຮູ້ໜັງສື ແລະ ການຄິດໄລ່ເລກຂັ້ນພື້ນຖານພັດທະນາລະບົບການຮຽນການສອນ ແລະ ຫຼັກສູດການຝຶກອົບຮົມພາສາລາວໃຫ້ເດັກຊົນເຜົ່າດຳເນີນງານເພື່ອກຳນົດບັນຫາຫຼັກທີ່ເປັນອຸປະສັກຕໍ່ການພັດທະນາທັກສະ ແລະ ການຮຽນຮູ້ | √ | | | ກະຊວງສຶກສາທິການ ແລະ ກິລາ ໂດຍການຮ່ວມມືກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| ອັດຕາການເຂົ້າຮຽນຂອງປະຊາກອນໃນກຸ່ມອາຍຸ 17 – 25 ປີ<br>ອັດຕາການເຂົ້າຮຽນອາຊີວະ TVET; | | ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໃນເກນອາຍຸ ( 15 ແລະ 15 ປີຂຶ້ນໄປ) ແລະ ຊາວໜຸ່ມ ( ໃນເກນອາຍຸ 15 ຫາ 25 ປີ) ເພີ່ມຂຶ້ນ (ຈຸດປະສົງທີ 3, ຜົນໄດ້ຮັບ 6) (ໜ້າ 10,17) | ການພັດທະນາເຄື່ອງມືການສຸ່ມຕົວຢ່າງທີ່ຖືກຕ້ອງເພື່ອທົດສອບການຮູ້ໜັງສືຂອງຜູ້ໃຫຍ່<br>ພັດທະນາຫຼັກສູດ ແລະ ອຸປະກອນການຮຽນການສອນທີ່ສາມາດແກ້ໄຂຄວາມຕ້ອງການທີ່ແຕກຕ່າງກັນຂອງກຸ່ມເປົ້າຫມາຍຕ່າງໆ<br>ຝຶກອົບຮົມພະນັກງານທີ່ຮັບຜິດຊອບກ່ຽວກັບການປັບປຸງການຮຽນຮູ້ຂອງຜູ້ໃຫຍ່ | √ | | | |
| ອັດຕາການຫວ່າງງານຂອງຊາວໜຸ່ມ ແລະ ປະຊາກອນທົ່ວໄປ ແລະ ອັດຕາຊາວໜຸ່ມຫວ່າງງານ, ບໍ່ໄດ້ເຂົ້າໂຮງຮຽນ ຫລື ຝຶກອົບຮົມ | | ເພີ່ມອັດຕາການເຂົ້າຮຽນຊັ້ນປະຖົມ ແລະ ຮຽນຈົບຊັ້ນປະຖົມ ແລະ ອັດຕາສືບຕໍ່ເຂົ້າຮຽນຊັ້ນມັດທະຍົມໃຫ້ຫຼາຍຂຶ້ນ (ຈຸດປະສົງທີ 2) (ໜ້າ 10) | ກໍ່ສ້າງໂຮງຮຽນເພີ່ມຕື່ມ ເພື່ອຕອບສະຫນອງກັບຄວາມຕ້ອງການ ແລະ ຍົກລະດັບໂຮງຮຽນທີ່ມີຢູ່, ລວມທັງເພີ່ມຈຳນວນຫໍພັກນັກຮຽນໃຫ້ຫຼາຍຂຶ້ນຕື່ມ<br>ເພີ່ມຈຳນວນທຶນການສຶກສາໃຫ້ກັບນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດໃຫ້ຫຼາຍຂຶ້ນຕື່ມ | √ | | | |
| **ຂໍ້ມູນເບື້ອງຕົ້ນແລະຄາດໝາຍ:**<br><br><u>ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ( 15 ປີ ແລະ 15 ປີຂຶ້ນໄປ):</u> | | ເພີ່ມອັດຕາການເຂົ້າຮຽນອາຊີວະສຶກສາໃຫ້ຫຼາຍໃນກຸ່ມນັກຮຽນ (ປີທີ 9 ແລະ 12) (ຈຸດປະສົງທີ 2) (ໜ້າ 10) | ຝຶກອົບຮົມວິຊາຊີບໄລຍະສັ້ນ ລະດັບ 1 ແລະ 2 ໃຫ້ແກ່ຜູ້ດ້ອຍໂອກາດ ຈຳນວນ 4,200 ຄົນ<br>ສ້າງແຜນດຳເນີນງານເພື່ອສ້າງຕັ້ງໂຮງຮຽນເຕັກນິກ - ວິຊາຊີບ ແລະ ສູນຝຶກອົບຮົມວິຊາຊີບໃຫ້ມີຢູ່ທຸກໆແຂວງ ຢ່າງໜ້ອຍ 1 ແຫ່ງ | √ | | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| ຂໍ້ມູນເບື້ອງຕົ້ນ:84.7% (2015)<br>ຄາດໝາຍ: 98% (2030) | | | ພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການເພື່ອປັບປຸງການໃຫ້ຄຳປຶກສາໃນການປະກອບອາຊີບຢູ່ໂຮງຮຽນ<br>ພັດທະນາຍຸດທະສາດການໂຄສະນາຊຸກຍູ້ໃຫ້ນັກຮຽນທີ່ຈົບສາມັນສຶກສາໃຫ້ເຂົ້າຮຽນວິຊາຊີບໃຫ້ຫຼາຍຂຶ້ນ | | | | |
| <u>ອັດຕາການຮູ້ໜັງສືຂອງຊາວໜຸ່ມ (15 – 24ປີ)</u><br>ຂໍ້ມູນເບື້ອງຕົ້ນ:95.5% (2015)<br>ຄາດໝາຍ: 100% (2030)<br><br><u>ອັດຕາການເຂົ້າຮຽນຂອງປະຊາກອນໃນກຸ່ມອາຍຸ (17 – 25 ປີ)</u><br>ຂໍ້ມູນເບື້ອງຕົ້ນ:22% (2015)<br>ຄາດໝາຍ: 45% (2030)<br><br><u>ການເຂົ້າຮຽນອາຊີວະ TVET:</u><br>ຂໍ້ມູນເບື້ອງຕົ້ນ:34,500 (2016)<br>ຄາດໝາຍ: 51,000 (2020); 81,000 (2030)<br><br><u>ອັດຕາການຫວ່າງງານຂອງຊາວໜຸ່ມ ແລະ ປະຊາກອນທົ່ວໄປ</u><br>ຂໍ້ມູນເບື້ອງຕົ້ນ:14% (2015)<br>ຄາດໝາຍ:1.4% (2030)<br><br><u>ອັດຕາການຫວ່າງງານຂອງຊາວໜຸ່ມ (15 – 24 ປີ)</u> | | ປັບປຸງການເຂົ້າເຖິງການຮຽນວິຊາຊີບ ໂດຍການຍົກລະດັບ ແລະ ຂະຫຍາຍໂຮງຮຽນວິຊາຊີບໃຫ້ກວ້າງຂວາງ (ຍຸດທະສາດ 1, 7. 3.1,ໜ້າ 62) | ສຶກສາຄວາມໄປໄດ້ໃນການສ້າງຕັ້ງໂຮງຮຽນວິຊາຊີບຢູ່ແຂວງໄຊສົມບູນ<br>ສ້າງຕັ້ງວິທະຍາໄລເຕັກນິກການລົດໄຟມິດຕະພາບລາວ-ຈີນ<br>ຂະຫຍາຍວິທະຍາເຂດໃໝ່ຂອງວິທະຍາໄລເຕັກນິກລາວ-ເຢຍລະມັນ<br>ສຶກສາຄວາມຕ້ອງການໃນການກໍ່ສ້າງ ແລະ ປັບປຸງຫ້ອງຝຶກງານ, ໂຮງຊ່າງ, ອາຄານຮຽນ ແລະ ຫໍພັກໃຫ້ແກ່ບັນດາໂຮງຮຽນເຕັກນິກວິຊາຊີບຈຳນວນໜຶ່ງ ພ້ອມທັງປະກອບອຸປະກອນເຕັກນິກ ແລະ ສື່ການຮຽນ-ການສອນ<br>ຍົກລະດັບໂຮງຮຽນເຕັກນິກ ແລະ ວິຊາຊີບໃຫ້ກາຍເປັນວິທະຍາໄລ<br>ສ້າງຕັ້ງ ແລະ ຂະຫຍາຍສູນຝຶກອົບຮົມວິຊາຊີບຊຸກຍູ້ໃຫ້ຊຸມຊົນ ແລະ ຜູ້ປະກອບການທຸລະກິດສະໜັບສະໜູນການຝຶກອົບຮົມວິຊາຊີບ<br>ເຊື່ອມສານວິຊາເຕັກນິກ ແລະ ວິຊາຮຽນໃນຂະແໜງວິຊາຊີບເຂົ້າໃນຫຼັກສູດສາມັນສຶກສາ<br>ສຶກສາຄວາມໄປໄດ້ໃນການສ້າງຕັ້ງໂຮງຮຽນວິຊາຊີບຢູ່ແຂວງໄຊສົມບູນ<br>ສ້າງຕັ້ງວິທະຍາໄລເຕັກນິກການລົດໄຟມິດຕະພາບລາວ-ຈີນ<br>ຂະຫຍາຍວິທະຍາເຂດໃໝ່ຂອງວິທະຍາໄລເຕັກນິກລາວ-ເຢຍລະມັນ<br>ສຶກສາຄວາມຕ້ອງການໃນການກໍ່ສ້າງ ແລະ ປັບປຸງຫ້ອງຝຶກງານ, ໂຮງຊ່າງ, ອາຄານຮຽນ ແລະ ຫໍພັກ | √ | | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| ຂໍ້ມູນເບື້ອງຕົ້ນ: 13% (2016)<br>ຄາດໝາຍ: 1.3% (2030)<br><br><u>ອັດຕາຊາວໜຸ່ມ (15 – 24 ປີ) ຫວ່າງງານ, ບໍ່ໄດ້ເຂົ້າໂຮງຮຽນ ຫຼື ຝຶກອົບຮົມ</u><br><br>ຂໍ້ມູນເບື້ອງຕົ້ນ: 5.1% (2016)<br>ຄາດໝາຍ: 2.6% (2030) | | | ໃຫ້ແກ່ບັນດາໂຮງຮຽນເຕັກນິກວິຊາຊີບຈຳນວນໜຶ່ງ ພ້ອມທັງປະກອບອຸປະກອນເຕັກນິກ ແລະ ສື່ການຮຽນ-ການສອນ | | | | |
| | | ຍົກລະດັບຄຸນນະພາບແຜນງານອາຊີວະສຶກສາ ໂດຍຜ່ານຄູທີ່ມີຄວາມອາດສາມາດ ແລະ ມີຄວາມຮູ້ສູງ (ຍຸດທະສາດ 4, 7. 3.4,ໜ້າ 63) | ຝຶກອົບຮົມໄລຍະສັ້ນດ້ານວິຊາການ ແລະ ວິຊາຄູ ໃຫ້ແກ່ຄູອາຊີວະສຶກສາ<br>ສ້າງ ແລະ ຈັດພິມຄູ່ມືຝຶກອົບຮົມໄລຍະສັ້ນດ້ານວິຊາຄູ ໃຫ້ແກ່ຄູຝຶກຂອງສະຖານອາຊີວະສຶກສາຕາມຫຼັກສູດຝຶກອົບຮົມຄູຝຶກແບບທະວິຄູນຕິດຕາມການສອນຂອງຄູຢູ່ສະຖານອາຊີວະສຶກສາທັງພາກລັດ ແລະ ເອກະຊົນທົ່ວປະເທດຕິດຕາມ ແລະ ປະເມີນການຝຶກອົບຮົມກ່ອນ ແລະ ໃນໄລຍະການຝຶກອົບຮົມ<br>ສ້າງຍຸດທະສາດການເປັນຄູ່ຮ່ວມພັດທະນາ ເພື່ອປັບປຸງທັກສະການສອນ | √ | | | |
| | 3.2 ຮັບປະກັນໃຫ້ແຜນງານການສຶກສາວິຊາຊີບ ແລະ ຊັ້ນສູງ ໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ | ປັບປຸງຄຸນນະພາບການສຶກສາຂະແໜງວິຊາຊີບ ແລະ ຊັ້ນສູງ ໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດທີ 8 (ຜົນໄດ້ຮັບ 7) (ໜ້າ 18) | ສ້າງຍຸດທະສາດການເປັນຄູ່ຮ່ວມພັດທະນາ ເພື່ອສຶກສາ / ສຳຫຼວດເພື່ອກຳນົດຄວາມຕ້ອງການຂອງຜູ້ຈ້າງງານ<br>ສຶກສາຄົ້ນຄ້ວາກ່ຽວກັບນັກຮຽນທີ່ຮຽນຈົບຈາກສະຖານອາຊີວະສຶກສາ<br>ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດຫຼັກສູດລະດັບ 3 ໃນສະຖານອາຊີວະສຶກສາ<br>ຝຶກອົບຮົມການຂຽນຫຼັກສູດແບບໂມດູນ ໂດຍອີງໃສ່ມາດຕະຖານຫຼັກສູດອາຊີວະສຶກສາແຫ່ງຊາດ | √ | | | |
| | | ກຳນົດບູລິມະສິດຄວາມຕ້ອງການໃນການຝຶກອົບຮົມຜ່ານແຜນການພັດທະນຊັບພະຍາກອນມະນຸດແຫ່ງຊາດ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ (ຜົນໄດ້ຮັບ7) (ໜ້າ 18) | ດຳເນີນການສຶກສາກ່ຽວກັບຄວາມຕ້ອງການໃນການຝຶກອົບຮົມຂະແໜງອາຊີວະສຶກສາ<br>ຝຶກອົບຮົມດ້ານການຄຸ້ມຄອງລະບົບຖານຂໍ້ມູນສາຍອາຊີວະສຶກສາ ແລະ ດ້ານການບໍລິຫານ | √ | | | ກະຊວງສຶກສາທິການ ແລະ ກິລາ |
| | | ປັບປຸງການຄຸ້ມຄອງຂໍ້ມູນ ແລະ ການວາງແຜນພັດທະນາຊັບພະຍາກອນມະນຸດ ໂດຍຜ່ານ | ໂຄສະນາຊຸກຍູ້ໃຫ້ມີການສຳຫລວດກຳລັງແຮງງານທີ່ເໝາະສົມໃຫ້ກວ້າງອອກຕື່ມ. | √ | | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | ການມີຂໍ້ມູນທີ່ເໝາະສົມຈາກການສຳຫຼວດຕະຫຼາດແຮງງານ ແລະ ອື່ນໆ (ຜົນໄດ້ຮັບ 7) (ໜ້າ 18) | ຖອດຖອນບົດຮຽນວຽກງານຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ<br>ຕິດຕາມນັກຮຽນ-ນັກສຶກສາທີ່ຮຽນຈົບຈາກສະຖານອາຊີວະສຶກສາ | | | | |
| | | ຫຼັກສູດຫຼັງການສຶກສາຂັ້ນພື້ນຖານ ແລະ ສອດຄ່ອງກັບຂອບວຸດທິການສຶກສາແຫ່ງຊາດ (NQF) ແລະ ພາກພື້ນ (ຜົນໄດ້ຮັບ 7) (ໜ້າ 18) | ພັດທະນາຫຼັກສູດສ້າງຄູອາຊີວະສຶກສາລະດັບປະລິນຍາຕີ ຈຳນວນ 4 ສາຂາວິຊາ<br>ພັດທະນາຫຼັກສູດ ແລະ ປະກອບສື່ການຮຽນ-ການສອນສຳລັບຝຶກອົບຮົມຜູ້ບໍລິຫານອາຊີວະສຶກສາ<br>ພັດທະນາຫຼັກສູດຮູບແບບການຮຽນແບບຄວບຄູ່ຮ່ວມກັບພາກເອກະຊົນ ແລະ ກຸ່ມອາຊີບຕ່າງໆ<br>ພັດທະນາມາດຕະຖານ ແລະ ຫຼັກສູດລະດັບ 1 ຫາ ລະດັບ 5<br>ສ້າງກົດໝາຍວ່າດ້ວຍການສຶກສາຊັ້ນສູງພັດທະນາຄູ່ມືການຮຽນ-ການສອນໃນສາຍການສຶກສາຊັ້ນສູງ ໃຫ້ໄປຕາມມາດຕະຖານຫຼັກສູດແຫ່ງຊາດ ໂດຍປັບປຸງເນື້ອໃນຫຼັກສູດ ໃຫ້ຫຼຸດອັດຕາສ່ວນທິດສະດີ ແລະ ເພີ່ມອັດຕາສ່ວນພາກປະຕິບັດຕົວຈິງ ແລະ ການບຳລຸງຄູຕາມ 14 ໂມດູນສະໜອງ ແລະ ປັບປຸງສິ່ງອຳນວຍຄວາມສະດວກເຊັ່ນ: ສ້າງຫ້ອງສະໝຸດເອເລັກໂທຣນິກ, ຫ້ອງທົດລອງ, ແຫຼ່ງຂໍ້ມູນຜ່ານທາງອິນເຕີເນັດ ແລະ ຫ້ອງປະຕິບັດງານສຳລັບວິຊາກະສິກຳ, ວິທະຍາສາດ, ເທັກໂນໂລຊີ, ວິສະວະກຳສາດ ແລະ ຄະນິດສາດ (STEM), ສ້າງສູນແຫ່ງຄວາມເປັນເລີດສຳລັບຂະແໜງການບູລິມະສິດ ຢູ່ສະຖານການສຶກສາຊັ້ນສູງ<br>ປັບປຸງຮ່າງຍຸດທະສາດການສົ່ງເສີມ ແລະ ຄຸ້ມຄອງການຄົ້ນຄວ້າວິທະຍາສາດຢູ່ສະຖານການສຶກສາຊັ້ນສູງ | √ | | | |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | | ປັບປຸງຂໍ້ກຳນົດວ່າການຮຽນ-ການສອນຜ່ານທາງເອເລັກໂທຣນິກ (e-learning) | | | | |
| | | ປັບປຸງຂະແໜງວິຊາຊີບ/ຊັ້ນສູງໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ ໂດຍຜ່ານການບໍລິການຈັດຫາງານຂອງລັດ (PES) ແລະຂໍ້ມູນຕະຫຼາດແຮງງານ) (ຜົນໄດ້ຮັບ 1.2) | ສຶກສາຄວາມຕ້ອງການໃນການຝຶກອົບຮົມ ແລະ ຈັດບູລິມະສິດຫຼັກຕາມຄວາມຕ້ອງການພັດທະນາຂອງສະຖານອາຊີວະສຶກສາ ທັງພາກລັດ ແລະ ເອກະຊົນ ທົ່ວປະເທດ<br>ແຜນຍຸດທະສາດແຫ່ງຊາດ ແລະ ແຜນດຳເນີນງານໃນການພັດທະນາການບໍລິການຈັດຫາງານຂອງລັດ (PES) ແລະ ສ້າງ ແລະ ນຳໃຊ້ຂໍ້ມູນຕະຫຼາດແຮງງານ<br>ກະກຽມບົດບັນທຶກຄວາມເຂົ້າໃຈ (MOU) ແລະ ຕົກລົງເຫັນດີລະຫວ່າງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະພາການຄ້າແຫ່ງ ສປປ ລາວ ແລະ ສະຫະພັນກຳມະບານລາວ<br>ການສຳຫຼວດທົດລອງກ່ຽວກັບຄວາມຕ້ອງການທາງດ້ານທັກສະຂອງນາຍຈ້າງ | √ | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | | ເພີ່ມທະວີຄວາມອາດສາມາດໃຫ້ແກ່ຄະນະກຳມະການຝຶກອົບຮົມແຫ່ງຊາດ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອພັດທະນາລະບົບການສຶກສາ ແລະ ນະໂຍບາຍແຫ່ງຊາດ. ແລະ ປັບປຸງຂອບວຸດທິການສຶກສາ (ຜົນໄດ້ຮັບ 1.3) | ດຳເນີນສອງໂຄງການ ເພື່ອສ້າງຂີດຄວາມອາດສາມາດໃຫ້ແກ່ຄະນະກຳມະການຝຶກອົບຮົມແຫ່ງຊາດ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ<br>ມາດຕະຖານໃໝ່ໃນຂະແໜງວິຊາຊີບ / ຊັ້ນສູງທີ່ຖືກປະກາດໃຊ້<br>ພັດທະນາທັກສະຂະແໜງວິຊາຊີບ / ຊັ້ນສູງໃໝ່ ເພື່ອໃຫ້ອອກໃບປະກາດ ແລະ ການຮັບຮອງເປັນທາງການ<br>ການປະເມີນ ແລະ ການອອກໃບຢັ້ງຢືນໃຫ້ຄູຝຶກໃນຂະແໜງວິຊາຊີບ / ຊັ້ນສູງໃໝ່ | √ | | | |
| | 3.3 ແຮງງານຜູ້ໃຫຍ່ມີໂອກາດໄດ້ຮັບການຍົກລະດັບວຸດທິການສຶກສາຜ່ານການສຶກສານອກໂຮງຮຽນ ແລະ ຄຸນນະພາບຂອງແຮງງານ | ສ້າງຂອບການຮຽນຮູ້ຕະຫຼອດຊີວິດລວມທັງການສຶກສາຂອງຜູ້ໃຫຍ່ (ຜົນໄດ້ຮັບ 6) (ໜ້າ 17) | ພັດທະນາວິທີການທົດສອບເພື່ອປະເມີນການຮູ້ໜັງສືຂອງຜູ້ໃຫຍ່<br>ສ້າງນິຕິກຳເພື່ອສະໜັບສະໜູນການຍົກຫຼັກສູດການສຶກສານອກໂຮງຮຽນ<br>ສ້າງຕັ້ງສູນການສຶກສານອກໂຮງຮຽນເພີ່ມຕື່ມ | √ | | | ກະຊວງສຶກສາທິການ ແລະ ກິລາ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[11] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | | ສ້າງນະໂຍບາຍ ແລະ ກົນໄກເພື່ອສະໜັບສະໜູນການຍົກລະດັບສູນການສຶກສານອກໂຮງຮຽນ<br>ສ້າງແຜນດຳເນີນງານການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນ<br>ຝຶກອົບຮົມຜູ້ບໍລິຫານ ແລະ ພະນັກງານບໍລິຫານທີ່ຮັບຜິດຊອບການສຶກສານອກໂຮງຮຽນ | | | | |

*ການວັດແທກການຫວ່າງງານໃນການສຳຫຼວດພົນລະເມືອງ ບໍ່ໄດ້ຕາມມາດຕະຖານສາກົນ. ຂໍ້ມູນເບື້ອງຕົ້ນ ແລະ ຄາດໝາຍອັດຕາການຫວ່າງງານຕ້ອງໄດ້ມີການປັບປຸງຫລັງຈາກການປັບປຸງຂໍ້ມູນ.

| ເປົ້າໝາຍຂອງ NPDP | ຈຸດປະສົງຂອງ NPDP[14] | ຜົນໄດ້ຮັບຂອງແຜນການຂະແໜງການ | ກິດຈະກຳຫຼັກ | 2019-2020 | 2021-2025 | 2026-2030 | ພາກສ່ວນຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
